ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ



# ບົດສະຫຼຸບການປະຕິບັດ
# ແຜນພັດທະນາການສຶກສາ 2008 - 2009
# ແລະ
# ແຜນພັດທະນາການສຶກສາ 2009 - 2010

ມິຖຸນາ 2009

# ຄຳນຳ

ກອງປະຊຸມຜູ້ບໍລິຫານການສຶກສາຂັ້ນສູງໃນທົ່ວປະເທດ ປະຈຳປີ 2009 ໄດ້ໄຂຂຶ້ນຢ່າງເປັນທາງການແຕ່ວັນທີ 22-24 ມິຖຸນາ (6) 2009 ທີ່ເມືອງໄຊຍະບູລີ, ແຂວງໄຊຍະບູລີ. ຜູ້ເຂົ້າຮ່ວມກອງປະຊຸມໄດ້ມີບັນດາທ່ານຄະນະນຳຂອງກະຊວງສຶກສາທິການ, ຫົວໜ້າກົມ/ຮອງຫົວ ໜ້າກົມ, ອະທິການບໍດີມະຫາວິທະຍາໄລ, ຫົວໜ້າ/ຮອງຫົວໜ້າ ພະແນກສຶກສາແຂວງ, ພາກສ່ວນຕ່າງໆອ້ອມຂ້າງສູນກາງ, ການນຳຂັ້ນແຂວງ, ຂັ້ນພະແນກການ, ຂັ້ນເມືອງ ແລະ ຂັ້ນໂຮງຮຽນທັງພາກລັດ ແລະ ພາກເອກະຊົນຂອງແຂວງໄຊຍະບູລີລວມທັງໝົດ 158 ທ່ານ/ຍິງ 16 ທ່ານ. ກອງປະຊຸມຄັ້ງນີ້ ໄດ້ຮັບກຽດຕ້ອນຮັບທ່ານ ບົວສອນ ບຸບຜາວັນກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີແຫ່ງສປປລາວເຂົ້າຮ່ວມອົບອຸ່ນ ແລະ ມີຄຳເຫັນໂອ້ລົມຊີ້ນຳຕໍ່ກອງປະຊຸມ.

ກອງປະຊຸມນີ້ ມີຈຸດປະສົງສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ສົກຮຽນ 2008 - 2009, ຄົ້ນຄ້ວາວາງແຜນພັດທະນາການສຶກສາ ສົກຮຽນ 2009-2010 ແລະ ຍ້ອງຍໍຊົມເຊີຍຜູ້ມີຜົນງານດີເດັ່ນ. ກອງປະຊຸມໄດ້ມີເນື້ອໃນ 16 ຫົວຂໍ້ ດັ່ງນີ້: ບົດສະຫຼຸບແຜນພັດທະນາການສຶກສາ ສົກຮຽນ 2008-09 ; ແຜນພັດທະນາການສຶກສາສົກປີ 2009-2010, ການຮຽນ-ການສອນຂອງຊັ້ນປະຖົມທີ່ເລື່ອນຊັ້ນແບບຕໍ່ເນື່ອງ; ການເພີ່ມ ມ.4 ເຂົ້າຮຽນຢູ່ມັດທະຍົມຕອນຕົ້ນ ແລະ ການກະກຽມ ມ.7; ການພັດທະນາການສຶກສາໄປສູ່ເຂດຊົນເຜົ່າຫ່າງໄກສອກຫຼີກ; ການສ້າງໂຮງຮຽນ ຕົວແບບ ແລະ ສົ່ງເສີມການມີສ່ວນຮ່ວມຂອງສັງຄົມໃນວຽກງານສຶກສາ; ການກຽມຄວາມພ້ອມແກ່ເດັກກ່ອນເຂົ້າຮຽນປະຖົມສຶກສາ; ຄວາມຄືບໜ້າຂອງການກະກຽມປະຕິບັດຂອບການພັດທະນາຂະແໜງການສຶກສາ (ESDF); ນະໂຍບາຍການ ສຶກສາຂັ້ນພື້ນຖານ; ການແກ້ໄຂບັນຫານັກຮຽນປະລະການຮຽນ ແລະ ຄ້າງຫ້ອງ ປ.1; ການ ສ້າງໂຄງລ່າງໂຮງຮຽນລະດັບເມືອງ ແລະ ແຂວງ; ການຫັນລົງກໍ່ສ້າງຮາກຖານການເມືອງແນວຄິດຕິດພັນວຽກງານ ສຶກສາ; ຄວາມຄືບໜ້າການປະຕິບັດໂຄງການຂະຫຍາຍໂຮງຮຽນອະຊີວະສຶກສາ; ຄວາມຄືບໜ້າການກະກຽມສ້າງຕັ້ງມະຫາວິທະຍາໄລສະຫວັນນະເຂດ; ຄວາມຄືບໜ້າການແກ້ໄຂບັນຫາຄູ, ນາມມະຍົດຄູ, ຕຳແໜ່ງວິຊາການ; ການແກ້ໄຂບັນຫາການບັນຈຸ ແລະ ການນຳໃຊ້ຄູ; ການແກ້ໄຂບັນຫາຄູດ້ວຍການບຳລຸງ ແລະ ກໍ່ສ້າງຄູໄລຍະ ສັ້ນ-ຍາວ; ສະພາບການວິໄຈ ຂໍ້ມູນການສຶກສາໂດຍຈຳແນກຕາມເມືອງທຸກ ແລະ ຕາມເພດ ທຽບໃສ່ແຜນການສຶກສາເພື່ອທຸກຄົນ ແລະ ແຜນເປົ້າໝາຍພັດທະນາສະຫັດສະຫວັດ.

ກອງປະຊຸມຜູ້ບໍລິຫານການສຶກສາຂັ້ນສູງໃນທົ່ວປະເທດປີ 2009 ໄດ້ມີການປະກອບຄຳຄິດເຫັນຢ່າງກົງໄປກົງມາ ເພື່ອຊອກຫາວິທີການແກ້ໄຂໃນການຈັດຕັ້ງປະຕິບັດໃນປີຕໍ່ໄປ; ພ້ອມດຽວກັນນັ້ນຍັງຮຽກຮ້ອງໃຫ້ຜູ້ບໍລິຫານການສຶກສາທຸກຂັ້ນ, ພະນັກນັກງານ, ຄູ-ອາຈານ, ນັກສຶກສາ ແລະ ນັກຮຽນທຸກຄົນ ປະຕິບັດໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ; ຮຽກຮ້ອງມາຍັງຄະນະພັກ, ອຳນາດການປົກຄອງທຸກຂັ້ນ, ອົງການຈັດຕັ້ງທັງພາກລັດ ແລະ ເອກະຊົນ ແລະ ນັບທັງຊຸມຊົນຄົນລາວຢູ່ຕ່າງປະເທດຈົ່ງໃຫ້ຄວາມຮ່ວມມື ແລະ ສະໜັບສະໜູນດ້ານທຶນຮອນພັດທະນາການສຶກສາ. ຫວັງວ່າເອກະສານສະບັບນີ້ ຈະເປັນຂໍ້ມູນພື້ນຖານໃຫ້ຜູ້ຊົມໃຊ້ ເພື່ອເປັນບ່ອນອີງໃນການຄົ້ນຄ້ວາ ແລະ ຜັນຂະຫຍາຍເປັນແຜນຈັດຕັ້ງປະຕິບັດລະອຽດ ໃນການພັດທະນາວຽກງານການສຶກສາດີຂຶ້ນ. ຖ້າທ່ານໃດພົບເຫັນຂໍ້ບົກຜ່ອງປະການໃດ ກະລຸນາໃຫ້ຄຳຄິດເຫັນ, ພວກເຮົາມີຄວາມຍິນດີຮັບເອົາເພື່ອເປັນຂໍ້ມູນປັບປຸງໃນຄັ້ງຕໍ່ໄປ.

ນະຄອນຫຼວງວຽງຈັນ, ວັນທີ 17 ສິງຫາ 2009

ລັດຖະມົນຕີວ່າການກະຊວງສຶກສາທິການ

ສຈ.ດຣ. ສົມກົດ ມັງໜໍ່ເມກ

# ສາລະບານ

ໜ້າ


ຄຳນຳ

**ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາສົກຮຽນ 2008 - 2009 ແລະ ແຜນພັດທະນາການສຶກສາ ສົກຮຽນ 2009 - 2010.** 1

**ພາກທີ ໜຶ່ງ**

**ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາສົກຮຽນ 2008 - 2009 ແລະ ແຜນພັດທະນາການສຶກສາ ສົກຮຽນ 2009 - 2010.** 2

I. ແຜນງານຂະຫຍາຍໂອກາດການເຂົ້າຮຽນ.....

1.1. ການສຶກສາກ່ອນໄວຮຽນ ..... 2

1.2. ສາມັນສຶກສາ..... 2

1.2.1 ວຽກງານປະຖົມສຶກສາ ..... 3

1.2.2 ວຽກງານມັດທະຍົມສຶກສາ ..... 4

1.2.3 ວຽກງານການສຶກສາຊົນເຜົ່າ ..... 5

1.3. ການສຶກສານອກໂຮງຮຽນ..... 6

1.3.1 ວຽກງານລົບລ້າງຄວາມບໍ່ຮູ້ໜັງສື ..... 6

1.3.2 ວຽກງານບຳລຸງ ຍົກລະດັບການສຶກສາ ..... 7

1.3.3 ວຽກງານຝຶກອົບຮົມວິຊາຊີບຂັ້ນພື້ນຖານ ..... 8

1.4. ອາຊີວະສຶກສາ ແລະ ອົບຮົມວິຊາຊີບ..... 8

1.5. ການສຶກສາຊັ້ນສູງ ແລະ ມະຫາວິທະຍາໄລ..... 9

1.5.1 ລະດັບການສຶກສາຊັ້ນສູງ ..... 10

1.5.2 ລະດັບການສຶກສາປະລິນຍາຕີ..... 10

1.5.3 ການສົ່ງນັກສຶກສາໄປຮຽນຕໍ່ທີ່ຕ່າງປະເທດ..... 11

1.6. ການສຶກສາພາກເອກະຊົນ ..... 11

1.7. ພະລະສຶກສາ ແລະ ສິລະປະສຶກສາ..... 13

1.5.1 ວຽກງານພະລະສຶກສາ..... 13

1.5.2 ວຽກງານສິນລະປະສຶກສາ..... 14

1.5.3 ວຽກງານຕ້ານສິ່ງເສບຕິດໃນໂຮງຮຽນ ..... 14

1.5.4 ວຽກງານພັດທະນາຫລັກສູດທ້ອງຖິ່ນ..... 14

II. ແຜນງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ.... ..... 15

2.1. ວຽກງານການພັດທະນາຫຼັກສູດ..... 15

2.2. ການສະໜອງອຸປະກອນການຮຽນ-ການສອນ ແລະ ພື້ນຖານວັດຖຸ........................................................ 16
2.3. ການສ້າງໂຮງຮຽນຕົວແບບ ........................................................................................................ 17
2.4. ວຽກງານສຶກສາ ວິໄຈ ແລະ ຄົ້ນຄວ້າທົດລອງ........................................................................... 18
2.5. ວຽກງານສົ່ງເສີມນັກຮຽນເກັ່ງ ແລະ ນັກຮຽນມີພອນສະຫວັນພິເສດ........................................... 19
2.6. ວຽກງານ ການສຶກສານິເທດ.................................................................................................... 20
2.7. ວຽກງານກໍ່ສ້າງຄູ .................................................................................................................... 20
2.8. ວຽກງານກວດກາການສຶກສາ .................................................................................................. 22
2.9. ວຽກງານຮັບປະກັນຄຸນນະພາບການສຶກສາ................................................................................ 22
2.10 ການສົ່ງເສີມການມີສ່ວນຮ່ວມຂອງສັງຄົມໃນວຽກງານສຶກສາ.................................................... 23
III. ແຜນງານບໍລິຫານ ແລະ ຄຸ້ມຄອງການສຶກສາ.................................................................................. 24
3.1. ວຽກງານຄຸ້ມຄອງການເມືອງ ແນວຄິດ ແລະ ນະໂຍບາຍ.............................................................. 24
3.2. ວຽກງານປັບປຸງກົງຈັກ ແລະ ການຈັດຕັ້ງ................................................................................... 25
3.3. ວຽກງານປັບປຸງ(ນິຕິກຳ) ລະບຽບການປົກຄອງ ແລະ ຄຸ້ມຄອງ.................................................... 25
3.4. ວຽກງານຝຶກອົບຮົມຜູ້ບໍລິຫານ .................................................................................................. 25
3.5. ວຽກງານບັນຈຸ ແລະ ຄຸ້ມຄອງລັດຖະກອນ ................................................................................. 26
3.6. ວຽກງານຄຸ້ມຄອງຂໍ້ມູນຂ່າວສານການສຶກສາ................................................................................ 26
3.7. ວຽກງານແຜນການ-ແຜນງານ-ໂຄງການ........................................................................................ 27
3.8. ວຽກງານງົບປະມານການເງິນ...................................................................................................... 28
3.9. ວຽກງານຄຸ້ມຄອງຊັບສິນ ແລະ ຄຸ້ມຄອງອອກແບບກໍ່ສ້າງ............................................................ 30
3.10 ວຽກງານພົວພັນ ແລະ ຮ່ວມມືກັບຕ່າງປະເທດ............................................................................ 31
IV. ສັງເກດຕີລາຄາລວມ ແລະ ຖອດຖອນບົດຮຽນ................................................................................. 33
4.1 ຈຸດດີ ....................................................................................................................................... 33
4.2 ຈຸດອ່ອນ ແລະ ຂໍ້ຄົງຄ້າງ............................................................................................................ 34
4.3 ສາເຫດທີ່ພາໃຫ້ມີຈຸດອ່ອນ.......................................................................................................... 35
4.4. ຖອດຖອນບົດຮຽນ..................................................................................................................... 35

# ພາກທີ ສອງ
# ແຜນພັດທະນາການສຶກສາສົກຮຽນ 2009 - 2010


**ກ. ທິດທາງ ໜ້າທີ່ ແລະ ຄາດໝາຍລວມ ຂອງສົກຮຽນ 2009-2010** 37
ກ.1- ທິດທາງ ໜ້າທີ່ລວມ ........ 37
ກ.2- ຄາດໝາຍລວມ ........ 38
I. ແຜນງານຂະຫຍາຍໂອກາດການເຂົ້າຮຽນ........ 39
1.1. ການສຶກສາກ່ອນໄວຮຽນ ........ 39
1.2. ວຽກງານສາມັນສຶກສາ ........ 40
1.2.1. ວຽກງານປະຖົມສຶກສາ ........ 40
1.2.2. ວຽກງານມັດທະຍົມສຶກສາ ........ 40
1.2.3 ວຽກງານສົ່ງເສີມການສຶກສາ ແມ່ຍິງ, ຊົນເຜົ່າ ແລະ ເດັກພິການ ........ 41
1.3. ວຽກງານການສຶກສານອກໂຮງຮຽນ........ 42
1.3.3 ວຽກງານລົບລ້າງ ຄວາມບໍ່ຮູ້ໜັງສື........ 42
1.3.3 ວຽກງານບຳລຸງ ຍົກລະດັບການສຶກສາ ........ 43
1.3.3 ວຽກງານຝຶກອົບຮົມວິຊາຊີບຂັ້ນພື້ນຖານນອກໂຮງຮຽນ........ 43
1.4 ວຽກງານອາຊີວະສຶກສາ ........ 43
1.5 ວຽກງານການສຶກສາຊັ້ນສູງ ........ 44
1.6 ວຽກງານການສຶກສາພາກເອກະຊົນ ........ 45
1.7 ວຽກງານພະລະສຶກສາ ........ 45
II. ແຜນງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ ........ 46
2.1. ວຽກງານການພັດທະນາຫຼັກສູດ........ 46
2.2. ວຽກງານພິມປຶ້ມ, ສະໜອງປຶ້ມ, ສະໜອງອຸປະກອນຮັບໃຊ້ການຮຽນ-ການສອນ........ 47
2.3. ວຽກງານສຶກສາ ວິໄຈ ແລະ ຄົ້ນຄວ້າທົດລອງ ........ 47
2.4. ວຽກງານສົ່ງເສີມນັກຮຽນເກັ່ງ ແລະ ນັກຮຽນມີພອນສະຫວັນພິເສດ........ 48
2.5. ວຽກງານ ການສຶກສານິເທດ........ 48
2.6. ວຽກງານກໍ່ສ້າງຄູ ........ 48
2.7. ວຽກງານບຳລຸງຄູ ........ 49
2.8. ວຽກງານແກ້ໄຂບັນຫາຄູ ........ 50
III ແຜນງານບໍລິຫານ ແລະ ຄຸ້ມຄອງການສຶກສາ........ 50
3.1. ວຽກງານຄຸ້ມຄອງການເມືອງ ແນວຄິດ ........ 50
3.2. ວຽກງານປັບປຸງກົງຈັກ ແລະ ການຈັດຕັ້ງ........ 50

3.3. ວຽກງານປັບປຸງ(ນິຕິກຳ) ລະບຽບການປົກຄອງ ແລະ ຄຸ້ມຄອງ.................................................. 51
3.4. ວຽກງານບັນຈຸ ແລະ ຄຸ້ມຄອງລັດຖະກອນ ........................................................................ 51
3.5. ວຽກງານຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດລະບຽບຂອງການສຶກສາ ................................ 52
3.6. ວຽກງານຝຶກອົບຮົມຜູ້ບໍລິຫານການສຶກສາ .......................................................................... 52
3.7. ວຽກງານບັນຈຸ ແລະ ສັບຊ້ອນຄູສອນ ..... ........................................................................ 52
3.8. ວຽກງານສົ່ງເສີມຄູດີເດັ່ນ ............................................................................................... 53
3.9. ວຽກງານແຜນການ-ແຜນງານ-ໂຄງການ.............................................................................. 53
3.10. ວຽກງານການຮ່ວມມື .................................................................................................. 55
3.11. ວຽກງານຄຸ້ມຄອງຂໍ້ມູນຂ່າວສານການສຶກສາ....................................................................... 56
3.12. ວຽກງານງົບປະມານການເງິນ.......................................................................................... 57
3.13. ວຽກງານຄຸ້ມຄອງຊັບສິນ................................................................................................ 58
3.14. ວຽກງານກວດກາການສຶກສາ ......................................................................................... 58
3.15. ວຽກງານການຮັບປະກັນ ຄຸນນະພາບການສຶກສາ................................................................... 59
IV. ວິທີການ ແລະ ມາດຕະການໃນການຈັດຕັ້ງປະຕິບັດ.................................................................. 59
ເອກະສານຊ້ອນທ້າຍຊຶ່ງປະກອບດ້ວຍ: 60
1. ຕາຕະລາງຕ່າງໆ (ຈຳນວນ 45 ຕາຕະລາງ) ດັ່ງລຸ່ມນີ້:
- ສະຖິຕິ ສາມັນສຶກສາ ( ຕາຕະລາງທີ 1- 38 ).......................................
- ສະຖິຕິ ວິຊາຊີບຊັ້ນຕົ້ນ ແລະ ເຕັກນິກຊັ້ນກາງ ( ຕາຕະລາງທີ 39 - 41 ).....................................
- ສະຖິຕິ ໂຮງຮຽນສ້າງຄູ ( ຕາຕະລາງ 42-45 )..........................................
- ສະຖິຕິ ອາຊີວະສຶກສາຊັ້ນສູງ, ປະລິນຍາຕີ ແລະ ປະລິນຍາໂທ ( ຕາຕະລາງ 46-47 )...................
2. ຕາຕະລາງແຜນການລົງທຶນຂອງລັດ ສົກປີ 2009-2010 (ຈຳນວນ 5 ຕາຕະລາງ)
3. ສະຫລຸບງົບປະມານ 6 ເດືອນຕົ້ນປີ 2008-09 ແລະ ແຜນງົບປະມານ 2009-2010 ( ມີ 4 ຕາຕະລາງ)
4. ບົດໂອ້ລົມຂອງທ່ານນາຍົກລັດຖະມົນຕີ (ຈຳນວນ 8 ໜ້າ)..........................................................
5. ມະຕິກອງປະຊຸມ(ຈຳນວນ 3 ໜ້າ) ..........................................................................

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----000-----

ກະຊວງສຶກສາທິການ ເລກທີ່ ສສ/09

ນະຄອນຫຼວງວຽງຈັນ, ວັນທີ

# ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ສົກຮຽນ 2008 - 2009 ແລະ ແຜນພັດທະນາການສຶກສາ ສົກຮຽນ 2009-2010.

ໂດຍປະຕິບັດຕາມດຳລັດຂອງນາຍົກລັດຖະມົນຕີແຫ່ງ ສ.ປ.ປ ລາວສະບັບເລກທີ 84 ນຍ ລົງວັນທີ 1 ມີນາ 2007 ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ “ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ແລະ ຄວາມຮຽກຮ້ອງຕ້ອງການໃນການພັດທະນາການສຶກສາໄລຍະໃໝ່ຕາມຂອບພັດທະນາທົ່ວຂະແໜງການສຶກສາ.

ອີງຕາມແຜນພັດທະນາການສຶກສາສົກຮຽນ 2008-2009 ທີ່ໄດ້ຮັບຮອງເອົາໃນກອງປະຊຸມຜູ້ບໍລິຫານການສຶກສາທົ່ວປະເທດ ຄັ້ງວັນທີ 21 - 25 ກໍລະກົດ ປີ 2008 ທີ່ແຂວງຄຳມ່ວນ ແລະ ຜົນການສັງລວມບົດລາຍງານການປະຕິບັດແຜນການສົກຮຽນຂອງບັນດາບັນດາກົມ, ສະຖາບັນການສຶກສາ ແລະ ພະແນກສຶກສາປະຈຳແຂວງ / ນະຄອນຫຼວງ ປະຈຳສົກຮຽນ 2008 - 2009.

ສົກຮຽນ 2008 - 2009 ເປັນສົກຮຽນທີ່ທົ່ວຂະແໜງການສຶກສາສືບຕໍ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ, ແຜນພັດທະນາເສດຖະກິດ - ສັງຄົມ 5 ປີ ຄັ້ງທີ VI (2006 - 2010) ຂອງລັດຖະບານ, ແຜນພັດທະນາ ການສຶກສາ 5 ປີ ຄັ້ງທີ VI (2006 - 2010) ຂອງກະຊວງສຶກສາທິການ ເຊິ່ງປະກອບດ້ວຍ 3 ແຜນງານ(ຂະຫຍາຍໂອກາດການເຂົ້າຮຽນ, ປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ ແລະ ບໍລິຫານ ແລະ ຄຸ້ມຄອງການສຶກສາ) ແລະ 4 ໂຄງການບຸລິມະສິດຂອງລັດຖະບານ ຄື: (1) ໂຄງການປະຕິຮູບລະບົບການສຶກສາແຫ່ງຊາດ, (2) ໂຄງການປັບປຸງຄຸນນະ ພາບ ແລະ ຂະຫຍາຍໂອກາດດ້ານການສຶກສາ, (3) ໂຄງການແກ້ໄຂບັນຫາຄູອາຈານ ແລະ ການຍົກລະດັບຄວາມສາມາດຂອງຜູ້ບໍລິຫານການສຶກສາ ແລະ (4) ໂຄງການຂະຫຍາຍໂຮງຮຽນວິຊາຊີບໄປທຸກໆແຂວງໃນທົ່ວປະເທດ. ບົດລາຍງານສະບັບນີ້ປະກອບດ້ວຍ 2 ພາກຄື:

# ພາກທີໜຶ່ງ

# ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາສົກປີ 2008 - 2009

## I. ແຜນງານຂະຫຍາຍໂອກາດການເຂົ້າຮຽນ:

ການຂະຫຍາຍການສຶກສາໄປສູ່ທ້ອງຖິ່ນ,ເຂດຊົນນະບົດຫ່າງໄກສອກຫຼີກ ໂດຍການສ້າງບັນດາໂຄງການຕ່າງໆໄປຈັດຕັ້ງປະຕິບັດຢູ່ແຂວງ, ເມືອງ, ບ້ານ ແລະ ກຸ່ມບ້ານພັດທະນາ ດ້ວຍການກໍ່ສ້າງພື້ນຖານໂຄງລ່າງການສຶກສາເປັນຕົ້ນແມ່ນການກໍ່ສ້າງໂຮງຮຽນ, ສູນຝຶກອົບຮົມ ແລະ ສູນການສຶກສາຊຸມຊົນ ເຊິ່ງເຮັດໃຫ້ຈຳນວນໂຮງຮຽນ, ສະຖານທີ່ຮຽນ, ຫ້ອງຮຽນໄດ້ເພີ່ມຂຶ້ນ ໄດ້ເປັນການສ້າງເງື່ອນໄຂໃຫ້ແກ່ປະຊາກອນໃນແຕ່ລະກຸ່ມເປົ້າໝາຍມີໂອກາດໄດ້ຮັບການສຶກສາຫຼາຍຂຶ້ນ.

### 1.1. ການສຶກສາກ່ອນໄວຮຽນ

ໃນທົ່ວປະເທດໄດ້ມີຈຳນວນໂຮງລ້ຽງເດັກ, ໂຮງຮຽນອະນຸບານ ແລະ ຫ້ອງກຽມປະຖົມ ຈາກ 1,129 ແຫ່ງ ໃນປີ 2008 ຫຼຸດລົງເປັນ 1,123 ແຫ່ງໃນປີ 2009 (ຫຼຸດລົງ **0.5%**). ***ການຫຼຸດລົງຂອງຈຳນວນໂຮງຮຽນເນື່ອງຈາກວ່າ ບາງແຂວງຍັງມີຄວາມເຂົ້າໃຈສັບສົນໃນການເກັບກຳຂໍ້ມູນລະຫວ່າງອະນຸບານ ແລະ ຫ້ອງກຽມປະຖົມ. ກົງກັນຂ້າມ, ໃນປີ 2009 ຍ້ອນມີການຮ່ວມມື, ສົບທົບກັບອຳນາດການປົກຄອງທ້ອງຖິ່ນໄດ້ເອົາໃຈໃສ່ວຽກງານການສຶກສາກ່ອນໄວຮຽນ ຈຶ່ງເຮັດໃຫ້ຈຳນວນຫ້ອງຮຽນເພີ່ມຂຶ້ນ*** ເປັນຕົ້ນແມ່ນຈຳນວນຫ້ອງກຽມປະຖົມມີ 1,260 ຫ້ອງ, ເພີ່ມຂຶ້ນ 60.9%; ຫ້ອງລ້ຽງເດັກ 262 ຫ້ອງ ເພີ່ມຂຶ້ນ17.5% ແລະ ຫ້ອງອະນຸບານມີ 2,372 ຫ້ອງ ເພີ່ມຂຶ້ນ10.7%. ***ສິ່ງທີ່ພົ້ນເດັ່ນແມ່ນພໍ່ແມ່ເດັກໄດ້ຄວາມສົນໃຈສົ່ງເດັກເຂົ້າໂຮງລ້ຽງເດັກ, ອະນຸບານ ແລະ ກຽມປະຖົມຫຼາຍຂຶ້ນ*** ເຊິ່ງຈຳນວນເດັກຈາກ 69,717 ຄົນ/ຍິງ 35,156 ຄົນໃນປີ 2008 ເພີ່ມຂຶ້ນເປັນ **85,357** ຄົນ/ຍິງ 42,799 ຄົນ(ເພີ່ມຂຶ້ນ 22.4%/ຍິງ 21.7%), ໃນນັ້ນ ຍິງເທົ່າກັບ 50.1% ຫຼື ດັດສະນີຄວາມສະເໝີພາບຍິງ-ຊາຍ ເທົ່າກັບ 1.02. ***ຖ້າທຽບໃສ່ແຜນການ, ອັດຕາການເຂົ້າຮຽນລວມຂອງເດັກຊັ້ນອະນຸບານໃນກຸ່ມອາຍຸ 3-5 ປີ ແມ່ນລື່ນຄາດໝາຍຂອງແຜນການ (1.7%)*** ຈາກ 15.4% ໃນປີ 2008 ເພີ່ມຂຶ້ນເປັນ 19.7 % ໃນປີ 2009 (ຫຼື ເພີ່ມຂຶ້ນ 4.4%). ຄູສອນປະຈຳລ້ຽງເດັກ, ອະນຸບານ ແລະ ຫ້ອງກຽມປະຖົມທັງໝົດ ໃນ ປີ 2008 ມີຈຳນວນ 3,680 ຄົນ, ໃນປີ 2009 ເພີ່ມຂຶ້ນເປັນ 3,920 ຄົນ (ຫຼື ເພີ່ມຂຶ້ນ 6.5%).

### 1.2. ສາມັນສຶກສາ

ໂຮງຮຽນ, ຫ້ອງຮຽນ, ຈຳນວນນັກຮຽນ, ຄູສອນທັງ ***ພາກລັດ ແລະ ເອກະຊົນ*** ໃນສາຍສາມັນໄດ້ເພີ່ມຂຶ້ນຢ່າງໄວວາ ສະແດງອອກຕົວຈິງບາງດ້ານດັ່ງນີ້:

1.2.1. ວຽກງານປະຖົມສຶກສາ: ***ວຽກງານການສຶກສາຊັ້ນປະຖົມໃນທົ່ວປະເທດໄດ້ມີບາດກ້າວປ່ຽນແປງໃໝ່ທີ່ດີ ແລະ ມີທ່າຂະຫຍາຍຕົວທີ່ ພົ້ນເດັ່ນຂຶ້ນ*** ເປັນຕົ້ນແມ່ນຈຳນວນໂຮງຮຽນຊັ້ນປະຖົມ ຈາກ 8,830 ແຫ່ງ ໃນປີ 2008 (ໃນນັ້ນ ໂຮງຮຽນປະຖົມສົມບູນ 4,242 ແຫ່ງ ກວມ 48 %) ເພີ່ມຂຶ້ນເປັນ ມີ 8,871 ແຫ່ງໃນປີ 2009, ເພີ່ມຂຶ້ນ 0.5%; (ໃນນັ້ນ ມີໂຮງຮຽນ ປະຖົມສົມບູນ 4,583 ແຫ່ງ ກວມ 51.7%). ພ້ອມດຽວກັນນັ້ນ, ຈຳນວນຫ້ອງຮຽນ ຈາກ 29,769 ຫ້ອງ ໃນປີ 2008 ເພີ່ມຂຶ້ນເປັນ 30,107 ຫ້ອງໃນປີ 2009 (ເພີ່ມຂຶ້ນ 1.1%) ແລະ ຈຳນວນ ນັກຮຽນຊັ້ນປະຖົມສຶກສາ ຈາກ 900,817 ຄົນ ໃນປີ 2008 ເພີ່ມຂຶ້ນເປັນ 908,880 ຄົນໃນປີ 2009 (ເພີ່ມຂຶ້ນ 0.9%); ໃນນັ້ນ, ຈຳນວນນັກຮຽນ ພາກເອກະຊົນກວມ 3.34 %. ***ນະໂຍບາຍການສຶກສາທີ່ເອົາໃຈໃສ່ເມືອງທຸກທີ່ສຸດ ເປັນພິເສດແມ່ນໄດ້ຜົນ ເມື່ອ*** ທຽບ ໃສ່ສົກ 2007-2008 ອັດຕາເຂົ້າຮຽນຢູ່ເມືອງທຸກທີ່ສຸດເພີ່ມຂຶ້ນ 3.6%, ເມືອງທຸກເພີ່ມ 0.3% ແລະ ເມືອງບໍ່ທຸກຫຼຸດລົງ 0.4%. ***ຖ້າທຽບໃສ່ແຜນການປີ 2008, ອັດຕາການເຂົ້າຮຽນສຸດທິຂອງຊັ້ນປະຖົມ ໃນປີ 2009 ແມ່ນລື່ນຄາດໝາຍ (0.6%),*** ຈາກ 89.2% ໃນປີ 2008 ເພີ່ມຂຶ້ນເປັນ 91.6 % ໃນປີ 2009 (ເພີ່ມຂຶ້ນ 2.3%), ໃນນັ້ນ ເພດຍິງ 92%, ດັດສະນີຄວາມສະເໝີພາບ ຍິງ-ຊາຍ ເທົ່າກັບ 1.01. ອັດຕາເຂົ້າຮຽນໃໝ່ທີ່ຜ່ານອະນຸບານ ແລະ ຫ້ອງກຽມປະຖົມ ຈາກ 14.7% ໃນປີ 2008 ເພີ່ມຂຶ້ນເປັນ 21.4% ໃນປີ 2009 (ເພີ່ມຂຶ້ນ 6.7%). ***ແຕ່ອັດຕາຄ້າງຫ້ອງ ລວມຊັ້ນປະຖົມ ແລະ ອັດຕາຄ້າງຫ້ອງຊັ້ນ ປ.1 ໄດ້ຫຼຸດລົງພຽງເລັກນ້ອຍ;*** ອັດຕາຄ້າງຫ້ອງລວມຊັ້ນປະຖົມຈາກ 17% ໃນປີ 2008 ຫຼຸດລົງເປັນ 15.9% ໃນປີ 2009 (ຫຼຸດລົງພຽງ 1.1%) ໃນນັ້ນ, ເມືອງທຸກທີ່ສຸດ ຍັງກວມອັດຕາ ຄ້າງຫ້ອງສູງ (ເມືອງບໍ່ທຸກ 13.6%, ເມືອງທຸກ 18.3% ແລະ ເມືອງທຸກທີ່ສຸດ 19.3%) ແລະ ອັດຕາຄ້າງຫ້ອງ ປ.1 ຈາກ 32%ໃນປີ 2008 ໄດ້ຫຼຸດລົງເປັນ 30.9% ໃນປີ 2009 (ຫລຸດລົງ 1%). ***ຕໍ່ກັບບັນຫານີ້ໄດ້ມີຫຼາຍປັດໄຈ ເປັນຕົ້ນແມ່ນຄູສອນ ຈຳນວນໜຶ່ງບໍ່ທັນໄດ້ເອົາໃຈໃສ່ປະຕິບັດການຮຽນ-ການສອນຕາມຫຼັກສູດ(ຂຶ້ນສອນບໍ່ປົກກະຕິ), ຂາດການຕິດຕາມ, ກວດກາ ແລະ ຊຸກຍູ້ຂອງຜູ້ບໍລິຫານການສຶກສາບໍ່ທັນທົ່ວເຖິງ, ການບຳລຸງນັກຮຽນອ່ອນບໍ່ທັນ ເຮັດໄດ້ດີ ແລະ ການເລື່ອນຊັ້ນແບບຕໍ່ເນື່ອງຍັງບໍ່ທັນເຫັນຜົນໄດ້ຮັບອັນພົ້ນເດັ່ນ ແລະ ຫຼາຍແຂວງບໍ່ທັນມີຄວາມພ້ອມ. ພິເສດ ຢູ່ຫຼາຍແຂວງຍັງຮັບເດັກເຂົ້າຮຽນຊັ້ນ ປ.1 ບໍ່ຖືກຕາມເກນອາຍຸ ແລະ ຄູສອນຊັ້ນ ປ.1 ບໍ່ມີປະສົບການ (ເອົາຄູໃໝ່)ສອນ ແລະ ອື່ນໆ*** (ຂັດຈາກບົດສະຫຼຸບຂອງແຂວງ). **ອັດຕາປະລະລວມໄດ້ຫຼຸດລົງພຽງເລັກໜ້ອຍ** ***ເຖິງວ່າ ມີການເຕົ້າຮ່ວມບ້ານ ແຕ່ພູມລຳເນົາຍັງຢູ່ຄືເກົ່າ, ອຳນາດການປົກຄອງບາງບ່ອນຍັງບໍ່ທັນໃຫ້ຄວາມສຳຄັນໃນວຽກງານ ສຶກສາ, ໃນການມີສ່ວນຮ່ວມປຸກລະດົມພໍ່ແມ່ຜູ້ປົກຄອງເດັກ ແລະ ເດັກນັກຮຽນເຂົ້າຮຽນເທົ່າທີ່ຄວນ*** ເຊິ່ງມັນໄດ້ ສະແດງອອກ ອັດຕາປະລະລວມຈາກ 7.9 % ໃນປີ 2008, ຫຼຸດລົງເປັນ 7.5 % ໃນປີ 2009 (ຫຼຸດລົງພຽງແຕ່ 0.4% ເທົ່ານັ້ນ); ໃນນັ້ນ ເພດຍິງປະລະ 7.2 % ໜ້ອຍກວ່າເພດຊາຍ 0.5% ແລະ ເມືອງທຸກທີ່ສຸດຍັງມີອັດຕາປະລະສູງ (ເມືອງບໍ່ທຸກ 6.6%, ເມືອງທຸກ 8.8% ແລະ ເມືອງທຸກທີ່ສຸດ 8.4%). ອັດຕາລອດເຫຼືອຮອດຫ້ອງ ປ.5 ຈາກ 67% ໃນປີ 2008 ເພີ່ມຂຶ້ນເປັນ 68.4% ໃນປີ 2009 (ເພີ່ມຂຶ້ນ 1.5%). ອັດຕາຈົບຊັ້ນປະຖົມຈາກ 62.1% ໃນປີ 2008 ເພີ່ມຂຶ້ນເປັນ 64.2% (ເພີ່ມຂຶ້ນ 2.1%). ***ຖ້າທຽບໃສ່ແຜນການປີ 2008, ອັດຕາຫຼອດເຫຼືອ ແລະ ອັດຕາຈົບຊັ້ນປະຖົມແມ່ນຍັງຫຼຸດຄາດໝາຍແຜ່ນການ ເນື່ອງຈາກການພົວພັນລະຫ່ວາງຄູສອນ, ໂຮງຮຽນ ແລະ ສັງຄົມຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ.*** ຄູສອນປະຈຳການທັງໝົດຂອງຊັ້ນປະຖົມຈາກ 27,885 ຄົນ/ຍິງ13,631 ຄົນ ໃນປີ 2008 ເພີ່ມຂຶ້ນເປັນ 29,060 ຄົນ/ ຍິງ14,585 ຄົນ (ເພີ່ມຂຶ້ນ 1,175 ຄົນ/ຍິງ 954 ຄົນ).

1.2.2. <u>ວຽກງານມັດທະຍົມສຶກສາ</u>: ໂຮງຮຽນຊັ້ນມັດທະຍົມທັງພາກລັດ ແລະ ເອກະຊົນຈາກຈຳນວນທັງໝົດ 1,052 ແຫ່ງ ໃນປີ 2008 ເພີ່ມຂຶ້ນ ເປັນ **1,125** ແຫ່ງໃນປີ 2009 (ເພີ່ມ**ຂຶ້ນ 6.9%),** ໃນນັ້ນ ມີໂຮງຮຽນມັດທະຍົມສົມບູນ ຈາກ 330 ແຫ່ງ ໃນປີ 2008 ເພີ່ມຂຶ້ນເປັນ 368 ແຫ່ງ ໃນປີ 2009 (ເພີ່ມຂຶ້ນ 11.5%). ຈຳນວນຫ້ອງທັງໝົດຈາກ 8,773 ເພີ່ມຂຶ້ນເປັນ 9,191 ຫ້ອງ ໃນປີ 2009 (ເພີ່ມ**ຂຶ້ນ 4.8%).** ຄູສອນທັງໝົດຈາກ 15,454 ຄົນ/ຍິງ7,821 ຄົນ ເພີ່ມຂຶ້ນເປັນ 17,550 ຄົນ /ຍິງ 8,564 ຄົນ ໃນປີ 2009 (ເພີ່ມຂຶ້ນ 0.6% /ຍິງ9.5%). ***ການຂະຫຍາຍໃນດ້ານປະລິມານເຊັ່ນ ຈຳນວນ ໂຮງຮຽນ, ຫ້ອງຮຽນ, ນັກຮຽນ ແລະ ຄູສອນໃນຊັ້ນມັດທະຍົມມີທ່າເພີ່ມຂຶ້ນຢ່າງເພິ່ງພໍໃຈ, ແຕ່ອັດຕາເຂົ້າຮຽນລວມ ຫຼຸດລົງຄາດໝາຍແຜນການປີທີ່ຜ່ານມາ.*** ໃນຊັ້ນມັດທະຍົມຕອນຕົ້ນ ແລະ ມັດທະຍົມປາຍ ລະອຽດມີດັ່ງນີ້:

- ໂຮງຮຽນມັດທະຍົມຕົ້ນຈາກ 691 ແຫ່ງໃນປີ 2008, ເພີ່ມຂຶ້ນເປັນ 722 ແຫ່ງໃນປີ 2009 (ເພີ່ມຂຶ້ນ 4.5 %). ຈຳນວນຫ້ອງຮຽນຈາກ 5,608 ຫ້ອງໃນປີ 2008, ເພີ່ມຂຶ້ນເປັນ 6,003 ຫ້ອງ ໃນປີ 2009 (ເພີ່ມຂຶ້ນ 7 %) ແລະ ມີນັກຮຽນຊັ້ນມັດທະຍົມຕົ້ນຈາກ 255,083 ຄົນ/ຍິງ 112,911 ຄົນໃນປີ 2008, ເພີ່ມຂຶ້ນເປັນ 264,579 ຄົນ/ຍິງ 117,938 ໃນປີ 2009 (ເພີ່ມຂຶ້ນ 3.7% / ຍິງ 4.5%), ໃນນັ້ນ ເມືອງທຸກທີ່ສຸດເພີ່ມຂຶ້ນ **9.1%,** ເມືອງທຸກເພີ່ມ **3.2%** ແລະ ເມືອງບໍ່ທຸກເພີ່ມ **1.9% ). ເຖິງວ່າ**ອັດຕາການເຂົ້າຮຽນລວມຈາກ 59.2% ໃນປີ 2008, ເພີ່ມຂຶ້ນເປັນ 62.7% ໃນປີ 2009 (ເພີ່ມຂຶ້ນ **3.4 %)** ***ແຕ່ຖ້າທຽບໃສ່ແຜນການແມ່ນຫຼຸດຄາດໝາຍເຖິງ 5.3%*** ແລະ ດັດສະນີຄວາມສະເໝີພາບຍິງ-ຊາຍເທົ່າກັບ 0.86. ອັດຕາເລື່ອນຊັ້ນ-ຈົບຊັ້ນຈາກ 87% ໃນປີ 2008 ເພີ່ມຂຶ້ນເປັນ 87.4% ໃນປີ 2009 ( ເພດຍິງມີອັດຕາເລື່ອນຊັ້ນ-ຈົບຊັ້ນສູງກ່ວາເພດຊາຍ ). ***ຖ້າທຽບໃສ່ຄາດໝາຍແຜນການອັດຕາເລື່ອນຊັ້ນ-ຈົບຊັ້ນແມ່ນຫຼຸດຄາດໝາຍເຖິງ 9.6%, ເນື່ອງຈາກນັກຮຽນຈຳນວນດັ່ງກ່າວບໍ່ເອົາໃຈໃສ່ຕໍ່ການຮຽນ, ຈຳນວນນັກຮຽນ ໃນຫ້ອງຫຼາຍ, ພໍ່ແມ່ຜູ້ປົກຄອງຈຳນວນໜຶ່ງຍັງບໍ່ເອົາໃຈໃສ່ສຶກສາອົບຮົມລູກ, ຄູບໍ່ເອົາໃສ່ສອນ (ຄູຈຳນວນໜຶ່ງຍັງຈົ່ງ ຄວາມຮູ້ໄວ້ສອນເພີ່ມ), ຄູສອນບໍ່ຖືກວຸດທິ, ສອນບໍ່ຖືກວິຊາສະເພາະ ແລະ ການຝຶກອົບຮົມຄູບໍ່ທັນທົ່ວເຖິງ ເຮັດໃຫ້ຄູສອນມີຄວາມຮູ້ວິຊາການບໍ່ເລິກເຊິ່ງ ແລະ ບໍ່ທັນເຂົ້າໃຈວິທີການສອນແບບໃໝ່. ຜູ້ບໍລິຫານການສຶກສາຈຳນວນໜຶ່ງຂາດຄວາມຮັບຜິດຊອບ ເປັນຕົ້ນແມ່ນຂັ້ນເມືອງ ແລະ ຜູ້ອຳນວຍການບໍ່ເອົາໃຈໃສ່ໃນການຕິດຕາມ ປະເມີນຜົນ ການຮຽນ-ການສອນ ແລະ ບໍ່ທັນມີວິທີແກ້ໄຂຢ່າງທັນການ***(ຂັດຈາກບົດສະຫຼຸບປະຈຳປີຂອງແຂວງ). ອັດຕາການຄ້າງຫ້ອງໃນປີ 2009 ແມ່ນເທົ່າເດີມ 1.9%. ***ໃນວຽກງານການມີສ່ວນຮ່ວມຂອງສັງຄົມ ແລະ ອຳນາດການປົກຄອງຂັ້ນທ້ອງຖິ່ນຢູ່ບາງແຂວງຍັງບໍ່ທັນເຫັນຄວາມສຳຄັນໃນວຽກງານການສຶກສາ, ຂາດການເອົາໃຈໃສ່ປຸກລະດົມຊຸກຍູ້ພໍ່ ແມ່ນັກຮຽນຈຶ່ງເຮັດໃຫ້ອັດຕາການປະລະຮຽນລວມຍັງສູງ ແລະ ມີການຫຼຸດລົງພຽງເລັກໜ້ອຍ***ຈາກ 11.1% ໃນປີ 2008 ຫຼຸດລົງ 10.7% ໃນປີ 2009 (ຫຼຸດລົງ 0.4%) ໃນນັ້ນ, ອັດຕາປະລະນັກຮຽນເພດຍິງ 9.7% ແລະເພດຊາຍ 11.5%.

- ໂຮງຮຽນມັດທະຍົມຕອນປາຍຈາກ 31 ແຫ່ງໃນປີ 2008, ເພີ່ມຂຶ້ນເປັນ 35 ແຫ່ງໃນປີ 2009 (ເພີ່ມຂຶ້ນ 12.9%). ຈຳນວນຫ້ອງຮຽນຈາກ 3,165 ຫ້ອງໃນປີ 2008 ເພີ່ມຂຶ້ນເປັນ 3,188 ຫ້ອງໃນປີ 2009 (ເພີ່ມຂຶ້ນ 0.7%). ຈຳນວນນັກຮຽນ 154,785 ຄົນ/ຍິງ 67,002ຄົນ ໃນປີ2008, ເພີ່ມຂຶ້ນເປັນ 157,320ຄົນ/ຍິງ 68,852 ຄົນໃນປີ 2009 (ເພີ່ມຂຶ້ນ 1.6%/ຍິງ 2.8%); ໃນນັ້ນ ເມືອງທຸກທີ່ສຸດເພີ່ມຂຶ້ນຫຼາຍກ່ວາໝູ່ (ເມືອງທຸກທີ່ສຸດເພີ່ມຂຶ້ນ **5.4%,** ເມືອງທຸກເພີ່ມ **1.9%** ແລະ ເມືອງບໍ່ທຸກເພີ່ມ **0.7%).** ອັດຕາການເຂົ້າຮຽນລວມຈາກ 37.2% ໃນປີ 2008 ຫຼຸດລົງເປັນ

**36.8%** ໃນປີ 2009 (ຫຼຸດລົງ 0.3% ແລະ ດັດສະນີຄວາມສະເໝີພາບ ຍິງ-ຊາຍ ເທົ່າກັບ 0.59) ***ຖ້າທຽບໃສ່ແຜນການອັດຕາເຂົ້າຮຽນລວມແມ່ນຫຼຸດຄາດໝາຍ 3.2% ເນື່ອງຈາກວ່າການເກັບກຳຕົວເລກປະຊາກອນໃນປີ 2008 ຜິດພາດ ເປັນຕົ້ນແມ່ນແຂວງສາລະວັນ ຈຶ່ງເຮັດໃຫ້ອັດຕາເຂົ້າຮຽນປີທີ່ຜ່ານມາສູງກວ່າ ແລະ ນັກຮຽນເອງມີຫຼາຍສິ່ງທຫຍໍ້ທໍ້ໃນຄອບຄົວ ແລະ ສັງຄົມ(ຂັດຈາກບົດສະຫຼຸບປະຈຳປີຂອງແຂວງ).*** ອັດຕາເລື່ອນຊັ້ນ-ຈົບຊັ້ນຈາກ 90.4% ໃນປີ 2008 ຫຼຸດລົງເປັນ 89.9% ໃນປີ 2009 (ເພດຍິງອັດຕາສູງກ່ວາເພດຊາຍ) ***ຖ້າທຽບໃສ່ແຜນການແມ່ນຫຼຸດຄາດໝາຍເຖິງ 8.1%;*** ອັດຕາຄ້າງຫ້ອງລວມ 1.2% (ທຽບໃສ່ 2008 ແມ່ນຍັງຄືເກົ່າ ແລະ ຊາຍຄ້າງຫ້ອງຫຼາຍກ່ວາຍິງ). ***ຄູຈຳນວນໜຶ່ງ ຍັງບໍ່ທັນໄດ້ເອົາໃຈໃສ່ຕໍ່ການຮຽນ-ການສອນ, ຄູຂາດການຝຶກອົບຮົມ, ຂາດພື້ນຖານໂຄງລ່າງເຮັດໃຫ້ນັກຮຽນມີຄວາມແອອັດ, ການສະໜອງຄູບໍ່ພຽງພໍ, ຄູສອນບໍ່ຖືກວຸດທິ (ຄູມັດທະຍົມຕົ້ນສອນມັດທະຍົມປາຍ)ເຊັ່ນໂຮງຮຽນມັດທະຍົມປາຍບາງແຫ່ງມີຄູລະດັບປະລິນຍາຕີພຽງ 2-3 ຄົນ, ການສອນຂອງຄູຍັງບໍ່ທັນໄດ້ນຳໃຊ້ວິທີການສອນແບບເອົານັກຮຽນເປັນໃຈກາງ ສ່ວນຫຼວງຫຼາຍນຳໃຊ້ຄູເປັນໃຈກາງອ່ານຊ້າໃຫ້ຈົດ ແລະ ອື່ນໆ*** (ຂັດຈາກບົດສະຫຼຸບປະຈຳປີຂອງແຂວງ). ອັດຕາປະລະຈາກ 8.3%ໃນປີ 2008 ເພີ່ມຂຶ້ນເປັນ 8.9% ເພີ່ມຂຶ້ນ 0.6% (ເພດຊາຍປະລະ 9.8% ເພດຍິງປະລະ 7.8%). ***ການປະລະມີທ່າເພີ່ມຂຶ້ນໃນຊັ້ນມັດທະຍົມຕອນປາຍກໍເຊັ່ນກັນກັບ ຊັ້ນປະຖົມສຶກສາ ແລະ ມັດທະຍົມຕອນຕົ້ນ ເຊິ່ງມັນສະແດງວ່າອຳນາດການປົກຄອງ, ຜູ້ບໍລິຫານການສຶກສາທຸກຂັ້ນບໍ່ທັນໄດ້ເອົາໃຈໃສ່ເຊັ່ນດຽວກັນກັບມັດທະຍົມຕອນຕົ້ນ.***

1.2.3. <u>ວຽກງານການສຶກສາຊົນເຜົ່າ ແລະ ການສຶກສາພິເສດ</u>: ວຽກງານການສຶກສາຊົນເຜົ່າໄດ້ຖືເປັນບັນຫາສຳຄັນໃນການກໍ່ສ້າງພະນັກງານສືບທອດຊົນເຜົ່າ, ກະຊວງສຶກສາ ທິການ ໄດ້ສົມທົບກັບແຂວງ, ເມືອງ ແລະ ບ້ານທີ່ຂາດຄູຄົ້ນຄ້ວາຄັດເລືອກເອົາເດັກຊົນເຜົ່າ ໂດຍສະເພາະແມ່ນເດັກຍິງມາຮຽນຄູຊົນເຜົ່າເຊິ່ງຜູ້ຮຽນຄູຕ້ອງໄດ້ມີການເຊັນສັນຍາ ແລະ ປະຕິຍານຕົນຕໍ່ອຳນາດການປົກຄອງຂັ້ນເມືອງ ແລະ ແຂວງ, ເມື່ອຮຽນຈົບແລ້ວກັບຄືນໄປສອນຢູ່ທ້ອງຖິ່ນຕົນ. ການກໍ່ສ້າງຄູໃຫ້ເຂດຫ່າງໄກສອກຫຼີກເມືອງທີ່ທຸກຍາກເປັນຕົ້ນແມ່ນບ້ານທີ່ທຸກຍາກ, ນັກຮຽນຄູທີ່ໄດ້ເຊັນສັນຍາມາຮຽນໃນລະບົບ 8+3 ຈຳນວນ 115 ຄົນ/ຍິງ 43 ຄົນ ທີ່ມາຈາກ 16 ຊົນເຜົ່າ.

ສົກຮຽນ 2008-2009, ເມື່ອແຍກສະເພາະໂຮງຮຽນສ້າງຄູຊົນເຜົ່າມີ 3 ແຫ່ງ ແລະ ມີນັກຮຽນຄູຊົນເຜົ່າທັງໝົດ 189 ຄົນ/ຍິງ 59 ຄົນ, ໃນນັ້ນ ສ້າງຄູຊົນເຜົ່າຫຼວງນ້ຳທາມີ 2 ແຫ່ງ ລະບົບ 5+3 ແລະ ລະບົບ 8+3. ໃນລະບົບ 5+3 ມີນັກຮຽນຄູຊົນເຜົ່າ 107 ຄົນ/ຍິງ 48 ຄົນ ແລະ ລະບົບ 8+3 ຢູ່ສ້າງຄູຫຼວງນ້ຳທາ ແລະ ສ້າງຄູຄັງໄຂ ມີນັກຮຽນ 82 ຄົນ/ຍິງ 31 ຄົນ.

ນອກນັ້ນ ກໍໄດ້ຄັດເລືອກເອົານັກຮຽນຊົນເຜົ່າຢູ່ເຂດຫ່າງໄກສອກຫຼີກຕາມແຕ່ລະເມືອງ, ບ້ານມາຮຽນເພື່ອສ້າງເປັນພະນັກງານສືບທອດຢູ່ໂຮງຮຽນພອນສະຫວັນ ແລະ ກຽມເຂົ້າມະຫາວິທະຍາໄລ (ທີ່ວິທະຍາເຂດດົງໂດກ) ເຊິ່ງໄດ້ ມີນັກຮຽນຊົນເຜົ່າມາຮຽນຈຳນວນ 215 ຄົນ/ຍິງ 89 ຄົນ. ພິເສດແມ່ນ ໄດ້ໃຫ້ບຸລິມະສິດໂກຕ້າຄູແກ່ເມືອງທີ່ທຸກຍາກ ແລະ ບ້ານທີ່ທຸກຍາກມີທັງໝົດ 1,447 ຄົນ. ວຽກງານການສົ່ງການສຶກສາຊົນເຜົ່າໄດ້ສຳເລັດສະບັບຮ່າງນະໂຍບາຍແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມ.

ໃນທົ່ວປະເທດມີໂຮງຮຽນກິນນອນຊົນເຜົ່າ **20 ແຫ່ງ,** ໃນນັ້ນໂຮງຮຽນທີ່ຂຶ້ນກັບຂັ້ນກະຊວງມີ 3 ແຫ່ງ, ພາຍໃຕ້ການຄຸ້ມຄອງຂອງຂັ້ນແຂວງ 11 ແຫ່ງ ແລະ ຂັ້ນເມືອງຈຳນວນ 6 ແຫ່ງ. ໃນປີ 2008 ມີນັກຮຽນຊົນເຜົ່າທັງໝົດ 6,090

ຄົນ/ຍິງ 2,012, ເພີ່ມຂຶ້ນເປັນ 7,034 ຄົນ/ຍິງ 2,450 (ເພີ່ມຂຶ້ນ 944 ຄົນ) ຄົນໃນປີ 2009, ໃນນັ້ນ ນັກຮຽນຊັ້ນປະຖົມ 874 ຄົນ/ຍິງ 320 ຄົນ ແລະ ຊັ້ນມັດທະຍົມ 6,160 ຄົນ/ ຍິງ 2,131 ຄົນ. ***ຖ້າທຽບໃສ່ແຜ່ນການແມ່ນລື່ນຄາດໝາຍຂອງແຜນການ ຈຳນວນ 126 ຄົນ, ເນື່ອງຈາກມີແນວທາງອັນຖືກຕ້ອງເປັນບ່ອນອີງໃນການພັດທະນາການສຶກສາ ແລະ ມີທິດທາງຫັນການສຶກສາໄປສູ່ເຂດຊົນເຜົ່າຫ່າງໄກສອກຫຼີກ.*** ໂຮງຮຽນທີ່ກາຍເປັນ ໂຮງຮຽນ ຮຽນຮ່ວມທັງໝົດມີ 646 ແຫ່ງ, ໃນນັ້ນ ຈຳນວນນັກຮຽນພິການເບົາ-ກາງ ແລະ ສາມາດເຂົ້າຮຽນຮ່ວມທັງໝົດ 4,569 ຄົນ/ຍິງ 1,779 ຄົນ, ໃນນັ້ນ ນັກຮຽນຊັ້ນອະນຸບານມີ 282 ຄົນ/ຍິງ 131 ຄົນ, ຊັ້ນປະຖົມສຶກສາຈຳນວນ 4,195 ຄົນ/ຍິງ 1,616 ຄົນ ແລະ ຊັ້ນມັດທະຍົມສຶກສາຈຳນວນ 92 ຄົນ/ຍິງ 32 ຄົນ. ການສຶກສາຮຽນຮ່ວມລົງເລິກສະເພາະເດັກພິການໄດ້ນຳເຂົ້າເປັນວິຊາບັງຄັບໜຶ່ງໃນສະຖາບັນສ້າງຄູທີ່ໄດ້ເລີ່ມສິດສອນມາແຕ່ສົກຮຽນ 2007-2008. ພ້ອມກັນນັ້ນ, ກໍ່ໄດ້ເຊື່ອມເຂົ້າໃນແຜນແຜນປະຕິບັດງານແຫ່ງຊາດການສຶກສາເພື່ອທຸກຄົນ ແລະ ກອບພັດທະນາຂະແໜງການສຶກສາ.

ແຂວງຫົວພັນໄດ້ສຳເລັດການຈັດຈ້າງ-ຈັດຊື້ອຸປະກອນ ແລະ ເຄື່ອງຮັບໃຊ້ແກ່ໂຮງຮຽນສາມັນກິນນອນຊົນເຜົ່າ. ແຂວງຄຳມ່ວນໄດ້ສົ່ງເສີມການສຶກສາສຳລັບເດັກພິເສດ (ເດັກພິການ), ເດັກດ້ອຍໂອກາດ, ເດັກຍາກຈົນພາຍໃນ 9 ເມືອງ ມີ 40 ໂຮງຮຽນ. ***ການສົ່ງເສີມການສຶກສາຊົນເຜົ່າຍັງໄດ້ສະໜອງອຸປະກອນການສຶກສາ, ເຄື່ອງນຸ່ງຫົ່ມ, ເຄື່ອງໃຊ້ສອຍ ພ້ອມທັງສະໜອງເບ້ຍລ້ຽງໃຫ້ນັກຮຽນຊົນເຜົ່າ ແລະ ມີໂຄງການໃຫ້ອາຫານເສີມໃຫ້ເຂດຊົນເຜົ່າ ທີ່ທຸກຍາກ. ແຕ່ພ້ອມດຽວກັນນັ້ນຍັງມີຫຼາຍບັນຫາຕ້ອງ ໄດ້ປັບປຸງເປັນຕົ້ນແມ່ນການໃຫ້ຄວາມສຳຄັນຂອງການສຶກສາຢ່າງເປັນ ຮູບປະທຳ. ເປັນຕົ້ນແມ່ນເອົາໃຈໃສ່ສະໜອງການສຶກສາທີ່ມີຄຸນນະພາບໃຫ້ແກ່ນັກຮຽນຊົນເຜົ່າໃນໂຮງຮຽນກິນນອນຊົນເຜົ່າແຫ່ງຕ່າງໆ ພ້ອມທັງການປັບປຸງລະບົບຄຸ້ມຄອງບໍລິຫານໃຫ້ມີປະສິດທິພາບ.***

ໂຄງການອາຫານເສີມຈາກ 3 ແຂວງໃນປີ 2008 ເພີ່ມຂຶ້ນເປັນ 6 ແຂວງ (ຜົ້ງສາລີ, ອຸດົມໄຊ, ຫຼວງນ້ຳທາ, ສາລະວັນ, ເຊກອງ ແລະ ອັດຕະປື) ໃນ ປີ 2009 ເຊິ່ງກວມເອົາ 29 ເມືອງທີ່ທຸກຍາກ. ໂຮງຮຽນທີ່ໄດ້ຮັບໂຄງການອາຫານເສີມຈາກ 1,081 ແຫ່ງໃນປີ 2008, ເພີ່ມຂຶ້ນເປັນ 1,327 ແຫ່ງ ໃນປີ 2009. ການປະຕິບັດໂຄງການອາຫານເສີມແມ່ນໂຮງຮຽນປະຖົມທັງໝົດ, ຈຳນວນນັກຮຽນໄດ້ຮັບອາຫານເສີມ ໃນປີ 2008 ມີທັງໝົດ 83,843 ຄົນ/ຍິງ 38,568 ຄົນ ເພີ່ມຂຶ້ນເປັນ 113,514 ຄົນ/ຍິງ 51,949 ຄົນໃນປີ 2009. ອາຫານທີ່ໄດ້ຮັບໃນ 2009 ມີຈຳນວນທັງໝົດ 4,153.89 ໂຕນ ເປັນມູນຄ່າທັງໝົດ 2,929,360 ໂດລາສະຫະລັດອາເມລິກາ.

## 1.3. ການສຶກສານອກໂຮງຮຽນ

1.3.1. ວຽກງານລົບລ້າງຄວາມບໍ່ຮູ້ໜັງສື: ການລົບລ້າງຄວາມບໍ່ຮູ້ໜັງສືໃຫ້ປະຊາຊົນໃນກຸ່ມເກນອາຍຸ ອາຍຸ 6-14 ປີ ໄດ້ 8,200 ຄົນ/ຍິງ 4,642 ຄົນ ເມື່ອທຽບໃສ່ແຜນການປະຕິບັດໄດ້ 54.32%; ກຸ່ມອາຍຸ 15-40 ປີ ໄດ້ 41,401 ຄົນ/ຍິງ 25,204 ຄົນ ທຽບໃສ່ແຜນການປະຕິບັດໄດ້ 73,88% ແລະ ກຸ່ມອາຍຸ 15 ປີຂຶ້ນໄປໄດ້ 42,878 ຄົນ/ ຍິງ 25,851 ຄົນ ທຽບໃສ່ແຜນການ ປະຕິບັດໄດ້ 64.71%.

ປັດຈຸບັນ, ຖ້າທຽບໃສ່ປະຊາກອນທົ່ວປະເທດ ມີຄົນຮູ້ໜັງສືໃນກຸ່ມອາຍຸ 15-40 ປີ ເທົ່າກັບ **83.80%** ແລະ ກຸ່ມອາຍຸ 15 ປີ ຂຶ້ນໄປເທົ່າກັບ 78.51%/ຍິງ 65.05%. ***ຂໍ້ມູນ ແລະ ສະຖິຕິຕ່າງໆຂອງວຽກງານສຶກສານອກໂຮງຮຽນບາງ***

*ແຂວງບໍ່ທັນຊັດເຈນເທົ່າທີ່ຄວນ, ເປັນຕົ້ນແມ່ນຕົວເລກການລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຊັ້ນປະຖົມ; ບາງທ້ອງຖິ່ນຂາດການຕໍ່ເນື່ອງ, ບໍ່ທົ່ວເຖິງ ແລະ ການຮຽນບໍ່ຕິດພັນວິຊາຊີບທີ່ເຂົາເຈົ້າເປັນຢູ່* (ຂໍ້ດຈາກບົດສະຫຼຸບ ຂອງກົມ ແລະ ແຂວງ)

ການສຶກສານອກໂຮງຮຽນໄດ້ສະໜອງປຶ້ມແບບຮຽນ ແລະ ຄູ່ມືຄູລະດັບລຶບລ້າງ, ລະດັບ II ແລະ ລະດັບ III, ແບບຮຽນຈຳນວນ 90,000 ຫົວ ຄູ່ມືຄູ 4,500 ຫົວ ແລະ ໃບປະກາດສະນິຍະບັດຊັ້ນປະຖົມບຳລຸງ 32.000 ໃບ.

ຄູທີ່ສອນຢູ່ໂຮງຮຽນບຳລຸງຍົກລະດັບການສຶກສາຂັ້ນແຂວງ, ຂັ້ນເມືອງ ແລະ ລະດັບລຶບລ້າງຄວາມບໍ່ຮູ້ໜັງສື ແມ່ນນຳໃຊ້ຄູສອນປະຈຳຢູ່ກັບໂຮງຮຽນ ແລະ ຄູສອນສາຍສາມັນຮັບເຊີນ. ສ່ວນຄູຝຶກຢູ່ສູນຕ່າງໆແມ່ນນຳໃຊ້ຄູສອນປະຈຳການ. ຄູສອນດັ່ງກ່າວມີພຽງຈຳນວນໜຶ່ງໄດ້ຮັບການຝຶກອົບຮົມກ່ຽວກັບວິທີສິດສອນຜູ້ໃຫຍ່.

ໃນດ້ານຫຼັກສູດຂອງການສຶກສານອກໂຮງຮຽນແມ່ນໄດ້ປັບປຸງຄືນທັງຫຼັກສູດສູນກາງ ແລະ ຫຼັກສູດທ້ອງຖິ່ນ ເພື່ອຮັບໃຊ້ໂດຍທົ່ວໄປ ເປັນຕົ້ນແມ່ນສຳລັບ 47 ເມືອງທຸກ ເຊັ່ນ: ຫຼັກສູດລະດັບລຶບລ້າງຄວາມບໍ່ຮູ້ໜັງສືໄດ້ແຊກຊ້ອນເນື້ອໃນບົດບາດຍິງ-ຊາຍ, ຫຼັກສູດສຳລັບສອນນາຍບ້ານທີ່ບໍ່ຮູ້ໜັງສື, ປຶ້ມອ່ານເສີມ ແລະ ຄູ່ມືຄູລຶບລ້າງຄວາມບໍ່ຮູ້ໜັງສືສຳລັບຊົນເຜົ່າ. ປະຈຸບັນ, ສູນການສຶກສາຊຸມຊົນ ມີທັງໝົດ 343 ແຫ່ງ ໃນນັ້ນ ສົກຮຽນ2008-2009 ເພີ່ມຂຶ້ນ 3 ແຫ່ງ.

ສຳລັບເງິນອຸດໜູນຄູອາສາສະໝັກ (ຄູປະຊາສຶກສາ) ແມ່ນໄດ້ຮັບອະນຸມັດເງິນຈຳນວນ 2.6 ຕື້ກີບ ເຊິ່ງໄດ້ແບ່ງປັນໃຫ້ທຸກແຂວງໃນທົ່ວປະເທດ (130.000 ກີບ/ເດືອນ, ຈຳນວນ 04 ເດືອນ/ປີ).

1.3.2. <u>ວຽກງານບຳລຸງຍົກລະດັບການສຶກສາ</u>: ບຳລຸງຍົກລະດັບການສຶກສາລະດັບ II ( ທຽບເທົ່າ ປ4)ມີຜູ້ເສັງຈົບໄດ້ 33,810 ຄົນ, ຍິງໄດ້ 19.718 ຄົນ, ທຽບໃສ່ ແຜນການປະຕິບັດໄດ້ 78,50%. ລະດັບ III(ຈົບປະຖົມ)ໄດ້ 41.168 ຄົນ / ຍິງໄດ້ 21,730 ຄົນ ເມື່ອທຽບໃສ່ແຜນປະຕິບັດໄດ້ 106.62%. ບຳລຸງຍົກລະດັບການສຶກສາລະດັບລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຊັ້ນຈົບປະຖົມໃຫ້ແກ່ ຄະນະນຳຂັ້ນບ້ານຢູ່ 2 ແຂວງຄື: ຜົ້ງສາລີ ໄດ້ 69 ຄົນ ແລະ ຫຼວງນ້ຳທາ ໄດ້ 60 ຄົນ ທຽບໃສ່ແຜນປະຕິບັດໄດ້ 107.50%.

ໃນສົກປີ 2008-2009 ໄດ້ປະກາດຈົບປະຖົມບຳລຸງຂັ້ນເມືອງໄດ້ 9 ເມືອງ ຄື: ເມືອງທ່າໂທມ/ແຂວງຊຽງຂວາງ; ເມືອງແມດ/ແຂວງວຽງຈັນ; ເມືອງທ່າແຂກ/ແຂວງຄຳມ່ວນ; ເມືອງໄຊບູລີ, ເມືອງຈຳພອນ ແລະ ເມືອງສອງຄອນ/ແຂວງສະຫວັນນະເຂດ; ເມືອງປາກອູ, ເມືອງນ່ານ ແລະ ເມືອງຈອມເພັດ/ແຂວງຫຼວງພະບາງ. ປະຈຸບັນມີທັງໝົດ 52 ເມືອງທີ່ປະກາດຈົບຊັ້ນປະຖົມບຳລຸງ ເຊິ່ງເທົ່າກັບ36.87% ຂອງ 141 ເມືອງໃນທົ່ວປະເທດ.

ການບຳລຸງຍົກລະດັບການສຶກສາຊັ້ນມັດທະຍົມໃຫ້ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນ, ໃນຊັ້ນມັດທະຍົມຕອນຕົ້ນ ມີທັງໝົດ 4,882 ຄົນ ເມື່ອທຽບໃສ່ແຜນການປະຕິບັດໄດ້ 195.28 %, ໃນນັ້ນ ຈົບຊັ້ນ ມ.3 ໄດ້ 1,683 ຄົນ/ຍິງ 766 ຄົນ. ເມື່ອທຽບໃສ່ແຜນການແມ່ນປະຕິບັດໄດ້ 110.21 %. ສຳລັບຊັ້ນມັດທະຍົມປາຍ ມີທັງໝົດ 3,942 ຄົນ, ທຽບໃສ່ແຜນປະຕິບັດໄດ້ 157.68% ແລະ ຈົບຊັ້ນ ມ.6 ໄດ້ 1,992 ຄົນ/ຍິງ 604 ຄົນ, ເມື່ອທຽບໃສ່ແຜນການສາມາດປະຕິບັດໄດ້ 80.84%. *ການບຳລຸງຍົກລະດັບຊັ້ນມັດທະຍົມໃຫ້ ແກ່ພະນັກງານ, ທະຫານ, ຕຳຫຼວດ*

*ແລະ ປະຊາຊົນ, ຍັງມີຜູ້ຮຽນຈຳນວນໜຶ່ງຄຸນນະພາບບໍ່ທັນສູງ ເຊິ່ງມີລັກສະນະຜູ້ຮຽນຢາກໄດ້ແຕ່ໃບປະກາດສະນີຍະບັດ* ( ຂໍ້ດຈາກບົດສະຫຼຸບຂອງກົມ ).

ສຳເລັດການປັບປຸງຫຼັກສູດບຳລຸງຍົກລະດັບການສຶກສາຊັ້ນມັດທະຍົມຕອນຕົ້ນ, ລະບຽບການຈັດການຮຽນ-ການສອນ ແລະ ການສອບເສັງຊັ້ນມັດທະຍົມຕອນປາຍ ແລະ ໄດ້ແຈກຢາຍໃຫ້ພະແນກສຶກສາປະຈຳແຂວງ ແລະ ນະຄອນຫຼວງໃນທົ່ວປະເທດ. ນອກນັ້ນ ໄດ້ມີການຕິດຕາມກວດກາການສອບເສັງຈົບຊັ້ນມັດທະຍົມຕອນປາຍ 10 ແຂວງຄື: ຫຼວງນ້ຳທາ, ອຸດົມໄຊ, ຫຼວງພະບາງ, ຊຽງຂວາງ, ຄຳມ່ວນ, ສະຫວັນນະເຂດ, ອັດຕະປື, ວຽງຈັນ, ບໍ່ແກ້ວ ແລະ ນະຄອນຫຼວງວຽງຈັນ.

1.3.3. <u>ວຽກງານຝຶກອົບຮົມວິຊາຊີບຂັ້ນພື້ນຖານ</u>: ການຝຶກອົບຮົມວິຊາຊີບຂັ້ນພື້ນຖານຢູ່ສູນພັດທະນາການສຶກສານອກໂຮງຮຽນ, ສູນການສຶກສານອກໂຮງຮຽນປະຈຳພາກ, ສູນການສຶກສາຊຸມຊົນ ແລະ ໝູ່ບ້ານຕ່າງໆໄດ້ທັງໝົດ 1,318 ຄົນ/ຍິງ 763 ຄົນ ທຽບໃສ່ແຜນການ ປະຕິບັດໄດ້ 35.63%. ***ການປະຕິບັດຝຶກອົບຮົມວິຊາຊີບຂັ້ນພື້ນຖານແມ່ນໄດ້ມີຫຼັກສູດ ແລະ ຄູ່ມືແທດເໝາະກັບ ຄວາມຕ້ອງການຂອງຜູ້ຮຽນ ແລະ ໄດ້ຮັບການສະໜັບສະໜູນຈາກອຳນາດການປົກຄອງທ້ອງຖິ່ນ, ກອງທຶນລຶບລ້າງ ຄວາມທຸກຍາກ ແລະ ໂຄງການຮ່ວມມືກັບຕ່າງປະເທດທີ່ປະຕິບັດຢູ່ທ້ອງຖິ່ນ.***

ການພັດທະນາຊຸມຊົນຍັງໄດ້ຝຶກອົບຮົມກ່ຽວກັບການມີສ່ວນຮ່ວມຂອງຊຸມຊົນເຂົ້າໃນການສົ່ງເສີມການເຂົ້າຮຽນຂອງເດັກໃນເກນອາຍຸ, ການປົກປັກຮັກສາ ແລະ ຄຸ້ມຄອງໂຮງຮຽນ, ການສ້າງກອງທຶນທະນາຄານເຂົ້າ, ທະນາຄານງົວ - ຄວາຍ, ການປົກປັກຮັກສາສິ່ງແວດລ້ອມ, ນ້ຳສະອາດ ແລະ ສຸຂະອານາໄມຂັ້ນພື້ນຖານເປັນຕົ້ນ.

ວຽກງານພັດທະນາຫຼັກສູດວິຊາຊີບຂັ້ນພື້ນຖານໄດ້ມີ 7 ສາຂາວິຊາຄື: ລ້ຽງສັດ, ປູກຝັງ, ຂະຫຍາຍພັນໄມ້ກິນໝາກ, ປູກເຫັດ, ບໍລິການ-ທ່ອງທ່ຽວ, ປຸງແຕ່ງອາຫານ, ຕັດຫຍິບ, ຕ່ຳຫູກ, ທຸລະກິດຂະໜາດນ້ອຍ, ຊ່າງໄມ້, ຊ່າງກໍ່ ແລະ ອື່ນໆ ເພື່ອສະໜອງໃຫ້ແກ່ເມືອງທຸກຍາກ. ***ການຝຶກອົບຮົມຕາມຮູບແບບກັບທີ່ ແລະ ເຄື່ອນທີ່ຕາມຄວາມຕ້ອງການຂອງຜູ້ຮຽນໄດ້ຜົນດີກ່ວາ, ຫຼັງຈາກຮຽນຈົບແລ້ວຜູ້ຮຽນສາມາດນຳໃຊ້ເຂົ້າໃນການຜະລິດເພື່ອລ້ຽງຊີບ ແລະ ສ້າງລາຍໄດ້ໃຫ້ແກ່ຄອບຄົວ.***

## 1.4. ອາຊີວະສຶກສາ ແລະ ອົບຮົມວິຊາຊີບ

ໂຮງຮຽນອາຊີວະສຶກສາ ທັງພາກລັດ ແລະ ເອກະຊົນໄດ້ມີການຂະຫຍາຍຕົວໄປທົ່ວທຸກແຂວງ. ໃນປີ 2008, ນຳນວນໂຮງຮຽນອາຊີວະສຶກສາທີ່ຂຶ້ນກັບກະຊວງສຶກສາຍັງຄືເກົ່າມີ 21 ແຫ່ງ ແລະ 1 ສູນ, ໃນນັ້ນ ວິທະຍາໄລ 2 ແຫ່ງ, ໂຮງຮຽນເຕັກນິກ-ວິຊາຊີບ 10 ແຫ່ງ ແລະ ໂຮງຮຽນວິຊາຊີບແບບປະສົມ 9 ແຫ່ງ. ***ໃນດ້ານຈຳນວນຄູສອນ, ນັກສຶກສາເຂົ້າຮຽນໂຮງຮຽນອາຊີວະສຶກສາເກືອບທຸກລະດັບໄດ້ມີການຂະຫຍາຍຕົວໄປພ້ອມກັບການປັບປຸງຄຸນນະພາບໂຮງຮຽນ ແລະ ຄຸນນະພາບການຮຽນ-ການສອນ.*** ຈຳນວນຄູສອນຕົວຈິງກໍໄດ້ເພີ່ມຂຶ້ນ ຈາກ 1,177 ຄົນ/ຍິງ 350 ຄົນໃນປີ 2008, ເພີ່ມຂຶ້ນເປັນ1,303 ຄົນ/ຍິງ 414 ຄົນ (ເພີ່ມຂຶ້ນ 5%) ໃນປີ 2008-2009. ຈຳນວນນັກຮຽນ-ນັກສຶກສາສາຍວິຊາຊີບ ແລະ ເຕັກນິກຈາກ 17,182 ຄົນ/ຍິງ 6,318 ຄົນໃນປີ 2008 ເພີ່ມຂຶ້ນເປັນ 17,939 ຄົນ /ຍິງ 6,996 (ເພີ່ມຂຶ້ນ 4%) ໃນປີ 2009.

ໃນນັ້ນ ທົ່ວປະເທດມີຈຳນວນໂຮງຮຽນອາຊີວະ ໃນແຕ່ລະລະດັບ ດັ່ງນີ້:

**1.4.1** ອາຊີວະສຶກສາລະດັບຊັ້ນຕົ້ນ: ໃນປີ 2009, ໂຮງຮຽນອາຊີວະສຶກສາຊັ້ນຕົ້ນທັງໝົດທີ່ຂຶ້ນກັບກະຊວງສຶກສາທິການ, ກະຊວງສາທາລະນະສຸກ ແລະ ກະຊວງວັດທະນາທຳ-ຖະແຫຼງຂ່າວ ໃນລະບົບ 8+3 ແລະ 5+4 ມີຈຳນວນ 9 ແຫ່ງ ແລະ ມີນັກຮຽນທັງໝົດ 643 ຄົນ/ຍິງ 246 ຄົນເຊິ່ງ ຫຼຸດລົງ 71% ເມື່ອທຽບກັບປີທີ່ຜ່ານມາ. ***ໃນທົ່ວປະເທດໃນປີ 2009 ໂຮງຮຽນອະຊີວະລະດັບຊັ້ນຕົ້ນ ໄດ້ມີຈຳນວນນັກຮຽນຫຼຸດລົງຫຼາຍ ເນື່ອງຈາກນັກຮຽນ ແລະ ຜູ້ປົກຄອງບໍ່ມັກຮຽນ, ພ້ອມກັບທ່າອ່ຽງ ຂອງສັງຄົມ ມີຕ້ອງການວິຊາຊີບທີ່ສູງກ່ວາເພື່ອປະກອບເຂົ້າວຽກງານ ແລະ ການແນະນຳວິຊາຊີບຊັ້ນຕົ້ນຍັງບໍ່ທັນທົ່ວເຖິງ ແລະ ບໍ່ກວ້າງຂວາງເທົ່າທີ່ຄວນ***(ຂໍ້ດຈາກບົດສະຫຼຸບຂອງກົມ ແລະ ແຂວງ). ຄູສອນຕົວຈິງຢູ່ໂຮງຮຽນອາຊີວະຊັ້ນຕົ້ນ ມີທັງໝົດ 133 ຄົນ/ຍິງ 60 ຄົນ ແລະ ພະນັກງານບໍລິຫານ 24 ຄົນ. ***ຄູອາຈານທີ່ມີຄວາມຮູ້ຄວາມສາມາດ ແລະ ປະສົບການທີ່ໜັກແໜ້ນຍັງບໍ່ທັນມີພຽງພໍກັບຄວາມຕ້ອງການ.***

1.4.2 ອາຊີວະສຶກສາລະດັບຊັ້ນກາງ: ໂຮງຮຽນອາຊີວະສຶກສາລະດັບຊັ້ນກາງທັງໝົດທີ່ຂຶ້ນກັບກະຊວງສຶກສາທິການ, ກະຊວງສາທາລະນະສຸກ, ກະຊວງກະສິກຳປ່າໄມ້-ຊົນລະປະທານ, ກະຊວງຍຸດຕິທຳ ແລະ ກະຊວງວັດທະນາທຳ-ຖະແຫຼງຂ່າວ ໃນລະບົບ11+2 ແລະ 11+3 ມີຈຳນວນ 39 ແຫ່ງ; ໃນນັ້ນ ມີພາກເອກະຊົນ 7 ແຫ່ງ. ໃນປີ 2009, ຈຳນວນນັກຮຽນ ອາຊີວະ ລະດັບນີ້ມີທັງໝົດ 15,603 ຄົນ/ຍິງ 6,171ຄົນ ເພີ່ມ 0.18% ແລະ ຄູສອນຕົວຈິງ1,364 ຄົນ/ຍິງ 477 ຄົນ ເພີ່ມ 0.1% ແລະ ພະນັກງານບໍລິຫານ 271 ຄົນ/ຍິງ140ຄົນ ເພີ່ມຂຶ້ນ 0.39%. ***ເຫດຜົນຂອງການເພີ່ມຈຳນວນນັກຮຽນ ແລະ ຄູສອນໃນໂຮງຮຽນອາຊີວະສຶກສາລະດັບຊັ້ນກາງໜ້ອຍກໍເຊັ່ນດຽວກັບອະຊີວະລະດັບຊັ້ນຕົ້ນ.***

***ການປັບປຸງ ແລະ ຂະຫຍາຍໂຮງຮຽນວິຊາຊີບແບບປະສົມ ແລະ ໂຮງຮຽນອະຊີວະສຶກສາແມ່ນໄດ້ຮັບທຶນຊ່ວຍເຫຼືອຈາກຕ່າງປະເທດ ແລະ ການປະສານສົມທົບອຳນາດການປົກຄອງໃນລະດັບຕ່າງໆ ເຊິ່ງສະແດງອອກໃນ ການປັບປຸງ ແລະ ຂະຫຍາຍໂຮງຮຽນອາຊີວະສຶກສາຢູ່*** 6 ແຂວງພາກເໜືອ (ອຸດົມໄຊ, ຜົ້ງສາລີ, ຊຽງຂວາງ, ຫຼວງ ນ້ຳທາ, ຫົວພັນ ແລະ ໄຊຍະບູລີ) ການຊ່ວຍເຫຼືອລ້າຂອງເຢຍລະມັນ; ໂຮງຮຽນວິຊາຊີບແບບປະສົມແຂວງບໍ່ແກ້ວ ດ້ວຍການຊ່ວຍເຫຼືອລ້າຂອງ ສ.ສ ຫວຽດນາມ; ໂຮງຮຽນເຕັກນິກວິຊາຊີບແຂວງຄຳມ່ວນໄດ້ຮັບການຊ່ວຍເຫຼືອລ້າ ຂອງປະເທດລຸກຊຳບວກ; ໂຮງຮຽນເຕັກນິກວິຊາຊີບແຂວງຈຳປາສັກແມ່ນໂຄງການຮ່ວມມືລາວ-ແບນຊິກ ແລະ ກະຊວງ ຈັດຕັ້ງປະຕິບັດໂຄງການພັດທະນາໂຮງຮຽນເຕັກນິກວິຊາຊີບແຂວງສະຫວັນນະເຂດແມ່ນຮ່ວມມື ລາວ-ໄທ.

## 1.5. ການສຶກສາຊັ້ນສູງ ແລະ ມະຫາວິທະຍາໄລ

ສະຖາບັນການສຶກສາຊັ້ນສູງ, ມະຫາວິທະຍາໄລ (ທັງພາກລັດ ແລະ ເອກະຊົນ) ໄດ້ມີການປັບປຸງ ແລະ ຂະຫຍາຍໄປສູ່ແຕ່ລະພາກຂອງປະເທດໄດ້ມີສະຖາບັນການສຶກສາຊັ້ນສູງ (ລວມທັງລະດັບຊັ້ນສູງ, ປະລິຍາຕີ, ປະລິນຍາໂທ, ແລະ ປະລິນຍາເອກ) ທັງໝົດ 152 ແຫ່ງ/ຄະນະ, ໃນນັ້ນ ມີມະຫາວິທະຍາໄລ 4 ແຫ່ງ. ຈຳນວນນັກສຶກສາທີ່ສຶກສາຢູ່ສະຖາບັນການສຶກສາຊັ້ນສູງ, ມະຫາວິທະຍາໄລມີທັງໝົດ 78,109ຄົນ/ ຍິງ 32,562 ຄົນໃນປີ 2008, ເພີ່ມຂຶ້ນເປັນ 100,065 ຄົນ/ຍິງ42,657 ຄົນ (ເພີ່ມຂຶ້ນເປັນ **28.1%)** ໃນປີ 2009.

**1.5.1. ລະດັບການສຶກສາຊັ້ນສູງ:** ໂຮງຮຽນອາຊີວະສຶກສາລະດັບຊັ້ນສູງທັງໝົດ ຈຳນວນ 100 ແຫ່ງ/ຄະນະ, ໃນນັ້ນ ພາກເອກະຊົນກວມ 79 ແຫ່ງ. ໃນປີ 2009, ນັກຮຽນ-ນັກສຶກສາທັງພາກລັດ ແລະ ເອກະຊົນທັງໝົດ 46,022 ຄົນ/ ຍິງ 19,979 ຄົນ, ໃນນັ້ນ ນັກສຶກສາພາກເອກະຊົນ 22,984 ຄົນ/ ຍິງ 10,787 ຄົນ. ຄູສອນຕົວຈິງ 1,760 ຄົນ/ຍິງ 489 ຄົນ ໃນນັ້ນ ຄູສອນພາກເອກະຊົນ1,366ຄົນ/ຍິງ 366 ຄົນ ແລະ ພະນັກງານບໍລິຫານ 338 ຄົນ/ຍິງ172 ຄົນ.

ການປັບປຸງ ແລະ ການພັດທະນາໂຮງຮຽນອາຊີວະສຶກສາ ແລະ ສູນຝຶກອົບຮົມວິຊາຊີບ ລວມທັງສູນການສຶກສາຊຸມຊົນໄດ້ດຳເນີນການຮຽນ-ການສອນ ແລະ ຝຶກອົບຮົມສາຂາວິຊາຊີບຕ່າງໆຕາມຄວາມຕ້ອງການຂອງທ້ອງຖິ່ນຄື: ກະສິກຳ, ປູກຝັງ, ລ້ຽງສັດ, ປຸງແຕ່ງ ອາຫານ, ການໂຮງແຮມ, ຕັດຫຍິບ, ຊ່າງໄມ້, ຊ່າງກໍ່ສ້າງ, ຊ່າງໂລຫະ, ສ້ອມແປງລົດຍົນ, ບໍ່ແຮ່, ໄຟຟ້າ, ແຜນທີ່ ທີ່ດິນ, ການບັນຊີ ແລະ ອື່ນໆ.

ການປັບປຸງຫຼັກສູດສ້າງຄູອາຊີວະສຶກສາລະດັບຊັ້ນສູງ, ຫຼັກສູດການກໍ່ສ້າງ ແລະ ຫຼັກສູດການຝຶກອົບຮົມໃນສາຂາວິຊາຕ່າງໆແມ່ນໄດ້ປະຕິບັດສຳເລັດເຊັ່ນ: ສາຂາວິຊາໄຟຟ້າ, ເອເລັກໂຕນິກ, ກົນຈັກ, ຊົນລະປະທານ, ຕົບແຕ່ງພາຍໃນ, ກຸ່ມອາຊີບການພິມ ແລະ ອື່ນໆ.

**1.5.2. ລະດັບການສຶກສາປະລິນຍາຕີ ແລະ ປະລິນຍາໂທ:** ການສຶກສາລະດັບມະຫາວິທະຍາໄລ ທັງໝົດ 4 ແຫ່ງ, ພະນັກງານຄູອາຈານທັງໝົດທີ່ຢູ່ມະຫາວິທະຍາໄລ ມີ 2,967 ຄົນ/ ຍິງ 1,155 ຄົນ; ໃນນັ້ນ ມີຄູສອນຕົວຈິງ 2,509 ຄົນ/ຍິງ 935 ຄົນ, ພະນັກງານຄູສອນ ລະດັບ ປະລິນຍາເອກ 62 ຄົນ/ຍິງ 11 ຄົນ, ລະດັບປະລິນຍາໂທ 492 ຄົນ/ຍິງ123 ຄົນ, ເໜືອປະລິນຍາຕີ 19 ຄົນ /ຍິງ 8 ຄົນ, ປະລິນຍາຕີ 1,164 ຄົນ/ຍິງ 470 ຄົນ, ລະດັບຊັ້ນສູງ 108 ຄົນ/ຍິງ 58 ຄົນ ແລະ ອື່ນໆ (ລວມທັງ ສັນຍາຈ້າງ) ມີ 293 ຄົນ/ ຍິງ150 ຄົນ.

**ການສຶກສາມະຫາວິທະຍາໄລໃນແຕ່ລະລະດັບມີດັ່ງນີ້:**

- ລະດັບປະລິນຍາຕີ: ສະຖາບັນການສຶກສາທີ່ສອນລະດັບປະລິຍາຕີ ມີທັງໝົດ 50 ແຫ່ງ/ຄະນະ, ໃນນັ້ນ ມີພາກເອກະຊົນ 32 ແຫ່ງ. ສົກຮຽນ 2008-2009, ມີນັກສຶກສາລະດັບປະລິນຍາຕີທັງໝົດ 53,780 ຄົນ/ຍິງ 22,592 ຄົນ, ໃນນັ້ນ ເຂົ້າໃໝ່ປີທີ 1 ມີ 13,625 ຄົນ/ຍິງ 5,749 ຄົນ.
- ລະດັບປະລິນຍາໂທ: ລະດັບປະລິນຍາໂທທັງໝົດມີ 5 ແຫ່ງ/ຄະນະ, ໃນນັ້ນ ມີພາກເອກະຊົນ 2 ແຫ່ງ ບໍລິຫານທຸລະກິດ-ການຕະຫຼາດ. ນັກສຶກສາ-ນັກຄົ້ນຄ້ວາທັງໝົດ 263 ຄົນ/ຍິງ 86 ຄົນ. ໃນນັ້ນ ນັກສຶກສາພາເອກະຊົນ 151 ຄົນ/ຍິງ 60 ຄົນ
- ລະດັບປະລິນຍາເອກ: ສົກຮຽນ 2008-2009, ໄດ້ສອນຫລັກສູດປະລິນຍາເອກ 01 ຫຼັກສູດ ສາຂາວິຊາບໍລິຫານທຸລະກິດທີ່ມະຫາວິທະຍາໄລແຫ່ງຊາດເຊິ່ງມີນັກຄົ້ນຄ້ວາທັງໝົດ 23 ຄົນ/ຍິງ 2 ຄົນ ໂດຍການຮ່ວມມືກັບມະຫາວິທະຍາໄລຂອງ ສສ ຫວຽດນາມ.

ອັດຕາສ່ວນນັກສຶກສາຕໍ່ປະຊາກອນ *100,000 ຄົນ ປະຕິບັດໄດ້ 1,977ຄົນ/ 100,000 ຄົນ* (ນັບທັງການຊ້ຳຊ້ອນປະມານ 30%), ***ຖ້າທຽບໃສ່ແຜນການແມ່ນລື່ນຄາດໝາຍ ເຊິ່ງສະແດງວ່າ ການສຶກສາລະດັບຊັ້ນສູງ ແລະ***

*ມະຫາວິທະຍາໄລມີການຂະຫຍາຍຕົວໄວແຕ່ຍັງບໍ່ທັນມີຄວາມສົມດູນລະຫວ່າງຄຸນນະພາບ ແລະ ບໍ່ທັນຕອບສະໜອງບາງສາຂາວິຊາທີ່ສັງຄົມຕ້ອງການ.*

**1.5.3. ການສົ່ງນັກສຶກສາໄປຮຽນຕໍ່ທີ່ຕ່າງປະເທດ:** ສົກຮຽນ 2008 - 2009 ໄດ້ສົ່ງພະນັກງານ, ຄູ-ອາຈານ, ນັກຮຽນ ແລະ ນັກສຶກສາໄປຮຽນຕໍ່ຕ່າງປະເທດ 27 ປະເທດໃນຫຼາຍລະດັບທີ່ແຕກຕ່າງກັນຄື: ລະດັບຝຶກງານ ແລະ ອາຊີວະຊັ້ນຕົ້ນເຖິງລະດັບປະລິນຍາເອກ. ນອກຈາກນັ້ນ, ຍັງໄດ້ຈັດສົ່ງນັກຮຽນໃນສາຍສາມັນໄປຮຽນຢູ່ຕ່າງປະເທດອີກ; ໃນລະດັບມັດທະຍົມສຶກສາ ແລະ ວິຊາອາຊີບ ລະດັບຕ່າງໆແມ່ນດ້ວຍ ທຶນລັດຖະບານ, ທຶນແລກປ່ຽນ/ແຮກສ່ຽວ, ທຶນໂຄງການຮ່ວມມື ແລະ ທຶນສ່ວນຕົວ.

ສົກຮຽນ 2008-2009, ນັກສຶກສາໄປຮຽນຕໍ່ຕ່າງປະເທດ ມີທັງໝົດ 1,569 ຄົນ/ ຍິງ 522 ຄົນ, ພະນັກງານ 500 ຄົນ/ຍິງ 124 ຄົນ. ໃນນັ້ນ ທຶນລັດຖະບານມີ 461 ຄົນ/ ຍິງ129 ຄົນ, ທຶນແລກປ່ຽນ 963 ຄົນ /ຍິງ 356 ຄົນ, ທຶນໂຄງການ 145 ຄົນ/ຍິງ 37 ຄົນ. ພ້ອມດຽວກັນນັ້ນ, ນັກສຶກສາທີ່ຮຽນຈົບກັບຄືນປະເທດໃນສົກ 2008-2009 ມີ 640 ຄົນ/ຍິງ 138 ຄົນ. ***ກົງກັນຂ້າມມີນັກສຶກສາຈຳນວນໜຶ່ງບໍ່ສາມາດສຳເລັດການສຶກສາເນື່ອງຈາກນັກສຶກສາບໍ່ເອົາໃຈໃສ່ຄົ້ນຄ້ວາຮ່ຳຮຽນ, ຜິດລະບຽບວິໄນ, ສຸຂະພາບ ແລະ ສະພາບເງື່ອນໄຂຂອງນັກສຶກສາເອງ,*** ໃນ ປີ 2009 ໄດ້ມີນັກສຶກສາທີ່ຮຽນບໍ່ຈົບ 19 ຄົນ/ຍິງ 3 ຄົນ (ຂໍ້ມູນເດືອນ 1/2008-12/2008).

**ໃນການສົ່ງນັກສຶກສາໄປສຶກສາຢູ່ທີ່ຕ່າງປະເທດໃນທຶນຂອງລັດທະບານທີ່ຫຼາຍກ່ວາໝູ່ ແມ່ນປະເທດຫວຽດນາມ ແລະ ຈີນ, ລາຍລະອຽດ ດັ່ງນີ້:**

+ ນັກສຶກສາສົ່ງໄປຮຽນຢູ່ ສສ ຫວຽດນາມມີທັງໝົດ 1,046 ຄົນ/ ຍິງ 369 ຄົນ, ພະນັກງານ 201 ຄົນ/ຍິງ 35 ຄົນ, ໃນນັ້ນ ທຶນລັດຖະບານ 182 ຄົນ/ ຍິງ 49 ຄົນ, ທຶນແລກປ່ຽນ 855 ຄົນ /ຍິງ 318 ຄົນ, ທຶນໂຄງການ 9 ຄົນ/ ຍິງ 2 ຄົນ. ນັກສຶກສາທີ່ຈົບສົກ 2008-2009 ມີ 334 ຄົນ/ຍິງ 74 ຄົນ ແລະ ນັກສຶກສາຮຽນບໍ່ຈົບ 3 ຄົນ/ຍິງ0 ຄົນ.
+ ນັກສຶກສາຮຽນຢູ່ ສ.ປ. ຈີນມີ 158 ຄົນ/ ຍິງ 44 ຄົນ, ພະນັກງານ 38 ຄົນ/ຍິງ 8 ຄົນ, ໃນນັ້ນ ທຶນລັດຖະບານ 101 ຄົນ/ ຍິງ 28 ຄົນ, ທຶນແລກປ່ຽນ 55 ຄົນ /ຍິງ 16 ຄົນ, ທຶນໂຄງການ 2 ຄົນ ແລະ ຕົ້ນປີ 2009 ໄດ້ຈັດຕັ້ງການສອບເສັງນັກຮຽນໄປສຶກສາທຶນຮ່ວມມືຂອງ ສ.ປ ຈີນ ມີຜູ້ເຂົ້າເສັງ 476 ຄົນ/ຍິງ 137 ຄົນ, ສອບເສັງໄດ້ຈຳນວນ 20 ຄົນ. ນັກສຶກສາທີ່ຈົບສົກ 2008-2009 ມີ 38 ຄົນ/ຍິງ 7 ຄົນ.

## 1.6. ການສຶກສາພາກເອກະຊົນ

*ປັດຈຸບັນ, ການສຶກສາພາກເອກະຊົນໄດ້ມີບົດບາດ ແລະ ຂະຫຍາຍຕົວຢ່າງໄວວາ ລວມທັງການສຶກສາລະດັບກ່ອນໄວຮຽນ, ລະດັບສາມັນສຶກສາ ແລະ ລະດັບອາຊີວະສຶກສາໃນສາຂາວິຊາຕ່າງໆ. ການຂະຫຍາຍຕົວຂອງພາກເອກະຊົນໄດ້ແບ່ງເບົາພາລະຂອງພາກລັດບໍ່ໜ້ອຍ. ຖ້າແຍກສະເພາະການສຶກສາພາກເອກະຊົນອອກ ສາມາດໄດ້ມີລະອຽດ ດັ່ງນີ້:*

**1.6.1. ການສຶກສາກ່ອນໄວຮຽນ:** ໂຮງລ້ຽງເດັກ, ອະນຸບານ ແລະ ຫ້ອງກຽມປະຖົມ ພາກເອກະຊົນຈາກ 207 ແຫ່ງໃນປີ 2008 ເພີ່ມຂຶ້ນເປັນ 220 ແຫ່ງ (ເພີ່ມຂຶ້ນ 6.3%) ເຊິ່ງກວມ 19.59% ຂອງໂຮງຮຽນ ທັງໝົດ ແລະ ມີເດັກເຂົ້າຮຽນ 21,458 ຄົນ/ຍິງ10,365 (ເພີ່ມຂຶ້ນ 8.9%) ໃນ ປີ 2009, ກວມ 25.14% ຂອງນັກຮຽນທັງໝົດ.

**1.6.2. ປະຖົມສຶກສາ:** ໃນພາກເອກະຊົນໄດ້ມີໂຮງຮຽນປະຖົມ 144 ແຫ່ງ (ເພີ່ມຂຶ້ນຈາກປີ 2008 ຈຳນວນ 12 ແຫ່ງ) ກວມ 1.64% ຂອງໂຮງຮຽນພາກລັດ, ຫ້ອງຮຽນມີ 981 ຫ້ອງ (ເພີ່ມຂຶ້ນ 72 ຫ້ອງ) ແລະ ມີນັກຮຽນທັງໝົດ 30,389 ຄົນ/ຍິງ14,257 ຄົນ (ເພີ່ມຂຶ້ນ 12.3%) ກວມ 3.34% ຂອງນັກຮຽນທັງໝົດ. ຄູສອນຊັ້ນປະຖົມ 1,138 ຄົນ/ ຍິງ 891 ຄົນ ຫຼຸດລົງ 14 ຄົນ.

**1.6.3. ມັດທະຍົມສຶກສາ (ມ.ຕົ້ນ ແລະ ມ.ປາຍ):** ໃນໂຮງຮຽນຊັ້ນມັດທະຍົມພາກເອກະຊົນໄດ້ມີ 56 ແຫ່ງ (ໃນນັ້ນ ມ.ຕົ້ນ 35 ແຫ່ງ ແລະ ມ. ປາຍ 21 ແຫ່ງ) ເພີ່ມຂຶ້ນ 8.9% ເຊິ່ງກວມ 4.98% ຂອງໂຮງຮຽນທົ່ວປະເທດ ແລະ ຫ້ອງຮຽນ 296 ຫ້ອງ (ມ.ຕົ້ນ 220 ຫ້ອງ ແລະ ມ. ປາຍ 76 ຫ້ອງ) ເພີ່ມຂຶ້ນ 20.3%. ນັກຮຽນມັດທະຍົມຕອນຕົ້ນ 7,173 ຄົນ/ຍິງ 3,284 ຄົນ ເພີ່ມຂຶ້ນ 16%. ນັກຮຽນມັດທະຍົມຕອນປາຍ 2,146 ຄົນ/ຍິງ 1,036 ຄົນ ເພີ່ມຂຶ້ນ 23.1%. ຈຳນວນມັດທະຍົມພາກເອກະຊົນກວມ 53.1% ຂອງນັກຮຽນທົ່ວປະເທດ. ຄູສອນຊັ້ນມັດທະຍົມ 563 ຄົນ/ຍິງ 293 ຄົນ ເພີ່ມຂຶ້ນ 1.1%.

*ການຂະຫຍາຍໂຮງຮຽນ, ຈຳນວນຫ້ອງຮຽນ ແລະ ຈຳນວນນັກຮຽນສາຍສາມັນພາກເອກະຊົນແມ່ນໄດ້ເພີ່ມຂຶ້ນຢູ່ສະເພາະເມືອງບໍ່ທຸກເທົ່ານັ້ນ. ໃນບັນຫານີ້ລັດຖະບານໄດ້ສົ່ງເສີມໃຫ້ການສຶກສາພາກເອກະຊົນຢູ່ເຂດທີ່ມີເງື່ອນໄຂຂະຫຍາຍຕົວ. ຈຳນວນຄູສອນໄດ້ຫຼຸດລົງ ຫຼື ເພີ່ມພຽງເລັກນ້ອຍເນື່ອງຈາກພາກເອກະຊົນໄດ້ມີຄູສອນຮັບເຊີນຈາກພາກລັດ ແລະ ຄູສອນຜູ້ທີ່ມີຄຸນນະພາບ.*

**1.6.4. ອະຊີວະສຶກສາລະດັບຊັ້ນກາງ:** ໃນພາກເອກະຊົນບໍ່ມີໂຮງຮຽນອະຊີວະຊັ້ນຕົ້ນ. ໃນປີ 2009 ໄດ້ມີໂຮງຮຽນອະຊີວະສຶກສາລະດັບຊັ້ນກາງ 5 ແຫ່ງ, ມີນັກຮຽນທັງໝົດ 2,119 ຄົນ ແລະ ຄູສອນ 113 ຄົນ. ສູນຝຶກວິຊາຊີບມີ 72 ແຫ່ງ ກວມ 97% ເມື່ອທຽບກັບສູນຝຶກອົບຮົມຂອງທົ່ວປະເທດ. ນັກຮຽນລະດັບຊັ້ນກາງມີ 4,628 ຄົນ/ຍິງ 3,165 ຄົນ.

**1.6.5. ການສຶກສາລະດັບຊັ້ນສູງ :** ໃນພາກເອກະຊົນມີລະດັບການສຶກສາລະດັບຊັ້ນສູງ ທັງໝົດ 79 ແຫ່ງ ກວມ 79% ເມື່ອທຽບລະດັບຊັ້ນສູງໃນທົ່ວ ປະເທດ, ມີນັກຮຽນທັງໝົດ 22,984 ຄົນ/ຍິງ 10,787 ຄົນ ແລະ ຄູສອນ 1,366 ຄົນ/ຍິງ 366 ຄົນ.

**1.6.6. ການສຶກສາປະລິນຍາຕີ ແລະ ປະລິນຍາໂທ:** ລະດັບປະລິນຍາຕີ 32 ແຫ່ງ, ມີນັກສຶກສາ 11,482 ຄົນ/ຍິງ 5,469 ຄົນ ແລະ ປະລິນຍາໂທ ມີ 2 ແຫ່ງ/ຄະນະ ພ້ອມດ້ວຍ ນັກສຶກສາ 151 ຄົນ/ຍິງ 60 ຄົນ.

*ປະຈຸບັນ, ວຽກງານການຄຸ້ມຄອງການສຶກສາພາກເອກະຊົນ ໄດ້ຢຸດຮັບການຂະຫຍາຍດ້ານຈຳນວນ ໂຮງຮຽນລະດັບການສຶກສາຊັ້ນສູງເພື່ອປັບປຸງດ້ານຄຸນນະພາບ, ແຕ່ສຳລັບສາຍສາມັນ, ວິຊາຊີບ ແລະ ສູນບໍລິຫານການສຶກສາຍັງດຳເນີນການຂະຫຍາຍເປັນປົກກະຕິ. ການຄຸ້ມຄອງຄຸນນະພາບໂດຍມີການກວດກາຫຼັກສູດ, ວິທີການຮຽນ-ການສອນ ແລະ ປະເມີນຜົນດ້ານເນື້ອໃນ, ກວດກາການລົງທະບຽນຂອງນັກຮຽນ, ຄວາມຖືກຕ້ອງຂອງສາຂາ ວິຊາ*

*ຮຽນ. ນອກນັ້ນ ຍັງຕ້ອງໄດ້ປັບປຸງລະບຽບຂອງສະມະຄົມໂຮງຮຽນພາກເອກະຊົນ, ການຮ່ວມມືລະຫວ່າງລັດ-ເອກະຊົນ ແລະ ການເກັບຄ່າຮຽນໃຫ້ແທດເໝາະກັບສະພາບຕົວຈິງ.*

*ພາກເອກະຊົນມີຄວາມສົນໃຈລົງທຶນໃສ່ການສຶກສາກ່ອນໄວຮຽນ ( ລ້ຽງເດັກ ແລະ ໂຮງຮຽນອະນຸບານ ), ເນື່ອງຈາກວ່າ ການລົງທຶນພາກລັດໃສ່ການສຶກສາກ່ອນໄວຮຽນຍັງໜ້ອຍ, ຍັງບໍ່ສາມາດຕອບສະໜອງຕາມຄວາມຕ້ອງການຂອງສັງຄົມ, ສ່ວນຊັ້ນປະຖົມນັ້ນພາກລັດຖືເປັນການສຶກສາພາກບັງຄັບ ແລະ ລັດຖະບານໄດ້ລົງທຶນໃສ່ຫລາຍແນ່ໃສ່ສຳເລັດເປົ້າໝາຍຂອງສະຫັດສະວັດໃນປີ 2015. ສະນັ້ນ, ຕະຫລາດການລົງທຶນສຳລັບພາກເອກະຊົນກໍແຄບລົງ; ສຳລັບຊັ້ນມັດທະຍົມສຶກສາພາກເອກະຊົນບໍ່ລົງທຶນຫລາຍເນື່ອງຈາກການລົງທຶນສູງ ເຊັ່ນ: ຮຽນຫລາຍວິຊາໃຊ້ຄູສອນຫລາຍຄົນ, ອຸປະກອນ ແລະເຄື່ອງມືການທົດລອງວິທະຍາສາດລາຄາແພງ .*

*ພາກເອກະຊົນມີຄວາມສົນໃຈລົງທຶນຫຼາຍກວ່າໝູ່ແມ່ນສູນຝຶກອົບຮົມວິຊາຊີບ ແລະ ການສຶກສາຊັ້ນສູງ ຍ້ອນວ່າສູນຝຶກອົບຮົມວິຊາຊີບໃຊ້ຫຼັກສູດໄລຍະສັ້ນ ແລະສາມາດປັບປຸງຫລັກສູດໄດ້ງ່າຍ, ວ່ອງໄວ, ຄ່ອງແຄ້ວຕາມຄວາມຕ້ອງການຂອງຜູ້ຮຽນ, ການລົງທຶນກໍໜ້ອຍ; ອີກດ້ານໜຶ່ງພາກລັດຍັງບໍ່ໄດ້ຂະຫຍາຍຫລາຍ. ສຳລັບສະຖາບັນການສຶກສາຊັ້ນສູງພາກເອກະຊົນຂະຫຍາຍຕົວສູງ ຍ້ອນວ່າຜູ້ຢາກຮຽນມີຫລາຍ, ແຕ່ຄວາມສາມາດຮອງຮັບຂອງພາກລັດພັດມີຈຳກັດ. ພາຍຫຼັງຮຽນຈົບມັດທະຍົມສຶກສາຕອນປາຍແລ້ວ ຜູ້ທີ່ບໍ່ສາມາດເສັງເອົາທຶນບຳລັດກໍຕ້ອງສອບເຂົ້າສະຖາບັນການສຶກສາພາກເອກະຊົນ. ໃນສະຖາບັນການສຶກສາພາກເອກະຊົນທີ່ນິຍົມກ່ວາໝູ່ແມ່ນວິຊາບໍລິຫານທຸລະກິດ, ຮອງລົງມາແມ່ນພາສາອັງກິດ ແລະ ການເງິນ-ການບັນຊີ. ສ່ວນວິຊາກະສິກຳ-ປູກຝັງລ້ຽງສັດ, ເຕັກນິກ, ກົນຈັກ ແລະ ອື່ນໆມີຄວາມຕ້ອງການສູງ ແຕ່ພັດບໍ່ຄ່ອຍມີຜູ້ຮຽນ, ຜູ້ໃດລົງທຶນໃສ່ຂົງເຂດນີ້ໄປບໍ່ລອດ* (ຂັດຈາກບົດສະຫຼຸບຂອງກົມ).

## 1.7 ພະລະສຶກສາ ແລະ ສິລະປະສຶກສາ

**1.7.1. ວຽກງານພະລະສຶກສາ ແລະ ກິລາປ້ອງກັນຊາດ:** ພະລະສຶກສາໄດ້ມີໂຮງຮຽນສ້າງຄູພະລະສຶກສາ 1 ແຫ່ງທີ່ຂຶ້ນກັບກະຊວງສຶກສາທິການ ແລະ ໄດ້ເປີດສອນລະດັບຊັ້ນກາງລະບົບ 11+2 ແລະ ລະບົບຕໍ່ເນື່ອງຊັ້ນສູງ11+3+1. ປັດຈຸບັນ, ໂຮງຮຽນສ້າງຄູພະລະສຶກສາໄດ້ຍົກວຸດທິການສຶກສາຈາກຊັ້ນກາງຂຶ້ນເປັນຊັ້ນສູງ ແລະ ດຳເນີນການຮຽນ - ການສອນລະບົບຕໍ່ເນື່ອງ 1 ປີ. ສົກຮຽນ 2008-2009 ມີພະນັກງານຄູທັງໝົດມີ 33 ຄົນ/ຍິງ 13 ຄົນ ແລະ ນັກຮຽນທັງໝົດມີ 279 ຄົນ/ຍິງ 55 ຄົນ ແລະ ຄູຮຽນລະບົບຕໍ່ເນື່ອງຊັ້ນສູງ 111 ຄົນ/ຍິງ 15 ຄົນ.

ການແຂ່ງຂັນງານມະຫາກຳກິລາແຫ່ງຊາດຄັ້ງທີ່ VIII ທີ່ແຂວງຈຳປາສັກ (ປະຈຳປີ 2008) ໄດ້ມີນັກກິລາຈຳນວນ 140 ຄົນ/ຍິງ 42 ຄົນຈາກຂະແໜງສຶກສາເຂົ້າຮ່ວມ 10 ປະເພດກິລາ. ກະຊວງສຶກສາຍາດມາໄດ້ທັງໝົດ 20 ຫຼຽນ ຄື: 6 ຫຼຽນຄຳ, 6 ຫຼຽນເງິນ ແລະ 8 ຫຼຽນທອງແດງ ເຊິ່ງຈັດຢູ່ໃນລະດັບ 8 ໃນ 29 ຄະນະທີ່ເຂົ້າຮ່ວມ. ນອກນັ້ນ ນັກກິລາຂະແໜງການສຶກສາຍັງໄດ້ເຂົ້າຮ່ວມການເຄື່ອນໄຫວມະຫາກຳກິລາອື່ນໆເຊັ່ນ ມະຫາວິທະຍາໄລແຫ່ງຊາດມີ 10 ປະເພດກິລາຍາດໄດ້ 11 ຫຼຽນຄຳ, 7 ຫຼຽນເງິນ ແລະ 4 ຫຼຽນທອງແດງ.

ການຕ້ານການນຳໃຊ້ສານກະຕຸ້ນໃນໝູ່ນັກກິລາແມ່ນໄດ້ຈັດກອງ ປະຊຸມໃຫ້ຜູ້ຮັບຜິດຊອບວຽກງານພະລະສຶກສາໃນຂອບເຂດທົ່ວປະເທດ. ນອກນັ້ນ ຍັງໄດ້ດັດແກ້ຫຼັກສູດ, ປຶ້ມຄູ່ມືວິຊາກິລາປ້ອງກັນຊາດອີກ. ພ້ອມກັນນັ້ນ ກໍໄດ້ຝຶກ

ອົບຮົມວຽກງານພະລະສຶກສາ, ກິລາໃນໂຮງຮຽນ ແລະ ການລົງຕິດຕາມ-ປະເມີນຜົນວຽກງານກິລາປ້ອງກັນຊາດຢູ່ແຂວງຫຼວງພະບາງ.

**1.7.2. ວຽກງານສິລະປະສຶກສາ:** ໂຮງຮຽນສ້າງຄູສິລະປະສຶກສາມີພະນັກງານ ແລະ ຄູອາຈານຄູທັງໝົດ 37 ຄົນ/ຍິງ15 ຄົນ ແລະ ມີນັກຮຽນ ສ້າງຄູສິລະປະສຶກສາມີທັງໝົດ 227 ຄົນ/ຍິງ 168 ຄົນ.

ໃນປີ 2009, ສ້າງຄູສິນລະປະສຶກສາໄດ້ຍົກວຸດທິການສຶກສາຈາກຊັ້ນກາງຂຶ້ນເປັນຊັ້ນສູງ ພ້ອມທັງປັບປຸງຫຼັກສູດ ແລະ ປຶ້ມຄູ່ມືຄູ ລາຍວິຊາໃຫ້ມີລະບົບຕໍ່ເນື່ອງ 1 ປີ ແລະ ດຳເນີນການຮຽນ-ການສອນຕາມຫຼັກສູດດັ່ງກ່າວ. ນອກນັ້ນ, ໂຮງຮຽນສ້າງຄູສິລະປະສຶກສາໄດ້ສຳເລັດການຮຽບຮຽງປຶ້ມຄູ່ມືວິຊາການຟ້ອນ ພ້ອມທັງຈັດພິມປຶ້ມດັ່ງກ່າວ ແລະ ຊຸກຍູ້ສົ່ງເສີມວຽກງານວັນນະຄະດີຂອງໂຮງຮຽນເພື່ອສະເຫຼີມສະຫຼອງວັນບຸນຕ່າງໆ.

**1.7.3. ວຽກງານຕ້ານສິ່ງເສບຕິດໃນໂຮງຮຽນ:** ວຽກງານເດັກອາສາສະໝັກຮ່ວມພັດທະນາ "ເພື່ອນຊ່ວຍເພື່ອນ" ຕ້ານສິ່ງເສບຕິດໃນໂຮງຮຽນໄດ້ເປີດຂຶ້ນຢູ່ແຂວງຫຼວງນ້ຳທາ 1 ໝວດ, ແຂວງບໍ່ແກ້ວ 9 ໝວດໃນໂຄງການ "ສ້າງເຄືອຄ່າຍຄວາມເຂັ້ມແຂງຕ້ານການຄ້າມະ ນຸດ ແລະ ສົ່ງເສີມສິດທິເດັກ" ແລະ ຈັດອົບຮົມຄູຜູ້ນຳພາກິດຈະກຳ ຢູ່ 04 ເມືອງເໜືອຂອງແຂວງໄຊຍະບູລີ. ພ້ອມດຽວກັນນັ້ນ, ການຕິດຕາມເດັກອາສາສະໝັກຮ່ວມພັດທະນາ "ເພື່ອນຊ່ວຍເພື່ອນ" ຕ້ານສິ່ງ ເສບຕິດໃນໂຮງຮຽນ ສາມາດປະຕິບັດໄດ້ຢູ່ບາງແຂວງພາກເໜືອ.

**1.7.4. ວຽກງານພັດທະນາຫຼັກສູດທ້ອງຖິ່ນ**: ການສ້າງຫຼັກສູດທ້ອງຖິ່ນໄດ້ປະຕິບັດຢູ່ 2 ແຂວງ (ຊຽງຂວາງ ແລະ ໄຊຍະບູລີ) ແລະ ໄດ້ສຳເລັດການຕິດຕາມ-ປະເມີນຜົນການຮຽນ-ການສອນ. ແຂວງຫຼວງນ້ຳທາກຳລັງທົດລອງນຳໃຊ້ຫຼັກສູດທ້ອງຖິ່ນ.

***ຕີລາຄາລວມແຜນງານຂະຫຍາຍໂອກາດ:*** *ການຂະຫຍາຍຕົວດ້ານປະລິມານໂຮງຮຽນ, ຫ້ອງຮຽນ, ຈຳນວນນັກຮຽນ ແລະ ຈຳນວນຄູແມ່ນໄດ້ເພີ່ມຂຶ້ນ ເຊິ່ງເຫັນພົ້ນເດັ່ນແມ່ນເມືອງທຸກທີ່ສຸດ, ເມືອງທຸກ ແລະ ເມືອງບໍ່ທຸກຕາມລຳດັບ. ອັດຕາການເຂົ້າຮຽນລວມຂອງລ້ຽງເດັກ-ເດັກອະນຸບານ, ຈຳນວນເດັກຜ່ານອະນຸບານ ຫຼື ຫ້ອງກຽມໄດ້ເພີ່ມຂຶ້ນ. ເຖິງວ່າອັດຕາເຂົ້າຮຽນສຸດທິຊັ້ນປະຖົມປະຕິບັດໄດ້ເກີນຄາດໝາຍ, ແຕ່ອັດຕາການເຂົ້າຮຽນລວມ, ການຄ້າງຫ້ອງລວມ ແລະ ອັດຕາປະລະຂອງຊັ້ນປະຖົມແມ່ນຍັງບໍ່ໄດ້ຕາມຄາດໝາຍ. ການຮຽນ-ການສອນໃນຊັ້ນມັດທະຍົມຍັງຂາດການເອົາໃຈໃສ່ໃນດ້ານຄຸນນະພາບ (ບໍ່ໄດຕາມຄາດໝາຍ), ໃນນັ້ນ ອັດຕາການຄ້າງຫ້ອງ ແລະ ປະລະສູງ ໂດຍສະ ເພາະການປະລະໃນຊັ້ນມັດທະຍົມຕອນປາຍ.*

*ການສຶກສານອກໂຮງຮຽນແມ່ນການເກັບກຳຂໍ້ມູນຍັງບໍ່ທັນມີຄວາມຊັດເຈນ ແລະ ການປະຕິບັດກິດຈະກຳຕ່າງໆ ບໍ່ທັນລະອຽດ, ຂາດການລາຍງານແລະ ຕິດຕາມປະເມີນຜົນທີ່ເປັນລະບົບຕໍ່ເນື່ອງ.*

*ວຽກງານອາຊີວະສຶກສາ, ການສຶກສາຊັ້ນສູງໄດ້ມີບາດກ້າວຂະຫຍາຍຕົວດ້ານປະລິມານ ແລະ ມີການປັບປຸງຄຸນນະພາບເປັນຕົ້ນແມ່ນໃນລະດັບການສຶກສາຊັ້ນສູງຂຶ້ນໄປ. ສ່ວນອາຊີວະຊັ້ນຕົ້ນແມ່ນມີການຫຼຸດລົງຄາດໝາຍ ແຕ່ເນື່ອງຈາກພໍ່ແມ່ຜູ້ປົກຄອງ, ນັກຮຽນເອງບໍ່ມັກ ແລະ ສັງຄົມກໍຮຽກຮ້ອງຕ້ອງການຜູ້ມີລະດັບຄວາມຮູ້ປະກອບ ເຂົ້າໃນວຽກງານ, ຂາດການແນະນຳ ແລະ ປັບປຸງຄຸນນະພາບໃຫ້ດີເທົ່າທີ່ຄວນ.*

## II. ແຜນງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ

### 2.1. ວຽກງານການພັດທະນາຫຼັກສູດ:

2.1.1.**ຫຼັກສູດສາມັນສຶກສາ:** ສຳເລັດການສ້າງຫຼັກສູດຈັດປະສົບການສຳລັບຫ້ອງກຽມປະຖົມ ແລະ ດຳເນີນການຈັດຕັ້ງປະຕິບັດ.

ວຽກງານປະຕິຮູບຫຼັກສູດສາຍສາມັນສຶກສາຈາກ 11 ປີຮຽນ ເປັນ 12 ປີຮຽນ: ການສ້າງຫຼັກສູດລວມ ແລະ ຫຼັກສູດລາຍວິຊາ (**ການກຳນົດສະມັດຖະພາບພື້ນຖານການຮຽນໃນແຕ່ລະຂັ້ນຮຽນ**) ສຳລັບຊັ້ນປະຖົມໄດ້ສຳເລັດ ເຊິ່ງໄດ້ເພີ່ມວິຊາຄຸນສົມບັດ ແລະ ວິຊາພາສາອັງກິດ. ສຳລັບຫຼັກສູດພາສາອັງກິດຂອງຊັ້ນປະຖົມສຶກສາຈະເລີ່ມສອນແຕ່ຊັ້ນ ປ.3 ຂຶ້ນໄປ. ຫຼັກສູດລາຍວິຊາຊັ້ນ ປ.1 ແລະ ປ.2 ລວມມີ 8 ວິຊາຮຽນ ແລະ ຊັ້ນ ປ.3, ປ.4 ແລະ ປ.5 ລວມມີ 9 ວິຊາຮຽນ.

ສຳລັບສ້າງຫຼັກສູດຊັ້ນມັດທະຍົມຕອນຕົ້ນ: ສຳເລັດຂັ້ນພື້ນຖານການສ້າງຫຼັກສູດລວມ ແລະ ກຳລັງດຳເນີນການພັດທະນາຫຼັກສູດລາຍວິຊາຈາກລະບົບ 3 ປີ ເປັນ 4 ປີ. ໃນຫຼັກສູດຊັ້ນນີ້ໄດ້ເພີ່ມການສອນຄອມພິວເຕີ ແລະ ເພີ່ມວິຊາພາສາຕ່າງປະເທດ 1 ພາສາອີກ (ຝຣັ່ງ ຫຼື ຈີນ ຫຼື ຫວຽດນາມ), ລວມມີ 9 ວິຊາ ແລະ ຈະເລີ່ມດຳເນີນການຮຽນ-ການສອນຊັ້ນ ມ.1 ຕາມລະບົບໃໝ່ນັບແຕ່ສົກຮຽນ 2010-2011 ເປັນຕົ້ນໄປ. ພ້ອມດຽວກັນນັ້ນ ກໍໄດ້ດຳເນີນການຮ່າງຫຼັກສູດລວມຂອງຊັ້ນມັດທະຍົມຕອນປາຍ ໂດຍມີທິດທາງປະຕິຮູບຫຼັກສູດທີ່ເນັ້ນໃຫ້ມີການຮຽນວິຊາແກນ ແລະ ວິຊາເລືອກ.

ນອກນັ້ນ ຫຼັກສູດຍັງໄດ້ກຳນົດເອົາບາງເນື້ອໃນສຳຄັນເຂົ້າໃນຫຼັກສູດລາຍວິຊາທີ່ແທດເໝາະຕື່ມອີກ ເຊັ່ນ: ສິດທິເດັກ/ສິດທິມະນຸດ, ວັດທະນທຳທ້ອງຖິ່ນ - ຊົນເຜົ່າ, ບົດບາດຍິງ-ຊາຍ, ການຫຼຸດຜ່ອນຄວາມສ່ຽງໄພພິບັດ, ການປົກປັກຮັກສາສິ່ງແວດລ້ອມ, ການປ້ອງກັນຕໍ່ໂລກເອດ-ສິ່ງເສບຕິດ ແລະ ອື່ນໆ.

2.1.2. **ຫຼັກສູດສາຍສ້າງຄູ:** ສາຍສ້າງຄູໄດ້ສ້າງຫຼາຍຫຼັກສູດເຊັ່ນ ສ້າງຫລັກສູດອົບຮົມຄູອະນຸບານເລັ່ງລັດ 30 ອາທິດ, ສ້າງຫຼັກສູດອົບຮົມຄູສອນຫ້ອງກຽມ, ສົ່ງເສີມຄູອະນຸບານໃນໂຮງຮຽນກຽມປະຖົມສຶກສາ, ຫຼັກສູດລະບົບຕໍ່ເນື່ອງ, ເຊື່ອມຕໍ່ຮຽນໄລຍະປົກກະຕິ (ຮຽນເຕັມເວລາ) ແລະ ຮຽນໄລຍະພັກແລ້ງ, ສ້າງຫຼັກສູດຕໍ່ເນື່ອງຈາກລະດັບຊັ້ນກາງໃຫ້ເປັນລະດັບຊັ້ນສູງ, ສ້າງຄູຫຼັກສູດດ້ານພາສາອັງກິດ, ຝຣັ່ງ ແລະ ພາສາອື່ນໆ. ຫຼັກສູດຕໍ່ເນື່ອງຍາມພັກແລ້ງລະດັບຊັ້ນສູງມີ 5 ວິຊາ: ພາສາລາວວັນນະຄະດີ, ສັງຄົມ, ຄະນິດສາດ, ວິທະຍາສາດ ແລະ ພາສາອັງກິດ. ຫຼັກສູດຕໍ່ເນື່ອງພັກແລ້ງລະດັບປະລິນຍາຕີມີ 3 ວິຊາ: ຟີຊິກສາດ, ເຄມີສາດ ແລະ ຊີວະສາດ.

ສາຍສ້າງຄູໄດ້ພັດທະນາປື້ມແບບຮຽນສຳລັບສາຍສ້າງຄູທຸກລະບົບ ແລະ ໄດ້ເປີດການສອນຕາມປື້ມແບບຮຽນໃໝ່ ຢູ່ແຕ່ລະສະຖາບັນສ້າງຄູໃນທຸກໆສາຍ (ປື້ມແບບຮຽນສາຍສ້າງຄູປີທີ1 ໄດ້ພິມສຳເລັດ ແລະ ກຽມປະມູນພິມແບບຮຽນ ປີທີ 2 ແລະ ປີທີ 3).

ລະບົບຕານ່າງການສ້າງຄູໄດ້ປັບປຸງຄືນໃໝ່ເຊັ່ນ: ສ້າງຄູສອນຊັ້ນອະນຸບານຈາກລະບົບ 11+1 ມາເປັນລະບົບ 11+2 ແລະ ກະກຽມສ້າງເປັນລະບົບ 11+3, ສ້າງຄູມັດທະຍົມຕອນຕົ້ນລະບົບ11+3 ຈາກ 3 ສາຂາວິຊາ ຮຽນມາເປັນ 5 ສາຂາວິຊາຮຽນ.

**2.1.3. ຫຼັກສູດສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ:** ຫຼັກສູດສາຍອາຊີວະສຶກສາ ແລະ ຫຼັກສູດການສຶກສາຊັ້ນສູງ ກໍໄດ້ມີການປັບປຸງຄືນ ໂດຍສະເພາະແມ່ນໄດ້ຍົກຫຼັກສູດຂອງໂຮງຮຽນອາຊີວະສຶກສາຫຼາຍສາຂາວິຊາຈາກລະດັບຊັ້ນກາງຂຶ້ນເປັນຫຼັກສູດຊັ້ນສູງ. ຫຼັກສູດລະດັບປະລິນຍາຕີຈາກລະບົບ 5 ປີ ໄດ້ປັບປຸງມາເປັນ 4 ປີ.

ການກໍ່ສ້າງ ແລະ ປັບປຸງໃນແຕ່ລະລະດັບມີຄື: ຫຼັກສູດປະລິນຍາເອກໄດ້ມີ 01 ຫຼັກສູດ ໃນສາຂາວິຊາບໍລິຫານທຸລະກິດ ເຊິ່ງໄດ້ເປີດສອນຢູ່ທີ່ມະຫາວິທະຍາໄລແຫ່ງຊາດ. ຫຼັກສູດປະລິນຍາໂທກໍໄດ້ສ້າງຂຶ້ນຈໍານວນ 24 ຫຼັດສູດ ແລະ ໄດ້ດໍາເນີນການສອນ ແລະ ໃກ້ຈະເປີດສອນມີ 22 ຫຼັກສູດ ໃນຫຼາຍສາຂາວິຊາ. ຫຼັກສູດລະດັບປະລິນຍາຕີລວມມີ 71 ຫຼັກສູດ, ລະດັບຊັ້ນສູງມີ 12 ຫຼັກສູດ, ເຊື່ອມຕໍ່ 19 ຫຼັກສູດ ແລະ ຕໍ່ເນື່ອງ 30 ຫຼັກສູດ.

ຫຼັກສູດອະຊີວະຊັ້ນສູງ 5 ສາຂາວິຊາໄດ້ມີການພັດທະນາ ຢູ່ສູນພັດທະນາອະຊີວະສຶກສາ ແລະ ໂຮງຮຽນອະຊີວະສຶກສາແຫ່ງຕ່າງໆ ເຊິ່ງຈະເລີ່ມນໍາໃຊ້ໃນສົກຮຽນ 2009-2010.

ນອກນັ້ນ ຍັງມີຫຼັກສູດການຝຶກອົບຮົມວິຊາຊີບໄລຍະສັ້ນ, ວິຊາຊີບຊັ້ນຕົ້ນ, ຊັ້ນກາງ, ຊັ້ນສູງຕໍ່ເນື່ອງ ແລະປະລິຍາຕີຕໍ່ເນື່ອງ, ຫຼັກສູດເຕັກນິກຊັ້ນກາງລວມມີວິຊາໄຟຟ້າເຕັກນິກ, ວິຊາຈອດ ແລະ ທໍ່ນໍ້າ, ສ້ອມແປງທົ່ວໄປ. ສ້າງຫຼັກສູດຊັ້ນສູງສາຂາວິຊາໄຟຟ້ານໍ້າຕົກ ແລະ ຫຼັກສູດປະລິນຍາຕີໃນສາຂາວິຊາສໍາຫຼວດແຜນທີ່ ແລະ ຄຸ້ມຄອງທີ່ດິນ, ເປີດສອນຫຼັກສູດຊອກຄົ້ນສໍາຫຼວດແຮ່, ຂຸດຄົ້ນ ປຸງແຕ່ງແຮ່, ໄຟຟ້າຕາຂ່າຍ ແລະ ສະຖານນີ.

## 2.2. ການສະໜອງອຸປະກອນການຮຽນ-ການສອນ ແລະ ພື້ນຖານວັດຖຸ

ສໍາເລັດການດັດແກ້ຄໍາຜິດເນື້ອໃນປຶ້ມແບບຮຽນ ແລະ ຄູ່ມືຄູຂອງສາຍສາມັນສຶກສາ (ຊັ້ນມັດທະຍົມ) ຕາມຫຼັກສູດເກົ່າ, ຈັດພິມຄືນ ແລະ ໄດ້ຈັດສົ່ງປຶ້ມແບບຮຽນ ແລະ ຄູ່ມືຄູ ແບບຮຽນພາສາລາວ ມ.1, ມ.2, ມ.3 ແລະ ແບບຮຽນ ມ5 ຈໍານວນ 13 ວິຊາ ແລະ ມ.6 ຈໍານວນ 13 ວິຊາ ລວມທັງໝົດ 1,769,750 ຫົວ ເພື່ອສົ່ງໃຫ້ທຸກເມືອງແຈກຢາຍໃຫ້ແຕ່ລະໂຮງຮຽນໃນຂອບເຂດທົ່ວປະເທດ.

ສະໜອງປຶ້ມແບບຮຽນ ແລະ ຄູ່ມືຄູສະບັບໃໝ່ທຸກແຂວງ, ທຸກເມືອງ, ທຸກໂຮງຮຽນພາກລັດ ແລະ ເອກະຊົນແຕ່ປີ 2008 ຫາ ປີ 2010.

- ປີ 2008 ໄດ້ສະໜອງປຶ້ມ ປ1 ແລະ ປ2 ໃນຈໍານວນ 1,741,800 ຫົວ (ແບບຮຽນຊັ້ນປ.1 ມີ 954,000 ຫົວ, ປ.2 ມີ 657,000 ຫົວ ແລະ ຄູ່ມືຄູ ຊັ້ນປ.1-ປ.2 ຈໍານວນ 130,800 ຫົວ) ໃນມູນຄ່າ 1,135,044 ໂລາສະຫະລັດ.
- ປີ 2009-2010 ສະໜອງປຶ້ມ ປ3 ແລະ ປ4 ໃນຈໍານວນ 1,167,300 ຫົວ (ແບບຮຽນຊັ້ນປ.3 ມີ 558,000 ຫົວ, ປ.4 ມີ 294,000 ຫົວ ແລະ ຄູ່ມືຄູ ຊັ້ນປ.3-ປ.4 ຈໍານວນ 103,800 ຫົວ ແລະ ສົ່ງໃຫ້ໂຮງຮຽນນໍາໃນສົກຮຽນ 2009-2010.ໃນມູນຄ່າ 580,131 ໂລາສະຫະລັດ.
- ເດືອນ 10 ຫາ 11 ປີ 2009 ຈະສະໜອງປຶ້ມ ປ5 ໃນຈໍານວນ 477,900 ຫົວ ໃນມູນຄ່າ ຕົວເລກຄາດຄະເນ 237,393 ໂລາສະຫະລັດ. ຄາດວ່າຈະໄດ້ນໍາໃຊ້ສົກຮຽນຕໍ່ໄປ.

ໂຮງຮຽນຊັ້ນມັດທະຍົມໃນທົ່ວປະເທດ ມີຫ້ອງທົດລອງ ແລະ ເຄື່ອງທົດລອງ 26 ແຫ່ງ ກວມ 2.47% ໃນປີ 2008 ແລະ ໃນປີ 2009 ຍັງເທົ່າເດີມ. ***ຢູ່ບາງໂຮງຮຽນໄດ້ມີອຸປະກອນການຮຽນ-ການສອນ, ມີ ຫ້ອງທົດລອງ ແລະ***

*ເຄື່ອງທົດລອງຄົບຊຸດ (ໄດ້ຮັບຈາກການຊ່ວຍເຫຼືອ) ແຕ່ຂາດການດູແລຮັກສາ, ຄູອາຈານຈຳນວນ ຫຼາຍຍັງບໍ່ເຄີຍໄດ້ໃຊ້ການທົດລອງ ແລະ ຂາດຄວາມຮູ້ໃນການນຳໃຊ້ແລ້ວປະໃຫ້ເສຍຄຸນ ຫຼື ນຳໃຊ້ໄປເຮັດ ວຽກງານອື່ນ. ການຝຶກອົບຮົມຄູນຳໃຊ້ເຄື່ອງທົດລອງຍັງບໍ່ຕໍ່ເນື່ອງ, ບໍ່ເປັນລະບົບ ຫຼື ບໍ່ໄດ້ຝຶກເລີຍ. ຄູສອນຈຳນວນບໍ່ໜ້ອຍ ຍັງຖືເບົາການຄົ້ນຄ້ວາຫາກິດຈະກຳການປະຕິບັດຕົວຈິງ ແຕ່ມັກຈະເວົ້າວ່າ ບໍ່ມີເຄື່ອງທົດລອງ. ການຄຸ້ມຄອງປຶ້ມຕຳລາ ຮຽນຢູ່ບາງໂຮງຮຽນຍັງປະຕິບັດບໍ່ໄດ້ດີ ຈຶ່ງເຮັດໃຫ້ນັກຮຽນມີໂອກາດໄດ້ສຳພັດກັບປຶ້ມໜ້ອຍ ແລະ ມີການເສຍຫາຍ* (ຂັດຈາກບົດສະຫຼຸບປະຈຳປີຂອງແຂວງ).

ໃນປັດຈຸບັນ ຈຳນວນໂຮງຮຽນທີ່ປະກອບດ້ວຍຫ້ອງຄອມພິວເຕີທັງໝົດມີ 23 ແຫ່ງກວມ 2.18% (ລັດ ແລະ ອົງການຈັດຕັ້ງສາກົນສະໜອງ 22 ແຫ່ງ ແລະ ບໍລິສັດເອກະຊົນ 1 ແຫ່ງ). ການສະໜອງຫ້ອງສະມຸດໂດຍທຶນຈາກລັດຖະບານ, ເອກະຊົນ ແລະ ອົງການຈັດຕັ້ງສາກົນ.

ການສະໜອງສັງກະສີໃຫ້ 7 ແຂວງ (ໄຊຍະບູລີ, ອຸດົມໄຊ, ວຽງຈັນ, ບໍລິຄຳໄຊ, ບໍ່ແກ້ວ, ຫຼວງນ້ຳທາ ແລະ ຊຽງຂວາງ) ແລະ ກອງພັນໃຫຍ່ ຈ. ມີຈຳນວນ 30.030 ແຜ່ນ ເພື່ອສົມທົບປຸກສ້າງ ແລະ ສ້ອມແປງໂຮງຮຽນ ແລະ ສະຖານທີ່ ທີ່ເປ່ເພ. ສະໜອງສໍຂາວ, ສໍຂາວສີ ແລະ ອຸປກອນຮັບໃຊ້ການຮຽນ-ການສອນໃຫ້ແຕ່ລະເມືອງ. ອຸປະກອນການຮຽນ-ການສອນໄດ້ສະໜອງໃຫ້ຫ້ອງກຽມປະຖົມຈຳນວນ 334 ແຫ່ງ. ນອກນັ້ນ ຍັງສະໜອງປຶ້ມຫຼັກສູດ, ແຜນການຈັດປະສົບການ ແລະ ແບບເຝິກການຂຽນສຳລັບຄູ ແລະ ນັກຮຽນຫ້ອງກຽມປະຖົມທັງໝົດ 8 ລາຍການ ຈຳນວນ 52,752 ຫົວ.

ສຳລັບໂຮງຮຽນເອກະຊົນຫລາຍແຫ່ງນັບແຕ່ອະນຸບານຮອດການສຶກສາຊັ້ນສູງໄດ້ເອົາໃຈໃສ່ໃນການປະກອບອຸປະກອນຮັບໃຊ້ການສອນ-ການຮຽນທີ່ທັນສະໄໝ ໂດຍສະເພາະການນຳໃຊ້ ICT ເຂົ້າໃນການສອນ-ການຮຽນ, ຫ້ອງສະມຸດ (E-Libruary), ນຳໃຊ້ລະບົບ Internet. ຕາມຂໍ້ມູນຈາກວິທະຍາໄລ 28 ແຫ່ງ ມີມູນຄ່າການລົງທຶນຊື້ອຸປະກອນການຮຽນ-ການສອນລວມມູນຄ່າ **96,903,315,306** ກີບ. (ຂັດຈາກບົດສະຫຼຸບຂອງກົມຄຸ້ມຄອງການສຶກສາພາກເອກະຊົນ)

## 2.3. ການສ້າງໂຮງຮຽນຕົວແບບ:

ສົກຮຽນ 2008-2009, ໂຮງຮຽນອະນຸບານແບບຢ່າງທີ່ເປັນເປົ້າໝາຍໃນເມືອງຕ່າງໆມີທັງໝົດ 73 ແຫ່ງ (ສັງລວມຂໍ້ມູນຈາກ 15 ແຂວງ). ສຳລັບໂຮງຮຽນປະຖົມຕົວແບບຂອງເມືອງໄດ້ທັງໝົດ *287* ໂຮງຮຽນ, ໃນນັ້ນແຂວງທີ່ສ້າງໄດ້ຫຼາຍ ແລະ ດີເດັ່ນແມ່ນແຂວງຈຳປາສັກໄດ້ 76 ໂຮງຮຽນ, ສະຫວັນນະເຂດ 30 ໂຮງຮຽນ, ນະຄອນຫຼວງ 22 ໂຮງຮຽນ ແລະ ໄຊຍະບູລີ 23 ໂຮງຮຽນ.

ໃນທົ່ວປະເທດ, ໂຮງຮຽນມັດທະຍົມຕົວແບບທີ່ມີເປົ້າໝາຍ 103 ແຫ່ງ ເຊິ່ງຈັດເປັນຕົວແບບຂັ້ນແຂວງ ແລະ ຂັ້ນເມືອງ. ນອກນັ້ນ, ຍັງມີໂຄງການສົ່ງເສີມສຸຂະພາບໃນໂຮງຮຽນແບບຄົບວົງຈອນມີຈຳນວນ 64 ໂຮງຮຽນ ເຊິ່ງໄດ້

ຈັດ ນາມມະຍົດໃຫ້ໂຮງຮຽນທີ່ດີເດັ່ນຕາມມາດຖານຂອງໂຄງການມີ 29 ແຫ່ງ ເຊັ່ນ : ລະດັບ ຫຼຽນຄຳ 4 ແຫ່ງ, ຫຼຽນເງິນ 16 ແຫ່ງ ແລະ ຫຼຽນທອງແດງ 9 ແຫ່ງ.

ສຳລັບໂຮງຮຽນຕົວແບບທີ່ຄົບຊຸດຕາມມາດຖານຂອງຂອບພັດທະນາຂະແໜງການສຶກສາແມ່ນໄດ້ເລີ່ມປະຕິບັດການກໍ່ສ້າງຢູ່ບາງແຂວງທີ່ມີເງື່ອນໄຂ ເຊັ່ນ: ແຂວງຈຳປາສັກ 4 ແຫ່ງ ( ທຶນປຸກສ້າງຈາກບໍລິສັດດາວເຮືອງ ແລະ ສ.ສ ຫວຽດນາມ).

ເຖິງວ່າວຽກງານການສ້າງ ແລະ ປັບປຸງໂຮງຮຽນຕົວແບບຕາມຄຳສັ່ງແນະນຳຂອງລັດຖະມົນຕີ ເລກທີ 763/ສສ. ສມ/07 ລົງວັນທີ 10 ກັນຍາ 2007 ກໍຕາມ ແຕ່ຄວາມເຂົ້າໃຈກ່ຽວກັບການສ້າງໂຮງຮຽນຕົວແບບຂອງຄະນະຮັບຜິດແຕ່ລະຂັ້ນຍັງບໍ່ເລິກເຊິ່ງ ໂດຍສະເພາະແມ່ນຂັ້ນເມືອງຈຶ່ງເຮັດໃຫ້ການກຳນົດເປົ້າໝາຍສ້າງໂຮງຮຽນຕົວແບບບໍ່ສອດຄ່ອງກັບແຜນສ້າງກຸ່ມບ້ານພັດທະນາຂອງເມືອງ ແລະ ການເກັບກຳຂໍ້ມູນ ຫຼື ຈັດຕັ້ງປະຕິບັດບໍ່ທັນເປັນເອກະພາບ, ບາງແຂວງຖືເປັນໂຮງຮຽນຕົວເດັ່ນ ແລະ ບາງແຂວງມີຫຼາຍແຫ່ງ. ວັດຖຸ, ອຸປະກອນສຳລັບພັດທະນາໂຮງຮຽນ ເປົ້າໝາຍສ້າງເປັນໂຮງຮຽນຕົວແບບບໍ່ພຽງພໍ, ງົບປະມານການຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອໂຮງຮຽນເປົ້າໝາຍສ້າງເປັນໂຮງຮຽນຕົວແບບຍັງຈຳກັດ. ການສ້າງໂຮງຮຽນໃຫ້ກາຍເປັນໂຮງຮຽນຕົວແບບທີ່ມີຄຸນນະພາບຮອບ ດ້ານໄດ້ນັ້ນຄວນມີການຈັດກອງປະຊຸມສຳມະນາຂັ້ນກະຊວງເພື່ອເຮັດໃຫ້ຜູ້ບໍລິຫານການສຶກສາແຕ່ລະຂັ້ນເຂົ້າໃຈລະອຽດ, ເລິກເຊິ່ງ ແລະ ສາມາດນຳໄປຈັດຕັ້ງປະຕິບັດຕົວຈິງຢ່າງມີປະສິດທິຜົນ. ຄະນະຮັບຜິດຊອບຊີ້ນຳແຕ່ລະຂັ້ນ (ຂັ້ນກະຊວງ, ຂັ້ນແຂວງ ແລະ ຂັ້ນເມືອງຕ້ອງລົງຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອຢ່າງຕໍ່ເນື່ອງ).

## 2.4. ວຽກງານສຶກສາ - ວິໄຈ ແລະ ຄົ້ນຄ້ວາທົດລອງ :

ການສ້າງ ແລະ ຂະຫຍາຍໂຮງຮຽນຄຸນນະພາບໄດ້ 408 ແຫ່ງ, ໃນນັ້ນ ໂຮງຮຽນມູນລະປະຖົມມີ 225 ແຫ່ງ. ປະຈຸບັນ, ໂຮງຮຽນຄຸນນະພາບມີທັງໝົດ 1,172 ແຫ່ງ ໃນຈຳນວນໂຮງຮຽນທີ່ອຸຍນີເຊບສະໜັບສະໜູນ 2,607 ແຫ່ງ.

ໂຮງຮຽນຄຸນນະພາບແມ່ນໄດ້ຈັດຕັ້ງການທົດລອງຢູ່ໂຮງຮຽນປະຖົມ 765 ແຫ່ງ, ຄຽງຄູ່ກັບການສ້າງໂຮງຮຽນໃໝ່ກໍ່ໄດ້ຝຶກອົບຮົມຜູ້ອຳນວຍການ ແລະ ຄູສອນເຊັ່ນ: ຜູ້ອຳນວຍການຝຶກໄດ້ 250 ຄົນ (ໃນ 38 ເມືອງຂອງ 9 ແຂວງ), ຄູສອນປະຖົມ 40% ແລະ ຄູຫ້ອງກຽມປະຖົມ 200 ຄົນ ທີ່ນຳໃຊ້ຫຼັກສູດໃໝ່. ການປະເມີນຜົນການຮຽນຂອງນັກຮຽນ ປ.5 ໃນວິຊາພາສາລາວ, ຄະນິດສາດ ແລະ ໂລກອ້ອມຕົວເຮົາ ຮອບ 2 ກຳລັງດຳເນີນການວິໄຈ.

### ຜົນຂອງການວິໄຈໂດຍຫຍໍ້ໃນ 3 ຫົວຂໍ້ມີດັ່ງນີ້:

- ຜົນການວິໄຈຜົນສຳເລັດຂອງການຄົ້ນຄ້ວາວິໄຈກ່ຽວກັບ "ຄວາມສອດຄ່ອງຂອງລະບົບການສຶກສາຕໍ່ເສດຖະກິດໃນ ສ.ປ.ປ ລາວ" ໃຫ້ເຫັນວ່າ: ຄວາມທຸກຈົນມີຜົນສະທ້ອນຕໍ່ອັດຕາເຂົ້າຮຽນ ແລະ ອັດຕາປະລະ ຂອງນັກຮຽນຂັ້ນປະຖົມ ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກທີ່ທຸກຍາກ. ນອກນັ້ນ ຂໍ້ມູນຍັງໄດ້ຊີ້ໃຫ້ເຫັນວ່າ ບໍ່ມີຄວາມສອດຄ່ອງລະຫວ່າງຄວາມ ຕ້ອງການຂອງສັງຄົມ ແລະ ເສດຖະກິດ. ພ້ອມກັນນັ້ນ ກໍຍັງມີຄວາມຕ້ອງການຊັບພະຍາກອນມະນຸດ ຫຼື ແຮງງານເຖິງ 70,000 ຄົນ ເຂົ້າໃນຂະແໜງອຸດສະຫະກຳ ແລະ ໂຮງຈັກໂຮງງານ ແຕ່ນີ້ຮອດ ປີ 2020.

- ຜົນຂອງການວິໄຈກ່ຽວກັບ "ອຸປະສັກຂອງການນຳໃຊ້ວິທີການຮຽນ-ການສອນແບບເອົານັກຮຽນເປັນໃຈກາງໃນສະຖາບັນສ້າງຄູ" ພົບວ່າ: ຄວາມເຂົ້າໃຈກ່ຽວກັບຄວາມໝາຍຂອງວິທີສອນແບບເອົານັກຮຽນເປັນໃຈກາງຂອງຜູ້ບໍລິຫານ ແລະ ຄູອາຈານໃນສະຖາບັນສ້າງຄູບໍ່ທັນສອດຄ່ອງກັບການປະຕິບັດຕົວຈິງ; ໃນຕົວຈິງຄູສອນຍັງຖືເອົາຕຳລາເປັນໃຈກາງ, ການປະຕິບັດກິດຈະກຳບໍ່ໄດ້ເນັ້ນເຖິງການພັດທະນາການຄົ້ນຄິດ. ສຳລັບນັກຮຽນແມ່ນລໍຖ້າຄຳຕອບຈາກຄູເປັນຜູ້ສັງລວມ ແລ້ວຈົດກ່າຍເອົາ.

- ຜົນຂອງການວິໄຈກ່ຽວກັບ "ການວັດ ແລະ ປະເມີນຜົນການຮຽນຂອງນັກສຶກສາໃນສະຖາບັນສ້າງຄູ", ໃນຂໍ້ມູນເບື້ອງຕົ້ນໄດ້ພົບວ່າ: ຄວາມເຂົ້າໃຈຂອງຜູ້ບໍລິຫານ ແລະ ຄູອາຈານໃນສະຖາບັນສ້າງຄູຍັງເນັ້ນໜັກດ້ານການຈື່ຈຳຫຼາຍກ່ວາດ້ານອື່ນ. ສ່ວນຮູບແບບການກວດກາໄດ້ມີຫຼາຍຮູບແບບປະສົມປະສານກັນ ແຕ່ແບບທີ່ນຳໃຊ້ຫຼາຍກ່ວາໝູ່ແມ່ນອັດຕະໄນ ແລະ ແບບສອບຖາມເປັນກຸ່ມ. ເວລາຂອງການກວດກາມີຫຼາຍໄລຍະຄື ກວດກາພາກຮຽນ, ກວດກາປະຈຳເດືອນ ແລະ ກວດກາຍ່ອຍເຊິ່ງໃຊ້ເວລາ 15 ນາທີລົງມາ. ສຳລັບລະບຽບການກວດກາ ແລະ ສອບເສັງແມ່ນໄດ້ປະຕິບັດແບບດຽວກັນ.

ສຳເລັດການຂຽນບົດລາຍງານເຄິ່ງທົດສະວັດຂອງແຜນປະຕິບັດງານການສຶກສາເພື່ອທຸກຄົນ ແລະ ໄດ້ລາຍງານເຖິງລັດຖະບານແລ້ວ.

## 2.5. ວຽກງານສົ່ງເສີມນັກຮຽນເກັ່ງ ແລະ ນັກຮຽນມີພອນສະຫວັນພິເສດ

ໃນແຕ່ລະປີ ໃນຂະແໜງການສຶກສາໄດ້ມີການຈັດຕັ້ງສອບເສັງນັກຮຽນເກັ່ງຢູ່ໃນລະດັບໂຮງຮຽນ, ລະດັບເມືອງ, ລະດັບແຂວງ ແລະ ລະດັບທົ່ວປະເທດ. ປີ 2009, ການສອບເສັງນັກຮຽນເກັ່ງຊັ້ນ ມ.6 ທົ່ວປະເທດໄດ້ຈັດຢູ່ທີ່ນະຄອນຫລວງວຽງຈັນ ໂດຍມີນັກສອບເສັງເຂົ້າຮ່ວມທັງໝົດ 80 ຄົນ/ຍິງ 30 ຄົນ, ໃນນັ້ນ ຄະນິດສາດ 20 ຄົນ/ ຍິງ 5 ຄົນ, ພາສາລາວ-ວັນນະຄະດີ 20 ຄົນ/ ຍິງ11 ຄົນ, ຟີຊິກສາດ 20 ຄົນ/ ຍິງ 8 ຄົນ ແລະ ເຄມີສາດ 20 ຄົນ/ຍິງ 6 ຄົນ. ຜົນຂອງການສອບເສັງ 4 ວິຊາມີດັ່ງນີ້: ວິຊາຄະນິດສາດ 3 ຄົນ/ຍິງ 0 ຄົນ, ລະດັບ 1-2 ນະຄອນຫຼວງວຽງຈັນ, ລະດັບ3 ໄຊຍະບູລີ; ວິຊາວັນນະຄະດີ 3 ຄົນ/ຍິງ 3 ຄົນ, ລະດັບ1 ແລະ 3 ນະຄອນຫຼວງວຽງຈັນ, ລະດັບ 2 ຫົວພັນ; ວິຊາຟີຊິກສາດ 3 ຄົນ/ຍິງ 2 ຄົນ, ລະດັບ 1-2 ນະຄອນຫຼວງວຽງຈັນ, ລະດັບ3 ຫຼວງພະບາງ ແລະ ວິຊາເຄມີສາດ 3 ຄົນ/ຍິງ 1 ຄົນ, ລະດັບ 1-2 ນະຄອນຫຼວງວຽງຈັນ, ລະດັບ 3 ຫຼວງພະບາງ.

ໂຮງຮຽນພອນສະຫວັນທົ່ວປະເທດ ມີ 3 ແຫ່ງ ໃນນັ້ນ ມີ 2 ໂຮງຮຽນມີ 1 ຫ້ອງຮຽນພອນສະຫວັນ, ໄດ້ຮັບເອົານັກຮຽນຜູ້ທີ່ມີພອນສະຫວັນຈາກທົ່ວປະເທດມາເຂົ້າຮຽນ ໂດຍໄດ້ມີນະໂຍບາຍໃຫ້ອັດຕາເບ້ຍລ້ຽງ ໃນແຕ່ລະເດືອນເຊິ່ງໄດ້ຮັບທຶນ ການສະໜັບສະໜູນຈາກມູນນິທິສົ່ງເສີມການສຶກສາ.

ໂຮງຮຽນສາມັນສຶກສາພາກເອກະຊົນຫລາຍແຫ່ງໄດ້ແຂ່ງຂັນກັນສ້າງຂະບວນການຮຽນດີ-ຮຽນເກັ່ງ, ໃນນັ້ນຂັ້ນສູນກາງ (ມ.6) ມີ 5 ຄົນ ຄື: ວິຊາຄະນິດສາດ 2 ຄົນ, ພາສາລາວ-ວັນນະຄະດີ 3 ຄົນ. ນອກຈາກນີ້ ຍັງໄດ້ສົ່ງເຂົ້າໄປແຂ່ງຂັນລະດັບສາກົນມີ 4 ຄົນ (ຂັດຈາກບົດສະຫຼຸບຂອງກົມ).

ຜົນການສອບເສັງຈົບຊັ້ນຂອງສາຍສາມັນສຶກສາແຕ່ລະປີກໍ່ຄ່ອຍໆສູງຂຶ້ນທາງປະລິມານ ແລະ ຄຸນນະພາບ, ຜົນການສອບເສັງຈົບຊັ້ນປະຖົມສຶກສາ (ຈົບ ປ.5) ຈາກນັກຮຽນ 114,861 ຄົນໃນປີ 2008 ເພີ່ມຂຶ້ນເປັນ 119,115 ຄົນ

ໃນປີ 2009 ເທົ່າກັບ 96.4%. ຈົບຊັ້ນມັດທະຍົມປາຍ (ຈົບມ.6) ເພີ່ມຈາກ 42,863 ຄົນ ໃນປີ 2008 ເພີ່ມຂຶ້ນ ເປັນ 44,103 ຄົນ/ຍິງ 19,668 ຄົນໃນປີ 2009 ເທົ່າກັບ 99.4%. (ໃນຕົ້ນປີ *2009 ມີນັກຮຽນ ມ.6 ທັງໝົດ 45,060 ຄົນ/ຍິງ 20,054 ຄົນ ຈາກນັ້ນມີນັກຮຽນປະລະການຮຽນ 712 ຄົນ/ຍິງ 253 ຄົນ, ບໍ່ມີເງື່ອນໄຂເຂົ້າເສັງ 101 ຄົນ/ຍິງ 37 ຄົນ, ຂາດສອບເສັງ 227 ຄົນ/ຍິງ 81 ຄົນ ແລະ ຈຳນວນນັກສອບນອກ 78 ຄົນ/ຍິງ 17 ຄົນ).*

### 2.6. ວຽກງານການສຶກສານິເທດ:

ປະຈຸບັນ, ຄູນິເທດຊັ້ນປະຖົມທັງໝົດ 528 ຄົນ/ຍິງ 158 ຄົນ ໃນນັ້ນ ຄູສຶກສານິເທດທີ່ໄດ້ຮັບການຝຶກອົບຮົມຕາມຫຼັກສູດ ມີ 355 ຄົນ/ຍິງ, ຄູສຶກສານິເທດປ່ຽນແທນ ແລະ ສ້າງໃໝ່ທີ່ກຳລັງຝຶກອົບຮົມ ມີ 275 ຄົນ. ຄູສຶກສານິເທດດັ່ງກ່າວໄດ້ປະຕິບັດຕາມພາລະບົດບາດ ແລະ ໜ້າທີ່ຂອງຕົນ ຢູ່ໃນໂຮງຮຽນ ເພື່ອຊ່ວຍເຫຼືອຜູ້ອຳນວຍການ ແລະ ຄູສອນໃນໂຮງຮຽນ ເພື່ອສົ່ງເສີມຄວາມສາມາດດ້ານການບໍລິຫານ-ຄຸ້ມຄອງ ແລະ ວິຊາການ.

ນອກນັ້ນ, ແຜນການຂອງການຝຶກຄູຊັ້ນມັດທະຍົມ 3,000 ຄົນ ແຕ່ສາມາດຝຶກຄູໄດ້ 1,090 ຄົນ. ການສ້າງຄູເຝິກຄູ ຈຳນວນ 272 ຄົນ ສາມາດປະຕິບັດໄດ້ 100% ໃນນັ້ນ ຄູຝຶກມາຈາກແຂວງລະ 16 ຄົນ ແລະ ຄູສຶກສານິເທດຊັ້ນແຂວງ ໄດ້ 9 ແຂວງ (22 ຄົນ/ແຂວງ) ລວມທັງໝົດ 198 ຄົນ.

## 2.7. ວຽກງານກໍ່ສ້າງຄູ

**2.7.1. ວຽກງານປັບປຸງ ແລະ ຂະຫຍາຍສາຂາວິຊາສ້າງຄູ:** ສະຖາບັນສ້າງຄູໃນທຸກລະບົບ ຈຳນວນນັກຮຽນ 16,038 ຄົນ/ຍິງ 8,903 ຄົນ ຫຼຸດລົງ 8.4% ມີລະບົບ 5+4, 8+3, 11+1, 11+2 ແລະ 11+3. ສະຖາບັນສ້າງຄູແຕ່ລະແຫ່ງໄດ້ຮັບເອົານັກຮຽນຕາມແຜນແບ່ງປັນຂອງກະຊວງສຶກສາທິການ ແລະ ຮັບເພີ່ມບາງສາຍ ຕາມຄວາມຕ້ອງການຂອງສັງຄົມ ລາຍລະອຽດມີດັ່ງນີ້:

+ ນັກຮຽນຄູສາຍປົກກະຕິ(ໃນແຜນ ແລະ ນອກແຜນ) 9,963 ຄົນ/ຍິງ 4,740 ຄົນ
+ ນັກຮຽນຄູສາຍພິເສດທັງໝົດ 5,732 ຄົນ/ຍິງ 3,127ຄົນ

ປັດຈຸບັນ, ຈຳນວນນັກຮຽນມີທ່າອ່ຽງເຂົ້າມາຮຽນຄູເພີ່ມຂຶ້ນ, ມີນັກຮຽນ ປີທີ1 ຈຳນວນ 6,831 ຄົນ/ຍິງ 3,959 ຄົນ ແລະ ມີນັກຮຽນຈະຈົບໃນສົກນີ້ 4,289 ຄົນ/ຍິງ 2,201 ຄົນ. ນັກສຶກສາປີສຸດທ້າຍຄະນະສຶກສາສາດ ມີ 788 ຄົນ ໃນນັ້ນ ສ້າງຄູສາຍທຳມະຊາດ 126 ຄົນ, ສ້າງຄູສາຍສັງຄົມ 75 ຄົນ, ສ້າງຄູສາຍພາສາສາດ 122 ຄົນ, ສ້າງຄູສາຍພາລະສຶກສາຊັ້ນສູງ 36 ຄົນ ແລະ ສ້າງຄູພາສາອັງກິດລະບົບພິເສດ 429 ຄົນ.ນັກຮຽນຄູອະນຸບານເຂົ້າຮຽນທັງໝົດ 935 ຄົນ, ປະລິນຍາຕີຕໍ່ເນື່ອງປົກກະຕິ 201 ຄົນ ແລະ ຕໍ່ເນື່ອງຍາມພັກແລ້ງ 951 ຄົນ.

ສຳເລັດການສ້າງຕັ້ງສະພາທີ່ປຶກສາການສ້າງຄູຂັ້ນກະຊວງ; ສ້າງລະບົບຕິດຕາມປະເມີນຜົນ ແລະ ຮັບປະກັນຄຸນນະພາບການກໍ່ສ້າງ ແລະ ບຳລຸງຄູ; ສ້າງລະບົບການຮັບຮອງອອກໃບປະກາດສະນິຍະບັດຄູ ແລະ ທົດລອງນຳໃຊ້ລະບົບການເກັບກຳ-ສັງລວມ, ວິເຄາະ ແລະ ການລາຍງານຂໍ້ມູນ(TEMIS) ຢູ່ວິທະຍາໄລຄູຫຼວງພະບາງ ແລະ ວິທະຍາໄລຄູສະຫວັນນະເຂດ.

ສືບຕໍ່ດຳເນີນການກໍ່ສ້າງຄູອະຊີວະຊັ້ນສູງ ລະບົບຕໍ່ເນື່ອງຢູ່ໂຮງຮຽນອະຊີວະທີ່ມີຄວາມພ້ອມ ເພື່ອຕອບສະໜອງຄູໃຫ້ໂຮງຮຽນອະຊີວະຕ່າງໆທັງພາກລັດ ແລະ ເອກະຊົນໃນທົ່ວປະເທດ.

*ດັ່ງນັ້ນ, ອັດຕາການສະໜອງຄູຊັ້ນອະນຸບານ, ປະຖົມ ແລະ ມັດທະຍົມຕົ້ນແມ່ນພຽງພໍຕາມຄວາມຕ້ອງການ. ພິເສດ ໄດ້ອະນຸຍາດໃຫ້ສະຖາບັນສ້າງຄູເກືອບທຸກແຫ່ງເປີດການສອນສາຍສ້າງຄູອະນຸບານ, ນັກຮຽນ-ນັກສຶກສາທີ່ຮຽນຈົບສະຖາບັນສ້າງຄູ ແລະ ມະຫາວິທະຍາໄລຄ່ອຍໆສະໝັກໄປຮັບໃຊ້ຢູ່ເຂດຫ່າງໄກສອກຫຼີກຫຼາຍຂຶ້ນ. ຈຳນວນນັກຮຽນຄູຫຼຸດລົງເນື່ອງຈາກສ້າງຄູລະບົບ (5+3) ແລະ ສາຍພາສາຝລັ່ງ ລະບົບ(11+3)ບາງແຫ່ງບໍ່ມີນັກຮຽນ, ສ່ວນຄູສາຂາອື່ນໆ ເພີ່ມຂຶ້ນ* (ຂັດຈາກບົດສະຫຼຸບ ຂອງກົມ ແລະ ແຂວງ).

**2.7.2. ວຽກງານບຳລຸງຄູ ແລະ ຝຶກອົບຮົມຄູ:** ຄູອາຈານໄດ້ຮັບການຝຶກອົບຮົບ, ບຳລຸງຍົກລະດັບດ້ານວິຊາສະເພາະຕາມມາດຖານການກໍ່ສ້າງ, ຝຶກອົບຮົມຜູ້ບໍລິຫານການສຶກສາແຕ່ລະຂັ້ນ ເຊິ່ງເຮັດໃຫ້ເຂົາເຈົ້າມີຄວາມຮູ້, ຄວາມສາມາດ ແລະ ຄຸນນະພາບໃນການສິດສອນ ແລະ ການບໍລິຫານການສຶກສາຖືກຍົກສູງຂຶ້ນກ່ວາເກົ່າ. ເພື່ອສ້າງຄູຊົນເຜົ່າໃຫ້ເຂດຊົນເຜົ່າຫ່າງໄກສອກຫຼີກ, ແກ້ໄຂບັນຫາການຂາດແຄນຄູສອນຊັ້ນມັດທະຍົມສຶກສາຕອນປາຍ; ພວກເຮົາໄດ້ເອົາຄູຈົບລະບົບ 11+3 ບາງວິຊາທີ່ສອນຢູ່ແຕ່ລະເມືອງມາຍົກລະດັບເປັນປະລິນຍາຕີຢູ່ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ. ຢູ່ວິທະຍາໄລຄູໃນ 5 ແຫ່ງ ກໍໄດ້ດຳເນີນການສອນປະລິນຍາຕີຕໍ່ເນື່ອງຍາມພັກແລ້ງໃນວິຊາພາສາລາວ ແລະ ຄະນິດສາດ ເຊິ່ງມີນັກຮຽນ ຄູເຂົ້າຮຽນ 720 ຄົນ.

ຝຶກອົບຮົມຄູຝຶກຂັ້ນເມືອງກ່ຽວກັບການມີສ່ວນຮ່ວມຂອງຊຸມຊົນໃນການປຸກສ້າງໂຮງຮຽນໄດ້ 294 ຄົນ, ຝຶກອົບຮົມຂັ້ນເມືອງໃຫ້ມີສ່ວນຮ່ວມຕໍ່ການສຶກສາ 5,848 ຄົນ. ຝຶກອົບຮົມການສ້າງແຜນຍຸດທະສາດ ແລະ ການຄຸ້ມຄອງບໍລິຫານມະຫາພາກໃຫ້ແກ່ຜູ້ບໍລິຫານຂັ້ນກະຊວງ. ຝຶກອົບຮົມການຄຸ້ມຄອງໂຮງຮຽນ ແລະ ເກັບກຳຂໍ້ມູນ, ການວາງແຜນ ແລະ ວິເຄາະຂໍ້ມູນໃຫ້ຫົວໜ້າໂຮງຮຽນ ປະຖົມໄດ້ 665 ຄົນ.

ຍົກລະດັບຄູສອນລະບົບ 5+3 ຂຶ້ນເປັນ 8+3 ສຳເລັດ 3 ລຸ່ນ ມີ 2,285 ຄົນ/ ຍິງ 1,817 ຄົນ, ຝຶກອົບຮົມຄູປະຈຳການຂັ້ນປະຖົມສຳເລັດ 5,245 ຄົນ/ຍິງ 2,347 ຄົນ, ຝຶກອົບຮົມຄູປະຈຳການຂັ້ນມັດທະຍົມ ສຳເລັດ 1,010 ຄົນ ແລະ ສ້າງຄູສຶກສານິເທດຂັ້ນມັດທະຍົມ 198 ຄົນ. ຝຶກອົບຮົມຄູຝຶກສາຍສາມັນຕາມ 9 ໂມດູນໃນ 9 ແຂວງໄດ້ 502 ຄົນ/ຍິງ 86 ຄົນ, ການສອນຫ້ອງຄວບ-ການຮຽນຢ່າງຕັ້ງໜ້າ ແລະບຳລຸງຄູປະຈຳການບ້ານເປົ້າໝາຍໄດ້ 565 ຄົນ/ຍິງ120ຄົນ.

**2.7.3. ວຽກງານແກ້ໄຂບັນຫາຄູ:** ເພື່ອກໍ່ສ້າງຄູໃຫ້ເຂດຫ່າງໄກສອກຫຼີກພຽງພໍກັບຕາມຄວາມຕ້ອງການ, ກະຊວງສຶກສາໄດ້ສົມທົບກັບອຳນາດການ ປົກຄອງທ້ອງຖິ່ນຄັດເລືອກນັກຮຽນຊົນເຜົ່າທີ່ຈົບຊັ້ນມັດທະຍົມຕອນຕົ້ນຈາກເມືອງ ແລະ ບ້ານທີ່ຂາດຄູມາຮຽນສ້າງຄູ ລະບົບ 8+3 ໂດຍໃຫ້ນັກຮຽນຄູເຊັນສັນຍາ ແລະ ປະຕິຍານຕົນຕໍ່ອຳນາດ ການປົກຄອງຂັ້ນເມືອງ ແລະ ແຂວງ ເມື່ອຮຽນຈົບແລ້ວຕ້ອງໄດ້ເປັນຄູສອນຢູ່ທ້ອງຖິ່ນຂອງຕົນ. ນັກຮຽນດັ່ງກ່າວໄດ້ຮັບການສະໜັບສະໜູນທາງດ້ານເບ້ຍ ລ້ຽງ, ເຄື່ອງນຸ່ງຫົ່ມ ແລະ ອຸປະກອນຮັບໃຊ້ໃນວຽກງານຕ່າງໆ.

ປັບປຸງການຄຸ້ມຄອງລະບົບສ້າງຄູ, ສົ່ງເສີມຄວາມສາມາດຂອງຜູ້ບໍລິຫານສະຖາບັນສ້າງຄູເປັນເຈົ້າການຄັດເລືອກບຳລຸງຄູ ພ້ອມທັງອອກປະກາສະນີຍະບັດໃນສາຍຄູຕ່າງໆ ແລະ ຊອກວິທີພັດທະນາຄູມືອາຊີບ. ຄົ້ນຄ້ວານະໂຍບາຍປັບປຸງເງິນເດືອນ, ສ້າງສິ່ງຈູງໃຈໃຫ້ແກ່ຄູ ແລະ ສະໜອງອຸປະກອນການຮຽນ-ການສອນທີ່ຈຳເປັນໃຫ້ສະຖາບັນສ້າງຄູ.

ພ້ອມກັນນັ້ນ ຍັງໄດ້ລະດົມຜູ້ອຳນວຍການໂຮງຮຽນປະຖົມ ແລະ ມັດທະຍົມທີ່ບໍ່ໄດ້ສອນໃຫ້ໄປສອນ, ສັບຊ້ອນຄູປະຖົມຈາກບ່ອນໂຮງຮຽນທີ່ມີນັກຮຽນໜ້ອຍໄປບ່ອນທີ່ມີຄວາມຈຳເປັນຕ້ອງການຄູ, ໄດ້ຍຸບໂຮງຮຽນປະຖົມທີ່ມີຈຳນວນນັກຮຽນໜ້ອຍໄປເຂົ້າຮຽນຢູ່ບ້ານອື່ນ. ນອກນັ້ນ ເພື່ອແກ້ໄຂບັນຫາຂາດຄູໂຮງຮຽນແຫ່ງຕ່າງໆ ຍັງໄດ້ຄົ້ນຄວ້າ ເອົາຄູອາສາສະໝັກເຂົ້າໄປຊ່ວຍສອນ, ຈັດຕັ້ງ ແລະ ປັບປຸງຄູສອນຫ້ອງຄວບຕາມຄວາມຕ້ອງການຂອງທ້ອງຖິ່ນ.

*ເຖິງຢ່າງໃດກໍຕາມ ແຕ່ການອອກໂກຕາລັດຖະກອນຄູຍັງຊັກຊ້າບໍ່ທັນກັບສົກຮຽນ ແລະ ບໍ່ພໍກັບຄວາມຕ້ອງການ ຈຶ່ງຈຳເປັນຕ້ອງມີຄູສັນຍາຈ້າງ ແລະ ຄູອາສາສະໝັກເຂົ້າສອນຊ່ວຍ.*

## 2.8. ວຽກງານກວດກາການສຶກສາ

ວຽກງານກວດກາການສຶກສາໄດ້ສຳເລັດການກຳນົດແບບສອບຖາມການປະເມີນສຳມະຊິກພັກ ແລະ ໜ່ວຍພັກ ແລະ ການກວດກາການສຶກສາຮອບດ້ານ 6 ແຂວງ (ບໍ່ແກ້ວ, ຊຽງຂວາງ, ບໍລິຄຳໄຊ, ສາລະວັນ, ສະຫັວນນະເຂດ, ອັດຕະປື) ກວມ 24 ເມືອງ, 69 ໂຮງຮຽນ ແລະ ວິທະຍາໄລ, ໂຮງຮຽນສ້າງຄູ 6 ແຫ່ງ. ການກວດກາສະເພາະກິດໂຮງຮຽນພາກເອກະຊົນ 3 ແຫ່ງ ເຊິ່ງຄົ້ນຄ້ວາແກ້ໄຂຄຳຮ້ອງຕ່າງໆຈຳນວນ 11 ສະບັບ; ບັນຫາທີ່ພົບ ເຫັນສ່ວນຫຼາຍແມ່ນພົວພັນເຖິງແບບວິທີເຮັດວຽກ, ສິດຜົນປະໂຫຍດ ແລະ ຄວາມບໍ່ໂປ່ງໃສດ້ານການເງິນ. ຂະແໜງການສຶກສາໄດ້ສົມທົບກັບເຈົ້າໜ້າທີ່ ດຳເນີນການແກ້ໄຂບັນຫາການປອມແປງໃບປະກາສະນິຍະບັດໃນສາຍສາມັນສຶກສາ, ວິທະຍາໄລ, ມະຫາວິທະຍາໄລຢູ່ນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ. ພ້ອມດຽວກັນນັ້ນ ກໍໄດ້ຈັດຝຶກອົບຮົມຜູ້ກວດກາການສຶກສາຂັ້ນແຂວງ-ນະຄອນຫຼວງ, ເມືອງ, ຄູນິເທດ ແລະ ສະຖາບັນສ້າງຄູ 5 ແຫ່ງ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 198 ທ່ານ/ຍິງ 21 ທ່ານ ແລະ ຖອດຖອນບົດຮຽນວຽກງານກວດກາທົ່ວປະເທດ ແລະ ປະຕິບັດວຽກງານໂຄງການສ້າງຄວາມເຂັ້ມແຂງໃນການຕິດຕາມ ແລະ ປະເມີນຜົນການສຶກສາຂອງກະຊວງ ສຶກສາທິການ. ຄະນະກວດກາຂັ້ນແຂວງກໍໄດ້ມີກວດກາການສຶກສາຢູ່ຂັ້ນເມືອງໃນທົ່ວປະເທດ ຈຳນວນ 122 ເມືອງ ແລະ 231 ໂຮງຮຽນ.

*ວຽກງານການກວດກາການສຶກສາສ່ວນຫຼາຍລາຍງານການຝຶກອົບຮົມກວດກາການສຶກສາ, ດ້ານຈຳນວນເມືອງ ແລະ ໂຮງຮຽນທີ່ໄດ້ກວດກາ ຍັງຂາດລາຍງານເນື້ອໃນຂອງວຽກງານການກວດການ-ກວດກາ, ປະກົດການທີ່ພົບເຫັນ ແລະ ວິທີແກ້ໄຂສະເພາະໜ້າ ແລະ ຍາວນານ. ການແກ້ໄຂຄຳຮ້ອງ-ຄຳສະເໜີຍັງຊັກຊ້າ ແລະ ແກ່ຍາວ. ການຈັດຕັ້ງປະຕິບັດວຽກງານການກວດກາການສຶກສາບໍ່ເປັນປົກກະຕິ ແລະ ບໍ່ປະຕິບັດຕາມແຜນການ* (ຂໍ້ດຈາກບົດສະຫຼຸບຂອງກົມ ແລະ ຂອງແຂວງ)

## 2.9. ວຽກງານຮັບປະກັນຄຸນນະພາບການສຶກສາ

ວຽກງານຮັບປະກັນຄຸນນະພາບການສຶກສາ ໄດ້ພັດທະນາຍຸດທະສາດວ່າດ້ວຍວຽກງານການຮັບປະກັນຄຸນນະພາບການສຶກສາ ແຕ່ນີ້ຮອດ ປີ 2015 ສຳເລັດ ແລະ ໄດ້ປະກາດໃຊ້ຢ່າງເປັນທາງການແລ້ວ; ສຳເລັດໂດຍພື້ນຖານການອອກແບບການພັດທະນາມາດຕະຖານຄຸນະພາບ, ຕົວຊີ້ບອກ, ເກນ ແລະ ວິທີການຂອງການປະກັນຄຸນນະພາບການສຶກສາສາຍສາມັນ, ນອກໂຮງຮຽນ ແລະ ການສຶກສາຂັ້ນສູງ ແລະ ພັດທະນາຄູ່ມືວ່າດ້ວຍການປະກັນຄຸນະພາບການສຶກສາ ໃຫ້ຜູ້ບໍລິຫານການສຶກສາຂັ້ນຕ່າງໆ; ໄດ້ມີການພັດທະນາເວບໄຊ (Website) ຂອງສູນຮັບປະກັນຄຸນນະພາບການສຶກສາ ເຊິ່ງສາມາດຕອບສະໜອງຂໍ້ມູນຂ່າວສານທັງພາຍໃນ ແລະ ຕ່າງປະເທດ, ສາມາດເຊື່ອມໂຍງ

ກັບເວບໄຊພາກພື້ນ ແລະ ສາກົນດ້ານການກວດສອບ, ການສອບເສັງ ແລະ ການຮັບຮອງມາດຕະຖານຄຸນນະພາບການສຶກສາ, ແລະ ພັດທະນາຄັງຂໍ້ສອບຂັ້ນມັດທະຍົມຕອນປາຍ, ພັດທະນາໂຄງການສ້າງຂໍ້ສອບ ແລະ ມາດຕະຖານຂໍ້ສອບວິຊາຄະນິດສາດ ແລະ ຟີຊິກສາດ.

## 2.10. ການສົ່ງເສີມການມີສ່ວນຮ່ວມຂອງສັງຄົມໃນວຽກງານສຶກສາ (ການສຶກສາເປັນຂອງປວງຊົນ)

***ການກໍ່ສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງສັງຄົມທີ່ຮຽກຮ້ອງໃຫ້ແຕ່ລະຄົນຕ້ອງມີຄວາມຮູ້ຄວາມສາມາດ (ທັກສະ) ເພື່ອປະກອບສ່ວນເຂົ້າໃນຂະບວນການຈັດຕັ້ງປະຕິບັດ, ການຍົກສູງຄວາມຮັບຮູ້ໃນດ້ານຕ່າງໆເພື່ອປະຕິບັດສິດຂອງພົນລະເມືອງ ແລະ ນໍາໃຊ້ຢ່າງເໝາະສົມພ້ອມທັງປະກອບສ່ວນຊ່ວຍສັງຄົມຢ່າງແທ້ຈິງ.*** ການຫັນເອົາວຽກງານການສຶກສາໃຫ້ກາຍເປັນຂອງທົ່ວສັງຄົມ ໄດ້ປະຕິບັດການແຕ່ງຕັ້ງຄະນະຮັບຜິດຊອບຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ເພື່ອພັດທະນາການສຶກສາ. ຂະແໜງການສຶກສາໄດ້ສົມທົບກັບຄະນະກໍາມະການວັດທະນະທໍາ-ສັງຄົມສະພາແຫ່ງຊາດ ຈັດຕັ້ງເຜີຍແຜ່ກົດໝາຍວ່າດ້ວຍການສຶກສາໃຫ້ບັນດາການນໍາຂັ້ນແຂວງ, ຂັ້ນເມືອງທຸກຂະແໜງການຮັບຮູ້, ເຊື່ອມຊຶມຢ່າງກ້ວາງຂວາງໃນຂອບເຂດທົ່ວປະເທດ.

ທັງພາກລັດ ແລະ ເອກະຊົນ ເຊິ່ງລວມທັງສ່ວນບຸກຄົນ, ນັກທຸລະກິດ, ຊຸມຊົນ, ອໍານາດການປົກຄອງ ແລະ ອົງການຈັດຕັ້ງສາກົນຕ່າງໆກໍໄດ້ປະກອບສ່ວນສະໜອງທຶນພັດທະນາໂຮງຮຽນ, ທຶນສະໜັບສະໜູນໃຫ້ແກ່ເດັກທີ່ທຸກຍາກເຂົ້າໂຮງຮຽນ ແລະ ທຶນພັດທະນາຊຸມຊົນໂດຍເລັ່ງໃສ່ການສຶກສາ ເປັນຕົ້ນແມ່ນດ້ານວັດຖຸການສ້າງ ແລະ ສ້ອມແປງໂຮງຮຽນ/ຫ້ອງຮຽນ, ອໍານວຍຄວາມສະດວກໃຫ້ຄູສອນ, ສະໜອງອຸປະກອນການຮຽນ- ການສອນເຖິງໂຮງ ຮຽນ ແລະບ້ານ-ກຸ່ມບ້ານ.

ນອກນັ້ນ, ອໍານາດການປົກຄອງທ້ອງຖິ່ນ, ສະມະຄົມພໍ່ແມ່ນັກຮຽນ, ມູນນິທິການສຶກສາ, ກຸ່ມບ້ານພັດທະນາ ແລະອົງການຈັດຕັ້ງອື່ນໆຍັງໄດ້ປະກອບຊ່ວຍປຸກລະດົມຊຸມຊົນໃຫ້ມີສ່ວນຮ່ວມປະກອບເບິ່ງແຍງຊີວິດການເປັນຢູ່ຄູອາສາສະໝັກໃນບ່ອນທີ່ຂາດເຂີນຄູ ແລະ ຊຸກຍູ້ລູກຫຼານເຂົ້າຮຽນ ເຊິ່ງເຮັດໃຫ້ມີອັດຕາເຂົ້າຮຽນສຸດທິ ແລະ ອັດຕາເຂົ້າຮຽນລວມຂອງນັກຮຽນມີທ່າເພີ່ມຂຶ້ນ.

***ແຕ່ພ້ອມດຽວກັນນັ້ນ, ການເປັນເຈົ້າການຂອງສັງຄົມຢູ່ບາງເຂດຍັງບໍ່ໄດ້ເອົາໃຈໃສ່ເທົ່າທີ່ຄວນ ເປັນຕົ້ນຍັງຖືເບົາຕໍ່ວຽກງານການສຶກສາ, ຍັງຖືວ່າເປັນໜ້າທີ່ຂອງລັດຖະບານ ແລະ ກະຊວງສຶກສາທິການພຽງຝ່າຍດຽວ ເຊິ່ງສະແດງອອກບັນຫາຫຍໍ້ທໍ້ຂອງສັງຄົມເຊັ່ນ: ນັກຮຽນບໍ່ເອົາໃຈໃສ່ຕໍ່ການຮໍ່າຮຽນ, ເສບສິ່ງເສບຕິດ, ຕີກັນ ແລະ ອື່ນໆ. ການຮໍ່າຮຽນວິຊາສະເພາະຍັງມີກະແສຮຽນຕາມຄວາມມັກຂອງພໍ່ແມ່ຜູ້ປົກຄອງ ຈຶ່ງເຮັດໃຫ້ການກໍ່ສ້າງຊັບພະຍາກອນມະນຸດບໍ່ໄດ້ຕາມແຜນທີ່ວາງໄວ້. ວຽກງານການເມືອງ-ແນວຄິດບາງເຂດຕໍ່ກັບການປຸກລະດົມທົ່ວສັງຄົມໃນການນໍາເອົາການສຶກສາໄປສູ່ເຂດຫ່າງໄກສອກຫຼີກຍັງບໍ່ເລິກເຊິ່ງ***(ຂັດຈາກບົດສະຫຼຸບ ຂອງກົມ ແລະ ແຂວງ)

*ຕີລາຄາລວມແຜນງານ 2: ແຜນງານການປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ ແມ່ນມີຫຼາຍດ້ານ ມີທ່າດີຂຶ້ນ ເປັນຕົ້ນແມ່ນຄູອາຈານໄດ້ຮັບການຝຶກອົບຮົມ ບໍາລຸງຍົກລະດັບຫຼາຍຂຶ້ນ, ໄດ້ມີການປັບປຸງຫຼັກສູດທຸກສາຍ,*

*ການສະໜອງປຶ້ມແບບຮຽນ ແລະ ຄູ່ມືຄູ, ອຸປະກອນການຮຽນ-ການສອນໃຫ້ແຕ່ລະໂຮງຮຽນ. ແຕ່ກໍຍັງມີບາງສິ່ງທີ່ຍັງຄົງຄ້າງເປັນຕົ້ນແມ່ນຄູຈຳນວນໜຶ່ງຍັງຂາດການເອົາໃຈໃສ່ດ້ານການສິດສອນຂອງຕົນ ແລະ ການສະໜອງຄູ ຍັງຊັກຊ້າເຮັດໃຫ້ຄູສອນບໍ່ທັນພຽງພໍ ຈຶ່ງມີປະກົດການສອນບໍ່ຖືກວຸດທິ ເຊິ່ງພາໃຫ້ຄຸນນະພາບໃນສາຍສາມັນຍັງຕໍ່າຄ້າງຫ້ອງ ແລະ ປະລະຫຼຸດລົງພຽງເລັກນ້ອຍເທົ່ານັ້ນ ແລະ ໃນສາຍວິຊາຊີບຍັງບໍ່ທັນຕອບສະໜອງໄດ້ຕາມຄວາມ ຕ້ອງການຂອງສັງຄົມ ແລະ ມີປະກົດການຮຽນຕາມຄວາມມັກຂອງພໍ່ແມ່ຜູ້ປົກຄອງ.*

# III ແຜນງານບໍລິຫານ ແລະ ຄຸ້ມຄອງການສຶກສາ

## 3.1. ວຽກງານຄຸ້ມຄອງການເມືອງ-ແນວຄິດ ແລະ ນະໂຍບາຍ

**3.1.1.ວຽກງານຄຸ້ມຄອງການເມືອງ-ແນວຄິດ:** ຂະແໜງການສຶກສາໄດ້ຖືວຽກງານການເມືອງ-ແນວຄິດອັນດັບໜຶ່ງໃນການຈັດຕັ້ງປະຕິບັດແຜນພັດທະນາການສຶກສາແຫ່ງຊາດ, ໃນສົກຮຽນນີ້ ໄດ້ສະແດງອອກບາງຈຸດດັ່ງນີ້:

- ຈັດຕັ້ງຮໍ່າຮຽນເຊື່ອມຊຶມມະຕິ VIII ຂອງພັກ, ບັນດາຄຳສັ່ງແນະນຳຂອງລັດຖະບານໃຫ້ຄູອາຈານ, ພະນັກງານ, ນັກຮຽນ-ນັກສຶກສາ ຢ່າງກວ້າງຂວາງ ແລະ ທົ່ວເຖິງ ນັບແຕ່ຂັ້ນກະຊວງ, ມະຫາວິທະຍາໄລຮອດໂຮງຮຽນ ແລະ ສະຖາບັນການສຶກສານັບທັງພາກລັດ ແລະ ພາກເອກະຊົນ. ຈັດຕັ້ງດຳເນີນການຮ່ວມຊີວິດການເມືອງສຳຫຼວດກວດກາ, ຕີລາຄາ ແລະ ຈັດແບ່ງປະເພດພະນັກງານ.
- ຈັດຕັ້ງເຜີຍແຜ່, ປາຖະກະຖາ, ເລົ່າມູນເຊື້ອ ແລະ ຈັດຕັ້ງສະເຫຼີມສະຫຼອງ ວັນສຳຄັນຂອງຊາດ ແລະ ຂອງສາກົນຈຳນວນຫຼາຍຄັ້ງ.
- ອອກແຈ້ງການ ແລະ ຖະແຫຼງຂ່າວກ່ຽວກັບການດຳເນີນການປະຕິຮູບລະບົບການສຶກສາແຫ່ງຊາດໃຫ້ທົ່ວສັງຄົມຮັບຮູ້ຢ່າງກວ້າງຂວາງ, ທົ່ວເຖິງ ແລະ ເລິກເຊິ່ງ. ຜ່ານການດຳເນີນຈັດຕັ້ງປະຕິບັດວຽກງານການເມືອງ-ແນວຄິດໄດ້ເຮັດໃຫ້ຖັນແຖວພະນັກງານ, ຄູອາຈານ, ນັກຮຽນ-ນັກສຶກສາ ຮັບຮູ້ຊາບ ຊຶມຕໍ່ແນວທາງການປ່ຽນແປງໃໝ່ຂອງພັກ ແລະ ລັດຖະບານ; ສາມາດຕີຖອຍ ບັນດາປະກົດການຫຍໍ້ທໍ້ ແລະ ແນວຄິດທີ່ບໍ່ຖືກຕ້ອງ; ຕັ້ງໜ້າປະຕິບັດໜ້າທີ່ສິດສອນ ແລະ ຮໍ່າຮຽນ; ຝຶກຝົນຫຼໍ່ຫຼອມ ຕົນເອງໃຫ້ມີທາດແທ້ຄຸນສົມບັດສົມທຳປະຕິວັດ ມີຄວາມເປັນເອກະພາບກັບແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ.

**3.1.2. ວຽກງານນະໂຍບາຍ:** ໃນປີ 2008-2009 ຂະແໜງການສຶກສາໄດ້ມີການສົ່ງເສີມຄູດີເດັ່ນທົ່ວປະເທດເຊິ່ງໄດ້ມີຜູ້ດີເດັ່ນທັງໝົດ 17 ຄົນ/ຍິງ 3 ຄົນ. ການປະຕິບັດຍ້ອງຍໍຜົນງານໃຫ້ພະນັກງານຄູອາຈານດີເດັ່ນມີຄື: ຫຼຽນໄຊແຮງງານຊັ້ນ II ຈຳນວນ 1 ໜ່ວຍ, ຫຼຽນໄຊແຮງງານຊັ້ນ III ຈຳນວນ 30 ໜ່ວຍ, ຫຼຽນກາລະນຶກ 50 ປີ ຈຳນວນ 5 ໜ່ວຍ, ຫຼຽນກາແຮງງານຈຳນວນ 30 ໜ່ວຍ, ຫຼຽນກາມິດຕະພາບ ຈຳນວນ 75 ໜ່ວຍ, ຍ້ອງຍໍຂັ້ນລັດຖະບານຈຳນວນ 1 ໃບ, ຍ້ອງຍໍຂັ້ນກະຊວງຈຳນວນ 1,234 ຄົນ/ຍິງ 563 ຄົນ, ໃບກຽດຕິຄຸນ ຈຳນວນ 171 ໃບ. ນອກນັ້ນຍັງມີການຍ້ອງຍໍໃຫ້ຊ່ຽວຊານ, ໂຄງການ ແລະ ກົມກອງທີ່ດີເດັ່ນຈຳນວນ 204 ກົມກອງ.

ການປະຕິບັດຕາມຂໍ້ຕົກລົງເລກທີ 209/ນຍ ລົງວັນທີ 30/07/2007 ໄດ້ຊຸກຍູ້ບັນດາຄູອາຈານທີ່ສອນດີສອນເກັ່ງຕາມມາດຖານ ແລະ ສາມາດຄັດເລືອກຕຳແໜ່ງວິຊາການຄູ ໃນລະດັບຕໍ່າກ່ວາສະຖາບັນການສຶກສາຊັ້ນສູງ

ຈຳນວນ 14 ຄົນ/ ຍິງ 11 ຄົນ. ນອກນັ້ນ ໄດ້ມີການຄົ້ນຄ້ວານະໂຍບາຍປັບປຸງເງິນເດືອນ, ສິ່ງຈູງໃຈໃຫ້ແກ່ຄູ- ອາຈານ ແລະນັກຮຽນ-ນັກສຶກສາຜູ້ດ້ອຍໂອກາດ.

## 3.2. ວຽກງານປັບປຸງກົງຈັກ ແລະ ການຈັດຕັ້ງ.

ຂະແໜງການສຶກສາໄດ້ປັບປຸງກົງຈັກການຈັດຕັ້ງ ຊັບຊ້ອນບຸກຄະລະກອນຄືນໃໝ່ໃຫ້ຖືກຕາມພາລະບົດບາດ ສິດ ແລະ ໜ້າທີ່ຂອງແຕ່ລະໜ່ວຍງານການຈັດຕັ້ງ ແຕ່ສູນກາງຮອດທ້ອງຖິ່ນ, ໃນນັ້ນ ກວມເອົາສະຖາບັນການສຶກສາ ທັງພາກລັດ ແລະ ເອກະຊົນ. ໃນສຳນັກກະຊວງສຶກສາທິການໄດ້ສ້າງຕັ້ງ ສູນຄົ້ນຄວ້າຍຸດທະສາດ ແລະ ວິໄຈການ ສຶກສາເພີ່ມຂຶ້ນ ເພື່ອໃຫ້ສອດຄ່ອງກັບແຜນປະຕິຮູບການສຶກສາແຫ່ງຊາດ; ໄດ້ໂອນໂຮງຮຽນສ້າງຄູສິລະປະສຶກສາ ໃຫ້ຂຶ້ນກັບກົມພະລະ-ສິລະປະສຶກສາ ແລະ ສູນພາສາອັງກິດໃຫ້ຂຶ້ນກັບສະຖາບັນຄົ້ນຄ້ວາວິທະຍາສາດການ ສຶກສາ.

ໃນສົກ 2008-2009 ໄດ້ຮັບດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການສ້າງຕັ້ງມະຫາວິທະຍາໄລສະຫວັນນະ ເຂດ, ດຳລັດວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວຂອງມະຫາວິທະຍາໄລຈຳປາສັກ, ມະຫາວິທະຍາໄລສຸພານຸວົງ ແລະ ມະຫາວິທະຍາໄລແຫ່ງຊາດ.

## 3.3. ວຽກງານປັບປຸງ (ນິຕິກຳ) ລະບຽບການປົກຄອງ ແລະ ຄຸ້ມຄອງ.

ລັດຖະບານໄດ້ຮັບຮອງດຳລັດວ່າດ້ວຍຂອບການພັດທະນາຂະແໜງການສຶກສາ(ESDF)ເພື່ອຮັບໃຊ້ໃຫ້ແກ່ການ ປະຕິຮູບການສຶກສາແຫ່ງຊາດ ແຕ່ຊັ້ນອະນຸບານຮອດຊັ້ນມະຫາວິທະຍາໄລ, ໄດ້ຖືກຮັບຮອງເຂົ້າເປັນສະມາຊິກຂອງ ກອງທຶນເລັ່ງລັດ (FTI) ສຳລັບການສຶກສາເພື່ອທຸກຄົນ ແລະ ໄດ້ຮັບຮອງແຜນແມ່ບົດວ່າດ້ວຍ ການພັດທະນາອະຊີວະ ສຶກສາ ແລະ ການຝຶກອົບຮົມວິຊາຊີບ 2008-2015 ໃນປີ 2008; ປັບປຸງກົດລະບຽບກອງທຶນສະຫວັດດີການຄູ (ສະບັບປັບປຸງໃໝ່). ຂະແໜງການສຶກສາ ໄດ້ສົມທົບກັບສະພາແຫ່ງຊາດສ້າງຮ່າງດຳລັດວ່າດ້ວຍ ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງໃໝ່).

ສຳເລັດຂັ້ນພື້ນຖານໃນການຕິດຕາມ ແລະສົມທົບກັບອຳນາດການປົກຄອງທ້ອງຖິ່ນກ່ຽວກັບການສ້າງແຜນພະນັກ ງານບໍລິຫານການສຶກສາຂັ້ນພະແນກສຶກສາປະຈຳແຂວງ, ຫ້ອງການສຶກສາປະຈຳເມືອງໃນຂອບເຂດທົ່ວປະເທດ.

## 3.4. ວຽກງານຝຶກອົບຮົມຜູ້ບໍລິຫານການສຶກສາ (ໃນທຸກລະດັບ)

ວຽກງານການຝຶກອົບຮົມຜູ້ບໍລິຫານການສຶກສາ ແມ່ນໄດ້ສຳເລັດການປະເມີນຜູ້ບໍລິຫານໂຮງຮຽນຊັ້ນມັດທະຍົມ ຈຳນວນ 623 ຄົນ/ຍິງ 32 ຄົນ (ຜູ້ທີ່ໄດ້ຜ່ານການຝຶກອົບຮົມ); ໄດ້ຝຶກອົມຮົມຜູ້ອຳນວຍການໂຮງຮຽນຊັ້ນປະຖົມ ຈຳນວນ 1,200 ຄົນ/ ຍິງ 450 ຄົນ ໃນ 9 ແຂວງຄື: ແຫຼວງນ້ຳທາ, ບໍ່ແກ້ວ, ໄຊຍະບູລີ, ຫຼວງພະບາງ, ຊຽງຂວາງ, ວຽງຈັນ, ສະຫວັນນະເຂດ, ສາລະວັນ ແລະ ຈຳປາສັກ.

ການຝຶກອົບຮົມໃຫ້ພະນັກງານຄູອາຈານແມ່ນໄດ້ຈັດຂຶ້ນທັງພາຍໃນ ແລະ ຕ່າງປະເທດ, ຢູ່ພາຍໃນປະເທດມີ 715 ຄົນ/ຍິງ 89 ຄົນ, ໄລຍະສັ້ນຢູ່ຕ່າງປະເທດ 80 ຄົນ/ຍິງ 12 ຄົນ; ຍົກລະດັບວິຊາສະເພາະຢູ່ພາຍໃນປະເທດມີ 192 ຄົນ/ຍິງ 73 ຄົນ ແລະ ຢູ່ຕ່າງປະເທດ 155 ຄົນ/ຍິງ 37 ຄົນ. ພະນັກງານຂັ້ນກະຊວງໄດ້ບຳລຸງທິດສະດີການເມືອງ ໄລຍະ 5 ເດືອນ ຈຳນວນ 5 ຄົນ/ຍິງ 1 ຄົນ.

ສະເພາະພະນັກງານທີ່ສຳເລັດການສຶກສາ ໄດ້ສັບຊ້ອນກັບຄືນກົມກອງເກົ່າຈາກພາຍໃນມີ 54 ຄົນ/ຍິງ13 ຄົນ ແລະ ຈາກຕ່າງປະເທດ 90 ຄົນ/ຍິງ 20 ຄົນ.

## 3.5. ວຽກງານບັນຈຸ ແລະ ຄຸ້ມຄອງລັດຖະກອນ.

ໂດຍປະຕິບັດຕາມກົດລະບຽບລັດຖະກອນແຫ່ງ ສ ປ ປ ລາວ ແລະ ລະບຽບຄຸ້ມຄອງຂະແໜງການສຶກສາ ໄດ້ເຮັດໃຫ້ການຄຸ້ມຄອງພະນັກງານລັດຖະກອນເຂົ້າສູ່ລະບຽບຫຼັກການຫຼາຍຂຶ້ນ ແລະ ມີຄວາມສະດວກຫຼາຍຂຶ້ນ.

ການປັບປຸງຖານຂໍ້ມູນຄຸ້ມຄອງລັດຖະກອນຄືນໃໝ່ (PMIS)ໄດ້ໂອນຖ່າຍຂໍ້ມູນລັດຖະກອນຈາກໂປຣແກມເກົ່າໄປສູ່ໂປຣແກມໃໝ່ ປັດຈຸບັນ ຢູ່ໃນໄລຍະການທົດລອງນຳໃຊ້ ແລະ ການກວດກາຂໍ້ມູນ.

ໃນສົກປີ 2008-2009 ພະນັກງານລັດຖະກອນອອກຮູບການຕ່າງໆທັງໝົດ 1,159 ຄົນ/ຍິງ 348 ຄົນ: ອອກພັກຜ່ອນຮັບບຳນານ 324 ຄົນ/ຍິງ 96 ຄົນ, ອອກຮັບບຳເນັດ 214 ຄົນ/ຍິງ 86 ຄົນ, ເສຍກຳລັງແຮງງານ 12 ຄົນ/ຍິງ 7 ຄົນ, ພະນັກງານຜິດວິໄນປະລະໜ້າທີ່ 156 ຄົນ/ຍິງ 40 ຄົນ, ເສຍຊີວິດ 125 ຄົນ/ຍິງ 29 ຄົນ ແລະ ຍົກຍ້າຍໄປຂະແໜງອື່ນ 328 ຄົນ/ຍິງ 90 ຄົນ.

ໃນສົກປີ 2008-2009 ໄດ້ຮັບອະນຸມັດໂກຕ້າລັດຖະກອນຈາກລັດຖະບານຈຳນວນ 4,000 ຄົນ ເຊິ່ງໄດ້ຈັດແບ່ງໃຫ້ເປັນຄູສອນທັງໝົດ 3,911 ຄົນ ແລະ ບໍລິຫານ 89 ຄົນ. ໃນຈຳນວນນີ້ ໄດ້ບັນຈຸສັບຊ້ອນໃຫ້ກົມ, ຫ້ອງການ, ສະຖາບັນການສຶກສາທີ່ຢູ່ອ້ອມຂ້າງກະຊວງ, ແຂວງ, ເມືອງ ແລະ ໂຮງຮຽນຊັ້ນຕ່າງໆຕາມວິຊາສະເພາະ ດັ່ງນີ້: ຄູອະນຸບານຈຳນວນ 522 ຄົນ, ຄູປະຖົມຈຳນວນ 1,784 ຄົນ, ຄູມັດທະຍົມຕອນຕົ້ນ 666 ຄົນ, ຄູມັດທະຍົມຕອນປາຍ 614 ຄົນ, ຄູວິຊາສະເພາະ ຈຳນວນ 325 ຄົນ. ພິເສດໄດ້ແຈກຢາຍໃຫ້ເມືອງທີ່ທຸກຍາກທີ່ສຸດ ແລະ ເຂດຈຸດສຸມກວມເອົາ 40,35%.

ການຄຸ້ມຄອງລັດຖະກອນໃນສົກປີ 2008 - 2009 ມີຈຳນວນລັດຖະກອນສຶກສາທັງໝົດ 60,183 ຄົນ/ຍິງ 27,489 ຄົນ, ໃນນັ້ນ ພະນັກງານບໍລິຫານຈຳນວນ 6,821 ຄົນ/ຍິງ 1,727 ຄົນ, ເປັນພະນັກງານຄູ-ອາຈານສອນຈຳນວນ 53,105 ຄົນ /ຍິງ 25,656 ຄົນ. ຖ້າແຍກຕາມຊັ້ນວິຊາສະເພາະມີດັ່ງນີ້: ປະລິນຍາເອກ 85 ຄົນ/ຍິງ 15 ຄົນ ເໜືອປະລິນຍາໂທ 26 ຄົນ/ຍິງ 8 ຄົນ, ປະລິນຍາໂທ 760 ຄົນ/ຍິງ 199 ຄົນ, ເໜືອປະລິນຍາຕີ ລົງເລິກຂະແໜງ 61 ຄົນ/ຍິງ 21 ຄົນ, ປະລິນຍາຕີ 6,102 ຄົນ/ຍິງ 2,375 ຄົນ, ຊັ້ນສູງ 10,360 ຄົນ/ຍິງ 4,708, ຊັ້ນກາງ 29,914 ຄົນ/ຍິງ 14,971 ຄົນ, ຊັ້ນຕົ້ນ 12,319 ຄົນ/ຍິງ 4,974 ຄົນ ແລະ ຜູ້ບໍ່ຊັ້ນວິຊາສະເພາະ 547 ຄົນ/ຍິງ 215 ຄົນ.

## 3.6. ວຽກງານຄຸ້ມຄອງຂໍ້ມູນຂ່າວສານການສຶກສາ

ວຽກງານຄຸ້ມຄອງຂໍ້ມູນຂ່າວສານການສຶກສາ ແມ່ນໄດ້ປະຕິບັດຫຼາຍວຽກທີ່ພົ້ນເດັ່ນ ເຊັ່ນ: ສຳເລັດການຮ່າງຂໍ້ກຳນົດ ແລະ ລະບຽບການນຳໃຊ້ ອິນເຕີແນດ ແລະ ອິນຕຣາແນັດຂອງກະຊວງສຶກສາທິການ ແລະ ປັບປຸງເນື້ອໃນແຜນການນຳໃຊ້ ICT ເຂົ້າໃນການສຶກສາ; ສຳເລັດການປັບປຸງເນື້ອໃນແຜນໄລຍະກາງຂອງການພັດທະນາວຽກງານສະຖິຕິ ແລະ ປັບປຸງລະບົບການເກັບກຳ ແລະ ເຜີຍແຜ່ຂໍ້ມູນໃນແຕ່ລະຂັ້ນ (ໂຮງຮຽນ, ເມືອງ, ແຂວງ ແລະ ສູນ

ກາງ) ທັງດ້ານເນື້ອໃນ ແລະ ຮູບແບບການລາຍງານ; ພັດທະນາໂປຣແກຣມປ້ອນຂໍ້ມູນໂຮງຮຽນ, ສະຖິຕິການເງິນ ແລະ ບຸກຄະລາກອນຕາມຮ່າງສະຖິຕິປັບປຸງໃໝ່ ແລະ ຝຶກອົບຮົມໃຫ້ວິຊາການສະຖິຕິຂັ້ນແຂວງ.

ກະຊວງສຶກສາທິການໄດ້ມີເວບໄຊລາຍງານຂໍ້ມູນກ່ຽວກັບ ສະຖິຕິຂອງສູນສະຖິຕິເຕັກໂນໂລຊີຂ່າວສານການສຶກສາ, ການເຄື່ອນໄຫວຂອງການກະຊວງສຶກສາ, ສູນຮັບປະກັນຄຸນນະພາບ ແລະ ກົມອາຊີວະສຶກສາ, ການປຸກສ້າງໂຮງຮຽນຕາມໂຄງການຕ່າງໆ, ໂຄງການພັດທະນາການສຶກສາຂັ້ນພື້ນຖານຊຸມຊົນພາກເໜືອ(BENC),ໂຄງການ ພັດທະນາການສຶກສາຂັ້ນພື້ນຖານ (BESDP) ແລະ ສາມາດເຊື່ອມຕໍ່ກັບເວບໄຊຂອງກະຊວງອື່ນໆ ແລະ ອົງການສາກົນຕ່າງໆ. ຮ່ວມກັບຊ່ຽວຊານຂອງໂຄງການ BESDP ໄດ້ປັບປຸງຮ່າງສະຖິຕິຂອງຂັ້ນມັດທະຍົມ, ອອກແບບປື້ມ ປະມວນສະຖິຕິ ແລະ ເລີ່ມຕົ້ນດັດແປງໂປຣແກຣມປ້ອນຂໍ້ມູນ ຕາມສະບັບປັບປຸງໃໝ່ຂອງຂັ້ນມັດທະຍົມ.

ພ້ອມດຽວກັນນັ້ນ ກໍໄດ້ຕິດຕາມຂະແໜງສະຖິຕິແຜນການຂອງພະແນກສຶກສາປະຈຳແຂວງໃນການຈັດຕັ້ງຝຶກອົບຮົມການປ້ອນຂໍ້ມູນ ແລະ ການວິເຄາະຂໍ້ມູນໃນພະນັກງານສະຖິຕິແຜນການຂັ້ນເມືອງຂອງ 5 ແຂວງ (ແຂວງວຽງຈັນ, ສະຫວັນນະເຂດ, ຫຼວງພະບາງ, ບໍ່ແກ້ວ ແລະ ໄຊຍະບູລີ) ແລະ ໄດ້ຕິດຕາມ-ປະເມີນຜົນການວາງ ແຜນການສຶກສາເພື່ອທຸກຄົນໃຫ້ຂັ້ນແຂວງ, ເມືອງໃຫ້ແກ່ 17 ແຂວງທົ່ວປະເທດ.

## 3.7. ວຽກງານແຜນການ-ແຜນງານ-ໂຄງການ

ຄະນະກຳມະທິການແຫ່ງຊາດການປະຕິຮູບການສຶກສາແຫ່ງຊາດສຳເລັດກອງປະຊຸມ ຄັ້ງທີ 3. ຂະແໜງການສຶກສາໄດ້ຮ່ວມກັບຂະແໜງການຫຼັກອື່ນ ເຊັ່ນ: ກະຊວງແຜນການ ແລະ ການລົງທຶນ, ກະຊວງສາທາລະນະສຸກ, ກະຊວງໂຍທາ-ຂົນສົ່ງ ແລະ ກໍ່ສ້າງ, ກະຊວງກະສິກຳ-ປ່າໄມ້ ແລະ ຄະນະຊີ້ນຳພັດທະນາຊົນນະບົດ ໄດ້ສຳເລັດການສ້າງແຜນການແບບມີສ່ວນຮ່ວມກັບກຸ່ມບ້ານພັດທະນາ ແລະ ການລົບລ້າງຄວາມທຸກຍາກແຫ່ງຊາດຢູ່ 17 ແຂວງ, 19 ເມືອງ, 75 ກຸ່ມບ້ານ ແລະ 221 ໂຄງການ.

ໂຄງການທີ່ກະຊວງສຶກສາຄຸ້ມຄອງ ມີທັງໝົດ 63 ໂຄງການ ມີມູນຄ່າທັງໝົດ 324,416.90 ລ້ານກີບ, ໃນນັ້ນເປັນທຶນຕ່າງປະເທດ 306,916.90 ລ້ານກີບ ແລະ ທຶນສົມທົບຂອງລັດຖະບານ (ທຶນພາຍໃນ) 6,822.00 ລ້ານກີບ.
ໃນ 6 ເດືອນຕົ້ນປີ 2008-2009 ສາມາດດຳເນີນການຈັດຕັ້ງປະຕິບັດດັ່ງນີ້:

ກ. ການສະເໜີຈ່າຍທັງໝົດ 123,494,00 ລ້ານກີບ, ທຽບໃສ່ແຜນການ ປະຕິບັດໄດ້ 39.41%.

1). ເປັນທຶນຕ່າງປະເທດ 199,655,73 ລ້ານກີບ, ທຽບໃສ່ແຜນການ ປະຕິບັດໄດ້ 38.99%.

2). ເປັນທຶນພາຍໃນ 3,838,27 ລ້ານກີບ, ທຽບໃສ່ແຜນການປະຕິບັດໄດ້ 59.56% .

ຂ. ໂຄງການລົງທຶນຂອງລັດ:

1).ໂຄງການລົງທຶນຂອງລັດ (100%) ທັງໝົດ 19 ໂຄງການ, ມູນຄ່າທັງໝົດ 8,169,68 ລ້ານກີບ ໃນ 6 ເດືອນຕົ້ນປີ 2008-2009 ໄດ້ອະນຸມັດການໃຊ້ຈ່າຍ 8 ໂຄງການ, ມູນຄ່າ 5,879,64 ລ້ານກີບ, ທຽບໃສ່ແຜນການ ປະຕິບັດໄດ້ 71,97%.

2).ໂຄງການສືບຕໍ່ມີທັງໝົດ 9 ໂຄງການ, ມູນຄ່າທັງຫມົດ 5,575,55 ລ້ານກີບ. ໃນ 6 ເດືອນຕົ້ນປີ 2008-2009 ໄດ້ປະຕິບັດການໃຊ້ຈ່າຍ 6 ໂຄງການ, ເປັນມູນຄ່າ 4,375,15 ລ້ານກີບ, ທຽບໃສ່ແຜນການປະຕິບັດໄດ້ 78,48%.

3).ໂຄງການສະເໜີໃໝ່ 10 ໂຄງການ, ມູນຄ່າ 2,594,53 ລ້ານກີບ, ໃນ 6 ເດືອນຕົ້ນປີ 2008-2009 ໄດ້ອະນຸມັດການໃຊ້ຈ່າຍ ຈຳນວນ 3 ໂຄງການ ເປັນມູນຄ່າ 1,504,49 ລ້ານກີບ, ທຽບໃສ່ແຜນການປະຕິບັດໄດ້ ພຽງ 57,99% ແຕ່ການຈັດຕັ້ງ ປະຕິບັດກິດຈະກຳຕົວຈິງ ແມ່ນໄດ້ລົງມືທຸກໂຄງການແລ້ວ.

ຄ. ການຊຳລະໜີ້ສິນໂຄງການລົງທຶນຂອງລັດ: ການຊຳລະໜີ້ສິນໂຄງການທຶນຂອງລັດ (100%) ມີທັງຫມົດ 4 ໂຄງການ, ເປັນມູນຄ່າທັງໝົດ 2,886,48 ລ້ານກີບ. ໃນ 6 ເດືອນຕົ້ນປີ 2008-2009 ໄດ້ຈັດຕັ້ງປະຕິບັດ 3 ໂຄງການ, ມູນຄ່າ 2,599,57 ລ້ານກີບ, ທຽບໃສ່ແຜນການປະຕິບັດໄດ້ 90,06%.

## 3.8. ວຽກງານງົບປະມານການເງິນ

**+ ສະພາບງົບປະມານປະຈຳປີ:**

ສົກຮຽນ 2008-2009, ຂະແໜງການສຶກສາໄດ້ຮັບງົບປະມານທັງໝົດ 1,157,309.10 ລ້ານກີບ ເທົ່າກັບ 2.29% ຂອງ GDP ແລະ ເທົ່າກັບ 11.54% ຂອງລາຍຈ່າຍລັດຖະບານ, ເມື່ອທຽບໃສ່ສົກປີ 2007-2008 ເພີ້ມຂຶ້ນ 71,605.59 ລ້ານກີບ ເທົ່າກັບ 93.81%; ໃນນັ້ນ ເງິນບໍລິຫານປົກກະຕິ 688,286.19 ລ້ານກີບ ເທົ່າກັບ 1.36% ຂອງ GDP ແລະ ເທົ່າກັບ 6.86% ຂອງລາຍຈ່າຍລັດຖະບານ. ເມື່ອແຍກເປັນເງິນເດືອນ ແລະ ເງິນນະໂຍບາຍ ມີ 526,568.33 ລ້ານກີບ, ເປັນເງິນອຸດໜູນ ແລະ ເບ້ຍລ້ຽງ 104,087.33 ລ້ານກີບ, ເປັນເງິນບໍລິຫານຮັບໃຊ້ກົງຈັກລັດ 35,393.70 ລ້ານກີບ, ເງິນດັດສົມ ແລະ ສົ່ງເສີມ 20,178.18 ລ້ານກີບ, ເງິນເຊົ່າຊື້ຊັບສົມບັດຄົງທີ່ 2,058.66 ລ້ານກີບ ແລະ ເງິນລົງທຶນ (ທັງພາຍໃນ, ຕ່າງປະເທດ ແລະ ໜີ້ສິນພາຍໃນ ) 469,022.91 ລ້ານກີບ ເທົ່າກັບ 40.53% ຂອງເງິນທັງໝົດ.

**+ ໃນການຈັດຕັ້ງປະຕິບັດມີຄື:**

- ສູນກາງຄຸ້ມຄອງ 393,779.28 ລ້ານກີບ ເທົ່າກັບ 0.75% ຂອງGDP; ໃນນັ້ນ ເງິນບໍລິຫານປົກກະຕິ 69,362.38 ລ້ານກີບ, ແຍກເປັນເງິນເດືອນ 25,265.38 ລ້ານກີບ, ເປັນເງິນອຸດໜູນ ເບ້ຍລ້ຽງ ແລະ ເງິນນະໂຍບາຍ 24,669.63 ລ້ານກີບ, ເປັນເງິນບໍລິຫານຮັບໃຊ້ກົງຈັກລັດ 10,063.34 ລ້ານກີບ, ເປັນເງິນດັດສົມ ແລະ ສົ່ງເສີມ 8,027.38 ລ້ານກີບ, ເປັນເງິນເຊົ່າ-ຊື້ຊັບສົມບັດຄົງທີ່ 336.66 ລ້ານກີບ ແລະ ເປັນເງິນລົງທຶນ 324,416.90 ລ້ານກີບ; ໃນນັ້ນ ທຶນພາຍໃນ 17,500.00 ລ້ານກີບ, ທຶນຕ່າງປະເທດ 306,916.90 ລ້ານກີບ ແລະ ທຶນຊຳລະໜີ້ 2,886.48
- ທ້ອງຖິ່ນຄຸ້ມຄອງ 695,328.21 ລ້ານກີບ ເທົ່າກັບ 1.37% ຂອງ GDP ແລະ ເທົ່າກັບ 6.94% ຂອງລາຍຈ່າຍລັດຖະບານ , ໃນນັ້ນ ເງິນບໍລິຫານ ປົກກະຕິ 560,172.81 ລ້ານກີບ, ແຍກເປັນເງິນເດືອນ ແລະ ເງິນນະ

ໂຍບາຍ 481,366.05 ລ້ານກີບ, ເປັນເງິນອຸດໜູນ ແລະ ເບ້ຍລ້ຽງ 57,380.85 ລ້ານກີບ, ເປັນເງິນບໍລິຫານຮັບໃຊ້ກິງຈັກລັດ 14,816.11 ລ້ານກີບ, ເປັນເງິນດັດສົມ ແລະ ສິ່ງ ເສີມ 6,117.80 ລ້ານກີບ, ເປັນເງິນເຊົ່າຊື້ຊັບສົມບັດຄົງທີ່ 472.00 ລ້ານກີບ ແລະ ເປັນເງິນລົງທຶນ 135,155.40 ລ້ານກີບ. ໃນນັ້ນ, ທຶນພາຍໃນ 36,956.04 ລ້ານກີບ ແລະ ທຶນຕ່າງປະເທດ 98,199.36 ລ້ານກີບ.

- ມະຫາວິທະຍາໄລແຫ່ງຊາດຄຸ້ມຄອງ 68,201.61 ລ້ານກີບ ເທົ່າກັບ 0.13% ຂອງGDP, ໃນນັ້ນ ເງິນບໍລິຫານປົກກະຕິ 58,751.00 ລ້ານກີບ. ເມື່ອແຍກເປັນເງິນເດືອນ ແລະ ເງິນນະໂຍບາຍ 19,916.90 ລ້ານກີບ, ເປັນເງິນອຸດໜູນ ແລະ ເບັ້ຍລ້ຽງ 22,036.85 ລ້ານກີບ, ເງິນບໍລິຫານຮັບໃຊ້ກົງຈັກລັດ 10,514.25 ລ້ານກີບ, ເງິນດັດສົມສິ່ງເສີມ 5,033.00 ລ້ານກີບ, ເປັນເງິນເຊົ່າ-ຊື້ຊັບສົມບັດຄົງທີ່ 1,250.00 ລ້ານກີບ ແລະ ເປັນເງິນລົງທຶນ 9,450.61 ລ້ານກີບ, ໃນນັ້ນ ທຶນພາຍໃນ 9,450.61 ລ້ານກີບ .

+ ການປະຕິບັດງົບປະມານ 6 ເດືອນຕົ້ນປີ:

**ຂະແໜງການສຶກສາປະຕິບັດງົບປະມານໄດ້ທັງໝົດ**: 537,211.55 ລ້ານກີບ ເທົ່າກັບ 46.42 % ເມື່ອທຽບໃສ່ແຜນການປີ, ໃນນັ້ນ ເງິນບໍລິຫານປົກກະຕິປະຕິບັດໄດ້ 339,744.57 ລ້ານກີບ, ເທົ່າກັບ 49.36 % ທຽບໃສ່ແຜນການປີ. ເມື່ອແຍກເປັນເງິນເດືອນ, ເງິນນະໂຍບາຍມີ 259,256.83 ລ້ານກີບ, ເປັນເງິນອຸດໜູນ ແລະ ເບ້ຍລ້ຽງ 53,380.11 ລ້ານກີບ, ເປັນເງິນບໍລິຫານຮັບໃຊ້ກົງຈັກລັດ 16,068.54 ລ້ານ ກີບ, ເປັນເງິນ ດັດສົມ ແລະ ສິ່ງ ເສີມ 9,965.58 ລ້ານກີບ, ເປັນເງິນເຊົ່າ-ຊື້ຊັບສົມບັດຄົງທີ່ 1,073.50 ລ້ານກີບ ແລະ ເງິນລົງທຶນປະຕິບັດໄດ້ 197,466.90 ລ້ານກີບເທົ່າກັບ 42.10 % ທຽບໃສ່ແຜນການປີ, ໃນນັ້ນ ທຶນພາຍໃນ 29,181.56 ລ້ານກີບ, ທຶນຕ່າງປະເທດ 168,285.42 ລ້ານກີບ.

(ກ) ສູນກາງປະຕິບັດໄດ້ 6 ເດືອນຕົ້ນປີ 163,525.64 ລ້ານກີບ, ໃນນັ້ນ ເງິນບໍລິຫານປົກກະຕິ 35,636.10 ລ້ານກີບ, ແຍກເປັນເງິນເດືອນ ແລະ ເງິນນະໂຍບາຍ 12,195.44 ລ້ານກີບ, ເປັນເງິນອຸດໜູນ ແລະ ເບ້ຍລ້ຽງ 13,808.47 ລ້ານກີບ, ເປັນເງິນບໍລິຫານຮັບໃຊ້ກົງຈັກລັດ 4,847.63 ລ້ານກີບ, ເປັນເງິນດັດສົມ ແລະ ສິ່ງເສີມ 4,567.34 ລ້ານກີບ,ເປັນເງິນເຊົ່າ- ຊື້ຊັບສົມບັດຄົງທີ່ 217.22 ລ້ານກີບ ແລະ ເງິນລົງທຶນ 127,889.45 ລ້ານກີບ, ໃນນັ້ນ ທຶນພາຍໃນ 7,721.81 ລ້ານກີບ,ທຶນຕ່າງປະເທດ 120,167.73 ລ້ານກີບ.

(ຂ) ທ້ອງຖິ່ນປະຕິບັດໄດ້ 6 ເດືອນຕົ້ນປີ 340,710.82 ລ້ານກີບ, ໃນນັ້ນເງິນບໍລິຫານປົກກະຕິ 274,484.68 ລ້ານກີບ, ແຍກເປັນເງິນເດືອນ ແລະ ເງິນນະໂຍບາຍ 235,879.16 ລ້ານກີບ, ເປັນເງິນ ອຸດໜູນ ແລະ ເບ້ຍລ້ຽງ 28,116.62 ລ້ານກີບ, ເປັນເງິນບໍລິຫານຮັບໃຊ້ກົງຈັກລັດ 7,258.89 ລ້ານກີບ, ເປັນເງິນດັດສົມ ແລະ ສິ່ງເສີມ 2,997.72 ລ້ານກີບ, ເປັນເງິນເຊົ່າຊື້ຊັບສົມບັດຄົງທີ່ 231.28 ລ້ານກີບ ແລະ ເງິນລົງທຶນ 66,226.15 ລ້ານກີບ, ໃນນັ້ນ ທຶນພາຍໃນ 18,108.46 ລ້ານກີບ, ທຶນຕ່າງ ປະເທດ 48,117.69 ລ້ານກີບ.

(ຄ) ມະຫາວິທະຍາໄລແຫ່ງຊາດປະຕິບັດໄດ້ 6 ເດືອນຕົ້ນປີ 32,975.09 ລ້ານກີບ, ໃນນັ້ນ: ເງິນ ບໍລິຫານປົກກະຕິ 29,623.79 ລ້ານກີບ,ແຍກເປັນເງິນເດືອນ ແລະ ເງິນນະໂຍບາຍ 11,182.23 ລ້ານ ກີບ, ເປັນ ເງິນອຸດໜູນ ແລະ ເບັ້ຍລ້ຽງ 11,455.02 ລ້ານກີບ, ເປັນເງິນບໍລິຫານຮັບໃຊ້ກົງຈັກລັດ 3,916.02 ລ້ານກີບ, ເປັນເງິນດັດສົມ ແລະ

ສິ່ງເສີມ 2,400.52 ລ້ານກີບ, ເປັນເງິນເຊົ່າ ຊື້ຊັບສິນບັດ ຄືງທີ່ 625.00 ລ້ານກີບ ແລະ ເງິນລົງທຶນ 3,315.30 ລ້ານກີບ, ໃນນັ້ນ ທຶນພາຍໃນ 3,351.30 ລ້ານກີບ.

## 3.9. ວຽກງານຄຸ້ມຄອງຊັບສິນ ຄຸ້ມຄອງອອກແບບກໍ່ສ້າງ

ສຳເລັດການຈັດເຝິກອົບຮົມແນະນຳການນຳໃຊ້ປື້ມຄູ່ມືການຄຸ້ມຄອງຊັບສິນ-ວັດສະດຸພ້ອມທັງສະໜອງເຄື່ອງໝັບ ສະຕິກເກີໝາຍເລກລະຫັດຊັບສິນໃຫ້ເມືອງ, ແຂວງເປົ້າໝາຍຂອງໂຄງການ ແລະ ຊຸກຍູ້ຕິດຕາມການປະຕິບັດການຂຶ້ນທະບຽນ, ການຂຶ້ນບັນຊີ ແລະ ຕິດສະຕິກເກີຊັບສິນພາຍຫຼັງທີ່ໄດ້ເຝິກອົບຮົມແລ້ວ.

ສຳເລັດການການຈັດຊື້ສັງກະສີຈຳນວນ 30.030 ແຜ່ນ, ເປັນຈຳນວນເງິນ 1 ຕື້ ກີບ ແລະ ໄດ້ແບ່ງປັນແຈກຢາຍໃຫ້ແຂວງຕ່າງໆ ຕາມແຜນການແບ່ງປັນ.

ໃນສົກ 2008-2009 ສຳເລັດການຈັດສິ່ງສໍປູນຂາວຕາມຕົວເລກງົບປະມານທີໄດ້ອະນຸມັດ, ມູນຄ່າ 3.102.963 ກີບ, ສົ່ງໄປໃນແຕ່ລະແຂວງໃນທົ່ວປະເທດ ແລະ ສຳເລັດການພິມປື້ມ, ມູນຄ່າ 899.941.370 ກີບ, ໃນນັ້ນ ກົມການສຶກສານອກໂຮງຮຽນໄດ້ພິມປື້ມແບບຮຽນລະດັບ1 ເຫຼັ້ມ1 ແລະ 2. ປື້ມແບບຮຽນລະດັບ 2 ເຫຼັ້ມ 1 ແລະ 2. ປື້ມແບບຮຽນລະດັບ 3 ເຫຼັ້ມ 1 ແລະ 2. ກົມພາລະ ແລະ ສິລະປະສຶກສາໄດ້ພິມປື້ມການຮຽນ-ການສອນວິຊາເຕະບານ, ວິຊາບານສົ່ງ, ວິຊາບານບ້ວງ, ວິຊາສິລະປະສຶກສາ. ສູນພັດທະນາອາຊີວະສຶກສາໄດ້ພິມປື້ມຫຼັກສູດປະກາສະນີຍະບັດໄລຍະສັ້ນລະດັບ 3 ເດືອນ, 6 ເດືອນ, ປື້ມຫຼັກສູດປະກາສະນີຍະບັດວິຊາຊີບຊັ້ນຕົ້ນ 8+3, ປື້ມຫຼັກສູດປະກາສະນີຍະບັດເຕັກນິກຊັ້ນກາງ 11+2 ແລະ ປື້ມຫຼັກສູດປະກາດສະນີຍະບັດເຕັກນິກ ຊັ້ກາງ 11+3 ແລະ ສຳເລັດການຈັດຊື້ອຸປະກອນການຮຽນການສອນ ໃນມູນຄ່າ 246.960.000 ກີບ.

ນອກນັ້ນ, ຍັງໄດ້ມີການຕິດຕາມ, ຊຸກຍູ້ການປະຕິບັດວຽກງານໂຄງການຂັ້ນແຂວງ, ແນະນຳດ້ານເຕັກນິກການປະຕິບັດວຽກງານການກໍ່ສ້າງໂຮງຮຽນປະຖົມ, ຫ້ອງການສຶກສາເມືອງ ແລະ ສະຖາບັນສ້າງຄູຂອງໂຄງການຕ່າງໆ ແລະ ຈັດການຝຶກອົບຮົມ, ຊີ້ນຳວຽກປຸກສ້າງແບບຊຸມຊົນມີສ່ວນຮ່ວມ ແລະ ແຈ້ງການ ຂໍ້ກຳນົດວ່າດ້ວຍມາດຕະຖານແບບໂຮງຮຽນປະຖົມ, ເດີ່ນ ແລະ ເຄື່ອງເຟີນີເຈີ້ ພ້ອມທັງສິ່ງວັດຖຸ ອຸປະກອນ ການຮຽນ-ການສອນຂອງ ຂະແໜງການສຶກສາທົ່ວປະເທດ.

*ແຕ່ເຖິງຢ່າງໃດກໍຕາມ, ວຽກງານຄຸ້ມຄອງຊັບສິນ ແລະ ອອກແບບກໍ່ສ້າງຍັງບໍ່ສາມາດປິດສະຫຼຸບສັງລວມ ດ້ານການເງິນປະຈຳປີຂອງບາງໂຄງການໃຫ້ສຳເລັດຕາມກຳນົດເວລາ. ການປະກອບເອກະສານຂໍເບີກຖອນເງິນເດືອນ, ເງິນທວນຄືນໃນແຕ່ລະງວດພົບຄວາມຫຍຸ້ງຍາກ, ບາງຫົວໜ່ວຍການເງິນ ບໍ່ໄດ້ຕິດຕາມການສະເໜີຂໍຖອນເງິນເດືອນ. ການສະຫຼຸບ, ການລາຍງານ ແລະ ການສະໜອງຂໍ້ມູນຈາກທ້ອງຖິ່ນໃຫ້ສູນກາງບໍ່ເປັນປົກກະຕິ, ບໍ່ເປັນລະບົບຈຶ່ງເຮັດໃຫ້ຕົວເລກລາຍງານໃຫ້ທາງອົງການໃຫ້ທຶນບໍ່ທັນຊັດເຈນ ແລະ ທັນເວລາ ເປັນຕົ້ນແມ່ນບ້ວງປະກອບສ່ວນ ຂອງຊຸມຊົນ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນຍັງຂາດເຂີນ.* (ຂັດຈາກບົດສະຫຼຸບຂອງກົມ)

## 3.10. ວຽກງານພົວພັນ ແລະ ຮ່ວມມືກັບຕ່າງປະເທດ

**3.10.1. ວຽກພົວພັນກັບຕ່າງປະເທດ:** ຄະນະຜູ້ແທນຂັ້ນລັດຖະມົນຕີ, ຄະນະນຳກະຊວງສຶກສາທິການໄດ້ໄປຢ້ຽມຢາມ,ເຂົ້າຮ່ວມກອງປະຊຸມເຄື່ອນໄຫວ ຢູ່ຕ່າງປະເທດຈຳນວນ 10 ຄະນະ ຄື:ສ.ສ.ຫວຽດນາມ, ສ.ປຈີນ, ສະຫະພັນເຢຍລະມັນ, ຣາຊະອານາຈັກໄທ, ຣາຊະນະຈັກກຳປູເຈຍ, ສະຫະລັດອາເມລິກາ, ສາທາລະນະລັດຝະຣັ່ງ, ເຊເນການ, ສ. ເກົາຫລີ ແລະ ຍີ່ປຸ່ນ.

ຄະນະຜູ້ແທນຂັ້ນກົມໄດ້ເຂົ້າຮ່ວມກອງປະຊຸມດ້ານວິຊາການທີ່ຕ່າງປະເທດຈຳນວນ 16 ຄະນະທີ່ ສ.ສ. ຫວຽດນາມ, ສ.ປ. ຈີນ, ຣາຊະອານາຈັກໄທ, ຣາຊະອານາຈັກກຳປູເຈຍ, ອິນໂດນີເຊຍ, ຟີລິບປິນ, ສິງກະໂປມາ ເລເຊຍ, ບຣູໄນດາລູຊາລຳ, ເຢຍລະມັນ, ອີຕາລີ, ການາດາ, ເຊເນການ, ຝະຣັ່ງ, ອາເມລິກາ ແລະ ຍີ່ປຸ່ນ.

ກະຊວງສຶກສາທິການກໍໄດ້ຮັບຕ້ອນຄະນະຜູ້ແທນຕ່າງປະເທດມາຢ້ຽມຢາມຈຳນວນ 7 ຄະນະຄື: ຈາກປະເທດ ສ.ສ. ຫວຽດນາມ, ເກົາຫຼີ, ຍີ່ປຸ່ນ, ມາເລເຊຍ, ຣາຊະອານາຈັກໄທ, ສ ປ. ຈີນ ແລະ ອິນໂດນີເຊຍ.

**3.10.2. ຮ່ວມມື 2 ຝ່າຍ:** ຄູ່ຮ່ວມພັດທະນາສາກົນໄດ້ມີບົດບາດ ເພື່ອເສີມສ້າງສັກກາຍະພາບໃນການພັດທະນາການສຶກສາໃຫ້ມີການ ຂະຫຍາຍຕົວ ແລະ ສປປລາວກໍເຂົ້າຮ່ວມກອງປະຊຸມສຳມະນາ ກັບບັນດາປະເທດລຸ່ມແມ່ນ້ຳຂອງ GMS.

ບັນດາອົງການຈັດຕັ້ງສາກົນໄດ້ຊ່ວຍເຫຼືອໃນວຽກງານການສຶກສາເຊັ່ນ ອົງການສະພາບເອີລົບໃນໂຄງການພັດທະນາການສຶກສາຂັ້ນພື້ນຖານຊຸມຊົນພາກເໜືອ ກວມເອົາ 3 ແຂວງ(ຜົ້ງສາລີ, ຫລວງນ້ຳທາ ແລະ ຫລວງພະບາງ), 9 ເມືອງ, 430 ບ້ານ ແລະ 100 ບ້ານປຸກສ້າງ ໂຮງຮຽນໃໝ່ ແລະ 215 ບ້ານໄດ້ດຳເນີນການສຶກສາສຳລັບຜູ້ໃຫຍ່ກຳນົດ 6 ປີ 2004-2010; ອົງການອຸຍນີເຊບ (UNICEF) ຊ່ວຍພັດທະນາການສຶກສາຂັ້ນພື້ນຖານ ເຊິ່ງມີບົດບາດເປັນຄູ່ຮ່ວມພັດທະນາທີ່ດີ ແລະ ຄູ່ຮ່ວມເຈລະຈາໃຫ້ຫລາຍໆໂຄງການ. ການຈັດຕັ້ງປະຕິບັດໂຄງການການສຶກສາຂັ້ນພື້ນຖານ, ການສຶກສາເພື່ອໝົດທຸກຄົນ ແລະ ຄູ່ຮ່ວມການເຈລະຈາບັນລຸເປົ້າໝາຍກອບຂະແໜງການສຶກສາ (ESDF)

ປີ 2009 ໄດ້ເຊັນສັນຍາຮ່ວມມື 2 ຝ່າຍດ້ານການສຶກສາກັບປະເທດບັນດາປະເທດເພື່ອນມິດຄື: ສສ ຫວຽດນາມ, ສ.ປ ຈີນ, ຍີ່ປຸ່ນ, ສ ເກົາຫລີ ແລະ ອິດສະຕຣາລີ; ເຊັນສັນຍາກັບລັດຖະບານຍີ່ປຸ່ນຮ່ວມມືດ້ານໂຄງການປັບປຸງສະພາບແວດລ້ອມໂຮງຮຽນຂັ້ນປະຖົມ 3 ແຂວງພາກໃຕ້(ສາລະວັນ,ເຊກອງແລະແຂວງອັດຕະປື)ລວມມູນຄ່າ 685 ,000,000 ລ້ານເຢັນ; ຮ່ວມມືກັບແຂວງຈິງຈູງນຳໂດ ສ.ເກົາຫຼີ ໃນການຊ່ວຍເຫລືອເຄື່ອງຄອມພິວເຕີມືສອງຈຳນວນ 150 ເຄື່ອງ ແລະ ກຽມສົ່ງພະນັກງານໄປຝຶກອົບຮົມໄລຍະສັ້ນ 15 ຄົນ.

ນອກນັ້ນ ຂະແໜງການສຶກສາຍັງມີການຮ່ວມມືກັບບໍລິສັດບູຍອງ (Booyong) ໂຄງການສະໜອງກະດານດຳໃຫ້ໂຮງຮຽນມັດທະຍົມໃນຂອບເຂດທົ່ວປະເທດ, ໂຄງການສະໜອງປື້ມແບບຮຽນໃຫ້ໂຮງຮຽນມັດທະຍົມສຶກສາຮ່ວມກັບອົງການກອຍກາ (KOICA), ໂຄງການຮ່ວມມື (HRD-ME) ສະໜອງອຸປະກອນການຮຽນ-ການສອນ, ຫລັກສູດ, ຕຳລາຮຽນ ແລະ ສິ່ງອຳນວຍຄວາມສະດວກເພື່ອຮັບໃຊ້ໃຫ້ແກ່ໂຮງຮຽນວິຊາຊີບແບບປະສົມ, ຮ່ວມມືກັບອົງການພັດທະນາເຢຍລະມັນ (DED) ປະກອບນັກພັດທະນາກອນເຢຍລະມັນໃຫ້ສະຖານອາຊີວະສຶກສາແຫ່ງຕ່າງໆ ຈຳນວນ

09 ທ່ານ, ຮ່ວມມືກັບອົງການ Lux Development ປັບປຸງໂຮງຮຽນວິຊາຊີບແຂວງຄໍາມ່ວນ, ສໍາເລັດການກໍ່ສ້າງໂຮງຊ່າງສາຂາວິຊາສ້ອມແປງທົ່ວໄປ, ຮ່ວມມືກັບອົງການ BTC ເບັນຢ້ຽມ ເພື່ອຈັດຕັ້ງປະຕິບັດໂຄງການປັບປຸງໂຮງຮຽນເຕັກນິກ-ວິຊາຊີບ ແລະ ຮ່ວມມືກັບທະນາຄານພັດທະນາເຢຍລະມັນ ໃນການຈັດຕັ້ງປະຕິບັດໂຄງການກໍ່ສ້າງໂຮງຮຽນວິຊາຊີບແບບປະສົມ 3 ແຂວງພາກເໜືອ (ຜົ້ງສາລີ, ອຸດົມໄຊ ແລະ ຊຽງຂວາງ).

### 3.10.3. ຮ່ວມມືຫລາຍຝ່າຍ (SEAMEO &ASEAN)

+ ວຽກງານອາຊຽນ: ຂະແໜງການສຶກສາໄດ້ສົ່ງປຶ້ມຕໍາລາສິດສອນຊັ້ນປະຖົມ ແລະ ມັດທະຍົມຂອງ ສປປ ລາວ ທີ່ກ່ຽວຂ້ອງກັບປະ ເທດອາຊຽນໃຫ້ ອົງການອາຊຽນໃນໂຄງການພັດທະນາຫຼັກສູດ “Source Material of a common Content on ASEAN for Use in Primary and Secondary Schools”

ນັກສຶກສາມະຫາວິທະຍາໄລແຫ່ງຊາດໄປທັດສະນະສຶກສາໃນ 10 ປະເທດອາຊຽນທີ່ປະເທດອິນເດຍ 2 ຄັ້ງ ຈໍານວນ 10 ຄົນ ແລະ ສົ່ງນັກສຶກສາມັດທະຍົມຕອນປາຍໄປຝຶກອົບຮົມໄລຍະຍາວ 1 ປີ ໃນໂຄງການ Japan EAST ASIA Network Exchange for Students and Youth 1 ຄັ້ງ ຈໍານວນ 4 ຄົນທີ່ປະເທດຍີ່ປຸ່ນ. ນັກສຶກສາໄປທັດສະນະສຶກສາໃນວຽກງານອາຊຽນທີ່ປະເທດຈີນ, ມາເລເຊຍ, ໄທ ແລະ ສິງກະໂປ ຈໍານວນ103 ຄົນ ແລະ ເຂົ້າຮ່ວມກິດຈະກໍາວຽກງານອາຊຽນ ແລະ ທັດສະນະສຶກສາພາຍໃນປະເທດຈໍານວນ 110 ຄົນ. ພະນັກງານຂະແໜງສຶກສາເຂົ້າປະຊຸມວິຊາການທີ່ປະເທດຟີລິບປິນ, ອິນໂດເນເຊຍ, ໄທ, ຈີນ, ສິງກະໂປ, ມາເລເຊຍ ແລະ ຫວຽດນາມ ຈໍານວນ 26 ທ່ານ ແລະ ໄດ້ເຂົ້າຮ່ວມປະຊຸມສໍາມະນາຢູ່ພາຍໃນປະເທດ 37 ທ່ານ.

+ ວຽກງານຊີແມວ: ຄະນະນໍາກະຊວງສຶກສາໄດ້ເຂົ້າຮ່ວມກອງປະຊຸມຄັ້ງທີ່ 31st SEAMEO HOM ແລະ ກອງປະຊຸມ SEAMEO 44th and 4th ASEAN Council Conference ທີ່ປະເທດໄທ ຈໍານວນ 4 ທ່ານ; ຕ້ອນຮັບທ່ານລັດຖະມົນຕີວ່າການກະຊວງສຶກສາປະເທດມະເລເຊຍ, ທັງເປັນປະທານອົງການຊີແມວ ພ້ອມດ້ວຍຄະນະ ຈໍານວນ 9 ທ່ານ, ພະນັກງານ ຈໍານວນ 30 ທ່ານໄດ້ເຂົ້າປະຊຸມ ແລະ ສໍາມະນາໃນວຽກງານຊີແມວ ຢູ່ຕ່າງປະເທດ.

+ ວຽກງານອາເຊມ: ຄະນະນໍາກະຊວງສຶກສາທິການ ໄດ້ເຂົ້າຮ່ວມກອງປະຊຸມລັດຖະມົນຕີສຶກສາອາຊີຢູຣົບ (the 2nd ASEM Ministerial Meeting on Education) ທີ່ ຮ່າໂນຍ, ສ.ສ ຫວຽດນາມຈໍານວນ 9 ທ່ານ

+ ວຽກງານ GMS: ພະນັກງານຂັ້ນກົມໄດ້ເຂົ້າຮ່ວມປະຊຸມໃນວຽກງານ GMS ກ່ຽວກັບ Human Resource Development ຈໍານວນ 2 ຄັ້ງ 4 ທ່ານ ທີ່ປະເທດຈີນ ແລະ ກໍາປູເຈຍ ແລະ ເຂົ້າຮ່ວມສໍາມະນາກ່ຽວກັບການຄຸ້ມຄອງໂຄງການ ທີ່ຂອນແກ່ນ ປະເທດໄທ (GMS) 1 ຄັ້ງ 1 ທ່ານ.

**3.10.4 ການຮ່ວມມືກັບອົງການທີ່ບໍ່ຂຶ້ນກັບລັດຖະບານ ($NGO_S$):** ອົງການການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານໄດ້ໃຫ້ການສະໜັບສະໜູນດ້ານການສຶກສາແກ່ ສປປ ລາວ ຈໍານວນ 22 ອົງການ ແລະ 2 ບໍລິສັດ ໂດຍໃຫ້ທຶນປຸກສ້າງໂຮງຮຽນ 12 ອົງການ, ກໍ່ສ້າງສູນວິຊາຊີບ 3 ອົງການ ສິດສອນພາສາອັງກິດ 2 ອົງການ, ສະໜອງອາຫານກາງວັນ 2 ອົງການ, ຊ່ວຍເຫລືອກະດານ 1 ບໍລິສັດ, ທຶນການ ສຶກສາສໍາລັບເດັກ 2 ອົງການ ແລະ ມູນນິທິການສົ່ງເສີມການສຶກສາ 2 ມູນນິທິ. ການຮ່ວມມືທັງໝົດນັ້ນໄດ້ມີບົດບາດ ແລະ ທ່າແຮງໃນການປະກອບສ່ວນພັດທະນາການສຶກສາ ແລະ ຫລຸດຜ່ອນຄວາມທຸກຍາກຕາມແຜນພັດທະນາ ຂອງລັດຖະບານ.

**3.10.5. ວຽກຄຸ້ມຄອງໂຄງການ:** ການຊ່ວຍເຫລືອທາງດ້ານເຕັກນິກໃຫ້ແກ່ຂະແໜງການສຶກສາໃນປີຜ່ານມາປະກອບມີອົງການ AusAID, ທະນາຄານພັດທະນາອາຊີ, ສະຫະພາບເອີລົບ, ທະນາຄານໂລກ, ອົງການຮ່ວມມືກັບເຍຍລະມັນ GTZ, KfW, DED; UNICEF, UNESCO, WFP, JICA ...

ການສ້າງເຄື່ອງມືເພື່ອຄຸ້ມຄອງໂຄງການຂອງ ODA ໄດ້ອີງໃສ່ແບບຟອມຂອງໂຄງການ PCAP ເຊິ່ງປະກອບມີ: ແບບຟອມການຂຶ້ນທະບຽນ, ການລາຍງານການຂຶ້ນແຜນການ ແລະ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການປະຈໍາ 3 ເດືອນ, 6 ເດືອນ, ປີ, ເຄິ່ງຂອງໂຄງການ; ການສະຫລຸບລາຍງານຜົນການຈັດຕັ້ງປະຕິບັດເຄິ່ງໂຄງການ ແລະ ເວລາສິ້ນສຸດໂຄງການ.

ໃນວັນທີ 9 ມັງກອນ 2009, ອົງການຊ່ວຍເຫຼືອຈາກຕ່າງປະເທດ (ODA), ໜ່ວຍປະຕິບັດງານຂະແໜງການສຶກສາ (ESDG) ຮ່ວມກັບຜູ້ໃຫ້ທຶນໄດ້ມີການຈັດກອງປະຊຸມໂດຍການເປັນປະທານຮ່ວມຈາກຜູ້ຕາງໜ້າລັດຖະບານອົດສະຕຣາລີ ແລະ ອົງການອຸຍແນດສະໂກ (UNESCO). ນອກນັ້ນ, ຍັງໄດ້ຮັບເອົາອາສາສະໝັກນັກການ ທູດຊາວໜຸ່ມຈາກປະເທດອົດສະຕາລີຈໍານວນ 1 ທ່ານ ເພື່ອມາຊ່ວຍກ່ຽວກັບສະພາບການສຶກສາປະຈຸບັນ, ບັນຫາ, ຄວາມຕ້ອງການ ແລະ ການພັດທະນາຖານຂໍ້ມູນການຄຸ້ມຄອງໂຄງການ ຂອງ ODA, ການສ້າງປື້ມຄູ່ມື, ສ້າງຝຶກຄູ່ຝຶກ, ການຝຶກອົບຮົມການນໍາໃຊ້ ແລະ ອື່ນໆ.

**ຕີລາຄາລວມແຜນງານ 3:** *ໂດຍພື້ນຖານແມ່ນໄດ້ເອົາໃຈໃສ່ດ້ານວຽກງານການເມືອງ-ແນວຄິດ, ປັບປຸງແບບແຜນເຮັດວຽກ, ປັບປຸງກົງຈັກການຈັດຕັ້ງ ມີການຊັບຊ້ອນ ແລະ ແບ່ງງານພະນັກງານໃຫ້ແທດເໝາະກັບບົດບາດ ແລະ ໜ້າທີ່ຂອງວຽກງານເພື່ອປະຕິບັດແຜນງານການປະຕິຮູບລະບົບການສຶກສາແຫ່ງຊາດ. ເຖິງຢ່າງໃດກໍຕາມຍັງມີບາງບັນຫາທີ່ຕ້ອງໄດ້ເອົາໃຈໃສ່ປັບປຸງເປັນ ຕົ້ນແມ່ນແບບແຜນວິທີເຮັດວຽກງານຂອງຜູ້ບໍລິຫານຢູ່ບາງບ່ອນ ແລະ ບາງຂັ້ນຍັງບໍ່ທັນຄ່ອງແຄ້ວ, ການສຶກສາອົບຮົມວຽກງານການເມືອງ-ແນວຄິດຍັງບໍ່ປົກກະຕິ ແລະ ບໍ່ທັນເລິກເຊິ່ງ ຈຶ່ງເຮັດໃຫ້ພະນັກງານຄູອາຈານຈໍານວນໜຶ່ງບໍ່ເອົາໃຈໃສ່ຕໍ່ໜ້າທີ່ວຽກງານການສິດສອນຂອງຕົນ, ນັກຮຽນ-ນັກສຶກສາຈໍານວນໜຶ່ງ ຍັງບໍ່ເອົາໃຈໃສ່ຕໍ່ການຄົ້ນຄ້ວາຮໍ່າຮຽນ ແລະ ມີການປະລະການຮຽນ.*

# IV. ສັງເກດຕີລາຄາລວມ ແລະ ຖອດຖອນບົດຮຽນ

## 4.1. ຈຸດດີ

1. ພັກ ແລະ ລັດຖະບານໄດ້ມີແນວທາງ-ນະໂຍບາຍປ່ຽນແປງໃໝ່ເປັນຕົ້ນນະໂຍບາຍປ່ຽນແປງໃໝ່ດ້ານການສຶກສາ ໂດຍສະເພາະມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ.
2. ຖັນແຖວພະນັກງານ ຄູ-ອາຈານຂະແໜງການສຶກສາ ແລະ ນັກຮຽນ-ນັກສຶກສາມີຄວາມຕັ້ງໃຈພະຍາຍາມສິດສອນ-ຮໍ່າຮຽນ, ມີຈິດໃຈຮັກຊາດ, ຮັກອາຊີບ, ມີຄວາມເສຍສະຫຼະສູ້ຊົນຜ່ານຜ່າຄວາມຫຍຸ້ງຍາກ ເພື່ອພາລະກິດຂອງການສຶກສາ.

3. ຄະນະພັກ, ອຳນາດການປົກຄອງແຕ່ລະຂັ້ນ, ຊຸມຊົນ, ປະຊາຊົນບັນດາເຜົ່າ ແລະ ອົງການຈັດຕັ້ງທຸກຂັ້ນໃນສັງຄົມໄດ້ເຫັນບົດບາດ ແລະ ຄວາມສຳຄັນຂອງການສຶກສາຫຼາຍຂຶ້ນ ພ້ອມກັນປະຕິບັດມະຕິຄຳສັ່ງ, ແນວທາງນະໂຍບາຍຂອງພັກ-ລັດກ່ຽວກັບການສຶກສາ, ປະກອບສ່ວນທາງດ້ານວັດຖຸທຶນຮອນ ແລະ ແຮງງານຂອງຕົນ ເພື່ອພັດທະນາການສຶກສາ.
4. ເສດຖະກິດແຫ່ງຊາດມີການພັດທະນາ, ລະບົບການເມືອງມີຄວາມສະຫງົບ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່ານັບມື້ນັບດີຂຶ້ນ. ງົບປະມານຂອງລັດໃສ່ການສຶກສາໄດ້ 11.54 % ຂອງງົບປະມານລັດ ໃນປີ 2008-2009.

## 4.2. ຈຸດອ່ອນ ແລະ ຂໍ້ຄົງຄ້າງ

1). ຜູ້ບໍລິຫານແຕ່ລະຂັ້ນຍັງບໍ່ທັນສຸມສະຕິປັນຍາເພື່ອສຶກສາອົບຮົມແນວຄິດໃຫ້ຄູອາຈານກໍຄືນັກຮຽນ-ນັກສຶກສາເທົ່າທີ່ຄວນ ຈຶ່ງເຮັດໃຫ້ມີນັກຮຽນ-ນັກສຶກສາຈຳນວນໜຶ່ງບໍ່ເອົາໃຈໃສ່ຕໍ່ການຮຽນ, ຂາດຄຸນສົມບັດ, ປະພຶດຕົນບໍ່ຖືກຕ້ອງ, ບໍ່ຟັງຄວາມພໍ່ແມ່ ແລະ ການຈັດຕັ້ງ, ດຳລົງຊີວິດຕາມຄວາມນິຍົມ.
2). ການປະຕິບັດນະໂຍບາຍເພື່ອປັບປຸງລະບົບຄຸ້ມຄອງການສ້າງຄູທີ່ມີແລ້ວນັ້ນ ຍັງຊັກຊ້າ, ການບຳລຸງ-ຍົກລະດັບຄູສອນປະຈຳການ ເປັນຕົ້ນຄູທີ່ສອນຢູ່ເຂດຊົນນະບົດເຂດຊົນເຜົ່າຫ່າງໄກສອກຫຼີກ, ການເລືອກນັກຮຽນທີ່ຮຽນເກັ່ງໄປຮຽນຄູ ແລະ ລະບົບຮັບປະກັນຄຸນນະພາບການສ້າງຄູບໍ່ທັນປະຕິບັດໄດ້ດີເທົ່າທີ່ຄວນ; ຄູສອນຊັ້ນມັດທະຍົມຕອນປາຍບໍ່ພຽງພໍ ແລະ ຄູຈຳນວນໜຶ່ງບໍ່ເອົາໃຈໃສ່ຕໍ່ໜ້າທີ່ວຽກງານການສິດສອນ ແລະ ບໍ່ເປັນແບບຢ່າງທີ່ດີໃຫ້ແກ່ນັກຮຽນ.
3). ຄຸນນະພາບການສຶກສາຍັງຕ່ຳ, ການຂະຫຍາຍຫ້ອງອະນຸບານມີພຽງແຕ່ຢູ່ເມືອງບໍ່ທຸກທີ່ຢູ່ໃນຕົວເມືອງໃຫຍ່ເທົ່ານັ້ນ ແລະ ຫ້ອງຮຽນອະນຸບານສ່ວນຫຼາຍຂາດມາດຕະຖານ, ຂາດເຄື່ອງຫຼິ້ນ, ຂາດອຸປະກອນການຮຽນ-ການສອນ, ຂາດຄູນິເທດຂັ້ນສູນກາງ-ແຂວງ-ເມືອງໃນການຕິດຕາມກວດກາຊັ້ນອະນຸບານ. ອັດຕາການຄ້າງຫ້ອງລວມ 15.9% ໃນນັ້ນ ຊັ້ນປ.1 ສູງເຖິງ 30.9%. ອັດຕາຄ້າງຫ້ອງ ແລະ ປະລະຊັ້ນມັດທະຍົມຕົ້ນຫຼຸດລົງພຽງເລັກນ້ອຍແຕ່ອັດຕາປະລະຊັ້ນມັດທະຍົມປາຍມີທ່າອ່ຽງເພີ່ມຂຶ້ນ. ບົດຮຽນ ແລະ ປະສົບການສ້າງໂຮງ ຮຽນຕົວແບບ ແລະ ໂຮງຮຽນຄຸນນະພາບບໍ່ທັນມີຫຼາຍ ແລະ ບໍ່ທັນມີມາດຖານທີ່ເປັນເອກະພາບ.
4) ການພັດທະນາການສຶກສາທັງພາກລັດ ແລະ ເອກະຊົນດ້ານປະລິມານ ແລະ ຄຸນນະພາບບໍ່ທັນໄປຄຽງຄູ່ກັນ, ບໍ່ທັນຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມນັກຮຽນ-ນັກສຶກສາ, ຮຽນຕາມຄວາມມັກຂອງຜູ້ປົກຄອງ.
5). ການລົບລ້າງຄວາມບໍ່ຮູ້ໜັງສືໃຫ້ປະຊາຊົນບັນດາເຜົ່າຕາມກຸ່ມເປົ້າໝາຍມີລັກສະນະລົບລ້າງຕາມຂະບວນການດ້ານຄຸນນະພາບບໍ່ທັນສູງ ຍ້ອນວ່າສື່ການຮຽນ-ການສອນບໍ່ພຽງພໍ ແລະ ການຮຽນບໍ່ໄດ້ຕິດພັນກັບອາຊີບຜູ້ຮຽນເປັນຢູ່. ໃນປີ 2009, ປະຊາກອນໃນເກນອາຍຸ 15 ປີຂຶ້ນໄປບໍ່ຮູ້ໜັງສືຍັງມີ 13.24%.
6). ພື້ນຖານວັດຖຸໂຄງລ່າງຂອງການສຶກສານັບທັງພາກລັດ ແລະ ເອກະຊົນ ບໍ່ພຽງພໍກັບຄວາມຕ້ອງການອັນຈຳເປັນຂອງແຕ່ລະຊັ້ນຮຽນ ເປັນຕົ້ນແມ່ນອາຄານໂຮງຮຽນ, ຫ້ອງຮຽນ, ຫ້ອງສະໝຸດ, ຫ້ອງທົດລອງ ແລະ ອຸປະກອນຮັບໃຊ້ການຮຽນ- ການສອນ ຂາດເຂີນຫຼາຍ.

7). ການກໍ່ສ້າງຖັນແຖວພະນັກງານ, ກຳມະກອນ, ນາຍຊ່າງບໍ່ທັນຕິດພັນກັບຄວາມຕ້ອງການຂອງສັງຄົມ ແລະ ບໍ່ທັນກວມເອົາໝົດທຸກຂະແໜງການ, ຈຳນວນນັກຮຽນ-ນັກສຶກສາລະດັບຊັ້ນຕົ້ນ, ຊັ້ນກາງ, ຊັ້ນສູງ ແລະ ປະລິນຍາຕີບໍ່ສົມດູນກັນ, ຜູ້ຮຽນສ່ວນຫຼາຍນັກຮຽນແຕ່ລະດັບຊັ້ນສູງຂຶ້ນເມືອ. ບາງຂະແໜງວິຊາຮຽນທີ່ຕ້ອງການພັດທະນາປະເທດຊາດພັດບໍ່ມີຜູ້ໄປຮຽນ ໂດຍສະເພາະແມ່ນວິຊາຊ່າງໄມ້, ຊ່າງກໍ່, ປຸງແຕ່ງອາຫານ ແລະ ອື່ນໆ.

8). ຢູ່ໃນຂະແໜງການສຶກສາຍັງມີປະກົດການຫຍໍ້ທໍ້ເກີດຂຶ້ນ ເປັນຕົ້ນແມ່ນບັນຫາຢາເສບຕິດມີທ່າອ່ຽງແຜ່ລາມຢູ່ໃນໂຮງຮຽນ, ບັນຫາການປອມແປງເອກະສານຢັ້ງຢືນການສຶກສາ, ລູກຫຼານຂອງຄອບຄົວຜູ້ທຸກຍາກຂາດເຂີນບໍ່ມີໂອກາດໄດ້ເຂົ້າຮຽນໃນລະດັບຊັ້ນສູງ ຫຼື ມະຫາວິທະຍາໄລແລະ ອື່ນໆ.

9). ການຄຸ້ມຄອງການສຶກສາພາກເອກະຊົນບໍ່ທັນຮັດກຸມ, ການຈັດຕັ້ງປະຕິບັດບາງນິຕິກຳຂອງຂະແໜງການສຶກສາຊັກຊ້າ ແລະ ບໍ່ທັນເຂັ້ມງວດ.

### 4.3. ສາເຫດທີ່ພາໃຫ້ມີຈຸດອ່ອນ.

(1) ການປະຕິບັດນະໂຍບາຍ, ການຍ້ອງຍໍຕໍ່ພະນັກງານຄູອາຈານຜູ້ທີ່ດຸໝັ່ນ ຂະຫຍັນພຽນ ຍັງເຮັດບໍ່ທັນໄດ້ດີ ແລະ ຍັງຊັກຊ້າ, ເງິນເດືອນຂອງຄູຕໍ່າ ຖ້າທຽບໃສ່ເງິນເດືອນຂອງພະນັກງານໃນຂົງເຂດເສດຖະກິດ ແລະ ວິສາຫະກິດຂອງລັດ ຈຶ່ງເຮັດໃຫ້ພະນັກງານ, ຄູ-ອາຈານ ຈຳນວນໜຶ່ງເກີດມີແນວຄິດປຽບທຽບຊັ່ງຊາ, ຂາດກຳລັງໃຈ ແລະ ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ວຽກງານ ແລະ ການສິດສອນ.

(2) ການສຶກສາອົບຮົມການເມືອງແນວຄິດໃຫ້ນັກຮຽນ-ນັກສຶກສາບໍ່ທັນເຮັດໄດ້ດີ, ບໍ່ທັນມີຫຼາຍວິທີການ, ເນື້ອໃນການສຶກສາອົບຮົມການເມືອງແນວຄິດບໍ່ເລິກເຊິ່ງ, ການປະສານສົມທົບລະຫວ່າງໂຮງຮຽນ, ຄອບຄົວ ແລະ ສັງຄົມໃນການສຶກສາອົບຮົມທາງດ້ານການເມືອງແນວຄິດຄຸນສົມບັດໃຫ້ນັກຮຽນ-ນັກສຶກສາບໍ່ທັນໜັກແໜ້ນ.

(3) ກົນໄກຄຸ້ມຄອງຂະແໜງການສຶກສາບໍ່ທັນເໝາະສົມ, ບົດບາດການຄຸ້ມຄອງຂອງລັດຕໍ່ການສຶກສາບໍ່ທັນກ້ວາງຂວາງ, ບໍ່ຮັດກຸມ ແລະ ບໍ່ທັນເຂັ້ມງວດບໍ່ໄດ້ສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນເຂົ້າໃນການຄຸ້ມຄອງການສຶກສາ.

(4) ເນື້ອໃນຫຼັກສູດ, ເນື້ອໃນປຶ້ມແບບຮຽນບໍ່ຄົບຖ້ວນ, ບາງເນື້ອໃນບໍ່ສອດຄ່ອງ, ເນື້ອໃນຮຽນບໍ່ທັນຕິດພັນກັບການດຳລົງຊີວິດ, ບໍ່ຕິດພັນ ກັບການອອກແຮງງານຜະລິດ ແລະ ບໍ່ຕິດພັນກັບສະຖານປະກອບການ, ແລະ

(5) ເຖິງວ່າລັດຖະບານໄດ້ເພີ່ມການລົງທຶນໃສ່ການສຶກສາແຕ່ລະປີຫຼາຍຂຶ້ນແຕ່ຖ້າທຽບບັນດາປະເທດອ້ອມຂ້າງເຫັນວ່າ ຍັງຕ່ຳຢູ່ ບໍ່ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງການສຶກສາ.

### 4.4. ຖອດຖອນບົດຮຽນ.

1). ບັນຫາການເມືອງ-ແນວຄິດ ແມ່ນບັນຫາຕົ້ນຕໍທີ່ເຮັດໃຫ້ຄົນມີຄວາມຮັບຜິດຊອບຕໍ່ໜ້າທີ່ ແລະ ກ້າວໄປເຖິງມີຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານ. ດັ່ງນັ້ນ, ການສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ, ຄູອາຈານ ແລະ ນັກຮຽນ-ນັກສຶກສາໃຫ້ເປັນລະບົບຕໍ່ເນື່ອງ ແລະ ສຶກສາອົບຮົມດ້ວຍຫຼາຍວິທີການ, ຫຼາຍຮູບແບບມີຄວາມຈຳເປັນທີ່ສຸດ ແລະ ຕ້ອງເອົາໃຈໃສ່ ເປັນຕົ້ນແມ່ນການສຶກສາອົບຮົມແນວຄິດຕ້ອງຕິດພັນກັບການປະຕິບັດນະໂຍບາຍ ແລະ ຕິດພັນກັບລະບຽບກົດໝາຍຂອງລັດ.

2). ຢູ່ທ້ອງຖິ່ນໃດຄະນະພັກ, ອຳນາດການປົກຄອງເອົາໃຈໃສ່ຕໍ່ການສຶກສາ ການສຶກສາຢູ່ທ້ອງຖິ່ນນັ້ນມີການຂະຫຍາຍ ຕົວໄວ ແລະ ມີຄຸນນະພາບດີຂຶ້ນກວ່າ. ດັ່ງນັ້ນ, ມັນຮຽກຮ້ອງໃຫ້ຄະນະພັກ ແລະ ອຳນາດການປົກຄອງທຸກຂັ້ນຕ້ອງເພີ່ມທະວີຄວາມຮັບຜິດຊອບຂອງຕົນຕໍ່ການສຶກສາໃຫ້ຫລາຍເທົ່າທີ່ຈະຫລາຍໄດ້.

3). ແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດຕໍ່ການສຶກສາຖືກຕ້ອງແລ້ວ ແຕ່ພາກປະຕິບັດ ແລະພຶດຕິກຳຕົວຈິງຂອງສັງຄົມ ຍັງມີຫຼາຍດ້ານບໍ່ໄປຕາມແນວທາງນະໂຍບາຍ ແລະ ລະບຽບກົດໝາຍດັ່ງກ່າວ, ດັ່ງນັ້ນ ມີຄວາມຈຳເປັນຕ້ອງໄດ້ເພີ່ມທະວີການນຳພາຂອງພັກ ແລະ ຄວາມເປັນເຈົ້າການໃນການປະຕິບັດລະບຽບກົດໝາຍຂອງລັດຕໍ່ການສຶກສາໃຫ້ມີຜົນສັກສິດ.

4). ການພັດທະນາຄົນໄດ້ມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມຂອງຊາດ, ດັ່ງນັ້ນ ທົ່ວສັງຄົມຕ້ອງໄດ້ປຸ່ງນທັດສະນະ, ເປັນເອກະພາບ ແລະ ຮັບຮູ້ຄຸນຄ່າຂອງການສຶກສາ ແລະ ຄຸນຄ່າຂອງຄົນໃຫ້ຖືກຕ້ອງຕາມແນວທາງນະໂຍບາຍ ການປ່ຽນແປງໃໝ່ຂອງພັກ.

# ພາກທີ ສອງ
# ແຜນພັດທະນາການສຶກສາສົກຮຽນ 2009 - 2010

ແຜນພັດທະນາການສຶກສາສົກຮຽນ 2009-2010 ແມ່ນປີສຸດທ້າຍຂອງການຜັນຂະຫຍາຍແຜນພັດທະນາການ ສຶກສາ 5 ປີ ຄັ້ງທີ VI (2006-2010) ພ້ອມທັງເປັນການຈັດຕັ້ງປະຕິບັດແຜນປະຕິບັດງານ ການ ສຶກສາເພື່ອທຸກຄົນ(EFA), ແຜນຍຸດທະສາດການເຕີບໂຕເພື່ອລຶບລ້າງຄວາມທຸກຍາກແຫ່ງຊາດ(NGPES) ເປັນປີ ປະຕິບັດບາດກ້າວທີ 2 ຂອງແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ, ທັງເປັນປີ ເລີ່ມຕົ້ນຂອງການຈັດຕັ້ງ ຜັນຂະຫຍາຍ ຂອບພັດທະນາທົ່ວຂະແໜງການສຶກສາໃຫ້ເປັນລະບົບຄົບຊຸດ.

## ກ. <u>ທິດທາງ ໜ້າທີ່ ແລະ ຄາດໝາຍລວມຂອງສົກຮຽນ 2009-2010</u>

### ກ.1. <u>ທິດທາງ ໜ້າທີ່ລວມ</u> :

1. ສືບຕໍ່ພັດທະນາການສຶກສາຕາມ 4 ໂຄງການບູລິມະສິດຂອງລັດຖະບານ ເພື່ອຮັບປະກັນໃຫ້ແຜນປະຕິບັດ ງານການສຶກສາເພື່ອທຸກຄົນ ໄດ້ຮັບການຈັດຕັ້ງ ປະຕິບັດຢ່າງເປັນຮູບປະທຳ, ໃນນັ້ນ ຕ້ອງໄດ້ເຮັດໃຫ້ການສຶກສາຊັ້ນປະຖົມພາກບັງຄັບ ສຳເລັດຜົນຕາມຄາດໝາຍ.
2. ສືບຕໍ່ປະຕິບັດບາດກ້າວທີ 2 ຂອງແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດໄປສູ່ຄຸນ ນະພາບໃໝ່ ໃນການກໍ່ສ້າງຄົນລາວ ໃຫ້ເປັນພົນລະ ເມືອງດີ, ໄດ້ຮັບການສຶກສາ, ມີຄວາມຮູ້, ມີວິຊາຊີບ, ມີຈັນຍາບັນ, ມີຄຸນສົມບັດ, ມີຄວາມສາມາດປະດິດສ້າງ ແລະ ມີຄວາມກະຕືລືລົ້ນ ຕໍ່ການພັດທະນາ ຕົນເອງ ເພື່ອຕອບ ສະໜອງຄວາມຮຽກຮ້ອງ ຕ້ອງການຂອງການພັດທະນາປະເທດ.
3. ຈັດຕັ້ງ ປະຕິບັດຂອບພັດທະນາຂະແໜງການສຶກສາໃຫ້ກາຍເປັນແຜນປະຕິບັດງານຕົວຈິງທັງສູນກາງ ແລະ ທ້ອງຖິ່ນ ເປັນວຽກຈຸດສຸມໃຈກາງຂອງການພັດທະນາຊັບພະຍາກອນມະນຸດ, ບົນຈິດໃຈຂອງແຜນຍຸດທະສາດການເຕີບໂຕເພື່ອລຶບລ້າງຄວາມທຸກຍາກແຫ່ງຊາດ ແລະ ຕອບສະໜອງໄດ້ຕາມຄວາມຕ້ອງການ ໃນການເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ ຢ່າງມີປະສິດທິພາບ.
4. ພັດທະນາການສຶກສາຕ້ອງດຳເນີນໄປຢ່າງເປັນລະບົບຄົບຊຸດ ,ຮັບປະກັນຄຸນະພາບທັງ 5 ດ້ານໄປພ້ອມກັນ: ຄຸນສົມບັດສຶກສາ, ປັນຍາສຶກສາ, ແຮງງານສຶກສາ, ພະລະສຶກສາ ແລະ ສິລະປະສຶກສາ ຄຽງຄູ່ກັບການສະກັດກັ້ນ ແລະ ແກ້ໄຂການເຊື້ອ ຖືງົມງວາຍ, ຫຼີກເວັ້ນຈາກສິ່ງເສບຕິດ ແລະ ສິ່ງ ຫຍໍ້ທໍ້ໃນສັງຄົມຕ່າງ ໆ.
5. ປະຕິຮູບ ວິທີການສອນ-ການຮຽນ ແລະ ປະເມີນຜົນການຮຽນ ( ການເລື່ອນຂັ້ນ ເລື່ອນຊັ້ນ ) ຊັ້ນປະຖົມສຶກສາ ແລະ ສົ່ງເສີມຄວາມ ຕ້ອງການເຂົ້າຮຽນ ຂອງເດັກຍິງ, ຊົນເຜົ່າ, ເດັກພິການ ແລະ ເດັກໃນຄອບຄົວ ທຸກຍາກ.
6. ສືບຕໍ່ປັບປຸງ ແລະ ຂະຫຍາຍອາຊີວະສຶກສາ ພ້ອມທັງເອົາໃຈໃສ່ຝຶກອົບຮົມ ຍົກລະດັບສີມືໃຫ້ກຳມະກອນ ແລະ ຍົກລະດັບວິຊາການໃຫ້ນັກບໍລິຫານ, ນາຍຊ່າງຊຳນານງານ ແລະ ນັກຄຸ້ມຄອງຫຼາຍຂຶ້ນ.

7. ພັດທະນາຄົນໃນເຂດຈຸດສຸມພັດທະນາທີ່ຍັງຫຍຸ້ງຍາກ ແລະ ທຸກຍາກເພື່ອໃຫ້ການຫລຸດໂຕນກັນລະ ຫວ່າງເຂດ ແລະ ລະຫວ່າງເພດລົງ; ຈັດຕັ້ງ ບຳລຸງ ຍົກລະດັບການສຶກສາຊັ້ນປະຖົມໃຫ້ແກ່ຜູ້ລົບລ້າງແລ້ວ ແລະ ຮຽນຕໍ່ ຊັ້ນມັດທະຍົມຕົ້ນ ສຳລັບປະຊາຊົນ ແລະ ຄະນະບ້ານ.
8. ປັບປຸງກົນໄກການບໍລິຫານ ແລະ ຄຸ້ມຄອງການສຶກສາທຸກຂັ້ນໃຫ້ມີຄວາມເຂັ້ມແຂງ ແນໃສ່ຮັບປະກັນການ ສະຫຼຸບລາຍງານ ການໃຊ້ຈ່າຍ ແລະ ການຈັດຕັ້ງປະຕິບັດແຜນການ, ແຜນງານ ແລະ ໂຄງການ ຕ່າງໆ ໃຫ້ມີຄວາມຄ່ອງຕົວປອດໄສ ແລະ ວ່ອງໄວດີຂຶ້ນ.
9. ສືບຕໍ່ແກ້ໄຂບັນຫາຂາດເຂີນຄູໂດຍສະເພາະແມ່ນດ້ານຈຳນວນເຮັດໃຫ້ຄູມີພຽງພໍກັບຄວາມຮຽກຮ້ອງ ຕ້ອງການ ອັນຈຳເປັນ ພ້ອມກັນນັ້ນກໍມີການກຳນົດເປົ້າໝາຍ, ເງື່ອນໄຂ ແລະ ມາດຕະຖານຕໍ່ຜູ້ທີ່ຈະມາ ຮຽນເປັນຄູ.
10. ສູ້ຊົນສະໜອງປື້ມແບບຮຽນ ແລະ ຄູ່ມືຄູ ສຳລັບສາຍສາມັນ ໃຫ້ໄດ້ຕາມຈຳນວນທີ່ຕ້ອງການອັນຈຳເປັນ.
11. ເພີ່ມການລົງທຶນຂອງລັດ ເຂົ້າໃນການສຶກສາ ໂດຍສະເພາະການສ້າງໂຄງລ່າງການສຶກສາ ຢູ່ເຂດຊົນນະບົດ ແລະ ເຂດຫ່າງໄກ ສອກຫລີກ; ພ້ອມທັງມີນະໂຍບາຍປຸກລະດົມໃຫ້ການສຶກສາເປັນຂອງທົ່ວສັງຄົມ ແນໃສ່ປັບປຸງ ຄຸນນະພາບຂອງການສຶກສາໃນທຸກຊັ້ນ ທຸກສາຍ ທັງໃນ ແລະ ນອກໂຮງຮຽນ ນັບທັງພາກລັດ ແລະ ເອກະຊົນໃຫ້ມີ ທ່າກ້າວສູງຂຶ້ນເປັນລຳດັບ.
12. ເຊື່ອມໂຍງຈຸດປະສົງ, ຕົວຊີ້ບອກ, ແຜນງານ ແລະ ງົບປະມານກ່ຽວກັບວຽກງານໂພສະນາການ ເຂົ້າໃນ ຍຸດທະ ສາດຂອງຂະແໜງການສຶກສາ.

## ກ.2. <u>ຄາດໝາຍລວມ</u> :

1. ສ້າງເງື່ອນໄຂ ໃຫ້ເດັກນ້ອຍ ໃນກຸ່ມອາຍຸ 3-5 ປີ ໃນຊັ້ນອະນຸບານສຶກສາ ໄດ້ເຂົ້າຮຽນ 22%
2. ປະຕິບັດການສຶກສາປະຖົມ ພາກບັງຄັບໃຫ້ປະກົດຜົນເປັນຈິງ ເພື່ອເຮັດໃຫ້ :
   - ອັດຕາເຂົ້າຮຽນສຸດທິ ຊັ້ນປະຖົມ ( 6-10 ປີ ) ເພີ່ມຂຶ້ນ 1.4%, ຄາດຄະເນໃຫ້ໄດ້ 93%.
   - ອັດຕາຄ້າງຫ້ອງລວມ ໃຫ້ຫຼຸດລົງ ຢ່າງນ້ອຍ 3%, ຄາດຄະເນໃຫ້ເຫຼືອ 13%. ສຳລັບຊັ້ນ ປ1 ຄາດຄະເນ ໃຫ້ເຫຼືອ 20%.
   - ອັດຕາປະລະການຮຽນລວມ ຫຼຸດລົງໃຫ້ເຫຼືອ 5%.
   - ອັດຕາລອດເຫຼືອ ຮອດ ປ5 ຄາດຄະເນໃຫ້ໄດ້ 78%.
   - ເປີເຊັນເສັງຈົບຊັ້ນປະຖົມສຶກສາ(ປ5), ຄາດຄະເນໄວ້ 98%.
3. ເພີ່ມອັດຕາເຂົ້າຮຽນລວມຂອງຊັ້ນມັດທະຍົມຕອນຕົ້ນໃຫ້ໄດ້ 64%; ອັດຕາສອບເສັງເລື່ອນຊັ້ນ ແລະ ຈົບຊັ້ນ ມ.4 ໃຫ້ໄດ້ 98 %, ອັດຕາເຂົ້າຮຽນລວມມັດທະຍົມຕອນປາຍ ໃຫ້ໄດ້ 38%.
4. ສືບຕໍ່ສ້າງໂຮງຮຽນຕົວແບບຂັ້ນເມືອງໃຫ້ມີໂຮງຮຽນອະນຸບານ 1 ແຫ່ງ ແລະ ປະຖົມ 1-2 ແຫ່ງ, ມັດທະຍົມຕົ້ນ 1 ແຫ່ງ ແລະ ມັດທະຍົມຕອນປາຍ 1 ແຫ່ງ, ໃຫ້ມີຫ້ອງທົດລອງຟີຊິກ-ຊີວະເຄມີ.

5. ດຳເນີນການລຶບລ້າງຄວາມບໍ່ຮູ້ໜັງສືໃຫ້ປະຊາຊົນໃນກຸ່ມເປົ້າໝາຍອາຍຸ 15-24 ປີ ໃຫ້ ໄດ້ 91 %, ອາຍຸ 15-40 ປີ ໃຫ້ໄດ້ 88 % ແລະ ກຸ່ມອາຍຸ 15 ປີ ຂຶ້ນໄປໃຫ້ໄດ້ 81%; ບຳລຸງຍົກລະດັບການສຶກສາຊັ້ນປະ ຖົມ ໃຫ້ຜູ້ທີ່ລຶບລ້າງຄວາມບໍ່ຮູ້ໜັງສືແລ້ວ ໄດ້ສືບຕໍ່ຮຽນຈົບປະຖົມ 60% ທັງຮັບປະກັນຄຸນນະພາບ.
6. ສ້າງໂອກາດເພື່ອໃຫ້ນັກຮຽນຄູ ໄດ້ເຂົ້າຮຽນຕາມເງື່ອນໄຂ, ມາດຕະຖານ ແລະ ແຜນຄາດຄະເນທີ່ ວາງໄວ້ໃນແຜນຍຸດທະສາດສ້າງຄູ ( 2006-2010 )
7. ສົ່ງເສີມການເຂົ້າຮຽນຊັ້ນສູງ ແລະ ມະຫາວິທະຍາໄລ ໃຫ້ບັນລຸ ຈຳນວນນັກສຶກສາຫລາຍກວ່າ 2,000 ຄົນ ຕໍ່ປະຊາກອນ 100,000 ຄົນ. ( 2,000 ຄົນ / 100,000 ຄົນ )
8. ສູ້ຊົນສະເໜີງົບປະມານຂອງສຶກສາໃຫ້ໄດ້ຢ່າງໜ້ອຍ 16% ຂອງລາຍຈ່າຍລັດຖະບານທັງໝົດ.
9. ໃນສົກຮຽນ 2009-10 ນີ້ ແຜນຮັບນັກຮຽນ ພະນັກງານເຂົ້າຮຽນສາຍອາຊີວະສຶກສາ ແລະ ການສຶກສາ ຊັ້ນສູງຈະສືບຕໍ່ເພີ່ມຕົວເລກເຂົ້າໃໝ່ ເປັນ 35.000 ຄົນ ໃນນັ້ນ ພາກພິເສດ(ຈ້າງຮຽນ) ໃຫ້ໄດ້ປະມານ 15.000 ຄົນ
10. ພັດທະນາລະບົບການປະກັນຄຸນນະພາບການສຶກສາໃຫ້ເປັນທີ່ຍອມຮັບຂອງສັງຄົມ ເປັນຕົ້ນແມ່ນ ສາຍສາມັນສຶກສາ , ອາຊີວະສຶກສາ ແລະການສຶກສາຊັ້ນສູງ.

# I <u>ແຜນງານຂະຫຍາຍໂອກາດການເຂົ້າຮຽນ</u> :

## 1.1 <u>ການສຶກສາກ່ອນໄວຮຽນ</u> :

### 1. <u>ວຽກງານລ້ຽງເດັກ ແລະ ອະນຸບານສຶກສາ</u> :

1. ຂະຫຍາຍ ການສຶກສາເດັກກ່ອນໄວຮຽນ ສຳລັບເດັກອາຍຸ 5 ປີ ດ້ວຍຮູບແບບການຮຽນ ໃນໂຮງຮຽນ ອະນຸບານ, ຫ້ອງກຽມປະຖົມ ແລະ ການຈັດກຸ່ມການຫຼິ້ນເພື່ອຮຽນຂອງຊຸມຊົນ ສຳລັບເດັກອາຍຸ 5 ປີ ເພື່ອກຽມຄວາມພ້ອມເຂົ້າຮຽນປະຖົມ ໂດຍສະເພາະ ໃນເມືອງທຸກ ເຂດຊົນນະບົດ, ຫ່າງໄກ, ສອກຫຼີກ.
2. ຈັດໃຫ້ມີຫຼັກສູດການກຽມເດັກເຂົ້າຮຽນໄລຍະສັ້ນ ໃນຍາມພັກສິ້ນປີຮຽນ ເພື່ອເພີ່ມອັດຕາເຂົ້າໃໝ່ສຸດທິຊັ້ນ ປ.1 ຂອງເດັກອາຍຸ 6 ປີ ພ້ອມ
3. ຂະຫຍາຍໂອກາດໃຫ້ແກ່ ເດັກອາຍຸ 3-5 ປີ ໄດ້ເຂົ້າມາກຽມຄວາມພ້ອມທາງດ້ານ ການຮຽນໃນໂຮງຮຽນອະນຸບານໃຫ້ສູງຂຶ້ນກວ່າເກົ່າ.
4. ສືບຕໍ່ປະຕິບັດໂຄງການສົ່ງເສີມສຸຂະພາບເດັກໃນໂຮງຮຽນອະນຸບານໃຫ້ສຳເລັດພາຍໃນນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃກ້ຄຽງ.
5. ຈັດທັດສະນະສຶກສາກ່ຽວກັບການຈັດຕັ້ງຫ້ອງກຽມປະຖົມໃຫ້ແກ່ຄູສອນຫ້ອງກຽມ ແລະ ວິຊາການຂັ້ນ ເມືອງ ແລະ ຂັ້ນແຂວງ.

## 1.2. ວຽກງານສາມັນສຶກສາ:

### 1.2.1 . ວຽກງານປະຖົມສຶກສາ :

1. ຂະຫຍາຍກຸ່ມໂຮງຮຽນ, ຫັນໂຮງຮຽນປະຖົມບໍ່ສົມບູນໃຫ້ເປັນໂຮງຮຽນປະຖົມສົມບູນ ສ້າງທຸກເງື່ອນໄຂ ເພື່ອເພີ່ມອັດຕາເຂົ້າຮຽນ ໃໝ່ສຸດທິ ໃຫ້ໄດ້ຕາມຄາດໝາຍທີ່ວາງໄວ້..
2. ສືບຕໍ່ ປັບປຸງ ແລະ ຂະຫຍາຍຕາໜ່າງໂຮງຮຽນປະຖົມສຶກສາໄປສູ່ເຂດຊົນນະບົດຫ່າງໄກສອກຫຼີກດ້ວຍ ການສ້າງໂຮງຮຽນປະຖົມຂະໜາດນ້ອຍ ໂດຍນໍາໃຊ້ວິທີການສອນຫ້ອງຄວບ ແຕ່ໃຫ້ມີຄົບ 5 ຊັ້ນຮຽນ (ປ1-ປ5).
3. ສືບຕໍ່ຂະຫຍາຍໂຮງຮຽນເພື່ອນເດັກຢູ່ແຂວງ ແລະ ເມືອງເປົ້າໝາຍຂອງໂຄງການໃຫ້ໄດ້ 400 ຫຼັງ ໃນນີ້ໂຮງຮຽນມູນລະປະຖົມໃຫ້ໄດ້ 240 ຫລັງ ແລະ ສ້ອມແປງໂຮງຮຽນຈໍານວນໜຶ່ງ.
4. ສືບຕໍ່ໃຫ້ທຶນການສຶກສາ ສໍາລັບເດັກດ້ອຍໂອກາດ ໃນຊັ້ນປະຖົມສຶກສາ ( ປ3 - ປ5 ) ທີ່ແຂວງຄໍາມ່ວນ, ສະຫວັນນະເຂດ, ສາລະວັນ ແລະ ເຊກອງ.
5. ຂະຫຍາຍການທົດລອງເລື່ອນຊັ້ນ ແບບຕໍ່ເນື່ອງຂອງຊັ້ນປະຖົມສຶກສາ ( ປ1-ປ2, ປ2-ປ3 , ປ3-ປ4 ແລະ ປ4-ປ5) ຢູ່ນະຄອນຫຼວງວຽງຈັນ ແລະ ແຂວງທີ່ມີເງື່ອນໄຂ ( ຊຽງຂວາງ, ໄຊຍະບູລີ, ຫລວງພະບາງ, ວຽງຈັນ, ບໍລິຄໍາໄຊ, ສະຫວັນນະເຂດ, ຈໍາປາສັກ ).
6. ສືບຕໍ່ປັບປຸງໂຮງຮຽນປະຖົມສຶກສາຕົວແບບເມືອງລະ 1-2 ໂຮງຮຽນໃຫ້ກາຍເປັນໂຮງຮຽນຕົວແບບ ຂອງເມືອງສາມາດນໍາເອົາບົດຮຽນໄປເຜີຍແຜ່ໄດ້.
7. ຂຶ້ນແຜນປຸກສ້າງໂຮງຮຽນປະຖົມ ຢູ່ 3 ແຂວງພາກໃຕ້ ໃນໂຄງການພັດທະນາການສຶກສາຂັ້ນພື້ນຖານ ໃນເຂດ 3 ຫລ່ຽມພັດທະນາ ລາວ-ຫວຽດນາມ-ກໍາປູເຈຍ.
8. ສືບຕໍ່ປະຕິບັດໂຄງການອາຫານເສີມໃນ 29 ເມືອງຂອງ 3 ແຂວງພາກເໜືອ (ຜົ້ງສາລີ, ອຸດົມໄຊ, ຫຼວງນໍ້າທາ) ແລະ 3 ແຂວງພາກໃຕ້ ( ສາລະວັນ, ເຊກອງ ແລະ ອັດຕະປື ) .
9. ຊຸກຍູ້ໃຫ້ອໍານາດການປົກຄອງ, ຄະນະພັດທະນາການສຶກສາຂັ້ນບ້ານ, ສະມາຄົມພໍ່ແມ່ນັກຮຽນ ແລະ ຊຸມຊົນມີສ່ວນຮ່ວມ ແລະ ເປັນເຈົ້າການໃນການສົ່ງລູກຫຼານເຂົ້າຮຽນ,ໃນການກໍ່ສ້າງ, ການສ້ອມແປງ ໂຮງຮຽນ ແລະ ການຈັດຫາອຸປະກອນການຮຽນ ໃນທ້ອງຖິ່ນຂອງເຂົາເຈົ້າເອງ .
10. ປັບປຸງ ແລະ ຂະຫຍາຍໂຄງການສ້າງໂຮງຮຽນຄຸນນະພາບ ຊັ້ນປະຖົມຢູ່ 9 ເມືອງເປົ້າໝາຍຂອງ 3 ແຂວງ ( ບໍລິຄໍາໄຊ, ຫຼວງພະບາງ ແລະ ໄຊຍະບູລີ )
11. ດໍາເນີນການທົດສອບຄວາມຮູ້ຜູ້ຮຽນ (ປ.3-ປ.5) ຕາມຂອບພັດທະນາຂະແໜງການສຶກສາ (ESDF) ແລະ ດໍາເນີນການປະກັນຄຸນະພາບການ ສຶກສາຢູ່ໂຮງຮຽນປະຖົມບ່ອນທີ່ມີເງື່ອນໄຂ.

### 1.2.2. ວຽກງານມັດທະຍົມສຶກສາ :

1. ຈັດຕັ້ງປະຕິບັດການປະຕິຮູບສາຍສາມັນສຶກສາຈາກ 11 ປີ ເປັນ 12 ປີ ຂອງກະຊວງສຶກສາທິການ ຕາມແຈ້ງການ ສະບັບເລກທີ 224/ສສ.ຈຕ.09 ລົງວັນທີ 13 ມີນາ 2009.

2. ສືບຕໍ່ ຊີ້ນຳການປຸກສ້າງໂຮງຮຽນໃຫ້ 20 ເມືອງໃນ 6 ແຂວງເປົ້າໝາຍຂອງໂຄງການພັດທະນາການສຶກສາຂັ້ນພື້ນຖານ ( BESDP ).
3. ຈັດຊື້ສັງກະສີໃຫ້ທ້ອງຖິ່ນເພື່ອສົມທົບປະຊາຊົນປຸກສ້າງ ສ້ອມແປງຫ້ອງຮຽນ ມ4 ໃຫ້ມັດທະຍົມຕອນຕົ້ນ ຈຳນວນ 73.440 ແຜ່ນ, ຈັດພິມປື້ມຄູມືຄູ ແລະ ປື້ມແບບຮຽນ ມ4 ແລະ ຈັດຊຸດອົບຮົມຄູ ມ4 ໃຫ້ຄູທີ່ຍັງບໍ່ໄດ້ມາດຖານ ຈຳນວນ 2.963 ຄົນ ໃຫ້ທັນກັບການເປີດສົກຮຽນໃໝ່ 2009-2010.
4. ສືບຕໍ່ທົດລອງການເລື່ອນຊັ້ນ ນັກຮຽນຈາກ ປ5 ຂຶ້ນ ມ1 ຢູ່ໃນແຂວງຫລວງນ້ຳທາ, ຜົ້ງສາລີ ແລະ ແຂວງທີ່ມີເງື່ອນໄຂ.
5. ສືບຕໍ່ການປຸກສ້າງໂຮງຮຽນ, ສ້າງຫ້ອງສະໝຸດ, ໃຫ້ທຶນການສຶກສາ. ສ້າງຫ້ອງຮຽນພາສາຕ່າງປະເທດ ແລະ ປະກອບຄອມພິວເຕີ ໃຫ້ໂຮງຮຽນມັດທະຍົມໃນແຂວງເປົ້າໝາຍ.
6. ສືບຕໍ່ຂະຫຍາຍໂຮງຮຽນມັດທະຍົມຕອນຕົ້ນຕົວແບບຢູ່ຂັ້ນເມືອງ, ມັດທະຍົມຕອນປາຍ ແລະ ມັດທະຍົມສົມບູນ ຕົວແບບຢູ່ຂັ້ນແຂວງໃຫ້ໄດ້ຕາມຄາດໝາຍ.
7. ສືບຕໍ່ຝຶກອົບຮົມນຳໃຊ້ ICT ເຂົ້າໃນການຮຽນ ການສອນຊັ້ນ ມັດທະຍົມຕອນຕົ້ນ, ມັດທະຍົມຕອນປາຍ ແລະ ມັດທະຍົມສົມບູນ.
8. ໂຮງຮຽນຕົວແບບທີ່ຄົບຊຸດ 4 ແຫ່ງ ຢູ່ແຂວງຈຳປາສັກ (ຈະເລີ່ມສອນໃນສົກຮຽນ 2010-2011) ເຊິ່ງປະກອບດ້ວຍຫ້ອງຮຽນ, ຫ້ອງທົດລອງ, ຫໍສະມຸດ, ຫ້ອງຄອມພິວເຕີ, ສະໂມສອນ, ຫ້ອງພັກຄູ, ຫ້ອງນ້ຳສຳລັບ ຄູ-ນັກຮຽນ, ສິ່ງແວດລ້ອມສະອາດ.
9. ດຳເນີນການທົດສອບຄວາມຮູ້ຜູ້ຮຽນ(ມ.1-ມ.4) ແລະ ຈັດຕັ້ງສອບເສັງ ຈົບຊັ້ນ ມ.4 ເອກະພາບໃນທົ່ວປະເທດໃນເດືອນ 5 ປີ 2010 ຕາມຂອບພັດທະນາຂະແໜງການສຶກສາ ( ESDF )

**1.2.3. <u>ວຽກງານສົ່ງເສີມການສຶກສາ ແມ່ຍິງ, ຊົນເຜົ່າ ແລະ ເດັກພິການ</u> :**

1. ຕິດຕາມໂຮງຮຽນສາມັນກິນນອນຊົນເຜົ່າ 14 ແຫ່ງ ທົ່ວປະເທດ.
2. ຄະນະສົ່ງເສີມຄວາມກ້າວໜ້າແມ່ຍິງ ລົງຢ້ຽມຢາມໂຮງຮຽນ ແລະ ຊຸມຊົນ ເຂດຫ່າງໄກສອກຫລີກ.
3. ຕິດຕາມ ແລະ ຊຸກຍູ້ການປະຕິບັດໂຄງການອາຫານເສີມ 6 ແຂວງເປົ້າໝາຍ.
4. ສືບຕໍ່ຮ່າງ ແລະ ພັດທະນານະໂຍບາຍ ແລະ ຍຸດທະສາດການສຶກສາຮຽນຮ່ວມ (ຊົນເຜົ່າ, ຜູ້ພິການ, ການສຶກສາແມ່ຍິງ-ເດັກຍິງ, ບົດບາດ ຍິງ-ຊາຍ, HIV . . . )
5. ຈັດກອງປະຊຸມເຝິກອົບຮົມແນວຄວາມຄິດການສຶກສາຮຽນຮ່ວມໃຫ້ສະຖາບັນສ້າງຄູ: ວິທະຍາໄລຄູບ້ານ ເກີນ ແລະ ວິທະຍາໄລຄູສະຫວັນນະເຂດ.
6. ສືບຕໍ່ຮ່ວມມືກັບກະຊວງສຶກສາ ແລະ ກໍ່ສ້າງ ແຫ່ງ ສ ສ. ຫວຽດນາມ ປຸກສ້າງໂຮງຮຽນສາມັນກິນນອນ ຊົນເຜົ່າຢູ່ທົ່ວພັນ ແລະ ປັບປຸງ ສ້ອມແປງໂຮງຮຽນຊົນເຜົ່າຂອງ 3 ພາກ(ອຸດົມໄຊ, ສະຫວັນນະເຂດ ແລະ ຈຳປາສັກ).
7. ສະໜອງທຶນການສຶກສາໃຫ້ແກ່ເດັກຍິງ, ຊົນເຜົ່າ, ເດັກພິການ ແລະ ເດັກທີ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ສັງຄົມ ໃນມັດທະຍົມຕອນຕົ້ນ ຈຳນວນ 1,683 ຄົນ ໃນ 96 ໂຮງຮຽນ 46 ເມືອງ ໃນ 13 ແຂວງ

8. ຄັດເລືອກນັກຮຽນຊົນເຜົ່າຈາກ 17 ແຂວງ ເຂົ້າຮຽນໂຮງຮຽນພອນສະຫວັນ-ຊົນເຜົ່າ, ມະຫາວິທະຍາໄລແຫ່ງຊາດ ເຂດດົງໂດກ ປະຈຳສົກຮຽນ 2009-2010.
9. ຈັດຕັ້ງຄະນະເຄືອຄ່າຍການສຶກສາຮຽນຮ່ວມທຸກລະດັບ ພ້ອມທັງເຝິກອົບຮົມສ້າງຂີດຄວາມສາມາດໃນດ້ານປະຕິບັດ.

## 1.3. ວຽກງານການສຶກສານອກໂຮງຮຽນ:

### 1.3.1. ວຽກງານລົບລ້າງຄວາມບໍ່ຮູ້ໜັງສື :

1. ຈັດຕັ້ງການສອນໃນເຂດຫຍຸ້ງຍາກຫ່າງໄກສອກຫຼີກບ່ອນທີ່ບໍ່ມີເງື່ອນໄຂປຸກສ້າງໂຮງຮຽນ.
2. ສົ່ງເສີມການສຶກສາທາງໄກ ແລະ ການສຶກສາຕະຫລອດຊີວິດເພື່ອສ້າງໂອກາດແກ່ປະຊາຊົນທີ່ຢູ່ເຂດຫ່າງໄກສອກຫລີກໄດ້ຮຽນໜັງສື, ຊອກຫາແຫລ່ງທຶນເພື່ອທົດລອງສ້າງຄູ ເດີນສອນຕາມບ້ານ ທີ່ບໍ່ທັນມີໂຮງຮຽນ.
3. ລົບລ້າງຄວາມບໍ່ຮູ້ໜັງສືໃຫ້ປະຊາຊົນໃນກຸ່ມເປົ້າໝາຍອາຍຸ 6-14 ປີ ໃຫ້ໄດ້ 15,000 ຄົນ, ອາຍຸ 15-40 ປີ ໃຫ້ໄດ້ 55,000 ຄົນ( 15-24 ປີ ໃຫ້ໄດ້ 25,000 ຄົນ; 25-40 ປີ ໃຫ້ໄດ້ 30,000 ຄົນ) ແລະ ອາຍຸ 15 ປີ ຂຶ້ນໄປໃຫ້ໄດ້ 65,000 ຄົນ( 41 ປີຂຶ້ນໄປ ໃຫ້ໄດ້ 10,000 ຄົນ).
4. ບຳລຸງຍົກລະດັບການສຶກສາຊັ້ນປະຖົມ (ການສຶກສາຂັ້ນພື້ນຖານ) ໃຫ້ມີຜູ້ເສັງຈົບ ລະດັບ II ໄດ້ທັງໝົດ 47,000 ຄົນ ແລະ ໃຫ້ມີຜູ້ເສັງຈົບປະຖົມ ( ລະດັບ III ) ໄດ້ທັງໝົດ 42,000 ຄົນ.
5. ສູ້ຊົນໃຫ້ແຕ່ລະແຂວງໃນທົ່ວປະເທດປະກາດຈົບຊັ້ນປະຖົມບຳລຸງໃຫ້ໄດ້ຢ່າງໜ້ອຍ 12 ເມືອງ ແລະ ກຳນົດເງື່ອນໄຂ ຂອງເມືອງທີ່ຈະປະກາດຈົບຊັ້ນປະຖົມບຳລຸງ.
6. ຈັດຕັ້ງປະຕິບັດ ແຜນການລົບລ້າງຄວາມບໍ່ຮູ້ໜັງສື, ການບຳລຸງຍົກລະດັບ ແລະ ການຝຶກອົບຮົມວິຊາຊີບຂັ້ນພື້ນຖານໃນກຸ່ມບ້ານພັດທະນາຂອງ 47 ເມືອງທຸກທີ່ສຸດ ໃຫ້ໄດ້ຕາມແຜນການພັດທະນາໃນລະດັບທ້ອງຖິ່ນ, ໃນນີ້ຕ້ອງໄດ້ລົບລ້າງຄວາມບໍ່ຮູ້ໜັງສື ແລະ ບໍ່ຈົບປະຖົມ ໃຫ້ແກ່ນາຍບ້ານ ຈຳນວນ 100 ຄົນ.
7. ປັບປຸງ ແລະ ຂະຫຍາຍສູນການສຶກສາຊຸມຊົນ ຫຼື ສູນການຮຽນຮູ້ຊຸມຊົນ ໃຫ້ມີປະສິດທິຜົນ ແລະ ໃຫ້ຍືນຍົງສຳລັບຊຸມຊົນ, ໃນນີ້ຂະຫຍາຍສູນການສຶກສາຊຸມຊົນໃຫ້ໄດ້ຢ່າງໜ້ອຍ 10 ແຫ່ງ.
8. ອົບຮົມຄູອາສາສະມັກໃນທົ່ວປະເທດໃຫ້ໄດ້ 100 ຄົນ.

### 1.3.2 ວຽກງານບຳລຸງຍົກລະດັບການສຶກສາ :

1. ສືບຕໍ່ບຳລຸງມັດທະຍົມຕອນຕົ້ນ ໃຫ້ປະຊາຊົນ ຈຳນວນ 2,000 ຄົນ ສຳລັບພະນັກງານ, ທະຫານ, ຕຳຫຼວດ ຈຳນວນ 500 ຄົນ ແລະ ຊັ້ນມັດທະຍົມຕອນປາຍ ສຳລັບພະນັກງານ, ທະຫານ, ຕຳຫຼວດ ຈຳນວນ 5.000 ຄົນ; ໃນນີ້ຊັ້ນມັດທະຍົມຕົ້ນໃຫ້ມີຜູ້ເສັງຈົບໄດ້ 1,500 ຄົນ ແລະ ມັດທະຍົມປາຍ 2,500 ຄົນ.
2. ຝຶກອົບຮົມຄູສອນບຳລຸງຊັ້ນມັດທະຍົມສຶກສາຕອນຕົ້ນຕາມໂຄງການຫລັກສູດໃໝ່ 50 ຄົນ.

3. ປັບປຸງໂຮງຮຽນບຳລຸງ ຫຼື ສູນຝຶກອົບຮົມວິຊາຊີບ, ສູນອື່ນໆຂອງແຂວງໃຫ້ເປັນສູນການສຶກສານອກໂຮງຮຽນ ຂັ້ນແຂວງ ແລະ ສ້າງຢູ່ຂັ້ນເມືອງບ່ອນທີ່ມີຄວາມພ້ອມ ເພື່ອນຳໃຊ້ ແລະ ຈັດຫຼາຍກິດຈະກຳໄປພ້ອມໆກັນ (ບຳລຸງຍົກລະດັບ, ອົບຮົມວິຊາຊີບ, ບຳລຸງພາສາອັງກິດ ແລະ ກິດຈະກຳອື່ນໆ).

### 1.3. 3. ວຽກງານຝຶກອົບຮົມວິຊາຊີບຂັ້ນພື້ນຖານ ນອກໂຮງຮຽນ :

1. ຝຶກອົບຮົມວິຊາຊີບ ຕາມກຸ່ມສົນໃຈຈຳນວນ 3,000 ຄົນ ໂດຍຈັດຢູ່ສູນພັດທະນາການສຶກສານອກໂຮງ ຮຽນ, ການສຶກສານອກໂຮງຮຽນປະຈຳພາກ ແລະ ສູນການສຶກສານອກໂຮງຮຽນ ຂັ້ນຕ່າງໆ, ໃນນີ້ສຳລັບ ເມືອງທຸກຍາກຂອງແຜນງານລຶບລ້າງຄວາມທຸກຍາກ ຈຳນວນ 1,500 ຄົນ.
2. ສືບຕໍ່ພັດທະນາຫຼັກສູດວິຊາຊີບຂັ້ນພື້ນຖານນອກໂຮງຮຽນ ແລະ ບັນຈຸເນື້ອໃນທີ່ຈຳເປັນເຂົ້າໃນ ຫຼັກສູດບຳລຸງຍົກລະດັບການສຶກສາຊັ້ນມັດທະຍົມຕອນຕົ້ນສຳລັບປະຊາຊົນ.
3. ສືບຕໍ່ປັບປຸງລະບຽບ ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແລະ ພັດທະນາຄຸນນະພາບຊີວິດ ຂອງ ຊຸມຊົນ.

## 1.4. ວຽກງານອາຊີວະສຶກສາ :

1. ຕິດຕາມໂຄງການປັບປຸງ ແລະ ຂະຫຍາຍໂຮງຮຽນວິຊາຊີບແບບປະສົມພາກເໜືອ ຢູ່ 3 ແຂວງ ຫົວພັນ, ຫລວງນ້ຳທາ ແລະ ໄຊຍະບູລີ; ໂຮງຮຽນວິຊາຊີບ ແບບປະສົມແຂວງບໍ່ແກ້ວ, ໂຮງຮຽນເຕັກນິກ ວິຊາຊີບແຂວງຈຳປາສັກ; ສູນພັດທະນາອາຊີວະສຶກສາ, ໂຮງຮຽນເຕັກນິກ-ວິຊາຊີບແຂວງບໍລິຄຳໄຊ, ໂຮງຮຽນວິຊາຊີບແບບປະສົມ 3 ແຂວງພາກໃຕ້ (ສາລະວັນ, ອັດຕະປື, ເຊກອງ); ປັບປຸງ ແລະ ຂະຫຍາຍໂຮງຮຽນເຕັກວິຊາຊີບ 8 ແຫ່ງ (ຫຼວງພະບາງ, ແຂວງວຽງຈັນ, ປາກປາສັກ, ລາວ-ເຢຍລະມັນ, ດົງຄຳຊ້າງ, ສັບພະວິຊາ, ສະຫວັນນະເຂດ ແລະ ປາກເຊ); ສືບຕໍ່ປຸກສ້າງໂຮງຮຽນເຕັກນິກກະສິກຳດົງຄຳຊ້າງ, ອາຄານຫ້ອງການໂຮງຮຽນເຕັກນິກວິຊາຊີບສະຫວັນນະເຂດ.
2. ສົ່ງເສີມໃຫ້ມີການແຂ່ງຂັນສີມືວິຊາຊີບໃນລະດັບສູນ, ລະດັບໂຮງຮຽນ ແລະ ລະດັບຊາດ.
3. ກະກຽມສ້າງຕັ້ງສູນຝຶກອົບຮົມວິຊາຊີບຢູ່ເມືອງວັງວຽງ, ເມືອງຄຳເກີດ ແລະ ເມືອງເຊໂປນ; ຈັດຕັ້ງ ປະຕິບັດໂຄງການພັດທະນາໂຮງຮຽນເຕັກນິກ-ວິຊາຊີບແຂວງສະຫວັນນະເຂດ;
4. ຂະຫຍາຍສາຂາວິຊາການຄ້າ, ການຄຸ້ມຄອງສາງ ແລະ ການຂົນສົ່ງ, ຈັດຕັ້ງການຝຶກອົບຮົມວິຊາຊີບແບບມີສ່ວນ ຮ່ວມ ໃນຂອບເຂດກຸ່ມກໍ່ສ້າງ ແລະ ກຸ່ມການພິມ; ສ້າງຕັ້ງ ໜ່ວຍ ງານກຸ່ມອາຊີບ ICT; ສົ່ງເສີມໃຫ້ໂຮງຮຽນ ອາຊີວະສຶກສາ ຮັບນັກຮຽນໃນວິຊາຊີບເຕັກນິກ ທີ່ເປັນທ່າແຮງ ຂອງການພັດທະນາເສດຖະ ກິດ-ສັງຄົມ ໃຫ້ຫລາຍຂຶ້ນ ແລະ ພ້ອມກັນນັ້ນ ກໍ່ດັດສົມນັກຮຽນສາຍຈ້າງຮຽນໃຫ້ເໝາະສົມ.
5. ສືບຕໍ່ເປີດສອນຫຼັກສູດຊັ້ນສູງ ແລະ ຊັ້ນສູງຕໍ່ເນື່ອງ ຈຳນວນໜຶ່ງ ຢູ່ໂຮງຮຽນເຕັກນິກປາກປ່າສັກ, ໂຮງຮຽນເຕັກນິກ ແຂວງວຽງຈັນ, ໂຮງຮຽນເຕັກນິກ-ວິຊາຊີບ ແຂວງສະຫວັນນະເຂດ, ໂຮງຮຽນເຕັກນິກ-ວິຊາຊີບປາກເຊ, ໂຮງຮຽນເຕັກນິກ ລາວ-ເຢຍລະມັນ, ໂຮງຮຽນເຕັກນິກ ກະສິກຳດົງຄຳຊ້າງ ແລະ ໂຮງຮຽນເຕັກນິກ-ວິຊາຊີບ ແຂວງຫລວງພະບາງ ແລະ ຍົກລະດັບໂຮງຮຽນເຕັກນິກ-ວິຊາຊີບສະຫວັນນະເຂດ ໃຫ້ເປັນວິທະຍາໄລ.

## 1.5 ວຽກງານ ການສຶກສາຊັ້ນສູງ:

1. ຕິດຕາມການກໍ່ສ້າງສ້ອມແປງ, ບຸກຄະລາກອນ, ງົບປະມານ, ສະຖານທີ່ປຸກສ້າງ ແລະ ເງື່ອນໄຂຄວາມພ້ອມ ໃຫ້ແກ່ການເປີດມະຫາວິທະຍາໄລ ແຂວງສະຫວັນນະເຂດ ໃຫ້ສຳເລັດ ໃນສົກປີ 2009-10.
2. ກະກຽມງົບປະມານ, ບຸກຄະລາກອນ, ການສຳຫລວດ, ການເກັບກຳຂໍ້ມູນຕ່າງໆ ຢູ່ 2 ແຂວງເປົ້າຫມາຍ ພາກເຫນືອ ຄື ແຂວງອຸດົມໄຊ ແລະ ແຂວງຊຽງຂວາງ.
3. ປັບປຸງຫຼັກສູດ ແລະ ພັດທະນາການຮຽນ - ການສອນໃຫ້ໄດ້ມາດຖານ ແລະ ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ.
4. ສົ່ງເສີມການຄົ້ນຄ້ວາວິທະຍາສາດຢູ່ມະຫາວິທະຍາໄລແຫ່ງຊາດ, ມະຫາວິທະຍາໄລຈຳປາສັກ ແລະ ມະຫາວິທະຍາໄລ ສຸພານຸວົງ.
5. ສ້າງ ແລະ ພັດທະນາຂໍ້ມູນຂ່າວສານ ແລະ ການສື່ສານ ( ICT ) ໃຫ້ສາມາດປະກອບສ່ວນເຂົ້າໃນການສຶກສາຊັ້ນສູງ ແລະ ການຄົ້ນຄ້ວາ ດ້ວຍການສະໜອງເຄື່ອງມືດ້ານຂໍ້ມູນຂ່າວສານ ແລະ ການສື່ສານ ພ້ອມດ້ວຍການສ້າງບຸກຄະລາກອນທີ່ມີຄຸນນະພາບໃນຂະແໜງການດັ່ງກ່າວ.
6. ສ້າງ ແລະ ພັດທະນາລະບົບຮັບປະກັນຄຸນນະພາບການຮຽນ-ການສອນ ແລະ ການປະເມີນຜົນຕໍ່ເນື່ອງ ແລະ ດຳເນີນການປະກັນຄຸນະພາບການສຶກສາຢູ່ວິທະຍາໄລທີ່ມີຄວາມພ້ອມ.
7. ສືບຕໍ່ສຶກສາຄວາມຕ້ອງການຂອງສັງຄົມ ແລະ ສຶກສາຄວາມເປັນໄປໄດ້ໃນການເປີດສາຂາວິຊາທີ່ຍັງຂາດນັກວິຊາ ການ ເພື່ອປະກອບເຂົ້າໃນການພັດທະນາເສດຖະກິດ - ສັງຄົມ.
8. ສືບຕໍ່ເປີດສອນຫຼັກສູດປະລິນຍາຕີ ແລະ ປະລິນຍາຕີຕໍ່ເນື່ອງ, ຫຼັກສູດຊັ້ນສູງ ແລະ ຊັ້ນສູງຕໍ່ເນື່ອງລະດັບຕ່າງໆ ຢູ່ມະຫາວິທະຍາໄລແຫ່ງຊາດ.
9. ສົ່ງເສີມ 3 ມະຫາວິທະຍາໄລ ໃຫ້ໄດ້ຮັບນັກຮຽນ ສາຍພິເສດໃຫ້ຫລາຍຂື້ນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງນັກຮຽນທີ່ມີເງື່ອນໄຂ ແລະ ຄວາມພ້ອມ ໄດ້ເຂົ້າຮຽນ.
10. ປັບປຸງ ສົ່ງເສີມ ແລະ ຂະຫຍາຍການສຶກສາທາງໄກ ໃຫ້ມີປະສິດທິຜົນດີຂື້ນ ແລະ ສາມາດບໍລິການ ສັງຄົມໄດ້ຢ່າງກວ້າງຂວາງ ເພື່ອເປີດໂອກາດ ໃຫ້ແກ່ພະນັກງານ ຄູ-ອາຈານ, ນັກສຶກສາ ແລະ ປະຊາຊົນຜູ້ທີ່ມີຈຸດປະສົງຢາກຮຽນຕໍ່ ແລະ ຄົ້ນຄວ້າ ໃນລະດັບ ແລະ ລະບົບຮຽນຕ່າງໆ.
11. ຈັດຕັ້ງສອບເສັງຄັດເລືອກເອົາ ນັກຮຽນນອກແຜນ ເຂົ້າຮຽນ ມະຫາວິທະຍາໄລແຫ່ງຕ່າງໆ ປະຈຳສົກຮຽນ 2009-10 ນີ້ ໃຫ້ສຳເລັດ ຕາມແຜນການ ແລະ ສືບຕໍ່ກວດຂໍ້ສອບ ຂອງນັກສອບເສັງ ໃຫ້ແລ້ວ ຕາມເວລາທີ່ຄາດຫມາຍໄວ້ ແລະ ປະກາດຜົນການສອບເສັງ ໃຫ້ທັນເວລາ ເຂົ້າຮຽນ ໃນສົກຮຽນນີ້.
12. ສືບຕໍ່ຄົ້ນຄວ້າ ແລະ ຊອກຫາຊ່ອງທາງ ເພື່ອສ້າງຕັ້ງສູນພັດທະນາຜູ້ປະກອບກິດຈະການລາວ-ອິນເດຍ ຂັ້ນແຂວງ ຕົ້ນຕໍ ຄື: ແຂວງ ຫລວງພະບາງ ແລະ ແຂວງສະຫວັນນະເຂດ.
13. ປະກາດສ້າງຕັ້ງມະຫາວິທະຍາໄລສະຫັວນນະເຂດ ທີ່ປະກອບມີ 3 ຄະນະວິຊາ ລວມມີ 8 ສາຂາວິຊາ ແລະ ກຽມຈະໄຂສົກຮຽນເປັນທາງການໃນສົກ 2009-2010.

## 1.6 ວຽກງານການສຶກສາພາກເອກະຊົນ :

1. ສ້າງມາດຕາຖານ, ເງື່ອນໄຂ ແລະ ດໍາເນີນການທົດລອງສ້າງໂຮງຮຽນຕົວແບບພາກເອກະຊົນມີດັ່ງນີ້:
    - ລ້ຽງເດັກ-ອະນຸບານ 6 ແຫ່ງ: ນະຄອນຫລວງ 2 ແຫ່ງ; ຄໍາມ່ວນ, ສະຫວັນນະເຂດ ແລະຫລວງພະບາງ ແຂວງລະ 1 ແຫ່ງໂຮງຮຽນປະຖົມ 3 ແຫ່ງ: ນະຄອນຫລວງ, ຄໍາມ່ວນ ແລະ ສະຫວັນນະເຂດແຂວງ ລະ 1 ແຫ່ງ; ໂຮງຮຽນມັດທະຍົມສຶກສາ 2 ແຫ່ງ: ຢູ່ນະຄອນຫລວງ.
    - ສູນຝຶກອົບຮົມວິຊາຊີບແຂວງລະແຫ່ງ: ແຂວງທີ່ມີສູນຝຶກອົບຮົມວິຊາຊີບ 2 ແຫ່ງຂຶ້ນໄປ.
    - ການສຶກສາຊັ້ນສູງພາກເອກະຊົນແຂວງລະແຫ່ງ: ແຂວງທີ່ມີວິທະຍາໄລ 2 ແຫ່ງຂຶ້ນໄປ.
2. ສົ່ງເສີມການຂະຫຍາຍສະຖາບັນການສຶກສາພາກເອກະຊົນທຸກປະເພດ ແລະ ທຸກຊັ້ນໃຫ້ຫລາຍຂຶ້ນຢູ່ທົ່ວທຸກແຂວງໂດຍຈັດບູລິມະສິດບາງສາຂາວິຊາທີ່ຈໍາເປັນເຊັ່ນ: ສາຂາວິຊາກະສິກໍາ ປູກຝັງ, ລ້ຽງສັດ, ຊ່າງຈອດ, ຊ່າງແອ, ຊ່າງໄຟຟ້າ ແລະ ການທ່ອງທ່ຽວ.
3. ປັບປຸງສໍານວນເອກະສານການສ້າງຕັ້ງ, ການຕໍ່ໃບອະນຸຍາດ, ການຍົກລະດັບ, ເພີ້ມສາຂາວິຊາ ແລະ ສ້າງຕັ້ງສາຂາຂອງໂຮງຮຽນພາກເອກະຊົນ.
4. ດໍາເນີນການປະກັນຄຸນະພາບຢູ່ໂຮງຮຽນພາກເອກະຊົນບ່ອນທີ່ມີຄວາມພ້ອມ.
5. ສ້າງຂໍ້ກໍານົດວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ, ການປະຕິບັດນະໂຍບາຍ, ການຍ້ອງຍໍ, ຕໍາແໜ່ງວິຊາການ, ນາມມະຍົດໃຫ້ແກ່ຄູ ອາຈານໂຮງຮຽນພາກເອກະຊົນ.
6. ປັບປຸງກົດລະບຽບຂອງສະມາຄົມ, ພາລະບົດບາດ, ໜ້າທີ່ ສິດຂອງສະພາທີ່ປຶກສາການສຶກສາພາກເອກະຊົນ ແລະ ເລືອກຕັ້ງຄະນະປະທານສະມາຄົມຊຸດໃໝ່.

## 1.7 ວຽກງານ ພະລະສຶກສາ ແລະ ສິລະປະສຶກສາ:

### 1.7.1 ວຽກງານພະລະສຶກສາ ແລະ ກິລາປ້ອງກັນຊາດ:

1. ສືບຕໍ່ຮຽບຮຽງປຶ້ມຄູ່ມືການຮຽນ - ການສອນ ວິຊາພະລະສຶກສາ, ສິລະປະສຶກສາ ແລະ ແຜ່ນພາບການອອກກໍາລັງກາຍ ເພື່ອສຸຂະພາບ ແລະ ທັດກາຍກາງໂມງ.
2. ກະກຽມຈັດງານມະຫາກໍາກິລານັກຮຽນມັດທະຍົມສຶກສາທົ່ວປະເທດ ຄັ້ງທີ IV ທີ່ແຂວງສະຫວັນນະເຂດ.
3. ຈັດປະຊຸມວຽກງານພະລະສຶກສາ ໃຫ້ຜູ້ຮັບຜິດຊອບ ແລະ ຄູສອນພະລະສຶກສາ ໃນຂອບເຂດທົ່ວປະເທດ.
4. ຈັດຊຸດອົບຮົມວິທີສິດສອນພະລະສຶກສາໃຫ້ນັກຮຽນວິທະຍາໄລຄູ ຫຼວງພະບາງ, ຊຽງຂວາງ ແລະ ສະຫວັນນະເຂດ.
5. ລົງຊຸກຍູ້ຕິດຕາມປະເມີນຜົນການຮຽນ - ການສອນ ວິຊາກິລາປ້ອງກັນຊາດຢູ່ແຂວງພາກໃຕ້. ວິຊາພະລະສຶກສາ ແລະ ກິລາປ້ອງກັນຊາດຢູ່ 8 ແຂວງພາກເໜືອ.
6. ສືບຕໍ່ປຸກສ້າງຫໍພັກນັກຮຽນ 3 ຊັ້ນໃຫ້ສໍາເລັດ.

1.7.2 . <u>ວຽກງານສິລະປະສຶກສາ:</u>

1. ຈັດຊຸດອົບຮົມ ຜູ້ຮັບຜິດຊອບວຽກງານສິລະປະສຶກສາທົ່ວປະເທດ.
2. ຈັດກອງປະຊຸມເຝິກອົບຮົມວິທີສິດສອນ ວິຊາສິລະປະສຶກສາ ໃຫ້ແກ່ນັກຮຽນ ໂຮງຮຽນສ້າງຄູສາລະວັນ, ຫຼວງນໍ້າທາ ແລະ ສ້າງຄູດົງຄຳຊ້າງ.
3. ຈັດກອງປະຊຸມຄົ້ນຄວ້າ ການສ້າງປຶ້ມຄູ່ມືຄູ ການຮຽນ - ການສອນວິຊາສິລະປະສຶກສາ.
4. ລົງຕິດຕາມປະເມີນຜົນການຮຽນ - ການສອນ ວິຊາສິລະປະສຶກສາ 3 ພາກ ທົ່ວປະເທດ.
5. ຄົ້ນຄວ້າຫຼັກສູດຍົກລະດັບວຸດທິການສຶກສາໃຫ້ແກ່ ຄູ-ອາຈານ ຢູ່ໂຮງຮຽນສ້າງຄູສິລະປະສຶກສາ ຈາກ ຊັ້ນກາງຂຶ້ນ ເປັນຂັ້ນສູງ.
6. ອອກແບບກໍ່ສ້າງອາຄານຫ້ອງຮຽນຫລັງໃໝ່.

1.7.3. **<u>ວຽກງານຕ້ານຢາເສບຕິດໃນໂຮງຮຽນ:</u>**

**<u>ວຽກເດັກອາສາສະໝັກ “ ເພື່ອນຊ່ວຍເພື່ອນ “ ຕ້ານສິ່ງເສບຕິດໃນໂຮງຮຽນ:</u>**

1. ລົງຕິດຕາມປະເມີນວຽກງານ “ ເພື່ອນຊ່ວຍເພື່ອນ ” ຕ້ານສິ່ງເສບຕິດໃນໂຮງຮຽນ 8 ແຂວງພາກເໜືອ ແລະ ຈັດກອງປະຊຸມຖອດຖອນບົດຮຽນ ທີ່ແຂວງສະຫວັນນະເຂດ.
2. ເຝິກອົບຮົມ ແລະ ສ້າງເດັກອາສາສະໝັກທີ່ ແຂວງຜົ້ງສາລີ.
3. ກອງປະຊຸມເຝິກອົບຮົມສ້າງອາສາສະໝັກ ໂຮງຮຽນສ້າງຄູພະລະສຶກສາ ແລະ ສິລະປະສຶກສາ.

1.7.4. <u>ວຽກງານພູມປັນຍາທ້ອງຖິ່ນ</u>

1. ກອງປະຊຸມຖອດຖອນບົດຮຽນ ການຮຽນ-ການສອນ ວຽກງານພູມປັນຍາທ້ອງຖິ່ນ ທີ່ແຂວງວຽງຈັນ.

## II. <u>ແຜນງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ:</u>

### 2.1. <u>ວຽກງານພັດທະນາຫຼັກສູດ</u> : (ໃນແຕ່ລະຊັ້ນ-ແຕ່ລະສາຍ)

1. ສືບຕໍ່ປັບປຸງແຜນການຈັດປະສົບການສຳລັບຫ້ອງກຽມປະຖົມ, ພັດທະນາເຄື່ອງມືໃນການຕິດຕາມການຈັດການຮຽນ-ການສອນ ແລະ ຄູ່ມືຄູຫ້ອງກຽມປະຖົມ.
2. ສ້າງຫລັກສູດຝຶກອົບຮົມໄລຍະສັ້ນ ( 2 ເດືອນ ) ແກ່ເດັກ ກ່ອນເຂົ້າຫ້ອງ ປ1 .
3. ສືບຕໍ່ ສ້າງຫລັກສູດໃໝ່ ຂອງມັດທະຍົມສຶກສາ ທັງຕອນຕົ້ນ ແລະ ຕອນປາຍໃຫ້ສຳເລັດຕາມຄາດໝາຍ.
4. ສືບຕໍ່ຈັດກອງປະຊຸມສຳມະນາກ່ຽວກັບການປະຕິຮູບຫລັກສູດສາມັນສຶກສາ, ຈັດພິມຫຼັກສູດ, ຄູ່ມືຄູ ແລະ ປຶ້ມແບບຮຽນຂອງຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍ.
5. ກະກຽມປັບປຸງມາດຖານຫລັກສູດການສຶກສາຊັ້ນສູງແຫ່ງຊາດ ແລະ ມາດຖານຫຼັກສູດການສຶກສາຊັ້ນສູງລະດັບຕ່າງໆ ຂອງກະຊວງສຶກສາທິການ.
6. ສືບຕໍ່ ຄົ້ນຄວ້າ, ປັບປຸງ ແລະ ສ້າງຄູ່ມືການວັດ ແລະ ປະເມີນຜົນ ການຮຽນ-ການສອນ ຕາມລະບົບໜ່ວຍກິດ ແລະ ສ້າງໜ່ວຍງານປະກັນຄຸນນະພາບການສຶກສາຊັ້ນສູງ ເພື່ອຮັບຜິດຊອບການສ້າງນິຕິກຳຕ່າງໆ ໃນການ

ໂອນໜ່ວຍກິດຂອງສະຖາບັນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ, ການຍອມຮັບ ແລະ ຮັບຮູ້ກ່ຽວກັບຄຸນນະວຸດທິການສຶກສາ ດ້ວຍກັນ ໃນພາກພື້ນ ແລະ ການສົ່ງແຮງງານອອກຕ່າງປະເທດ.

7. ຕິດຕາມ ການສະເໜີຂໍອະນຸມັດຮັບຮອງ ແລະ ນຳໃຊ້ຫລັກສູດ ປະລິນຍາໂທ, ປະລິນຍາເອກ ສາຂາວິຊາຕ່າງໆ ທັງພາກລັດ ແລະ ເອກະຊົນ ໃຫ້ມີຄວາມຖືກຕ້ອງ ສອດຄ່ອງ ແລະ ໃຫ້ຢູ່ໃນກອບ ມາດຖານຫລັກສູດແຫ່ງຊາດ ທີ່ກະຊວງສຶກສາທິການ ວາງອອກ.

## 2.2. <u>ວຽກງານພິມປຶ້ມ, ສະໜອງປຶ້ມ, ສະໜອງອຸປະກອນຮັບໃຊ້ການຮຽນ-ການສອນ</u> :

1. ຈັດພິມ ແລະ ສະໜອງປຶ້ມແບບຮຽນ ແລະ ຄູ່ມືຄູ ປ.3, ປ4, ປ.5; ປຶ້ມແບບຮຽນ ມ.7 (ສະບັບຊົ່ວຄາວ) –ແລະ ປຶ້ມຮຽກຊີ້ນັກຮຽນ ແລະ ແຕ່ງບົດສອນໃຫ້ແກ່ຄູ, ປຶ້ມຕິດຕາມພັດທະນາການຂອງເດັກ ອະນຸບານ ແລະ ປຶ້ມສະມັດຖະພາບການກຽມຄວາມພ້ອມໃນການຮຽນຮູ້ຂອງເດັກອາຍຸ 5 ປີ.
2. ສະໜອງປຶ້ມແບບຮຽນປີທີ 1 , ປີ 2 ແລະ ປີ 3 ຂອງສາຍສ້າງຄູຕາມຫຼັກສູດໃໝ່ໃຫ້ສຳເລັດ.
3. ສືບຕໍ່ປະກອບອຸປະກອນການສອນທີ່ເປັນພື້ນຖານໃຫ້ແກ່ ໂຮງຮຽນອະນຸບານ ຄື : ເຄື່ອງຫຼິ້ນໄມ້ BLOCK ທີ່ເປັນຮູບຊົງເລຂາຄະນິດ, ເຄື່ອງຫຼິ້ນໄມ້ສຳລັບຮຽນຮູ້ກ່ຽວກັບສີ, ສະໜອງຫີບອຸປະກອນທີ່ມີອຸປະກອນ 35 ລາຍການ ແລະ ອຸປະກອນສິ້ນເປືອງໃຫ້ແກ່ໂຮງຮຽນເພື່ອນເດັກ.
4. ສ້າງແຜນຄວາມຕ້ອງການສະໜອງກະດານດຳໃຫຍ່ ໃຫ້ໂຮງຮຽນມັດທະຍົມທົ່ວປະເທດ.
5. ພິມປຶ້ມຫຼັກສູດ ຝຶກອົບຮົມ ຄູສຶກສານິເທດ ສະບັບດັດແກ້.
6. ສະໜອງສັງກະສີໃຫ້ແຕ່ລະແຂວງ ເພື່ອກໍ່ສ້າງຫ້ອງຮຽນ ມ 4 ໃຫ້ໂຮງຮຽນມັດທະຍົມຕອນຕົ້ນ.

## 2.3. <u>ວຽກງານສຶກສາ - ວິໄຈ ແລະ ຄົ້ນຄ້ວາທົດລອງ</u> :

1. ດຳເນີນການເຮັດການສຶກສາວິໄຈກ່ຽວກັບການປະຖົມສຶກສາ ໃນ ຫົວຂໍ້:
   - ການເຂົ້າຮຽນຂອງເດັກໃນເຂດຫ່າງໄກສອກຫຼີກ.
   - ການປະລະການຮຽນຂອງເດັກໃນເຂດຫ່າງໄກສອກຫຼີກ.
   - ສະພາບ ແລະ ບັນຫາຂອງການຮຽນຮ່ວມ.
   - ປະສິດຕິຜົນຂອງການສອນຫ້ອງຄວບ.
   - ສືບຕໍ່ວິເຄາະຂໍ້ມູນ ແລະ ຂຽນບົດລາຍງານການປະເມີນຜົນ ດ້ານການຮຽນຂອງນັກຮຽນ ປ.5.
2. ສືບຕໍ່ດຳເນີນການຄົ້ນຄວ້າໃນ 3 ຫົວຂໍ້ : " ພາວະຜູ້ນຳ ເພື່ອຄວາມຄາດຫວັງ ໃນການສົ່ງເສີມຕຳແໜ່ງງານຂອງແມ່ຍິງຂະແໜງການສຶກສາ ຢູ່ ສປປ ລາວ "; " ສົ່ງເສີມວິທີສິດສອນ ບົນພື້ນຖານສິດທິມະນຸດບາງດ້ານການ ສຶກສາໃຫ້ແກ່ສະຖາບັນສ້າງຄູ "; " ຄຸນນະພາບ ສະຖານະພາບ ແລະ ຜົນກະທົບຂອງຄູແມ່ຍິງຕໍ່ການສຶກສາເພື່ອທຸກຄົນໃນ ສປປ ລາວ ".

3. ສືບຕໍ່ໂຄງການທົດສອບເມັດພືດ, ໂຄງການທົດລອງລ້ຽງຈີ້ລໍ່, ໂຄງການສຶກສາຜະລິດໄຄ່ແຜ່ນ, ລ້ຽງກຸ້ງ, ລ້ຽງງົວ, ທົດລອງການຝັກ ແລະ ລ້ຽງໄກ່ພື້ນບ້ານ, ເຮັດກ້ອນແຮ່ທາດເພື່ອເປັນອາຫານເສີມໃຫ້ແກ່ງົວ, ໜອງປາ, ສວນມັນຕົ້ນ-ມັນດ້າງ, ປູກເຫັດ, ປູກມອນ, ປູກດອກໄມ້ປະດັບ, ພືດສະໝູນໄພ , ພືດສວນ ແລະ ກະກຽມອຸປະກອນເພື່ອກໍ່ສ້າງຫຼັກຄາເກັບເມັດພືດ.

## 2.4. <u>ວຽກງານສົ່ງເສີມນັກຮຽນເກັ່ງ ແລະ ນັກຮຽນມີພອນສະຫວັນພິເສດ</u> :

1. ສົ່ງເສີມນັກຮຽນເກັ່ງ ແລະ ນັກຮຽນທີ່ມີພອນສະຫວັນພິເສດ ໃຫ້ມີເງື່ອນໄຂ ສືບຕໍ່ຮໍ່າຮຽນສູງ ຂຶ້ນໄປ ເລື້ອຍໆ, ພ້ອມກັນນັ້ນ, ກໍ່ສ້າງຫ້ອງຮຽນສໍາລັບນັກຮຽນທີ່ມີພອນສະຫວັນຂຶ້ນຢູ່ໃນໂຮງຮຽນມັດທະຍົມ ທີ່ມີເງື່ອນໄຂ.
2. ສືບຕໍ່ຄົ້ນຄ້ວາ ສ້າງຫລັກສູດບໍາລຸງນັກຮຽນ, ປັບປຸງການຮຽນ-ການສອນໃນໂຮງຮຽນພອນສະຫວັນ 3 ແຫ່ງ ( ຫລວງພະບາງ, ມ.ສ ວຽງຈັນ ແລະ ໂຮງຮຽນພອນສະຫວັນຊິນເຜົ່າ) ໃຫ້ກ້າວສູ່ຄຸນນະພາບໃໝ່.
3. ຈັດຕັ້ງຄັດເລືອກນັກຮຽນເຂົ້າສອບເສັງນັກຮຽນເກັ່ງທົ່ວປະເທດ ປະຈໍາສົກຮຽນ 2009 -2010 ຊຶ່ງຈະດໍາເນີນການໃນເດືອນ 4 / 2010 ແລະ ຄັດເລືອກນັກຮຽນເກັ່ງເຂົ້າແຂ່ງຂັນໃນລະດັບພາກພື້ນ ແລະ ສາກົນ.

## 2.5. <u>ວຽກງານການສຶກສານິເທດ</u> :

1. ສືບຕໍ່ຈັດຝຶກອົບຮົມຄູສຶກສານິເທດມັດທະຍົມສຶກສາ 8 ແຂວງ ຈໍານວນ 176 ຄົນ ໃຫ້ສໍາເລັດ.
2. ສ້າງແຜນອົບຮົມທາງດ້ານວິຊາການ ແລະ ການນິເທດພາຍໃນໂຮງຮຽນໃຫ້ແກ່ຜູ້ຮັບຜິດຊອບສູນຊັບພະຍາກອນ, ວິທະຍາກອນປະຈໍາກຸ່ມ ເພື່ອພັດທະນາຄຸນະພາບການຮຽນ-ການສອນຂອງຄູພາຍໃນກຸ່ມໂຮງຮຽນ ໂດຍນໍາໃຊ້ເງິນທີ່ໄດ້ຄິດໄລ່ຕາມຫົວໜ່ວຍນັກຮຽນໃຫ້ມີຄຸນນະພາບສູງຂຶ້ນເທື່ອລະກ້າວ.
3. ພັດທະນາລະບົບນິເທດການສຶກສານອກລະບົບໂຮງຮຽນ ເຊັ່ນ: ການຈັດຕັ້ງລະບົບ, ເອກະສານວິຊາການ, ການເຝິກອົບຮົມ ແລະ ການດໍາເນີນການ.

## 2.6 <u>ວຽກງານກໍ່ສ້າງຄູ</u> (ໃນທຸກລະບົບ).

1. ສືບຕໍ່ກໍ່ສ້າງຄູລ້ຽງເດັກ-ອະນຸບານລະບົບ11+2 , ສ້າງຄູປະຖົມລະບົບ 8+3, ລະບົບ11+2 ແລະ ສ້າງຄູມັດທະຍົມຕອນຕົ້ນ ລະບົບ 11+3 ຕາມ 5 ສາຍ, ລະບົບຕໍ່ເນື່ອງ(11+3)+2 ແລະ ລະບົບຕໍ່ເນື່ອງຈາກຊັ້ນກາງຂຶ້ນເປັນຊັ້ນສູງ(11+1 ແລະ 8+3)+2; ທົດລອງສ້າງຄູອະນຸບານລະບົບ 11+3 ຢູ່ໂຮງຮຽນສ້າງຄູດົງຄໍາຊ້າງ ແລະ ສ້າງຄູມັດທະຍົມຕອນປາຍ ( ປະລິນຍາຕີຢູ່ສະຫວັນນະເຂດ ແລະ ຫລວງພະບາງ ).
2. ກໍ່ສ້າງຄູອະນຸບານ ດ້ວຍລະບົບບໍາລຸງ 30 ອາທິດ ຢູ່ແຂວງຫຼວງພະບາງ ແລະ ແຂວງບໍລິຄໍາໄຊ
3. ເອົາໃຈໃສ່ໃນການກໍ່ສ້າງຄູ-ອາຈານສອນ ໃນຂະແໜງ ວິຊາຕ່າງໆ ໃຫ້ພຽງພໍກັບຄວາມຕ້ອງການ.
4. ສືບຕໍ່ໃຫ້ທຶນການສຶກສາສໍາລັບນັກຮຽນຄູຜູ້ທຸກຍາກ ທີ່ມັກໃນອາຊີບຄູ.

5. ແຜນຮັບນັກຮຽນຄູສາຍປົກກະຕິ.

- ຄູອະນຸບານ 11+2 315 ຄົນ
- ຄູອະນຸບານ 11+3 35 ຄົນ
- ຄູປະຖົມ 11+2 340 ຄົນ
- ຄູປະຖົມ 8+3 180 ຄົນ
- ຄູມັດທະຍົມຕອນຕົ້ນ 11+3 2.789 ຄົນ
- ຄູມັດທະຍົມຕອນປາຍ11+4 1.295 ຄົນ

6. ແຜນຮັບນັກຮຽນຄູຕາມຫຼັກສູດຕໍ່ເນື່ອງ.

- ປະລິນຍາຕີ ໄລຍະພັກແລ້ງ ( 11+3)+2 1,645 ຄົນ
- ຊັ້ນສູງໄລຍະພັກແລ້ງ ( 11+1, 8+3)+2 1,920 ຄົນ

## 2.7 ວຽກງານບຳລຸງຄູ : (ໃນທຸກລະບົບ)

1. ປັບປຸງສູນບຳລຸງຄູ ໃນແຕ່ລະແຂວງໃຫ້ສາມາດສະໜອງການຍົກລະດັບຄູໃຫ້ເປັນປົກກະຕິ.
2. ເຝິກອົບຮົມກ່ຽວກັບການນຳໃຊ້ປື້ມແບບຮຽນ ປີທີ 2 ໃຫ້ອາຈານສອນໃນສະຖາບັນສ້າງຄູ.
3. ສືບຕໍ່ບຳລຸງຄູປະຈຳການຊັ້ນປະຖົມໃນ 6 ແຂວງເປົ້າໝາຍຂອງໂຄງການໃຫ້ໄດ້ 4,090 ຄົນ ແລະ ຄູປະຈຳການຊັ້ນມັດທະຍົມ 1,910 ຄົນ.
4. ອົບຮົມການນຳໃຊ້ປື້ມແບບຮຽນ ແລະ ຄູ່ມືຄູ ປ3 ແລະ ປ4 ແລະ ບຳລຸງ ຍົກລະດັບຄູປະຖົມຈາກ 5+4 ເປັນ 8+3 ໃຫ້ແກ່ຄູໃນແຂວງ ແລະ ເມືອງເປົ້າໝາຍ.
5. ສືບຕໍ່ເອົາໃຈໃສ່ຍົກລະດັບຄວາມຮູ້ ຄວາມສາມາດ ໃຫ້ແກ່ ຄູ-ອາຈານ ດ້ວຍຮູບການສົ່ງເສີມ ການຝຶກອົບຮົມໄລຍະສັ້ນ, ໄລຍະຍາວ ທັງພາຍໃນ ແລະ ຕ່າງປະເທດ .
6. ສືບຕໍ່ເຝິກອົບຮົມຄູອາສາສະໝັກຊາວບ້ານໃນບ້ານເປົ້າໝາຍ ແລະ ເຝິກອົບຮົມຄູສອນມັດທະຍົມຕົ້ນ.
7. ອົບຮົມການພັດທະນາຫຼັກສູດທ້ອງຖິ່ນໃຫ້ວິຊາການຂັ້ນເມືອງໂດຍສະເພາະໃນ 47 ເມືອງທຸກຍາກ.
8. ລົງຕິດຕາມຊຸກຍູ້ຂະບວນການຮຽນ-ການສອນລົບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຊັ້ນປະຖົມ ໃນທົ່ວປະເທດ ເຊັ່ນ: ກົມລົງທ້ອງຖິ່ນຢ່າງໜ້ອຍ ແຂວງລະ 1 ຄັ້ງ.
9. ຈັດການເຝິກອົບຮົມການສ້າງແຜນ, ການເກັບກຳຂໍ້ມູນ ແລະ ການສ້າງແຜນທີ່ການສຶກສາຂັ້ນບ້ານໃຫ້ແກ່ຄະນະພັດທະນາການສຶກສາຂັ້ນບ້ານ ໃນ 3 ເມືອງເປົ້າໝາຍ ສ້າງຄວາມເຂັ້ມແຂງແກ່ຊຸມຊົນ ແລະ ໂຮງຮຽນເພື່ອສະໜັບສະໜູນເດັກພິການໃນ ສປປ ລາວ.

## 2.8 ວຽກງານແກ້ໄຂບັນຫາຄູ :

1. ແບ່ງປັນຕົວເລກ ລະດັບຊັ້ນກາງ ແລະ ຊັ້ນສູງ ເຂົ້າຮຽນສາຍຄູ ແລະ ກະສິກຳໃຫ້ 47 ເມືອງທີ່ທຸກທີ່ສຸດ.

2. ສືບຕໍ່ຈັດການຮຽນ-ການສອນຕາມຫຼັກສູດປະລິຍາຕີຕໍ່ເນື່ອງ ແລະ ຊັ້ນສູງໃນພັກແລ້ງ ສົກຮຽນ 2009-2010.
3. ປັບປຸງຫຼັກສູດພາສາອັງກິດສາຍຄູປະຖົມ.
4. ສຳລັບການສັບຊ້ອນ-ບັນຈຸຄູອະນຸບານ, ປະຖົມ, ມັດທະຍົມປາຍ, ພະລະ ແລະ ສິລະປະສຶກສາ ໄດ້ໃຫ້ບຸລະມະສິດແກ່ເຂດພູດອຍ-ຫ່າງໄກສອກຫຼີກ, ເຂດຊົນເຜົ່າດ້ອຍໂອກາດ.

## III ແຜນງານບໍລິຫານ ແລະ ຄຸ້ມຄອງການສຶກສາ :

### 3.1. ວຽກງານຄຸ້ມຄອງການເມືອງແນວຄິດ :

1. ເອົາໃຈໃສ່ ສຶກສາອົບຮົມແນວຄິດຫລັກໝັ້ນການເມືອງ ໃຫ້ແກ່ພະນັກງານ ແລະ ນັກສຶກສາ ຢ່າງເປັນປົກກະຕິເພື່ອຝຶກຝົນຫລໍ່ຫລອມຄຸນສົມບັດ, ທັດສະນະຫລັກໝັ້ນ, ເຊື່ອມຊຶມແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍ ຂອງລັດ.
2. ສຶກສາອົບຮົມແນວຄິດ ຕິດພັນກັບການປະຕິບັດນະໂຍບາຍເພື່ອກະຕຸກຊຸກຍູ້ ຕໍ່ວຽກງານ ແລະ ແກ້ໄຂຊີວິດການເປັນຢູ່ຂອງພະນັກງານ, ຄູ-ອາຈານ.
3. ຊຸກຍູ້ ແລະ ສ້າງເງື່ອນໄຂ ອຳນວຍຄວາມສະດວກໃຫ້ແກ່ສາມອົງການຈັດຕັ້ງມະຫາຊົນໄດ້ມີການເຄື່ອນໄຫວຕາມພາລະບົດບາດຂອງຕົນ ແລະ ສ້າງສາຍພົວພັນ ພາຍໃນວຽກງານໃຫ້ມີການກົມກຽວກັນ.
4. ສືບຕໍ່ຈັດຕັ້ງອົບຮົມແນວຄິດການເມືອງໃຫ້ແກ່ພະນັກງານຫຼັກແຫຼ່ງ ແລະ ສ້າງເປົ້າໝາຍພະນັກງານສືບທອດ.
5. ສືບຕໍ່ສຶກສາອົບຮົມການເມືອງແນວຄິດ ຄູອາຈານ , ພະນັກງານ ແລະ ນັກຮຽນຄູ ຢູ່ໃນສະຖາບັນສ້າງຄູ ໃຫ້ມີຄວາມຮັກອາຊີບຄູທີ່ແທ້ຈິງ. ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນສ້າງຄູໃນການບໍລິຫານ ຄຸ້ມຄອງ.
6. ຈັດຕັ້ງການຮຽນທິດສະດີການເມືອງ 45 ວັນໃຫ້ໂຮງຮຽນອ້ອມຂ້າງກະຊວງສຶກສາທີ່ມີເງື່ອນໄຂສະດວກ.

### 3.2. ວຽກງານປັບປຸງກົງຈັກ ແລະ ການຈັດຕັ້ງ :

1. ສ້າງກົງຈັກການຈັດຕັ້ງບໍລິຫານການສຶກສາໃຫ້ສອດຄ່ອງກັບທິດທາງການປັບປຸງກົງຈັກຂອງລັດຖະບານຕາມການຫັນປ່ຽນແບບທັນສະໄໝໃຫ້ສອດຄ່ອງກັບການປະຕິຮູບລະບົບການສຶກສາແຫ່ງຊາດ.
2. ສືບຕໍ່ປັບປຸງກົງຈັກການຈັດຕັ້ງມະຫາວິທະຍາໄລ, ພະແນກສຶກສາປະຈຳແຂວງ ແລະ ຫ້ອງການສຶກສາ ເມືອງ ເຊັ່ນ: ການປະກອບພະນັກງານ ຄູ-ອາຈານ ເຂົ້າຕຳແໜ່ງ ການນຳຕ່າງໆ ຕ້ອງມີຄວາມຮູ້ ຄວາມສາມາດ ເຫມາະສົມ.
4. ສືບຕໍ່ການສັບຊ້ອນ ພະນັກງານ ຄູ-ອາຈານ ເຂົ້າໃນວຽກງານຕ່າງໆ ໃຫ້ຖືກຕ້ອງກັບ ວິຊາສະເພາະ ທີ່ຮຽນມາ ແລະ ຄວາມສາມາດຕົວຈິງ.
3. ສືບຕໍ່ສົມທົບກັບອຳນາດການປົກຄອງແຂວງເພື່ອດຳເນີນການປັບປຸງການຈັດຕັ້ງແລະສັບຊ້ອນພະນັກງານຂັ້ນຫົວ ໜ້າ ແລະ ຮອງພະແນກສຶກສາປະຈຳແຂວງ.

## 3.3. ວຽກງານປັບປຸງ(ນິຕິກຳ)ລະບຽບການປົກຄອງ ແລະ ຄຸ້ມຄອງ:

1. ປັບປຸງບັນດານິຕິກຳ ທີ່ມີແລ້ວແລະປື້ມຄູ່ມືວິທີເຮັດວຽກຂອງບັນດາກົມ,ອົງການທຽບເທົ່າສະຖາບັນ, ພະແນກສຶກສາແຂວງ ແລະ ຫ້ອງການສຶກສາເມືອງໃຫ້ມີຄວາມສອດຄ່ອງກັບແຜນປະຕິຮູບການສຶກສາໃນໄລຍະໃໝ່
2. ປັບປຸງ ພາລະບົດບາດ ແລະ ປື້ມຄູ່ມື ການເຮັດວຽກ ຂອງກົມການສຶກສາຊັ້ນສູງ ໃຫ້ສຳເລັດ.
3. ກະກຽມຈັດຕັ້ງກອງປະຊຸມຖອດຖອນບົດຮຽນ ການຈັດຕັ້ງສອບເສັງ ເຂົ້າຮຽນ ມະຫາວິທະຍາໄລ ສົກຮຽນ 2009-10 ແລະ ວາງແຜນການຈັດຕັ້ງການສອບເສັງ ສຳລັບ ສົກຮຽນ 2010-11.
4. ຄະນະຕ່າງໆ, ບັນດາສູນ ແລະ 4 ມະຫາວິທະຍາໄລ ຕ້ອງກະກຽມ ປັບປຸງ ແລະ ສ້າງລະບຽບການ ຄຸ້ມຄອງນັກສຶກສາ, ການຮຽນ-ການສອນ, ຫໍພັກ ແລະ ອື່ນໆ ເພື່ອໃຫ້ມີຄວາມສອດຄ່ອງກັບ ແຜນ ການປະຕິຮູບລະບົບການສຶກສາແຫ່ງຊາດ ທີ່ປະກາດ ໃຊ້ ໃນສົກຮຽນ 2008-09.
5. ສືບຕໍ່ເອົາໃຈໃສ່ ຄຸ້ມຄອງ ດ້ານຄຸນນະພາບການຮຽນ-ການສອນ ສາຍພິເສດ ( ພາກບ່າຍ ແລະ ພາກຄ່ຳ ) ຢູ່ຄະນະຕ່າງໆ ທີ່ມີຄວາມພ້ອມໃຫ້ດີຂຶ້ນ
6. ຄົ້ນຄວ້າສ້າງຮ່າງດຳລັດນາຍົກລັດຖະມົນຕີວ່າດ້ວຍລະບຽບຄຸ້ມຄອງລັດຖະກອນວິຊາການຄູ ແລະ ຮ່າງດຳລັດນາຍົກລັດຖະມົນຕີວ່າດ້ວຍການອຸດໜູນວິຊາຊີບຄູ.

## 3.4 ວຽກງານບັນຈຸ ແລະ ຄຸ້ມຄອງລັດຖະກອນ :

1. ເກັບກຳຂໍ້ມູນພະນັກງານ ແລະ ນັກສຶກສາ ເພື່ອເປັນຖານຂໍ້ມູນ ເຊື່ອມຕໍ່ເຄືອຂ່າຍ ຂໍ້ມູນຂ່າວສານ ຂອງຄະນະຕ່າງໆ ຂອງ 4 ມະຫາວິທະຍາໄລ.
2. ສືບຕໍ່ເອົາໃຈໃສ່ຍົກລະດັບຄວາມຮູ້ ຄວາມສາມາດ ໃຫ້ແກ່ ພະນັງານ ຄູ-ອາຈານ ດ້ວຍຮູບການສົ່ງເສີມການຝຶກອົບຮົມໄລຍະສັ້ນ, ໄລຍະຍາວ ທັງພາຍໃນ ແລະ ຕ່າງປະເທດ.
3. ຊອກຫາແຫຼ່ງທຶນເພື່ອຍົກລະດັບພະນັກງານ ແລະ ບັນລຸຄາດໝາຍໃນສອງປີຕໍ່ໜ້າ ອາຈານມະຫາວິທະຍາໄລຕ້ອງຈົບປະລິນຍາເອກ 26 ຄົນ ແລະ ປະລິນຍາໂທ 320 ຄົນ; ສູ້ຊົນທັນຄະນະສຶກສາສາດ ສ້າງແຕ່ລະດັບປະລິຍາໂທຂຶ້ນໄປ ແລະ ຮ່າງມາດຕະຖານຫຼັກສູດໃນລະດັບປະລິນຍາເອກ.
4. ສືບຕໍ່ກວດກາ ແລະ ປັບປຸງການນຳໃຊ້ຖານຂໍ້ມູນບຸກຄະລາກອນເພື່ອໂອນໂປຼແກມເກົ່າໃສ່ໂປຼແກມໃໝ່.
5. ເລື່ອນລັດຖະກອນຝຶກງານເປັນສົມບູນ, ເລື່ອນຊັ້ນຂັ້ນເງິນເດືອນ, ສັບຊ້ອນສຳນວນລັດຖະກອນ, ຄົ້ນຄົ້ນແຕ່ງຕັ້ງ ແລະ ຍົກຍ້າຍບ່ອນປະຈຳການ ພະນັກງານ.
6. ສ້າງຕັ້ງຄະນະຊີ້ນຳ ແລະ ຄະນະຮັບຜິດຊອບໂຄງການສ້າງຂີດຄວາມສາມາດທາງດ້ານຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ໃນທຸກຂັ້ນ (ກະຊວງ, ແຂວງ, ເມືອງ).

### 3.5. ວຽກງານຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດລະບຽບຂອງການສຶກສາ :

1. ຈັດຕັ້ງເຜີຍແຜ່ມະຕິ, ຄໍາສັ່ງ, ຂໍ້ກໍານົດ, ກົດລະບຽບ, ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ຢ່າງກວ້າງຂວາງ ແລະ ເປັນຮູບປະທໍາ.
2. ຈັດຕັ້ງ ຜັນຂະຫຍາຍດໍາລັດຈັດຕັ້ງ ປະຕິບັດກົດໝາຍວ່າດ້ວຍການສຶກສາ ແລະ ການຄິດໄລ່ງົບປະມານບໍລິຫານການສຶກສາຕາມຫົວໜ່ວຍນັກຮຽນ.
3. ສືບຕໍ່ ປະຕິບັດຕາມບົດແນະນໍາການຈັດຕັ້ງປະຕິບັດຄໍາສັ່ງແນະນໍາເລກທີ 08/ກມສພ ວ່າດ້ວຍການຂຶ້ນແຜນກໍານົດພະນັກງານນໍາພາ ແລະ ການຄຸ້ມຄອງ ແລະ ດໍາລັດເລກທີ 99/ນຍ ວ່າດ້ວຍຕໍາແໜ່ງບໍລິຫານຂອງພະນັກງານແຕ່ລະຂັ້ນ ແຕ່ລະຂັ້ນ.
4. ໂຮງຮຽນອາຊີວະສຶກສາ ແລະ ມະຫາວິທະຍາໄລ ຕ້ອງສ້າງເອກະສານ ກ່ຽວກັບແຜນຮັບພະນັກງານ ແລະການສັບຊ້ອນ ຄູ-ອາຈານ ຕາມຕົວເລກໂຄຕ້າ ທີ່ໄດ້ຮັບ ຈາກ ກະຊວງສຶກສາທິການ ໃນສົກຮຽນ 2009-2010ໃຫ້ເຂັ້ມງວດ ແລະ ທັນເວລາ.

### 3.6. ວຽກງານຝຶກອົບຮົມຜູ້ບໍລິຫານການສຶກສາ : (ໃນທຸກລະບົບ)

1. ຂະຫຍາຍລະບົບການເກັບກໍາ-ສັງລວມຂໍ້ມູນ, ວິເຄາະຂໍ້ມູນ ແລະ ການລາຍງານຂໍ້ມູນໄປສູ່ສະຖາບັນສ້າງຄູ 6 ແຫ່ງ ເພື່ອເຊື່ອມຕໍ່ຫາກົມສ້າງຄູ.
2. ປະສານສົມທົບ ແລະ ຮ່ວມມື ກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ ແລະປະຕິບັດໂຄງການຕ່າງໆທີ່ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນໃຫ້ສໍາເລັດຕາມແຜນການ ແລະ ມີປະສິດທິຜົນສູງ.
3. ສືບຕໍ່ຈັດຕັ້ງການບໍາລຸງຍົກລະດັບໃຫ້ຜູ້ບໍລິຫານການສຶກສາຂັ້ນຕ່າງໆ, ໂດຍສະເພາະຫົວໜ້າໂຮງຮຽນ ແລະ ຄູສອນທີ່ບໍ່ໄດ້ມາດຖານການກໍ່ສ້າງ ດ້ວຍຫຼາຍຮູບການ ແລະ ຫຼາຍວິທີການເປັນຕົ້ນ: ການຈັດຕັ້ງ ບໍາລຸງກັບທີ່, ບໍາລຸງວັນເສົາ-ວັນອາທິດ, ເວລາພັກປະຈໍາປີ ແລະ ຮຽນແບບຍາວນານ.
4. ຄັດເລືອກຜູ້ບໍລິຫານໄປຮຽນທິດສະດີການເມືອງຕາມເງື່ອນໄຂ ແລະ ແຜນກໍ່ສ້າງພະນັກງານສືບທອດ.

### 3.7 ວຽກງານບັນຈຸ ແລະ ສັບຊ້ອນຄູສອນ : (ໃນແຕ່ລະຂັ້ນ-ແຕ່ລະສາຍ)

1. ບັນຈຸສັບຊ້ອນຕາມແຜນຄວາມຕ້ອງການຕາມຂັ້ນຕາມສາຍ ດັ່ງນີ້ : ຄູອະນຸບານ 950 ຄົນ, ຄູປະຖົມສຶກສາ : 3,272 ຄົນ, ຄູມັດທະຍົມຕົ້ນ : 2,480 ຄົນ, ຄູມັດທະຍົມປາຍ : 1,550 ຄົນ, ຄູສາຍວິຊາສະເພາະ : 624 ຄົນ, ສາຍບໍລິຫານ : 451 ຄົນ, ລວມທັງໝົດ : 9,327 ຄົນ
2. ສັບຊ້ອນຄູແຕ່ລະຂັ້ນ, ແຕ່ລະສາຍຄືນໃໝ່ເຮັດໃຫ້ຖືກກັບລະບົບການກໍ່ສ້າງ ແລະ ໃຫ້ມີຈໍານວນພຽງພໍກັບຄວາມຮຽກຮ້ອງຕ້ອງການອັນຈໍາເປັນ.

## 3.8. ວຽກງານສົ່ງເສີມ ຄູດີເດັ່ນ :

1. ຈັດກອງປະຊຸມຄູດີເດັ່ນທົ່ວປະເທດ ປະຈຳສົກປີ 2009 - 2010 ເປົ້າໝາຍຜູ້ເຂົ້າຮ່ວມ ແຂວງລະ 2 ຄົນ, ຄົ້ນຄ້ວາຍ້ອງຍໍຜົນງານດີເດັ່ນ ປະຈຳສົກຮຽນ, ຄົ້ນຄ້ວາການປະຕິບັດນະໂຍບາຍຕໍ່ພະນັກງານດີເດັ່ນ.
2. ສືບຕໍ່ເອົາໃຈໃສ່ ປະຕິບັດນະໂຍບາຍຕໍ່ຄູ-ອາຈານ, ສົ່ງເສີມການສອນຫ້ອງຄວບ, ຄູສອນໃນເຂດທຸລະກັນດານ ຫ່າງໄກສອກຫຼີກ.
3. ຈັດກອງປະຊຸມປະຕິບັດເນື້ອໃນຂໍ້ແຂ່ງຂັນຍ້ອງຍໍດີເດັ່ນຮອບດ້ານ ລະຫວ່າງ ພະແນກສຶກສາປະຈຳແຂວງ, ຫ້ອງການສຶກສາເມືອງຈັດກອງປະຊຸມຜ່ານການໃຫ້ນາມມະຍົດແລະແກ່ຄູ-ອາຈານສອນໃນລະດັບຕ່ຳກວ່າສະຖາບັນການສຶກສາຊັ້ນສູງ.
4. ຄົ້ນຄວ້າການປະຕິບັດນະໂຍບາຍຕໍ່ຄູອາຈານພະນັກງານທີ່ມີເງື່ອນໄຂອອກພັກຜ່ອນຮັບບຳນານ,ປະຕິບັດວິໄນຕໍ່ຜູ້ກະທຳຜິດທາງວິໄນແລະປະຕິບັດນະໂຍບາຍຕ່າງໆຕໍ່ພະນັກງານຢ່າງເໝາະສົມ.

## 3.9. ວຽກງານແຜນການ, ແຜນງານ ແລະ ໂຄງການ :

1. ຈັດຕັ້ງ ປະຕິບັດແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດຂອງບາດກ້າວທີ່ II (2009-2010) ແລະ ສ້າງແຜນການຈັດຕັ້ງ ປະຕິບັດ ບາດກ້າວທີ່ III (2010-2015) ແລະ ລາຍງານ ຄວາມຄືບໜ້າໃຫ້ຄະນະກຳມະທິການແຫ່ງຊາດເປັນແຕ່ລະ 3 ເດືອນ .
2. ຈັດຕັ້ງ ແນະນຳການສ້າງແຜນປະຕິບັດການປະຈຳປີ ກ່ຽວກັບຂອບພັດທະນາຂະແໜງການສຶກສາ ແລະ ສະຫລຸບແຜນພັດທະນາ ແລະ ແຜນການລົງທຶນຂອງລັດໃສ່ການສຶກສາ 5 ປີ ຄັ້ງ ທີ VI (2006-2010) ແລະ ສ້າງແຜນພັດທະນາ ແລະ ແຜນການລົງທຶນຂອງລັດໃສ່ການສຶກສາ 5 ປີ ຄັ້ງທີ VII(2011-2015)
3. ສ້າງແຜນຍຸດທະສາດການສຶກສາຊັ້ນສູງ ແຕ່ນີ້ ຮອດ ປີ 2020, ແຜນແມ່ບົດ, ດຳລັດຕ່າງໆ ທີ່ກ່ຽວຂ້ອງກົມການສຶກສາຊັ້ນສູງ ແລະ ສືບຕໍ່ພັດທະນາຮ່າງນະໂຍບາຍແຫ່ງຊາດ ແລະ ຍຸດທະສາດວ່າດ້ວຍການສຶກສາຮຽນຮ່ວມ
4. ລົງຕິດຕາມ ແລະ ແນະນຳກ່ຽວກັບວຽກງານແຜນການ, ແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນຕໍ່ , ການປະຕິຮູບລະບົບການສຶກສາແຫ່ງຊາດ ແລະ ການຄຸ້ມຄອງໂຄງການລົງທຶນຂອງລັດ ປະຈຳປີ 2009 - 2010 ທັງຢູ່ສູນກາງ ແລະ ທ້ອງຖິ່ນ.
5. ເລັ່ງທວງການອະນຸມັດທຶນການສຶກສາເລັ່ງລັດ (FTI), ສ້າງແຜນປະຕິບັດງານຂອງແຕ່ລະກົມ ໃນຂອບການພັດທະນາທົ່ວຂະແໜງການສຶກສາ (ESDF), ລົງຊຸກຍູ້ການສ້າງແຜນປະຕິບັດງານການສຶກສາເພື່ອທຸກຄົນຂັ້ນເມືອງໃຫ້ສຳເລັດ.
6. ແຜນຮັບນັກຮຽນ ນັກສຶກສາ ແລະ ພະນັກງານເຂົ້າຮຽນຕໍ່ໃນສະຖາບັນການສຶກສາ ແຕ່ຊັ້ນຕົ້ນ ເຖິງ ລະດັບປະລິນຍາຕີ ສຳລັບ ສົກປີ 2009-2010 ມີທັງໝົດປະມານ 34.654 ຄົນ; ໃນນັ້ນ ມີນັກຮຽນ ນັກສຶກສາໃນ

ແຜນ ຈຳນວນ 10,268 ຄົນ, ພະນັກງານ ຈຳນວນ 6,169 ຄົນ ແລະ ນັກຮຽນ ສອບເສັງ(ນອກແຜນ) ຈຳນວນ 8,182 ຄົນ ແລະ ນັກຮຽນພາກພິເສດ (ພາກບ່າຍ ແລະ ຄ່ຳ) ຫລາຍກວ່າ 10,000 ຄົນ.

7. ສົກປີ 2009-2010 ແຜນການລົງທຶນຂອງລັດ ທົ່ວຂະແໜງການສຶກສາທັງສູນກາງ ແລະ ທ້ອງຖິ່ນຄຸ້ມຄອງ ມີ 250 ໂຄງການ ລວມມູນຄ່າທັງໝົດ 588,416.75 ລ້ານກີບ; ໃນນັ້ນ ຂອງກະຊວງ ມີ 75 ໂຄງການ ມູນຄ່າທັງໝົດ 458,685.45 ລ້ານກີບ ໃນນັ້ນ ທຶນສົມທົບຂອງລັດຖະບານ 18,000 ລ້ານກີບ, ທຶນສຳລັບການ ປະຕິຮູບລະບົບການສຶກສາແຫ່ງຊາດ ທີ່ໄດ້ຈາກລາຍຮັບຈາກນ້ຳເທີນ II ມູນຄ່າ 17,500 ລ້ານກີບ. ມະຫາວິທະຍາໄລແຫ່ງຊາດ ມີ 12 ໂຄງການ ມູນຄ່າ 10.000 ລ້ານກີບ, ສຳລັບຂັ້ນແຂວງ ມີທັງໝົດ 160 ໂຄງການ ມູນຄ່າ 102,231.30 ລ້ານກີບ ໃນນັ້ນ ທຶນສົມທົບຂອງລັດຖະບານ 34,492.38 ລ້ານກີບ(ນັບ ທັງມະຫາວິທະຍາໄລຈຳປາສັກ ແລະ ມະຫາວິທະຍາໄລສຸພານຸວົງ), ໃນນັ້ນ ໄດ້ຮັບແຜນການລົງທຶນຂອງລັດໃນຂັ້ນກຸ່ມບ້ານພັດທະນາ ( ໃນໂຄງການລຶບລ້າງ ຄວາມທຸກ ຍາກແຫ່ງຊາດ ) ມີ 25 ໂຄງການ ມູນຄ່າ 6,779.25 ລ້ານກີບ.
8. ລົງຕິດຕາມ ຊຸກຍູ້ການປະຕິບັດໂຄງການລົງທຶນຂອງລັດ ສົກປີ 2009-2010 ໃນ 16 ແຂວງ ແລະ ນະຄອນຫລວງວຽງຈັນ, ຝຶກອົບຮົມການສ້າງແຜນການ, ການຄຸ້ມຄອງໂຄງການລົງທຶນຂອງລັດ ແລະ ວາງແຜນແບບມີສ່ວນຮ່ວມຂອງປະຊາຊົນ ໃຫ້ສຶກສາເມືອງຂອງ 5 ແຂວງ(ບໍ່ແກ້ວ, ອຸດົມໄຊ, ໄຊຍະບູລີ, ຫົວພັນ ແລະ ຊຽງຂວາງ).
9. ສົມທົບກັບ 5 ຂະແໜງການຕົ້ນຕໍ (ກະຊວງແຜນການ-ການລົງທຶນ, ຄະນະຊີ້ນຳພັດທະນາຊົນນະບົດ, ກະຊວງກະສິກຳ-ປ່າໄມ້, ກະຊວງໂຍທາ-ຂົນສົ່ງ ແລະ ກະຊວງສາທາລະນະສຸກ) ລົງຝຶກອົບຮົມ ແລະ ສ້າງແຜນລຶບລ້າງຄວາມທຸກຍາກຕາມກຸ່ມບ້ານພັດທະນາຂອງບັນດາເມືອງທຸກ ໃນຈຳນວນ 57 ກຸ່ມບ້ານ.
10. ປັບປຸງ ແລະ ຍົກລະດັບຄວາມສາມາດຂອງພະນັກງານແຜນການ, ການລົງທຶນ ແລະ ຮ່ວມມືໃຫ້ດີຂື້ນ.
11. ຫ້ອງການເລຂາ ຄະນະກຳມາທິການແຫ່ງຊາດລາວ ເພື່ອຢຸເນດສະໂກ ໄດ້ຮັບການຊ່ວຍເຫຼືອ ຈຳນວນ 2 ລ້ານໂດລາສະຫະລັດ ເພື່ອນຳໃຊ້ເຂົ້າໃນການຝຶກອົບຮົມວິຊາການ ດ້ານການສຶກສາ.
12. ຂຽນໂຄງການພັດທະນາການສຶກສາ ສົກປີ 2009-2010 ເພື່ອນຳໃຊ້ທຶນທີ່ໄດ້ຈາກລາຍຮັບການຂາຍໄຟຟ້ານ້ຳເທີນ II ໃນມູນຄ່າ 17,5 ຕື້ກີບ.

## 3.10. ວຽກງານການຮ່ວມມື : ເປັນເຈົ້າການປະຕິບັດຖະແຫລງການວຽງຈັນ ວ່າດ້ວຍການຮ່ວມມືຢ່າງມີປະສິດທິຜົນ ໃນການປະຕິບັດຂອບການພັດທະນາຂະແໜງການສຶກສາ ໃຫ້ມີປະສິດຕິຜົນສູງ.

**1. ວຽກງານຮ່ວມມື 2 ຝ່າຍ :**

1. ສືບຕໍ່ພົວພັນຮ່ວມມືກັບອົງການຈັດຕັ້ງສາກົນ ເຊັ່ນ: ADB, ເກົາຫລີ, SEAMEO VOCTECH, ອິນເດຍ ແລະ ອື່ນໆ... ເພື່ອຍາດແຍ່ງ ການຊ່ວຍເຫຼືອດ້ານທຶນຮອນເຂົ້າໃນການ ຝຶກອົບຮົມ ພະນັກງານ, ການຈັດກອງປະຊຸມສຳມະນາຕ່າງໆ ແລະ ທັງຍາດແຍ່ງເອົາການຊ່ວຍເຫຼືອດ້ານວັດຖຸ-ອຸປະກອນ ຈາກອົງການຕ່າງໆ

ເຫຼົ່ານັ້ນ ບົນພື້ນຖານລະບຽບ- ຫຼັກການ ແລະ ນະໂຍບາຍຂອງກະຊວງສຶກສາທິການກໍ່ຄື ຂອງ ລັດຖະບານແຫ່ງ ສປປ ລາວ.

2. ສືບຕໍ່ບົດບັນທຶກການປະຊຸມຮ່ວມ ລະຫວ່າງ ມະຫາວິທະຍາໄລແຫ່ງຊາດ ກັບ Unine ແລະ ມະວິທະຍາໄລຂອນແກ່ນ ( ວິທະຍາເຂດ ໜອງຄາຍ ) ໃນການປະຕິບັດໂຄງການເຊື່ອມຕໍ່ ເຄືອຄ່າຍແລະ ການບໍລິການຫ້ອງສະໝຸດ, ການວິໄຈຮ່ວມກັນພາຍໃຕ້ໂຄງການ SIDA / SAREC.
3. ສ້າງຕັ້ງສະພາທີ່ປຶກສາ ຝ່າຍເກົາຫຼີ ເພື່ອການພັດທະນາ ມະຫາວິທະຍາໄລ ສຸພານຸວົງ.
4. ມະຫາວິທະຍາໄລ ສຸພານຸວົງ ສ້າງສາຍພົວພັນ ແລະ ການຮ່ວມມືດ້ານວິຊາການ ກັບ ມະຫາວິທະຍາໄລ ຍາຈາງ ແຫ່ງ ສສ. ຫວຽດນາມ.
5. ສືບຕໍ່ໂຄງການຮ່ວມມືກັບ ສູນ SEAMEO VOCTECH ເພື່ອຝຶກອົບຮົມຄູ ດ້ານວິຊາການ ໃນສົກສຶກສາ 2009-2010.
6. ສືບຕໍ່ຄຸ້ມຄອງ ແລະ ຕິດຕາມໂຄງການທີ່ກຳລັງປະຕິບັດ ຢູ່ໃນມະຫາວິທະຍາໄລແຫ່ງຊາດ ໃນນັ້ນມີ 09 ໂຄງການທີ່ກຳລັງປະຕິບັດຢູ່.
7. <u>ໂຄງການຮ່ວມມື ລາວ-ຫວຽດນາມ</u> : ຕິດຕາມການປຸກສ້າງໂຮງຮຽນມັດທະຍົມແບບຢ່າງດ້ວຍທຶນຊ່ວຍເຫລືອລ້າຈາກການ ນຳ ຂອງ ສ.ສ. ຫວຽດນາມ, ແລກປ່ຽນ ແລະ ເຊັນສັນຍາຮ່ວມລະຫວ່າງກະຊວງສຶກສາ ແລະ ກໍ່ສ້າງ ຫວຽດນາມ ກັບກະຊວງສຶກສາທິການ ສ.ປ.ປ.ລາວ ຕາມແຜນການຮ່ວມມືປົກກະຕິຢູ່ຫວຽດນາມ.
8. <u>ໂຄງການຮ່ວມມືລາວ-ໄທ</u> : ສົ່ງພະນັກງານ ແລະ ນັກສຶກສາໄປສຶກສາຕໍ່ໃນລະດັບປະລິນຍາໂທ, ປະລິນຍາເອກ ແລະ ການຝຶກອົບຮົມວິຊາ ຕ່າງໆ..
9. <u>ໂຄງການຮ່ວມມືລາວ-ຈີນ</u> : ສືບຕໍ່ສົ່ງພະນັກງານ ແລະ ນັກສຶກສາໄປສຶກສາຕໍ່ໃນລະດັບປະລິນຍາຕີ ແລະ ໂທ ຕາມ ສັນຍາແລະ ເງື່ອນໄຂຄັດເລືອກ.
10. <u>ໂຄງການຮ່ວມມືລາວ-ຍີ່ປຸ່ນ</u>: ສ້າງແຜນການປະຕິບັດໂຄງການຊ່ວຍເຫຼືອລ້າຈາກລັດຖະບານຍີ່ປຸ່ນ ຜ່ານອົງການ JICA ໃນການ ປຸກສ້າງໂຮງຮຽນ ແລະ ໂຄງການພັດທະນາຊັບພະຍາກອນມະນຸດ (JICE) ໃນມູນຄ່າ 332,000,000 ເຢັນ ເປັນ 20 ທຶນ/ປີ, ສົ່ງພະນັກງານກະຊວງສຶກສາທິການໄປຝຶກອົບຮົມຕ່າງໆ ແລະ ສືບຕໍ່ຂໍຊ່ຽວຊານ ແລະ ອາສາສະມັກໄລຍະສັ້ນໄປປະຈຳຢູ່ຕ່າງແຂວງ.
11. <u>ໂຄງການຮ່ວມມືລາວ-ເກົາຫຼີ</u> : ສືບຕໍ່ຈັດຕັ້ງປະຕິບັດໂຄງການສະໜອງປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູ ແລະ ໂຄງການສະໜອງ ຄອມພິວ ເຕີມີສອງຂອງຊັ້ນມັດທະຍົມປາຍ, ຈັດສົ່ງພະນັກງານໄປຝຶກອົບຮົມຮ່ວມມືກັບສຶກສາແຂວງ ຈຸງຈິງນຳໂດ ຂອງ ສ. ເກົາຫລີ..
12. <u>ໂຄງການຮ່ວມມືລາວ-ອິນເດຍ</u>: ສືບຕໍ່ຈັດຕັ້ງປະຕິບັດແຜນການນຳໃຊ້ສູນພາສາອັງກິດລາວ-ອິນເດຍ ແລະ ຄົ້ນຄວ້ານຳສົ່ງນັກສຶກສາ ໄປຮຽນຕໍ່ເອົາປະລິນຍາຕີ ແລະ ໂທທີ່ອິນເດຍ.
13. <u>ໂຄງການຮ່ວມມືລາວ-ອິດສະຕາລີ</u> : ສືບຕໍ່ສົ່ງພະນັກງານ ແລະ ນັກສຶກສາ ໄປສຶກສາຕໍ່ເອົາ ປະລິນຍາຕີ ແລະ ປະລິນຍາໂທ 40 ທຶນ ແລະ ສືບຕໍ່ສົ່ງພະນັກງານໄປຝຶກອົບຮົມວິຊາຕ່າງໆ.

2. <u>ການຮ່ວມມືຫຼາຍຝ່າຍ</u> :

1. ສືບຕໍ່ຮ່ວມມືກັບບັນດາອົງການ SEAMEO ແລະ ASED ທີ່ ສ.ປ.ປ. ລາວໄດ້ເຂົ້າເປັນສະມາຊິກ ແລະ Governing board ຂອງແຕ່ລະສູນ ແລະ ສືບຕໍ່ສົ່ງພະນັກງານ ແລະ ຄູ-ອາຈານໄປຝຶກອົບຮົມຕາມແຜນການຂອງ ສູນທີ່ ຈະຈັດຂຶ້ນ.

3.11. <u>ວຽກງານຄຸ້ມຄອງຂໍ້ມູນຂ່າວສານການສຶກສາ ແລະ ໄອຊີທີ</u>

1. ປຸກສ້າງ ອາຄານ ຂອງ ສູນສະຖິຕິ–ເຕັກໂນໂລຊີ ຂ່າວສານ ການສຶກສາ
2. ຈັດຕັ້ງ ອົບຮົມ ການນຳໃຊ້ ຮ່າງສະຖິຕິ ແລະ ການວິເຄາະຂໍ້ມູນໃຫ້ ວິຊາການ ຂັ້ນ ແຂວງ , ເມືອງ ແລະ ອຳນວຍການໂຮງຮຽນ ອະນຸບານ , ປະຖົມ ແລະ ມັດທະຍົມ ໃນ ບັນດາແຂວງ ແລະ ເມືອງ ທີ່ ຍັງເຫຼືອ
3. ຈັດຕັ້ງ ຍົກລະດັບພະນັກງານທາງດ້ານ ການວິເຄາະ ແລະ ການລາຍງານເຜີຍແຜ່ ຂໍ້ມູນ ແລະ ການຂຽນໂປຣແກຣມ ເພື່ອຮັບໃຊ້ ການຕິດ ຕາມ ແລະ ເກັບກຳ ຂໍ້ມູນ ຕ່າງ ໆ ໃນຂະແໜງການສຶກສາ
4. ສືບຕໍ່ປັບປຸງ ເນື້ອໃນ ເອກະສານ ແຜນ ພັດທະນາ ວຽກງານ ສະຖິຕິ ໃນ ຕໍ່ໜ້າ ໃນ ແຕ່ລະຂັ້ນ ແລະ ສ້າງປື້ມຄູ່ມື ກ່ຽວກັບ ລະບົບການເກັບກຳ , ປຸງແຕ່ງ ແລະ ການວິເຄາະຂໍ້ມູນ ກ່ຽວກັບການສຶກສາ
5. ຈັດພິມ ແລະ ແຈກຢາຍ ຮ່າງສະຖິຕິ ເກັບກຳຂໍ້ມູນ ສົກຮຽນ 2009-10 ໃຫ້ໂຮງຮຽນ ແຫ່ງລະ ສີ່ ສະບັບ ໃຫ້ທັນຕາມກຳນົດເວລາ
6. ປັບປຸງ ໂປຣແກຣມ ປ້ອນຂໍ້ມູນ ຂອງຂັ້ນມັດທະຍົມ ເພື່ອຮອງຮັບ ການປ້ອນຂໍ້ມູນ ໃນລະບົບ ການສຶກສາ 5+4+3 ແລະ ຈັດຕັ້ງ ຝຶກອົບຮົມ ການນຳໃຊ້ ໂປຣແກຣມດັ່ງກ່າວ ໃຫ້ ພະນັກງານສະຖິຕິ ຂັ້ນ ແຂວງ ແລະ ເມືອງ ທີ່ມີ ຄອມພິວເຕີ, ສ້າງໂປຣແກຣມ ເພື່ອເກັບຮັກສາ ແລະ ລາຍງານ ຂໍ້ມູນ ຂອງຂັ້ນ ອາຊີວະ , ເຕັກນິກ ແລະ ການສຶກສາ ຊັ້ນສູງ.
7. ຕິດຕາມຊຸກຍູ້ ການ ປ້ອນຂໍ້ມູນ ແລະ ການລາຍງານຂໍ້ມູນ ຂອງສົກຮຽນ 2009-10 ຈາກ ແຂວງ ຫາກະຊວງ ໃຫ້ ສຳເລັດ ກ່ອນທ້າຍເດືອນ ທັນວາ 2009 ແລະ ຈັດຕັ້ງ ກອງປະຊຸມ ການວິເຄາະຂໍ້ມູນ ປະຈຳສົກຮຽນ 2009-10 ຮ່ວມກັບ ວິຊາການ ຂະແໜງສະຖິຕິ ແຜນການ ແລະ ຂະແໜງສາມັນສຶກສາ ຂອງ ພະແນກສຶກສາ ປະຈຳແຂວງ ໃຫ້ສຳເລັດ ກ່ອນ ທ້າຍ ເດືອນ ເມສາ 2010.
8. ປັບປຸງ ຂໍ້ມູນ ຕາໜ່າງໂຮງຮຽນ ຂອງແຕ່ລະຊັ້ນຮຽນ ເຂົ້າໃສ່ລະບົບ ແຜນທີ່ (GIS) ເພື່ອຮັບໃຊ້ ເຂົ້າໃນການສ້າງແຜນ ການສະໜອງການສຶກສາ ໃຫ້ທົ່ວເຖິງ ຕາມຂອບພັດທະນາ ຂອງ ຂະແໜງການສຶກສາ ແລະ ປັບປຸງລະ ບົບຂໍ້ມູນການເງິນ-ຊັບສິນ-ການກໍ່ສ້າງສ້ອມແປງ ແລະ ການສະໜອງວັດຖຸ.

9. ອົບຮົມການ ນຳໃຊ້ ຊອບແວຕ່າງໆ ເພື່ອວິເຄາະ ຂໍ້ມູນ ຈາກການສຳຫຼວດ ຂໍ້ມູນ ປະຈຳປີ ຈາກ ໂຮງຮຽນ ແລະ ຂໍ້ມູນ ຈາກແຫຼ່ງສຳຫຼວດອື່ນໆ ໃຫ້ ພະນັກງານ ພາຍໃນ ສູນ ສະຖິຕິ ເຕັກໂນໂລຊີ ຂ່າວສານ ການສຶກສາ ແລະ ພະນັກງານ ພາຍໃນກະຊວງສຶກສາ ຈຳນວນໜຶ່ງ ທີ່ສົນໃຈ.
10. ກະກຽມຂໍ້ມູນ ເພື່ອ ການສະຫຼຸບ ແຜນການຫ້າ ປີຄັ້ງທີ່ VI ຂອງຂະແໜງການສຶກສາ ແລະ ປະເມີນ ທົດສະຫວັດ ການສຶກສາເພື່ອທຸກຄົນ (EFA Decade Assessment ປີ 2010)
11. ສ້າງແຜນພັດທະນາ ການນຳໃຊ້ ICT ເຂົ້າໃນ ການສຶກສາ ແລະ ປັບປຸງ ລະບົບ ການລາຍງານ ເຜີຍແຜ່ ຂໍ້ມູນ ທາງ ແວບໄຊ ຂອງ ກະຊວງສຶກສາທິການ ແລະ ເພີ່ມ ບັນດາຕົວຊີ້ບອກຕ່າງໆໃສ່ ປື້ມປະມວນສະຖິຕິ ປະຈຳປີ ພ້ອມຈັດພີມເຜີຍແຜ່ ແລະ ລາຍງານຂໍ້ມູນ ໃຫ້ສູນສະຖິຕິ ແຫ່ງຊາດ ແລະ ອົງການ ອຸຍແນດສະໂກ ຕາມຮ່າງ ຄວາມຕ້ອງການ ຂອງ ແຕ່ລະພາກສ່ວນ.
12. ສືບຕໍ່ການພັດທະນາການອອກລາຍການວິທະຍຸທີ່ໃຫ້ຄວາມຮູ້ດ້ານວິທະຍາສາດ ແລະ ຂ່າວສານການເຄື່ອນໄຫວຂອງ ມຊ ໃນຄື້ນ FM 103.7 MHz ທຸກໆວັນອາທິດເວລາ 14:00 - 15:00 ມ.
13. ຈັດກິດຈະກຳສົ່ງເສີມການນຳໃຊ້ຫ້ອງສະໝຸດ ແລະ ຈັດຕັ້ງກອງປະຊຸມຈັດກິດຈະກຳ ສົ່ງເສີມການໃຊ້ຫ້ອງສະໝຸດ ຂອງ 3 ມະຫາວິທະຍາໄລ.
14. ປັບປຸງລະບົບສະຖິຕິການເກັບກຳຂໍ້ມູນນັກຮຽນຊົນເຜົ່າໃນໂຮງຮຽນສາມັນກິນນອນຊົນເຜົ່າ ໂດຍແຍກຕາມຊົນເຜົ່າແລະ ຕຳແໜ່ງງານຂອງແມ່ຍິງໃນຂະແໜງການສຶກສາ.

### 3.12. <u>ວຽກງານງົບປະມານການເງິນ</u> :

1. ແຜນງົບປະມານຂອງຂະແໜງການສຶກສາສົກງົບປະມານ 2009-2010 ທັງໝົດ : 1,671,185.19 ລ້ານກີບ, ເທົ່າກັບ 3.08 % ທຽບໃສ່ GDP, ເທົ່າກັບ 15.47 % ທຽບໃສ່ງົບປະມານລັດ, ໃນນີ້ ເງິນບໍລິຫານປົກກະຕິ 1,034,306.09 ລ້ານກີບ , ເງິນລົງທຶນ 636,879.10 ລ້ານກີບ.
2. ປັບປຸງ , ແນະນຳການນຳໃຊ້ຫົວໜ່ວຍມູນຄ່າເຂົ້າ ໃນວຽກງານການເງິນ ແລະ ການວາງແຜນໃຫ້ບັນດາພະແນກສຶກສາ ປະຈຳແຂວງ ແລະ ໂຮງຮຽນທີ່ຂຶ້ນກັບ ສູນກາງ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ທີ່ມອບໃຫ້ສຶກສາຄຸ້ມຄອງ;
3. ຈັດກອງປະຊຸມເຝິກອົບຮົມວຽກງານຄຸ້ມຄອງການບັນຊີ -ການເງິນໃຫ້ບັນດາພະແນກສຶກສາປະຈຳ ແຂວງ ແລະ ໂຮງຮຽນ ທີ່ຂຶ້ນກັບສູນກາງ ,
4. ລົງຕິດຕາມ,ກວດກາ ແລະ ຊຸກຍູ້ການໃຊ້ຈ່າຍຄ່ານ້ຳປະປາ , ໄຟຟ້າ, ອຸປະກອນ,ພາຫະນະ, ການປະຕິບັດງົບປະມານໜີ້ສິນຂອງພາກສ່ວນໂຮງຮຽນ ຕ່າງໆ.
5. ສ້າງລະບຽບຫຼັກການໃນການອອກແບບ - ກໍ່ສ້າງ ແລະ ການຄຸ້ມຄອງສັນຍາ.

6. ລົງເກັບກຳຂໍ້ມູນ ແລະ ຊ່ວຍແນະນຳກ່ຽວກັບວຽກງານອອກແບບ-ກໍ່ສ້າງ, ການເບີກຈ່າຍເງິນເດືອນຂອງພະນັກງານ, ຄູ ຢູ່ແຂວງໃນທົ່ວປະເທດ.
7. ຄົ້ນຄວ້າກົນໄກຄຸ້ມຄອງງົບປະມານ ແລະ ການລວມສູນການເງິນ ການສຶກສາຜ່ານປະຕູດຽວ.
8. ສ້າງຖານ ລະບົບຂໍ້ມູນ, ລາຍງານ ການເງິນ, ຊັບສິນ ແລະ ກໍ່ສ້າງ.
9. ສືບຕໍ່ກໍ່ສ້າງ ສ້ອມແປງ ແລະ ອອກແບບຈັດສັນເນື້ອທີ່ດິນຂອງສາງກະຊວງສຶກສາ(ຫຼັກສາມ)ໃຫ້ສຳເລັດ.

### 3.13. ວຽກງານຄຸ້ມຄອງຊັບສິນ :

1. ຈັດກອງປະຊຸມສຳມະນາວຽກງານຈັດຊື້, ແນະນຳການຂຶ້ນທະບຽນ, ຂຶ້ນບັນຊີຊັບສິນ ແລະ ເລກລະຫັດຊັບສິນໃຫ້ພາກສ່ວນອ້ອມຂ້າງກະຊວງ, ພະແນກສຶກສາປະຈຳແຂວງ ແລະ ເມືອງໃນທົ່ວປະເທດ.
2. ລົງຕິດຕາມ ການແຈກຢາຍ ແລະ ປະເມີນການນຳໃຊ້ສໍຂາວ ແລະ ປຶ້ມແບບຮຽນຢູ່ແຂວງ.
3. ຈັດກອງປະຊຸມສຳມະນາແນະນຳການນຳໃຊ້ປຶ້ມຄູ່ມືຄຸ້ມຄອງຊັບສິນໃຫ້ແຂວງ,ເມືອງທີ່ບໍ່ນອນໃນໂຄງ ການ.

### 3.14. ວຽກງານກວດກາການສຶກສາ :

1. ຄົ້ນຄ້ວາປັບປຸງຂໍ້ກຳນົດພາລະບົດບາດ, ໜ້າທີ່ ແລະ ວິທີເຮັດວຽກຂອງຄະນະກວດກາການສຶກສາຄືນໃໝ່ນັບທັງຂັ້ນສູນກາງ-ຂັ້ນແຂວງ. ຄົ້ນຄວ້າເອກະສານ, ເຄື່ອງມືວິຊາການເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານ ກວດກາການສຶກສາແຕ່ລະຂັ້ນ.
2. ລົງກວດກາ ການສຶກສາໃຫ້ໄດ້ 8 ແຂວງ ກວມເອົາເມືອງ ແລະ ໂຮງຮຽນຄື : ກວດກາການສຶກສາຮອບດ້ານຢູ່ໂຮງຮຽນວິຊາຊີບຕ່າງໆ ໃຫ້ໄດ້ ຕາມແຜນການ
3. ປະຕິບັດໂຄງການສ້າງຄວາມເຂັ້ມແຂງວຽກງານກວດກາ ປະເມີນຜົນວຽກງານການສຶກສາ. ແຕ່ລະແຂວງນະຄອນຫຼວງ ຜູ້ບໍລິຫານການສຶກສາທຸກຂັ້ນຕ້ອງເພີ່ມທະວີການກວດກາ, ກວດການ ການລາຍງານ ໃຫ້ປົກກະຕິ ຕໍ່ເນື່ອງ, ເຂັ້ມງວດ ແລະ ທັນເວລາ.

### 3.15. ວຽກງານການຮັບປະກັນຄຸນນະພາບການສຶກສາ :

1. ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງພັດທະນາ, ປັບປຸງລະບຽບການສອບເສັງຈົບຂັ້ນ ມ.4, ມ7 ຂອງສາຍ ສາມັນ ແລະ ການສອບເສັງເຂົ້າຮຽນຕໍ່ສາຍສູງຄືນໃໝ່ໃຫ້ສອດຄ່ອງກັບແຜນປະຕິຮູບລະບົບການສຶກສາແຫ່ງຊາດ ແລະ ໃຫ້ມີ ມາດຕະຖານໃກ້ ຄຽງກັບພາກພື້ນ ແລະ ສາກົນ.
2. ພັດທະນາເຄື່ອງມື ເພື່ອໄປກວດສອບຄວາມຮູ້ຜູ້ຮຽນ ຕາມຂອບພັດທະນາຂະແໜງການສຶກສາ.

3. ພັດທະນາມາດຕະຖານ, ຕົວຊີ້ບອກ, ເກນ ແລະ ວິທີການສຳລັບການສຶກສາຊັ້ນປະຖົມ,ຊັ້ນມັດທະຍົມ, ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ-ມະຫາວິທະຍາໄລ.
4. ສືບຕໍ່ພັດທະນາຄັງຂໍ້ສອບ ແລະ ຖານຂໍ້ມູນຄຸນະພາບການສຶກສາ.

IV <u>ວິທີການ ແລະ ມາດຕະການໃນການຈັດຕັ້ງປະຕິບັດ</u> :

1. ຈັດຕັ້ງເຜີຍແຜ່ແຜນການນີ້ໃຫ້ຜູ້ບໍລິຫານການສຶກສາ, ພະນັກງານ, ຄູ-ອາຈານ, ນັກຮຽນ-ນັກສຶກສາໄດ້ເຂົ້າໃຈຢ່າງ ເລິກເຊິ່ງ ແລະ ສາມາດເອົາໄປຜັນຂະຫຍາຍຈັດຕັ້ງປະຕິບັດໃຫ້ມີໝາກຜົນ.
2. ປັບປຸງແບບແຜນວິທີເຮັດວຽກ, ວິທີປະສານງານລະຫວ່າງຂະແໜງການສຶກສາ ດ້ວຍກັນ ແລະ ຂະແໜງການອື່ນທັງສາຍຕັ້ງ ແລະ ສາຍຂວາງ, ລະຫວ່າງໂຮງຮຽນກັບຄອບຄົວ ແລະ ສັງຄົມໃຫ້ສອດຄ່ອງ ແລະ ດຳເນີນໄປຢ່າງມີປະສິດທິພາບ.
3. ບັນດາກົມ ແລະ ພະແນກສຶກສາປະຈຳແຂວງ ຕ້ອງນຳເອົາແຜນການນີ້ໄປເປັນບ່ອນອີງໃນ ການຜັນ ຂະຫຍາຍເປັນແຜນການລະອຽດ ແລະ ຊີ້ນຳ - ນຳພາການຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບສະພາບການຕົວຈິງ ຂອງທ້ອງຖິ່ນຕົນ.
4. ຍາດແຍ່ງເອົາການສະໜັບສະໜູນຈາກອຳນາດການປົກຄອງ ແລະ ຂົນຂວາຍເອົາການຮ່ວມມືຈາກພາກສ່ວນຕ່າງ ໆ ຂອງສັງຄົມທັງພາຍໃນ ແລະ ຕ່າງປະເທດ.
5. ຜູ້ບໍລິຫານການສຶກສາແຕ່ລະຂັ້ນຕ້ອງຊີ້ນຳ, ນຳພາຕິດຕາມ, ກວດກາ ແລະ ພ້ອມກັນນັ້ນ ຕ້ອງສະຫຼຸບ ລາຍງານໃຫ້ຂັ້ນເທິງຂອງຕົນຊາບຢ່າງເປັນລະບົບປົກກະຕິ.
6. ຍົກລະດັບຄວາມຮູ້, ຄວາມສາມາດ ຂອງຜູ້ບໍລິຫານການສຶກສາ, ຄູ-ອາຈານ ໃຫ້ສູງຂຶ້ນ ພ້ອມກັນນັ້ນກໍ່ມີນະໂຍບາຍຕໍ່ເຂົາເຈົ້າຢ່າງເໝາະສົມ ເພື່ອໃຫ້ເຂົາເຈົ້າມີຄວາມສະຫງົບ ອຸ່ນອ່ຽນມີຄວາມຮັບຜິດ ຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ.
7. ເອົາໃຈໃສ່ສຶກສາອົບຮົມແນວຄິດໃຫ້ແກ່ຜູ້ບໍລິຫານການສຶກສາ, ພະນັກງານ, ຄູ - ອາຈານ ແລະ ນັກ ຮຽນ-ນັກສຶກສາຢ່າງເປັນລະບົບຕໍ່ເນື່ອງ ແລະ ເຮັດດ້ວຍຫຼາຍຮູບການ. ການສຶກສາອົບຮົມແນວຄິດ ນັ້ນ ຕ້ອງຕິດພັນກັບສະພາບຕົວຈິງ, ຕິດພັນກັບການປະຕິບັດນະໂຍບາຍ ແລະ ລະບຽບກົດໝາຍ.
8. ເພີ່ມທະວີການລົງທຶນໃສ່ການສຶກສາຢ່າງເໝາະສົມພ້ອມທັງປັບປຸງກົນໄກການນຳໃຊ້ທຶນໃຫ້ສະດວກ ແລະ ວ່ອງໄວ.
9. ເພີ່ມທະວີຄວາມຮັບຜິດຊອບຂອງຄະນະພັກ, ອຳນາດການປົກຄອງແຕ່ລະຂັ້ນ ໃນການຈັດຕັ້ງປະຕິບັດແຜນພັດທະນາການສຶກສາແຕ່ລະໄລຍະ.

V <u>ເອກະສານຊ້ອນທ້າຍເຊິ່ງປະກອບດ້ວຍ:</u>

1. ຕາຕະລາງຕ່າງໆ.
   - ສະຖິຕິ ສາມັນສຶກສາ ( ຕາຕະລາງ ທີ 1- 38 )

- ສະຖິຕິ ວິຊາຊີບຊັ້ນຕົ້ນ ແລະ ເຕັກນິກຊັ້ນກາງ ( ຕາຕະລາງ ທີ 39 - 41 )

- ສະຖິຕິ ໂຮງຮຽນສ້າງຄູ ( ຕາຕະລາງ ທີ 42-45 )

- ສະຖິຕິ ອາຊີວະສຶກສາຊັ້ນສູງ ແລະ ປະລິນຍາຕີ ( ຕາຕະລາງ ທີ 46-47 )

- ແຜນການລົງທຶນຂອງລັດ ສົກປີ 2009-2010

- ແຜນງົບປະມານ ປະຈໍາ ສົກ ປີ 2009-2010

2. ປິດໂອ້ລົມຂອງທ່ານນາຍົກລັດຖະມົນຕີ.

3. ມະຕິກອງປະຊຸມ.

# ຕາຕະລາງ ຊ້ອນທ້າຍ

## ຈຳນວນ ໂຮງຮຽນ, ຫ້ອງຮຽນ, ຄູສອນ, ພະນັກງານບໍລິຫານ, ນັກຮຽນ ລ້ຽງເດັກ-ອະນຸບານ ແລະຫ້ອງກຽມປະຖົມ ຕາມແຂວງ (ລັດ ແລະ ເອກະຊົນ)

| ລ/ດ | ຊື່ແຂວງ | ຈຳນວນ ໂຮງຮຽນ | ຈຳນວນຫ້ອງ ກຽມປະຖົມ | ຈຳນວນຫ້ອງ ລ້ຽງເດັກ | ຈຳນວນ ຫ້ອງຮຽນ ອະນຸບານ | ຈຳນວນຄູສອນ,ບໍລິຫານ ໂຮງຮຽນອະນຸບານ ແລະ ຫ້ອງກຽມ | | | | | | ລ້ຽງເດັກ | | | ອະນຸບານ | | | ນັກຮຽນ ກຽມປະຖົມ | | | ລ້ຽງເດັກ-ອະນຸບານ ແລະຫ້ອງກຽມປະຖົມ | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | | | ຄູປະຈຳການ | | ຄູສັນຍາຈ້າງ ແລະອາສາສະໝັກ | | ພ/ງ ບໍລິຫານ | | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | | | |
| | | | | | | ລວມ | ຍິງ | ລວມ | ຍິງ | ລວມ | ຍິງ | | | | | | | | | | ລວມ | ຍິງ | ຊາຍ |
| 01 | ນະຄອນຫຼວງວຽງຈັນ | 193 | 153 | 120 | 724 | 1,126 | 1,117 | 15 | 15 | 162 | 140 | 2,125 | 1,053 | 1,072 | 14,903 | 7,202 | 7,701 | 3,751 | 1,841 | 1,910 | 20,779 | 10,096 | 10,683 |
| 02 | ຜົ້ງສາລີ | 53 | 34 | 3 | 71 | 111 | 111 | 11 | 11 | 8 | 8 | 37 | 15 | 22 | 1,398 | 699 | 699 | 878 | 412 | 466 | 2,313 | 1,126 | 1,187 |
| 03 | ຫຼວງນ້ຳທາ | 68 | 52 | 1 | 83 | 136 | 136 | 30 | 30 | 2 | 2 | 7 | 3 | 4 | 1,536 | 764 | 772 | 912 | 451 | 461 | 2,455 | 1,218 | 1,237 |
| 04 | ອຸດົມໄຊ | 14 | 88 | 3 | 31 | 133 | 133 | 8 | 8 | - | - | 85 | 44 | 41 | 828 | 436 | 392 | 2,364 | 1,228 | 1,136 | 3,277 | 1,708 | 1,569 |
| 05 | ບໍ່ແກ້ວ | 71 | 8 | 1 | 85 | 99 | 99 | - | - | 1 | 1 | 12 | 7 | 5 | 2,148 | 1,124 | 1,024 | 196 | 106 | 90 | 2,356 | 1,237 | 1,119 |
| 06 | ຫຼວງພະບາງ | 12 | 218 | 5 | 38 | 246 | 246 | 43 | 43 | 3 | 3 | 154 | 77 | 77 | 1,102 | 574 | 528 | 5,745 | 2,913 | 2,832 | 7,001 | 3,564 | 3,437 |
| 07 | ຫົວພັນ | 57 | 13 | 12 | 108 | 100 | 100 | 15 | 15 | 10 | 10 | 126 | 54 | 72 | 2,074 | 1,075 | 999 | 398 | 185 | 213 | 2,598 | 1,314 | 1,284 |
| 5.4.2 | • ສາຍສັງຄົມ | 11+3 | 383 | 268 | 115 | - | - | - | - | - | - | 203 | 134 | 69 | 180 | 134 | 46 | | | | | | | | | |
| 5.4.3 | • ສາຍພາສາອັງກິດ | 11+3 | 456 | 251 | 205 | - | - | - | - | - | - | 288 | 166 | 122 | 168 | 85 | 83 | | | | | | | | | |
| 5.4.4 | • ສາຍພາສາຝຣັ່ງ | 11+3 | - | - | - | - | - | - | - | - | - | - | - | - | - | - | - | | | | | | | | | |
| 5.4.5 | • ສາຍສັງຄົມ (ຫຼັກສູດໃໝ່) | 11+3 | 148 | 101 | 47 | - | - | - | 148 | 101 | 47 | - | - | - | - | - | - | | | | | | | | | |
| 5.4.6 | • ສາຍຄູພາສາລາວ (ຫຼັກສູດໃໝ່) | 11+3 | 82 | 55 | 27 | - | - | - | 82 | 55 | 27 | - | - | - | - | - | - | | | | | | | | | |
| 5.4.7 | • ສາຍພາສາອັງກິດ (ຫຼັກສູດໃໝ່) | 11+3 | 345 | 191 | 154 | - | - | - | 345 | 191 | 154 | - | - | - | - | - | - | | | | | | | | | |
| 5.4.8 | • ສາຍ ຄະນິດສາດ(ຫຼັກສູດໃໝ່) | 11+3 | 181 | 103 | 78 | - | - | - | 85 | 54 | 31 | 54 | 25 | 29 | 42 | 24 | 18 | | | | | | | | | |
| 5.4.9 | • ສາຍ ທຳມະຊາດ(ຫຼັກສູດໃໝ່) | 11+3 | 88 | 57 | 31 | - | - | - | 88 | 57 | 31 | - | - | - | - | - | - | | | | | | | | | |
| 5.5 | - ວິທະຍາໄລຄູ ຈຳປາສັກ | 11+3 | 2,818 | 1,509 | 1,309 | - | - | - | 1,059 | 542 | 517 | 939 | 525 | 414 | 820 | 442 | 378 | 144 | 72 | 72 | 116 | 56 | 60 | 28 | 16 | 12 |
| 5.5.1 | • ສາຍທຳມະຊາດ | 11+3 | 353 | 203 | 150 | - | - | - | - | - | - | 168 | 99 | 69 | 185 | 104 | 81 | | | | | | | | | |
| 5.5.2 | • ສາຍສັງຄົມ | 11+3 | 464 | 276 | 188 | - | - | - | - | - | - | 220 | 135 | 85 | 244 | 141 | 103 | | | | | | | | | |
| 5.5.3 | • ສາຍພາສາອັງກິດ | 11+3 | 1,218 | 596 | 622 | - | - | - | 366 | 164 | 202 | 491 | 249 | 242 | 361 | 183 | 178 | | | | | | | | | |
| 5.5.4 | • ສາຍພາສາຝຣັ່ງ | 11+3 | 141 | 86 | 55 | - | - | - | 51 | 30 | 21 | 60 | 42 | 18 | 30 | 14 | 16 | | | | | | | | | |
| 5.5.5 | • ສາຍສັງຄົມ (ຫຼັກສູດໃໝ່) | 11+3 | 138 | 80 | 58 | - | - | - | 138 | 80 | 58 | - | - | - | - | - | - | | | | | | | | | |
| 5.5.6 | • ສາຍຄູພາສາລາວ (ຫຼັກສູດໃໝ່) | 11+3 | 86 | 64 | 22 | - | - | - | 86 | 64 | 22 | - | - | - | - | - | - | | | | | | | | | |
| 5.5.7 | • ສາຍພາສາອັງກິດ (ຫຼັກສູດໃໝ່) | 11+3 | 70 | 35 | 35 | - | - | - | 70 | 35 | 35 | - | - | - | - | - | - | | | | | | | | | |
| 5.5.8 | • ສາຍ ຄະນິດສາດ(ຫຼັກສູດໃໝ່) | 11+3 | 74 | 36 | 38 | - | - | - | 74 | 36 | 38 | - | - | - | - | - | - | | | | | | | | | |
| 5.5.9 | • ສາຍ ທຳມະຊາດ(ຫຼັກສູດໃໝ່) | 11+3 | 120 | 76 | 44 | - | - | - | 120 | 76 | 44 | - | - | - | - | - | - | | | | | | | | | |
| 5.5.10 | • ປະລິນຍາຕີຕໍ່ເນື່ອງ (ພັກແລ້ງ) | | 154 | 57 | 97 | - | - | - | 154 | 57 | 97 | - | - | - | - | - | - | | | | | | | | | |

# ຈຳນວນນັກຮຽນ, ຄູ-ອາຈານ ແລະພະນັກງານຂອງໂຮງຮຽນສ້າງຄູ ແລະ ວິທະຍາໄລຄູ ຕາມຂັ້ນຮຽນ, ຕາມລະບົບ ແລະ ຕາມໂຮງຮຽນ

| ລ/ດ | ຊື່ໂຮງຮຽນ | ລະບົບ | ຈຳນວນນັກຮຽນທັງໝົດ | | | ປີກຽມ | | | ຈຳນວນນັກຮຽນຄູ ປີທີ 1 | | | ປີທີ 2 | | | ປີທີ 3 | | | ຄູສອນ/ບໍລິຫານ | | | ຄູສອນ | | | ບໍລິຫານ | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ |
| 5.6 | - ສ້າງຄູດົງຄຳຊ້າງ | 11+3 | 234 | 96 | 138 | - | - | - | 97 | 36 | 61 | 89 | 34 | 55 | 48 | 26 | 22 | 52 | 31 | 21 | 44 | 26 | 18 | 8 | 5 | 3 |
| 5.6.1 | • ສາຍພາສາອັງກິດ ( ລະບົບພິເສດ ) | 11+3 | 234 | 96 | 138 | | | - | 97 | 36 | 61 | 89 | 34 | 55 | 48 | 26 | 22 | | | | | | | | | |
| 5.7 | - ສ້າງຄູຫຼວງນ້ຳທາ | - | 468 | 236 | 232 | 46 | 25 | 21 | 299 | 152 | 147 | 86 | 45 | 41 | 37 | 14 | 23 | 91 | 40 | 51 | 78 | 35 | 43 | 13 | 5 | 8 |
| 5.7.1 | • ສາຍທຳມະຊາດ | 11+3 | 43 | 22 | 21 | - | - | - | - | - | - | 43 | 22 | 21 | - | - | - | | | | | | | | | |
| 5.7.2 | • ສາຍພາສາອັງກິດ | 11+3 | 170 | 79 | 91 | 46 | 25 | 21 | 44 | 17 | 27 | 43 | 23 | 20 | 37 | 14 | 23 | | | | | | | | | |
| 5.7.3 | • ສາຍຄູພາສາລາວ (ຫຼັກສູດໃໝ່) | 11+3 | 154 | 92 | 62 | - | - | - | 154 | 92 | 62 | - | - | - | - | - | - | | | | | | | | | |
| 5.7.4 | • ສາຍຄະນິດສາດ (ຫຼັກສູດໃໝ່) | 11+3 | 101 | 43 | 58 | - | - | - | 101 | 43 | 58 | - | - | - | - | - | - | | | | | | | | | |
| 5.8 | - ສ້າງຄູສາລະວັນ | | 622 | 320 | 302 | - | - | - | 310 | 158 | 152 | 191 | 108 | 83 | 121 | 54 | 67 | 70 | 33 | 37 | 70 | 33 | 37 | 8 | 4 | 4 |
| 5.8.1 | • ສາຍທຳມະຊາດ | 11+3 | 44 | 22 | 22 | - | - | - | - | - | - | 44 | 22 | 22 | - | - | - | | | | | | | | | |
| 5.8.2 | • ສາຍພາສາອັງກິດ | 11+3 | 412 | 192 | 220 | - | - | - | 144 | 52 | 92 | 147 | 86 | 61 | 121 | 54 | 67 | | | | | | | | | |
| 5.8.3 | • ສາຍຄູພາສາລາວ (ຫຼັກສູດໃໝ່) | 11+3 | 90 | 60 | 30 | - | - | - | 90 | 60 | 30 | - | - | - | - | - | - | | | | | | | | | |
| 5.8.4 | • ສາຍຄະນິດສາດ (ຫຼັກສູດໃໝ່) | 11+3 | 76 | 46 | 30 | - | - | - | 76 | 46 | 30 | - | - | - | - | - | - | | | | | | | | | |
| | **ລວມ** | | **16,038** | **8,903** | **7,135** | **137** | **68** | **69** | **6,831** | **3,959** | **2,872** | **4,852** | **2,710** | **2,142** | **4,289** | **2,201** | **2,088** | **992** | **464** | **528** | **795** | **371** | **424** | **205** | **97** | **108** |

ໝາຍເຫດ : - ແຫຼ່ງຂໍ້ມູນໄດ້ຈາກການເກັບກຳຂໍ້ມູນປະຈຳປີ ຈາກໂຮງຮຽນ ວັນທີ 1/10/2008

- (M) ຂໍ້ມູນຢູ່ນຳລະບົບຮຽນອື່ນ

## ຈຳນວນນັກສຶກສາ ລະດັບປະລິນຍາໂທ ແລະ ປະລິນຍາຕີ ຕາມຂັ້ນຮຽນ,ຕາມເພດ ແລະຕາມຄະນະວິຊາ (ພາກລັດແລະເອກະຊົນ)



| ລ/ດ | ສະຖາບັນ ແລະ ຄະນະວິຊາ | ລວມນັກຮຽນ | | | ປີກຽມ | | | ປີທີ 1 | | | ປີທີ 2 | | | ປີທີ 3 | | | ປີທີ 4 | | | ປີທີ 5 | | | ປີທີ 6 | | | ປີທີ 7 | | | ຄູສອນ | | | ພະນັກງານ | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ |
| I | **ລະດັບ ປະລິນຍາໂທ** | 387 | 128 | 259 | - | - | - | 195 | 62 | 133 | 192 | 66 | 126 | - | - | - | - | - | - | - | - | - | - | - | - | - | - | - | | | - | | | - |
| 1 | ຄະນະ ອັກສອນສາດ | 49 | 16 | 33 | - | - | - | 28 | 9 | 19 | 21 | 7 | 14 | | | | | | | | | | | | | | | | | | - | | | - |
| 2 | ຄະນະ ປ່າໄມ້ ( ມຊ) | 44 | 6 | 38 | - | - | - | 29 | 4 | 25 | 15 | 2 | 13 | - | - | - | | | - | | | | | | | | | | | | - | | | - |
| 3 | ມະຫາວິທະຍາໄລ ວິທະຍາສາດສຸຂະພາບ | 143 | 46 | 97 | - | - | - | 51 | 14 | 37 | 92 | 32 | 60 | - | - | - | - | - | - | | | | | | | | | | | | - | | | - |
| 4 | ວິທະຍາໄລ ລັດຕະນະ | 95 | 34 | 61 | | | - | 58 | 24 | 34 | 37 | 10 | 27 | | | - | | | - | | | | | | | | | | 24 | 2 | 22 | 8 | 4 | 4 |
| 5 | ຄອມເຊັນເຕີ | 56 | 26 | 30 | | | - | 29 | 11 | 18 | 27 | 15 | 12 | - | - | - | | | | | | | | | | | | | | | - | | | - |
| II | **ລະດັບ ປະລິນຍາຕີ** | 53,780 | 22,592 | 31,462 | 1,281 | 661 | 620 | 13,625 | 5,749 | 8,007 | 11,439 | 4,751 | 6,721 | 10,016 | 4,194 | 5,847 | 9,821 | 4,122 | 5,741 | 7,352 | 2,987 | 4,408 | 246 | 128 | 118 | - | - | - | 2,485 | 933 | 1,552 | 450 | 217 | 233 |
| II A | **ລະດັບ ປະລິນຍາຕີ ພາກລັດ** | 42,298 | 17,123 | 25,449 | 1,252 | 652 | 600 | 10,331 | 4,253 | 6,209 | 9,336 | 3,736 | 5,633 | 8,128 | 3,292 | 4,861 | 7,732 | 3,071 | 4,703 | 5,273 | 1,991 | 3,325 | 246 | 128 | 118 | - | - | - | 1,585 | 613 | 972 | 295 | 142 | 153 |
| 1 | ຄະນະ ອັກສອນສາດ ( ມຊ) | 3,927 | 1,831 | 2,096 | 152 | 40 | 112 | 1,064 | 514 | 550 | 844 | 405 | 439 | 751 | 347 | 404 | 626 | 295 | 331 | 490 | 230 | 260 | - | - | - | | | - | 153 | 61 | 92 | 9 | 6 | 3 |
| 2 | ຄະນະ ວິທະຍາສາດ ( ມຊ) | 3,019 | 1,073 | 1,946 | - | - | - | 776 | 259 | 517 | 728 | 263 | 465 | 574 | 210 | 364 | 513 | 161 | 352 | 428 | 180 | 248 | - | - | - | | | - | 115 | 41 | 74 | 12 | 7 | 5 |
| 3 | ຄະນະ ເສດຖະກິດ ແລະ ຄຸ້ມຄອງ ( ມຊ) | 5,009 | 2,588 | 2,421 | 1,100 | 612 | 488 | 867 | 413 | 454 | 1,047 | 491 | 556 | 1,024 | 537 | 487 | 971 | 535 | 436 | - | - | - | - | - | - | | | - | 75 | 28 | 47 | 10 | 1 | 9 |
| 4 | ຄະນະ ນິຕິສາດ ແລະ ລັດຖະສາດ ( ມຊ) | 4,002 | 1,139 | 2,863 | | | - | 764 | 251 | 513 | 896 | 251 | 645 | 881 | 235 | 646 | 800 | 213 | 587 | 661 | 189 | 472 | | | - | | | - | 118 | 50 | 68 | 20 | 14 | 6 |
| 5 | ຄະນະ ສຶກສາສາດ ( ມຊ) | 4,322 | 2,138 | 2,184 | | | - | 1,188 | 569 | 619 | 885 | 409 | 476 | 692 | 324 | 368 | 792 | 424 | 368 | 765 | 412 | 353 | | | - | | | - | 250 | 164 | 86 | 16 | 8 | 8 |
| 6 | ຄະນະ ວິສະວະກຳສາດ ( ມຊ) | 2,528 | 281 | 2,521 | - | - | - | 655 | 89 | 697 | 270 | 16 | 287 | 248 | 11 | 262 | 722 | 93 | 671 | 633 | 72 | 604 | - | - | - | - | - | - | | | - | | | - |
| 7 | ຄະນະ ສະຖາປັດຕະຍະກຳສາດ( ມຊ) | 815 | 114 | 701 | - | - | - | 207 | 32 | 175 | 211 | 24 | 187 | 125 | 10 | 115 | 152 | 33 | 119 | 120 | 15 | 105 | - | - | - | - | - | - | 40 | 8 | 32 | 7 | 2 | 5 |
| 8 | ມະຫາວິທະຍາໄລ ວິທະຍາສາດສຸຂະພາບ | 2,763 | 1,653 | 1,110 | - | - | - | 706 | 392 | 314 | 729 | 465 | 264 | 454 | 261 | 193 | 309 | 185 | 124 | 379 | 247 | 132 | 186 | 103 | 83 | - | - | - | 118 | 52 | 66 | 96 | 57 | 39 |
| 9 | ຄະນະ ປ່າໄມ້ ( ມຊ) | 1,443 | 380 | 1,063 | - | - | - | 402 | 133 | 269 | 424 | 112 | 312 | 281 | 53 | 228 | 246 | 64 | 182 | 90 | 18 | 72 | - | - | - | - | - | - | 152 | 40 | 112 | 26 | 12 | 14 |
| 10 | ຄະນະ ກະເສດສາດ ( ມຊ) | 403 | 103 | 300 | - | - | - | 105 | 35 | 70 | 61 | 9 | 52 | 63 | 13 | 50 | 101 | 27 | 74 | 73 | 19 | 54 | - | - | - | - | - | - | 60 | 13 | 47 | 12 | 5 | 7 |
| 11 | ຄະນະ ວິທະຍາສາດ ສັງຄົມ ( ມຊ) | 2,546 | 1,278 | 1,268 | - | - | - | 729 | 376 | 353 | 663 | 342 | 321 | 563 | 277 | 286 | 548 | 267 | 281 | 43 | 16 | 27 | - | - | - | - | - | - | 74 | 39 | 35 | 5 | 3 | 2 |
| 12 | ມະຫາວິທະຍາໄລ ຈຳປາສັກ | 3,882 | 1,625 | 2,257 | - | - | - | 741 | 332 | 409 | 753 | 286 | 467 | 932 | 432 | 500 | 707 | 279 | 428 | 749 | 296 | 453 | | | - | | | - | 234 | 57 | 177 | 27 | 7 | 20 |
| 13 | ມະຫາວິທະຍາໄລ ສຸພານຸວົງ | 4,115 | 1,624 | 2,491 | - | - | - | 1,122 | 430 | 692 | 905 | 339 | 566 | 776 | 311 | 465 | 713 | 314 | 399 | 539 | 205 | 334 | 60 | 25 | 35 | - | - | - | 124 | 32 | 92 | 31 | 6 | 25 |
| 14 | ສະຖາບັນ ວິຈິດສິນແຫ່ງຊາດ | 104 | 8 | 96 | - | - | - | 24 | 2 | 22 | 30 | 3 | 27 | 20 | 2 | 18 | 18 | - | 18 | 12 | 1 | 11 | | | - | | | - | | | - | | | - |
| 15 | ສະຖາບັນການທະນາຄານ | 90 | 47 | 43 | | | - | 90 | 47 | 43 | - | - | - | - | - | - | - | - | - | - | - | - | - | - | - | | | | 40 | 19 | 21 | 21 | 13 | 8 |
| 16 | ວິທະຍາໄລກົດໝາຍ (ສະຫວັນນະເຂດ) | 1,718 | 439 | 1,279 | | | - | 345 | 93 | 252 | 414 | 106 | 308 | 416 | 101 | 315 | 291 | 73 | 218 | 252 | 66 | 186 | - | - | - | | | | | | - | | | - |
| 17 | ວິທະຍາການ ສາທາລະນະສຸກ | 59 | 40 | 19 | | | - | 59 | 40 | 19 | 0 | 0 | - | 0 | 0 | - | 0 | 0 | - | 0 | 0 | - | 0 | 0 | - | | | - | | | - | | | - |
| 18 | ສູນການສຶກສາສິ່ງແວດລ້ອມ ແລະການພັດທະນາ | 1,553 | 762 | 791 | 0 | 0 | - | 487 | 246 | 241 | 476 | 215 | 261 | 328 | 168 | 160 | 223 | 108 | 115 | 39 | 25 | 14 | | | | | | | 32 | 9 | 23 | 3 | 1 | 2 |
| II B | **ປະລິນຍາຕີ ພາກ ເອກະຊົນ 32 ແຫ່ງ** | 11,482 | 5,469 | 6,013 | 29 | 9 | 20 | 3,294 | 1,496 | 1,798 | 2,103 | 1,015 | 1,088 | 1,888 | 902 | 986 | 2,089 | 1,051 | 1,038 | 2,079 | 996 | 1,083 | - | - | - | - | - | - | 900 | 320 | 580 | 155 | 75 | 80 |

※ ຈຳນວນໂຮງຮຽນເອກະຊົນ 5ແຫ່ງ ທີ່ບໍ່ໄດ້ຮັບອະນຸຍາດເປັນ ປະລິນຍາຕີມີ:ວິທະຍາໄລ ລາວສຳພັນມິດໄມຕີ, ວິທະຍາໄລ ໄຊພັດທະນາ(ອຸດົມໄຊ), ສະຖາບັນ ສາດສະໜັນ, ວິທະຍາໄລ ສະຫວັນບໍລິຫານ ທຸລະກິດ(ສະຫວັນນະເຂດ), ວິທະຍາໄລ ຄອມປິຊ (ອັດຕະປື)

## ຈຳນວນນັກສຶກສາ ລະດັບເຕັກນິກຊັ້ນສູງ ຕາມຊັ້ນຮຽນ,ຕາມເພດ ແລະຕາມຄະນະວິຊາ (ພາກລັດແລະເອກະຊົນ)

| ລ/ດ | ສະຖາບັນ ແລະ ຄະນະວິຊາ | ລວມນັກຮຽນ | | | ປີກຽມ | | | ປີທີ 1 | | | ປີທີ 2 | | | ປີທີ 3 | | | ປີທີ 4 | | | ປີທີ 5 | | | ປີທີ 6 | | | ປີທີ 7 | | | ຄູສອນ | | | ພະນັກງານ | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ |
| III | **ລະດັບຊັ້ນສູງ** | 46,022 | 19,979 | 26,043 | 770 | 423 | 347 | 16,447 | 7,308 | 9,139 | 15,446 | 6,662 | 8,784 | 11,513 | 5,100 | 6,413 | 1,821 | 378 | 1,443 | 25 | 11 | 14 | - | - | - | - | - | - | 1,760 | 489 | 1,271 | 338 | 172 | 166 |
| III A | **ລະດັບຊັ້ນສູງ ພາກລັດ** | 23,038 | 9,192 | 13,846 | - | - | - | 8,461 | 3,504 | 4,957 | 8,157 | 3,306 | 4,851 | 5,066 | 2,123 | 2,943 | 1,354 | 162 | 1,192 | - | - | - | - | - | - | - | - | - | 394 | 123 | 271 | 65 | 31 | 34 |
| 1 | ຄະນະວິສະວະກຳສາດ | 2,989 | 359 | 2,630 | - | - | - | 222 | 29 | 193 | 743 | 106 | 637 | 812 | 77 | 735 | 1,212 | 147 | 1,065 | - | - | - | | | - | | | - | (M) | (M) | (M) | (M) | (M) | (M) |
| 2 | ຄະນະ ປ່າໄມ້ ( ມຊ) | 337 | 79 | 258 | - | - | - | 52 | 16 | 36 | 116 | 32 | 84 | 169 | 31 | 138 | - | - | - | | | - | | | - | | | - | (M) | (M) | (M) | (M) | (M) | (M) |
| 3 | ຄະນະ ກະເສດສາດ ( ມຊ) | 452 | 162 | 290 | - | - | - | 114 | 51 | 63 | 153 | 39 | 114 | 185 | 72 | 113 | - | - | - | - | - | - | - | - | - | | | - | (M) | (M) | (M) | (M) | (M) | (M) |
| 4 | ມະຫາວິທະຍາໄລ ຈຳປາສັກ | 1,041 | 344 | 697 | | | | 355 | 129 | 226 | 270 | 103 | 167 | 274 | 97 | 177 | 142 | 15 | 127 | - | - | - | | | - | | | - | (M) | (M) | (M) | (M) | (M) | (M) |
| 5 | ໂຮງຮຽນເຕັກນິກ ປາກປ່າສັກ | 4,545 | 2,752 | 1,793 | | | | 1,511 | 889 | 622 | 1,613 | 984 | 629 | 1,421 | 879 | 542 | - | - | - | - | - | - | - | - | - | | | | (M) | (M) | (M) | (M) | (M) | (M) |
| 6 | ເຕັກນິກ ລາວ-ເຢຍລະມັນ | 434 | 5 | 429 | - | - | - | 235 | 3 | 232 | 199 | 2 | 197 | - | - | - | - | - | - | - | - | - | - | - | - | - | - | - | (M) | (M) | (M) | (M) | (M) | (M) |
| 7 | ເຕັກນິກ-ວິຊາຊີບ (ຫລວງພະບາງ) | 837 | 267 | 570 | - | - | - | 399 | 86 | 313 | 430 | 84 | 346 | 8 | - | 8 | - | - | - | - | - | - | - | - | - | - | | | (M) | (M) | (M) | (M) | (M) | (M) |
| 8 | ເຕັກນິກ ສັບພະວິຊາ | 598 | 117 | 481 | - | - | - | 323 | 55 | 268 | 275 | 62 | 213 | - | - | - | - | - | - | | | | | | | | | | (M) | (M) | (M) | (M) | (M) | (M) |
| 9 | ເຕັກນິກ ແຂວງວຽງຈັນ | 710 | 287 | 423 | - | - | - | 84 | - | 84 | 195 | 88 | 107 | 431 | 199 | 232 | - | - | - | - | - | - | | | - | | | - | (M) | (M) | (M) | (M) | (M) | (M) |
| 10 | ເຕັກນິກ ປາກເຊ | 1,647 | 508 | 1,139 | - | - | - | 866 | 276 | 590 | 781 | 232 | 549 | - | - | - | - | - | - | - | - | - | - | - | - | - | | | 72 | 26 | 46 | 7 | 3 | 4 |
| 11 | ໂຮງຮຽນເຕັກນິກ-ວິຊາຊີບສະຫວັນນະເຂດ | 641 | 306 | 335 | - | - | - | 194 | 98 | 96 | 165 | 73 | 92 | 282 | 135 | 147 | - | - | - | | | - | | | - | | | - | (M) | (M) | (M) | (M) | (M) | (M) |
| 12 | ເຕັກນິກ ກະສິກຳ ດົງຄຳຊ້າງ | 257 | 75 | 182 | - | - | - | 257 | 75 | 182 | - | - | - | - | - | - | | | | - | - | - | - | | | - | | | (M) | (M) | (M) | (M) | (M) | (M) |
| 13 | ວິຊາຊີບມິດຕະພາບວຽງຈັນ-ຮ່າໂນ້ຍ ຊັ້ນສູງ | 557 | 259 | 298 | - | - | - | 368 | 156 | 212 | 189 | 103 | 86 | - | - | - | - | - | - | | | | | | | | | | (M) | (M) | (M) | (M) | (M) | (M) |
| 14 | ສູນພັດທະນາ ອາຊີວະສຶກສາ | 131 | 26 | 105 | - | - | - | 8 | - | 8 | 68 | 10 | 58 | 55 | 16 | 39 | - | - | - | | | - | | | - | | | - | 40 | 14 | 26 | 5 | 3 | 2 |
| 15 | ເຕັກນິກ-ວິຊາຊີບ ແຂວງຄຳມ່ວນ | 261 | 125 | 136 | - | - | - | 261 | 125 | 136 | - | - | - | - | - | - | - | - | - | | | | | | | | | | (M) | (M) | (M) | (M) | (M) | (M) |
| 16 | ວິທະຍາໄລການເງິນພາກເໜືອ(ຫຼວງພະບາງ) | 1,321 | 635 | 686 | | | | 479 | 230 | 249 | 637 | 296 | 341 | 205 | 109 | 96 | - | - | - | | | | | | | | | | 30 | 8 | 22 | 7 | 3 | 4 |
| 17 | ວິທະຍາໄລ ການເງິນ ພາກກາງ | 1,601 | 720 | 881 | - | - | - | 483 | 258 | 225 | 500 | 224 | 276 | 618 | 238 | 380 | - | - | - | | | | | | | | | | 134 | 40 | 94 | 23 | 4 | 19 |
| 18 | ວິທະຍາໄລ ການເງິນພາກໃຕ້ | 2,398 | 893 | 1,505 | | | - | 1,057 | 381 | 676 | 976 | 373 | 603 | 365 | 139 | 226 | - | - | - | | | - | | | - | | | - | 95 | 32 | 63 | 3 | 3 | - |
| 19 | ສະຖາບັນການທະນາຄານ | 2,042 | 1,184 | 858 | - | - | - | 1,023 | 584 | 439 | 825 | 488 | 337 | 194 | 112 | 82 | - | - | - | | | - | | | - | | | - | | | - | | | - |
| 20 | ໂຫລະຄົມ ແລະ ສູນຝຶກ | 231 | 88 | 143 | - | - | - | 162 | 62 | 100 | 22 | 7 | 15 | 47 | 19 | 28 | - | - | - | - | - | - | - | - | - | | | - | 23 | 3 | 20 | 20 | 15 | 5 |
| 21 | ສະຖາບັນ ວິຈິດສິນແຫ່ງຊາດ | 8 | 1 | 7 | - | - | - | 8 | 1 | 7 | - | - | - | - | - | - | - | - | - | | | - | | | - | | | - | | | - | | | - |
| III B | **ຊັ້ນສູງ ພາກເອກະຊົນ 79 ແຫ່ງ** | 22,984 | 10,787 | 12,197 | 770 | 423 | 347 | 7,986 | 3,804 | 4,182 | 7,289 | 3,356 | 3,933 | 6,447 | 2,977 | 3,470 | 467 | 216 | 251 | 25 | 11 | 14 | - | - | - | - | - | - | 1,366 | 366 | 1,000 | 273 | 141 | 132 |
| | **ລວມ** | 100,189 | 42,699 | 57,764 | 2,051 | 1,084 | 967 | 30,267 | 13,119 | 17,279 | 27,077 | 11,479 | 15,631 | 21,529 | 9,294 | 12,260 | 11,642 | 4,500 | 7,184 | 7,377 | 2,998 | 4,422 | 246 | 128 | 118 | - | - | - | 4,245 | 1,422 | 2,823 | 788 | 389 | 399 |

**ບົດໂອ້ລົມ**

**ຂອງທ່ານ ບົວສອນ ບຸບຜາວັນ, ນາຍົກລັດຖະມົນຕີ ແຫ່ງ ສປປລາວ,**

**ຕໍ່ກອງປະຊຸມ ຜູ້ບໍລິຫານການສຶກສາທົ່ວປະເທດ ປະຈຳປີ 2009**

**( ວັນທີ 24 / 06 / 2009, ທີ່ ເມືອງໄຊຍະບູລີ, ແຂວງ ໄຊຍະບູລີ )**

**----------------------**

**- ບັນດາສະຫາຍ ໃນຄະນະຮັບຜິດຊອບກອງປະຊຸມ ທີ່ນັບຖື,**

**- ບັນດາສະຫາຍ ຜູ້ແທນ ແລະແຂກ ທີ່ຮັກແພງທັງຫລາຍ;**

ຂ້າພະເຈົ້າ ຮູ້ສຶກເປັນກຽດຢ່າງສູງ ແລະ ມີຄວາມປິຕິຊົມຊື່ນ ເປັນຢ່າງຍິ່ງ ທີ່ໄດ້ມີໂອກາດ ມາເຂົ້າຮ່ວມພົບປະ ແລະ ໂອ້ລົມ ຕໍ່ກອງປະຊຸມ ຜູ້ບໍລິຫານການສຶກສາທົ່ວປະເທດ ປະຈຳປີ 2009 ທີ່ໄດ້ຈັດຂຶ້ນທີ່ແຂວງໄຊຍະບູລີ ໃນຄັ້ງນີ້.

ກອງປະຊຸມຄັ້ງນີ້, ເປັນກອງປະຊຸມ ທີ່ມີຄວາມໝາຍສຳຄັນຫຼາຍ ສຳລັບການສຶກສາ ເວົ້າລວມ ແລະ ເວົ້າສະເພາະ ແມ່ນຕໍ່ຜູ້ບໍລິຫານການສຶກສາ ທົ່ວປະເທດ ເພາະເປັນກອງປະຊຸມ ສະຫຼຸບຕີລາຄາຄືນສະພາບການຈັດຕັ້ງປະຕິບັດ ວຽກງານຮອບດ້ານ ຂອງຂະແໜງການສຶກສາ ໃນປີໜຶ່ງຜ່ານມາ ເພື່ອຈະພ້ອມກັນ ຊອກໃຫ້ເຫັນ ອັນທີ່ເປັນຜົນງານ, ຜົນສຳເລັດ ແລະ ອັນທີ່ຍັງຄົງຄ້າງ, ຈາກນັ້ນ ກໍ່ຈະໄດ້ພ້ອມກັນຄົ້ນຄວ້າ ກຳນົດທິດທາງ ແລະ ມາດຕະການອັນຈຳເປັນ ເພື່ອສືບຕໍ່ຊີ້ນຳໆພາ ການຈັດຕັ້ງປະຕິບັດ ວຽກງານສຶກສາ ໃນສົກຮຽນປີຕໍ່ໜ້າ ໃຫ້ໄດ້ຕາມຄາດໝາຍ ທີ່ວາງໄວ້.

ຂໍຖືໂອກາດ ອັນມີຄວາມໝາຍນີ້ ສະແດງຄວາມຊົມເຊີຍ ຕໍ່ການນຳ, ສະມາຊິກພັກ, ພະນັກງານ ແລະ ປະຊາຊົນ ຊາວແຂວງໄຊຍະບູລີ ທີ່ໄດ້ຮັບເປັນເຈົ້າພາບຮ່ວມກັບ ກະຊວງສຶກສາທິການ ໃນການກະກຽມ ແລະ ຈັດກອງປະຊຸມຜູ້ບໍລິຫານການສຶກສາທົ່ວປະເທດ ປະຈຳປີ 2009 ແລະເຮັດໃຫ້ກອງປະຊຸມຜູ້ບໍລິຫານການສຶກສາທົ່ວປະເທດ ປະຈຳປີນີ້ ໄດ້ໄຂຂຶ້ນ ໄວກ່ວາທຸກໆປີ. ພ້ອມກັນນັ້ນ, ຂໍນຳເອົາຄວາມຢ້ຽມຢາມຖາມຂ່າວອັນອົບອຸ່ນ ຂອງກົມການເມືອງສູນກາງພັກ ແລະລັດຖະບານ ມາສູ່ຜູ້ແທນກອງປະຊຸມ ແລະຜ່ານບັນດາສະຫາຍ ຂໍຝາກຄວາມຢ້ຽມຢາມຖາມຂ່າວ ໄປຍັງບັນດາຜູ້ບໍລິຫານການສຶກສາທຸກຂັ້ນ, ຄູອາຈານ ແລະນັກຮຽນນັກສຶກສາ ໃນທົ່ວປະເທດ ມານະໂອກາດນີ້ດ້ວຍ .

**ບັນດາສະຫາຍ ທີ່ຮັກແພງ,**

ຂໍຖືໂອກາດນີ້ ແຈ້ງໃຫ້ບັນດາສະຫາຍຊາບ ກ່ຽວກັບບາງສະພາບການພົ້ນເດັ່ນ ໃນການຈັດຕັ້ງປະຕິບັດ ວຽກງານ ທີ່ພົ້ນເດັ່ນ ຂອງລັດຖະບານ ໃນ 6 ເດືອນຕົ້ນປີ ແລະ ທິດທາງວຽກງານໃນ 6 ເດືອນທ້າຍປີ ແລະ ແຜນສົກປີ 2009-2010 ເພື່ອໃຫ້ບັນດາສະຫາຍ ສາມາດກຳໄດ້ ແລະ ເປັນບ່ອນອີງ ໃນການສຶກສາ ອົບຮົມ ໃຫ້ພະນັກງານ ກໍ່ຄືຄູອາຈານ ໃນຂົງເຂດການສຶກສາ ໃຫ້ມີຄວາມເຂົ້າໃຈທີ່ຖືກຕ້ອງ:

- ກໍ່ຄືບັນດາສະຫາຍໄດ້ຮູ້ແລ້ວວ່າ ໃນທ້າຍເດືອນ 5 ຜ່ານມານີ້, ລັດຖະບານ ໄດ້ສະຫລຸບ ຕີລາຄາສະພາບການຈັດຕັ້ງປະຕິບັດແຜນ ພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ໃນ 6 ເດືອນຕົ້ນປີ,

ແລະ ວາງທິດທາງວຽກງານຈຸດສຸມ ຂອງລັດຖະບານ ໃນ 6 ເດືອນ ທ້າຍປີ ສົກ 2008-2009 ແລະ ໄດ້ນຳສະເໜີຕໍ່ກອງປະຊຸມສູນກາງຄົບຄະນະ ຄັ້ງທີ 8 ສະໄໝທີ 8 ເພື່ອພິຈາລະນາ ແລະ ໃຫ້ທິດຊີ້ນຳ. ໃນວັນທີ 22 ເດືອນ 6 ທີ່ຜ່ານມານີ້, ລັດຖະບານ ກໍ່ໄດ້ນຳສະເໜີຜ່ານກອງປະຊຸມສະພາແຫ່ງຊາດ ເທື່ອທີ 7 ຊຸດທີ 6 ເພື່ອຈະໃຫ້ພິຈາລະນາຮັບຮອງເອົາ.

- ກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ສົກປີ 2008-2009 ເຖິງວ່າ ມີເງື່ອນໄຂສະດວກ ທີ່ເປັນທ່າແຮງພື້ນຖານກໍ່ຕາມ ແຕ່ກໍ່ມີສິ່ງທ້າທາຍ ແລະ ຫຍຸ້ງຍາກຫຼາຍກວ່າປີຜ່ານມາ, ເຊິ່ງສະແດງອອກ:

- ສະພາບວິກິດການລາຄານ້ຳມັນ ແລະ ສະບຽງອາຫານ, ຕາມມາດ້ວຍວິກິດການ-ການເງິນໂລກ ໄດ້ເຮັດໃຫ້ສະພາບເສດຖະກິດ ຂອງໂລກ ແລະ ພາກພື້ນ ກ້າວເຂົ້າສູ່ສະພາວະຖົດຖອຍ ໂດຍໄດ້ສົ່ງຜົນກະທົບ ທັງທາງກົງ ແລະ ທາງອ້ອມ ຕໍ່ປະເທດເຮົາ, ເປັນຕົ້ນ ແມ່ນຕໍ່ການຈັດຕັ້ງປະຕິບັດແຜນງົບປະມານ ຄາດວ່າຈະຫຼຸດລົງ ເຖິງ 6,53% ຫຼື ຄິດເປັນມູນຄ່າປະມານ 500 ກ່ວາຕື້ກີບ. ນອກຈາກນັ້ນ, ສະພາບດັ່ງກ່າວ ຍັງສົ່ງຜົນກະທົບໂດຍກົງ ຕໍ່ການຜະລິດ-ທຸລະກິດ, ການສົ່ງອອກ ແລະ ການບໍລິການທ່ອງທ່ຽວ ເຮັດໃຫ້ລາຍຮັບດ້ານນີ້ ຫຼຸດລົງຫຼາຍສົມຄວນ.

- ສຳລັບຢູ່ພາຍໃນປະເທດ ພວກເຮົາກໍ່ປະສົບກັບໄພນ້ຳຖ້ວມ ແລະ ນ້ຳຊຸທັ່ງ ເຮັດໃຫ້ພື້ນຖານເສດຖະກິດ ແລະ ຊີວິດການເປັນຢູ່ ຂອງປະຊາຊົນ ເສຍຫາຍຫຼາຍສົມຄວນ, ຄິດເປັນມູນຄ່າ 800 ກວ່າຕື້ກີບ.

ແຕ່ເຖິງຢ່າງໃດກໍ່ຕາມ, ດ້ວຍຄວາມຮັບຜິດຊອບ ລັດຖະບານ ໄດ້ເພີ່ມທະວີຄວາມພະຍາຍາມ ໃນການປະຕິບັດ ພາລະບົດບາດ ບໍລິຫານວຽກງານຂອງຕົນ ໂດຍໄດ້ເອົາໃຈໃສ່ຮີບຮ້ອນ ຄົ້ນຄວ້າທິດທາງ ແລະ ມາດຕະການແກ້ໄຂບັນຫາຕ່າງໆ ຢ່າງທັນການ ແລະ ເປັນລະບົບຕໍ່ເນື່ອງ ໂດຍໄດ້ມີການແບ່ງຄວາມຮັບຜິດຊອບ ແລະ ມີການຊີ້ນຳໆພາ ທຸກຂະແໜງການ ແລະ ທ້ອງຖິ່ນຕ່າງໆ ຈັດຕັ້ງປະຕິບັດ ບັນດາຄາດໝາຍສູ້ຊົນ ທີ່ໄດ້ວາງອອກ ເຊິ່ງເຮັດໃຫ້ສາມາດ ບັນລຸຜົນສຳເລັດຈຳນວນໜຶ່ງຄື:

- ການເຕີບໂຕທາງດ້ານເສດຖະກິດ ຫລື GDP ຄາດຄະເນໝົດປີ ຈະເພີ້ມຂຶ້ນ 7,1%, ເມື່ອທຽບໃສ່ແຜນການ ຫລຸດລົງ 0,9%, ລາຍໄດ້ສະເລ່ຍຕໍ່ຫົວຄົນ ບັນລຸໄດ້ 7,9 ລ້ານກີບ ຫລື 922 ໂດລາສະຫະລັດ, ໃນນັ້ນ ຂະແໜງກະສິກຳ ເພີ້ມຂຶ້ນ 3%, ຂະແໜງອຸດສາຫະກຳເພີ້ມຂຶ້ນ 12,5% ແລະ ຂະແໜງບໍລິການ ເພີ້ມຂຶ້ນ 7,7%, ການຜະລິດເຂົ້າກິນ ບັນລຸໄດ້ 2,87 ລ້ານໂຕນ ເທົ່າກັບ 91,1% ຂອງແຜນການປີ, ການຜະລິດພືດສິນຄ້າອື່ນໆ ເຊັ່ນ: ສາລີ, ກາເຟ, ໃບຢາສູບ, ພືດພັກ ໄດ້ເພີ່ມຂຶ້ນ ທາງດ້ານປະລິມານ, ແຕ່ເສຍດາຍ ທີ່ລາຄາຂາຍຜົນຜະລິດເຫລົ່ານັ້ນ ຕົກຕ່ຳກ່ວາປີຜ່ານມາ, ຈຶ່ງເຮັດໃຫ້ ລວມຍອດມູນຄ່າ GDP ຂອງກະສິກຳ ບໍ່ບັນລຸຕາມຄາດໝາຍ. ການສ້າງພື້ນຖານອຸດສາຫະກຳແຫ່ງຊາດ ເຊັ່ນ: ການກໍ່ສ້າງເຄື່ອນໄຟຟ້ານ້ຳເທີນ 2 ສຳເລັດ 95%, ນ້ຳງື່ມ 2 ໄດ້ 72%, ການຜະລິດແຮ່ທາດ ເພີ້ມຂຶ້ນ 88,1% ແລະ ໄດ້ອະນຸມັດ ໃຫ້ຂຸດຄົ້ນບໍ່ແຮ່ໃໝ່ ຈຳນວນໜຶ່ງ, ເຊັ່ນ: ບໍ່ເກືອກາລີ, ບໍ່ຄຳ, . . . ໂຮງງານອຸດສາຫະກຳໃໝ່ ຈຳນວນໜຶ່ງ ເລີ້ມກໍ່ສ້າງ ແລະ ເປີດການນຳໃຊ້ ເປັນຕົ້ນແມ່ນ ໂຮງງານນ້ຳຕານ ມິດລາວ ຢູ່ແຂວງສະຫວັນນະເຂດ ແລະ ໄດ້ເລີ້ມສົ່ງນ້ຳຕານ ອອກສູ່ຕະຫລາດເອີລົບ ເປັນຄັ້ງທຳອິດແລ້ວ; ເລີ້ມລົງມືກໍ່ສ້າງ ໂຮງງານຫລອມເຫລັກ ເມືອງຫີນເຫີບ ແຂວງວຽງຈັນ, ໂຮງງານຂຸດຄົ້ນ ເກືອກາລີ ແຂວງຄຳມ່ວນ, ໂຮງງານຊີມັງ ຢູ່ແຂວງ ຈຳນວນໜຶ່ງ.

- ສະພາບເສດຖະກິດມະຫາພາກ ມີດ້ານຕັ້ງໜ້າ: ອັດຕາເງິນເຟີ້ໂດຍສະເລ່ຍ 6 ເດືອນ ເທົ່າກັບ 3,17% ແລະ ໄດ້ຫລຸດລົງຕໍ່ເນື່ອງ ຮອດເດືອນ 5/2009 ຢູ່ໃນລະດັບ 1,4%; ອັດຕາແລກປ່ຽນ ມີສະຖຽນລະພາບ, ຄ່າເງິນກີບ ມີຄວາມໝັ້ນທ່ຽງ ແລະ ແຂງຂຶ້ນ 9,11% ເມື່ອທຽບກັບເງິນໂດລາສະຫະລັດ ແລະ 13,12 ເມື່ອທຽບກັບເງິນບາດ. ຄັງສຳຮອງເງິນຕາຕ່າງປະເທດ ສາມາດກຸ້ມການນຳເຂົ້າ 5,49 ເດືອນ; ການສົ່ງອອກ ບັນລຸໄດ້ 52% ຂອງແຜນການປີ ແລະ ນຳເຂົ້າ ບັນລຸໄດ້ 56,6% ຂອງແຜນການປີ. ຖ້າທຽບໃສ່ ໄລຍະດຽວ ຂອງປີກາຍ ການສົ່ງອອກຫລຸດລົງ 5,65% ແລະ ການນຳເຂົ້າ ຫລຸດລົງ 8,4%.

- ການປະຕິບັດແຜນລາຍຮັບ ໃນ 6 ເດືອນຕົ້ນປີ ຫລຸດລົງ ເມື່ອທຽບໃສ່ໄລຍະດຽວ ຂອງປີກາຍ, ເຊັ່ນ: ລາຍຮັບ ປະຕິບັດໄດ້ 42,86% ຂອງແຜນການປີ, ໃນນັ້ນ ລາຍຮັບພາຍໃນ ປະຕິບັດໄດ້ 38,34% ເຊິ່ງເຫັນວ່າ ຍັງຕ່ຳກ່ວາລະດັບປົກກະຕິ ທີ່ປະຕິບັດໄດ້ ໃນ 3 ປີຜ່ານມາ; ສ່ວນລາຍຮັບ ຈາກການຊ່ວຍເຫລືອລ້າ ຈາກຕ່າງປະເທດ ແມ່ນປະຕິບັດໄດ້ ຕາມແຜນການ, ລາຍຈ່າຍງົບປະມານ ໄດ້ປະຕິບັດຕາມແຜນປົກກະຕິ.

**ບັນດາສະຫາຍ ທີ່ຮັກແພງ,**

ຄຽງຄູ່ກັບຜົນສຳເລັດລວມນັ້ນ, ເຫັນວ່າ ວຽກງານພັດທະນາ ການສຶກສາ ໃນໜຶ່ງປີຜ່ານມາ ກໍ່ໄດ້ມີການຂະຫຍາຍຕົວ ສູ່ບາດກ້າວໃໝ່ ທີ່ສຳຄັນ, ເຊິ່ງສະແດງອອກ:

1) ໄດ້ເລີ່ມດຳເນີນການປະຕິຮູບລະບົບການສຶກສາແຫ່ງຊາດ ຕາມແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ 2006-2015, ໄດ້ມີການປັບປຸງ ແລະ ພັດທະນາຫຼັກສູດ ການຮຽນ-ການສອນ ທຸກຊັ້ນ, ທຸກສາຍ, ທຸກລະບົບ ທັງໃນ ແລະ ນອກໂຮງຮຽນ ນັບທັງພາກລັດ ແລະ ພາກເອກະຊົນ, ໄດ້ເອົາໃຈໃສ່ປະຕິບັດແຜນງານແຫ່ງຊາດ ການສຶກສາເພື່ອທຸກຄົນດ້ວຍການຂະຫຍາຍການສຶກສາໄປສູ່ເຂດຊົນນະບົດ, ຫ່າງໄກສອກຫຼີກ, ເຂດຊົນເຜົ່າ ໂດຍສຸມໃສ່ການກໍ່ສ້າງພື້ນຖານໂຄງລ່າງການສຶກສາ ເຮັດໃຫ້ການສຶກສາແຕ່ລະຊັ້ນ, ແຕ່ລະສາຍ ທັງພາກລັດ ແລະເອກະຊົນ ໄດ້ມີການຂະຫຍາຍຕົວຢ່າງໄວວາທາງດ້ານປະລິມານ ແລະ ຄຸນນະພາບ ຊຶ່ງຜົນສຳເລັດຕົວຈິງໄດ້ສະແດງອອກ ຄື ສູນສະຖິຕິ ໄດ້ລາຍງານ:

- ວຽກງານລ້ຽງເດັກ ແລະ ອະນຸບານ ອັດຕາການເຂົ້າຮຽນລວມຂອງເດັກ ແລະ ນັກຮຽນອະນຸບານໄດ້ເພີ່ມຈາກ 15.4%ໃນສົກຮຽນ 2007-2008 ເປັນ 19.7% ໃນປີ 2008-2009.

- ອັດຕາການເຂົ້າຮຽນສຸດທິຂອງຊັ້ນປະຖົມສຶກສາ ໄດ້ເພີ່ມຈາກ 89.2% ໃນປີ 2007-08 ເປັນ 91.6% ໃນປີ 2008-09, ອັດຕາການເຂົ້າຮຽນລວມ ຂອງຊັ້ນມັດທະຍົມຕອນຕົ້ນໄດ້ເພີ່ມ ຈາກ 59.2% ໃນປີ 2007-08 ເປັນ 62.7% ໃນປີ 2008-09, ຊັ້ນມັດທະຍົມຕອນປາຍໄດ້ຫລຸດລົງຈາກ 37.2% ເປັນ 36.8% ໃນປີ 2008-09. ຈຳນວນເມືອງປະກາດຈົບຊັ້ນປະຖົມບຳລຸງມີຮອດ 52 ເມືອງ ແລະມີ 41,168 ຄົນຈົບຊັ້ນປະຖົມບຳລຸງ, ປະຊາກອນໃນເກນ ອາຍຸ 15 ປີຂຶ້ນໄປຮູ້ໜັງສື ໄດ້ເພີ່ມຈາກ 77.09% ໃນປີ 2007-08 ເປັນ 78.51% ໃນປີ 2008-09, ພິເສດອັນໜຶ່ງແມ່ນຈຳນວນການນຳຂັ້ນບ້ານ ຂອງແຂວງຜົ້ງສາລີ ແລະ ແຂວງຫຼວງນ້ຳທາ ທີ່ບໍ່ຮູ້ໜັງສືໃນເມື່ອກ່ອນໄດ້ຮູ້ໜັງສືຈຳນວນ 129 ຄົນ.

- ການປະຕິຮູບລະບົບການສຶກສາໂດຍສະເພາະແມ່ນການປະຕິຮູບສາຍສາມັນສຶກສາ ຈາກ 11 ປີຮຽນ ເປັນ 12 ປີຮຽນ ໂດຍເລີ້ມແຕ່ສົກ ຮຽນ 2009-2010 ເປັນ ຕົ້ນໄປ ແລະ ໄດ້ປັບປຸງຫຼັກສູດ ການຮຽນ-ການສອນ ຂອງສາຍດັ່ງກ່າວ ໃຫ້ດີຂຶ້ນກ່ວາເກົ່າ ທັງໃນດ້ານປະລິມານ ແລະ ຄຸນນະພາບ ກໍ່ເພີ້ມຂຶ້ນ.

2) ໄດ້ປັບປຸງລະບົບຕາໜ່າງການສ້າງຄູ ແລະຍົກຖານະ ການສ້າງຄູທຸກລະບົບ, ທຸກສາຍ ໃຫ້ສູງຂຶ້ນກ່ວາເກົ່າ. ພ້ອມກັນນັ້ນ ກໍມີຄວາມພະຍາຍາມແກ້ໄຂບັນຫາຄູສອນບໍ່ພຽງພໍ ດ້ວຍການຊັບຊ້ອນແບ່ງປັນໂກຕາຄູສອນ ໃຫ້ບັນດາເມືອງ ທີ່ທຸກຍາກ, ໂດຍສະເພາະແມ່ນເຂດຈຸດສຸມ, ເຂດທຸລະກັນດານ ແລະເຂດຊົນເຜົ່າຫ່າງໄກ ສອກຫຼີກ ໂດຍໄດ້ແບ່ງໂກຕາຄູ ໃຫ້ບັນດາເຂດດັ່ງກ່າວ ກວມປະມານ 40% ຂອງຈຳນວນ 4,000 ຄົນ ຂອງໂກຕາລັດຖະກອນ ທີ່ຂະແໜງການສຶກສາໄດ້ຮັບອະນຸມັດ ຈາກລັດຖະບານ.

3) ວຽກງານອາຊີວະສຶກສາ ແລະ ການຝຶກອົບຮົມວິຊາຊີບ: ກໍໄດ້ມີຄວາມພະຍາຍາມ ຊອກແຫຼ່ງທຶນເພື່ອມາປັບປຸງໂຮງຮຽນວິຊາຊີບທີ່ມີແລ້ວ ໃຫ້ມີຖະນະສູງຂຶ້ນກ່ວາເກົ່າ, ຍົກຫຼັກສູດຫຼາຍສາຂາວິຊາ ຈາກລະດັບຊັ້ນກາງຂຶ້ນເປັນຊັ້ນສູງ ແລະຈາກຊັ້ນສູງຂຶ້ນເປັນປະລິນຍາຕີ ແລະ ກະກຽມເງື່ອນໄຂ ເພື່ອຂະຫຍາຍ ໂຮງຮຽນວິຊາຊີບໄປສູ່ເມືອງທີ່ມີເງື່ອນໄຂ ເປັນຕົ້ນ ເມືອງເຊໂປນ ແຂວງສະຫວັນນະເຂດ, ເມືອງຄຳເກີດ ແຂວງບໍລິຄຳໄຊ ແລະເມືອງວັງວຽງ ແຂວງວຽງຈັນ.

4) ວຽກງານການສຶກສາຊັ້ນສູງ: ໄດ້ປັບປຸງ ແລະພັດທະນາບັນດາມະຫາວິທະຍາໄລ ທີ່ມີແລ້ວໃຫ້ໄດ້ທາງດ້ານປະລິມານ ແລະຄຸນນະພາບສູງຂຶ້ນ ແລະໄດ້ຂະຫຍາຍມະຫາວິທະຍາໄລຂຶ້ນຕື່ມ 1 ແຫ່ງຢູ່ແຂວງສະຫວັນນະເຂດ ຊຶ່ງສາມາດຮັບນັກສຶກສາໄດ້ 500 ກ່ວາຄົນ, ໂດຍເລີ້ມແຕ່ສົກສຶກສາ 2009-2010 ນີ້ເປັນຕົ້ນໄປ. ໄດ້ປັບປຸງ ແລະພັດທະນາຫຼັກສູດລະດັບປະລິນຍາຕີ, ສ້າງ ແລະ ເປີດສອນ ຫຼັກສູດລະດັບປະລິຍາໂທຫຼາຍສາຂາວິຊາ ແລະຫຼັກສູດລະດັບປະລິນຍາເອກ ບາງສາຂາວິຊາ ຢູ່ມະຫາວິທະຍາໄລແຫ່ງຊາດ ແລະ ຢູ່ສະຖາບັນການສຶກສາຊັ້ນສູງພາກເອກະຊົນບາງແຫ່ງ ກໍໄດ້ເປີດສອນຫຼັກສູດປະລິນຍາໂທ.

5) ໃນດ້ານນິຕິກຳ ແລະ ກົງຈັກການຈັດຕັ້ງ ຂອງຂະແໜງການສຶກສາ ນັບແຕ່ຂັ້ນກະຊວງ ລົງຮອດທ້ອງຖິ່ນ ໄດ້ຮັບການປັບປຸງ ແລະ ໄດ້ຮັບອະນຸມັດໃໝ່ ເປັນຕົ້ນ: ດຳລັດວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງມະຫາວິທະຍາໄລ, ພາລະບົດບາດຂອງພະແນກສຶກສາປະຈຳແຂວງ ແລະ ຫ້ອງການສຶກສາປະຈຳເມືອງ. ພິເສດ ພວກສະຫາຍ ຍັງໄດ້ສ້າງ ແລະ ສະໜອງພະນັກງານ ວິຊາການ ແລະ ການນຳໃຫ້ຂະແໜງການ ແລະ ທ້ອງຖິ່ນ ຕ່າງໆ ໃນທົ່ວປະເທດ ໄດ້ຢ່າງຫລວງຫລາຍ.

6) ການມີສ່ວນຮ່ວມ ແລະ ປະກອບສ່ວນ ຂອງປະຊາຊົນ ແລະ ພາກສ່ວນເສດຖະກິດຕ່າງໆ ເຂົ້າໃນການພັດທະນາການສຶກສາ ນັບມື້ ນັບເພີ້ມຂຶ້ນ ພ້ອມທັງການປະກອບທຶນຮອນ ຂອງປະຊາຊົນ ຢູ່ຊົນນະບົດ ເຂົ້າໃນການສ້ອມແປງ ກໍ່ສ້າງໂຮງຮຽນ, ການເບິ່ງແຍງຄູອາຈານ, ການສົ່ງເສີມ ຊຸກຍູ້ລູກຫລານເຂົ້າຮຽນ, ຕະຫລອດເຖິງການລົງທຶນສ້າງໂຮງຮຽນ ໃນຮູບແບບທຸລະກິດອື່ນໆ.

7) ການພົວພັນຮ່ວມມື ດ້ານການສຶກສາ ກັບບັນດາປະເທດເພື່ອນມິດ ແລະ ສາກົນ ກໍ່ເປັນປົກກະຕິ ແລະ ຂະຫຍາຍຕົວເພີ້ມຂຶ້ນ.

ຜົນສຳເລັດທີ່ຍາດມາໄດ້ນັ້ນ, ກໍ່ເນື່ອງຈາກວ່າ ພະນັກງານ, ລັດຖະກອນ, ຄູອາຈານ ແລະຕະຫລອດຮອດນັກຮຽນ ນັກສຶກສາ ທີ່ຂະແໜງສຶກສາ ໄດ້ມີຄວາມຕັ້ງໜ້າບຸກບືນ ຈັດຕັ້ງປະຕິບັດ ໜ້າທີ່ວຽກງານຂອງຕົນ ດ້ວຍຄວາມຮັບຜິດຊອບສູງ. ດັ່ງນັ້ນ, ໃນໂອກາດ ອັນມີຄວາມໝາຍສຳຄັນນີ້, ຂ້າພະເຈົ້າ ຂໍຕາງໜ້າ ໃຫ້ການນຳ ຂອງພັກ ແລະລັດ, ສະແດງຄວາມຊົມເຊີຍ ຕໍ່ຜົນສຳເລັດ ທີ່ທົ່ວຂະແໜງການສຶກສາ ຍາດມາໄດ້ ໃນໜຶ່ງປີຜ່ານມາ ຢ່າງສຸດອົກສຸດໃຈ ( ຊົມເຊີຍ ).

**ບັນດາສະຫາຍ ທີ່ຮັກແພງ,**

ອີງໃສ່ໜ້າທີ່ການເມືອງ ແລະ ຄວາມຮຽກຮ້ອງຕ້ອງການ ຂອງວຽກງານສຶກສາ, ພວກເຮົາ ຍັງຈະຕ້ອງໄດ້ເອົາໃຈໃສ່ ບາງບັນຫາຕື່ມອີກ:

1. ເຖິງວ່າການສຶກສາມີການຂະຫຍາຍຕົວ ທາງດ້ານປະລິມານ ແລະ ຄຸນນະພາບ ແຕ່ຖ້າທຽບໃສ່ຄາດໝາຍ ສະຫັດສະວັດ, ຄາດໝາຍຂອງແຜນປະຕິບັດງານແຫ່ງຊາດ ການສຶກສາ ເພື່ອທຸກຄົນ ກໍຄືການສຶກສາ ຊັ້ນປະຖົມພາກບັງຄັບແລ້ວ ເຫັນວ່າ ຈັງຫວະການຈັດຕັ້ງປະຕິບັດ ບັນດາຄາດໝາຍດັ່ງກ່າວຍັງຊັກຊ້າ ແລະ ດ້ານຄຸນນະພາບ ທຽບໃສ່ການສຶກສາໃນຂົງເຂດແລ້ວ ເຫັນວ່າ ຍັງຕໍ່າ ຄືດັ່ງ ສູນສະຖິຕິ ກະຊວງສຶກສາ ໄດ້ລາຍງານແລ້ວ.

2. ການແກ້ໄຂບັນຫາຄູສອນ ເຖິງວ່າໄດ້ປັບປຸງລະບົບຕາໜ່າງການສ້າງຄູ ແລະ ຍົກຖານະຫຼັກສູດການສ້າງຄູໃຫ້ສູງຂຶ້ນກ່ວາເກົ່າ ແຕ່ວິທີການຈັດຕັ້ງບຳລຸງຍົກລະດັບຄູ-ອາຈານສອນຕົວຈິງ ບໍ່ທັນເລິກເຊິ່ງເຮັດໃຫ້ຄູສອນຢູ່ຕາມຊັ້ນຮຽນຕ່າງໆ ໂດຍສະເພາະ ແມ່ນຄູສອນຊັ້ນມັດທະຍົມ ຈຳນວນໜຶ່ງ ບໍ່ທັນໄດ້ມາດຕະຖານ.

3. ນະໂຍບາຍ ແລະ ລະບຽບຫຼັກການຕ່າງໆທີ່ກ່ຽວຂ້ອງ ກັບຂະແໜງການສຶກສາ ຍັງປະຕິບັດ ບໍ່ທັນໄດ້ດີ ໂດຍສະເພາະ ນະໂຍບາຍສົ່ງເສີມຜູ້ດ້ອຍໂອກາດ, ເພດຍິງ ແລະຊົນເຜົ່າ. ການສຶກສາລະຫວ່າງເຂດຕົວເມືອງ ແລະ ເຂດຊົນນະບົດ, ລະຫວ່າງຍິງ-ຊາຍ ແລະ ລະຫວ່າງຊົນເຜົ່າ ຍັງບໍ່ສົມດູນກັນ, ອັດຕາການຄ້າງຫ້ອງ ແລະ ປະລະການຮຽນ ຂອງນັກຮຽນຊັ້ນປະຖົມສຶກສາ ຍັງສູງ.

4. ການພັດທະນາການສຶກສາ ທັງພາກລັດ ແລະເອກະຊົນ ດ້ານປະລິມານ ແລະ ຄຸນນະພາບ ບໍ່ທັນໄປຄຽງຄູ່ກັນ, ການສຶກສາພາກເອກະຊົນ ມີການຂະຫຍາຍຕົວໄວ, ແຕ່ການຄຸ້ມຄອງ ບໍ່ທັນຮັດກຸມ, ເຮັດໃຫ້ຄຸນນະພາບການສຶກສາ ຍັງຕໍ່າ.

5. ການກໍ່ສ້າງຖັນແຖວພະນັກງານ ໂດຍສະເພາະ ການກໍ່ສ້າງກຳລັງແຮງງານທີ່ມີສີມື ບໍ່ທັນຕິດພັນກັບໂຄງການ ກໍ່ຄືການພັດທະນາ ທາງດ້ານເສດຖະກິດ-ສັງຄົມ ຕົວຈິງ ຂອງປະເທດເຮົາ.

6. ການປະສານສົມທົບ ລະຫວ່າງ ຂະແໜງສຶກສາ ກັບ ຂະແໜງການອື່ນໆ ເພື່ອວາງລະບົບ ການຝຶກອົບຮົມ, ສິດສອນ, ບຳລຸງວິຊາຊີບ ຢູ່ບັນດາສະຖາບັນ ຫລື ໂຮງຮຽນຕ່າງໆ ບໍ່ທັນກົມກຽວກັນ, ຕ່າງຝ່າຍ ຕ່າງເຮັດ, ອັນເຮັດໃຫ້ເກີດມີ ພະນັກງານເຫລືອບໍ່ພໍ.

7. ການແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ພາຍໃນຂະແໜງການສຶກສາ ຍັງມີລັກສະນະ ຊັກຊ້າ ແລະບໍ່ທັນເດັດຂາດ ເຂັ້ມງວດ ເທົ່າທີ່ຄວນ.

ທັງໝົດນັ້ນ, ແມ່ນບາງບັນຫາ ທີ່ຂະແໜງການສຶກສາ ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂຕື່ມ.

**ບັນດາສະຫາຍ ທີ່ຮັກແພງ,**

ກ່ຽວກັບທິດທາງໃນ ປີ 2009-2010 ເຊິ່ງແມ່ນໄລຍະທ້າຍ ຂອງການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ ແລະ ແຜນພັດທະນາເສດຖະກິດສັງຄົມ ຄັ້ງທີ VI ຂອງລັດຖະບານ. ສະນັ້ນ, ຂ້າພະເຈົ້າ ສະເໜີ ບັນດາສະຫາຍ ເພີ້ມຄວາມເອົາໃຈໃສ່ ບາງບັນຫາຕື່ມ ເຊິ່ງກໍ່ເປັນບັນຫາ ທີ່ພວກເຮົາ ເຄີຍໄດ້ແນະນຳກັນມາແລ້ວ.

1. ຕ້ອງຖືເອົາວຽກງານການເມືອງ-ແນວຄິດເປັນກົກ, ເປັນວຽກງານທຳອິດໃນການສຶກສາອົບຮົມ ຄູອາຈານ, ພະນັກງານ ແລະ ນັກຮຽນ-ນັກສຶກສາ ຢ່າງເປັນປະຈຳ ເພື່ອສ້າງເຂົາເຈົ້າ ໃຫ້ມີຄຸນສົມບັດສົມທຳປະຕິວັດ, ມີຈິດໃຈຮັກຊາດ, ມີຄວາມອົດທົນ, ດຸໝັ່ນຂະຫຍັນພຽນ ແລະ ສຶກສາອົບຮົມດ້ວຍຫຼາຍຮູບແບບ, ຫຼາຍວິທີການ ທີ່ເໝາະສົມ ດ້ວຍການເຮັດໃຫ້ການສຶກສາ ອົບຮົມ ໃນໂຮງຮຽນ, ໃນສຳນັກງານອົງການ, ໃນຄອບຄົວ ແລະ ສັງຄົມ ຕິດພັນກັນຢ່າງສະໜິດແໜ້ນ ແລະ ກາຍເປັນຮູບປະທຳ ຢ່າງກ້ວາງຂວາງ.

2. ໃນການພັດທະນາການສຶກສາ ຕ້ອງເລັ່ງໃສ່ດ້ານຄຸນນະພາບເປັນສຳຄັນ ໂດຍເລີ່ມຈາກການຍົກລະດັບ ແລະ ພັດທະນາຄຸນນະພາບ ຂອງຄູສອນ ແລະຝຶກອົບຮົມ ຜູ້ບໍລິຫານການສຶກສາ, ຄົ້ນຄວ້າສ້າງຕັ້ງໂຮງຮຽນຜູ້ບໍລິຫານການສຶກສາ.

3. ສືບຕໍ່ດຳເນີນການປະຕິຮູບ ລະບົບການສຶກສາແຫ່ງຊາດ ຢ່າງຮອບດ້ານ, ເປັນລະບົບ ແລະ ຄົບຊຸດ ຕາມແຜນປະຕິຮູບການສຶກສາ ແລະ ກົດໝາຍການສຶກສາ. ປັບປຸງ, ປ່ຽນແປງເນື້ອໃນຫຼັກສູດ ແລະ ປັບປຸງ ວິທີການຮຽນ-ການສອນ, ຫັນເອົາວິຊາເຕັກໂນໂລຊີສື່ສານ, ໄອຊີທີ, ຄວາມຮູ້ທາງດ້ານກົດໝາຍ, ບໍລິຫານທຸລະກິດຂະໜາດ ນ້ອຍ-ຂະໜາດກາງ ແລະ ຄວາມຮູ້ດ້ານສິ່ງແວດລ້ອມ ເຂົ້າໃນຫຼັກສູດແຕ່ລະຊັ້ນຮຽນ ຕາມຄວາມເໝາະສົມ. ພ້ອມກັນນັ້ນ ກໍພັດທະນາຄວາມຮູ້ ດ້ວຍການໝູນໃຊ້ເຕັກນິກ ວິທະຍາສາດເຂົ້າໃນການຜະລິດ ແລະ ການບໍລິການ ຕາມຄຳຂວັນທີ່ວ່າ " ຮຽນ ຕ້ອງຄຽງຄູ່ກັບການເຮັດ, ການສຶກສາ ຕ້ອງສົມທົບກັບການອອກແຮງງານ ແລະ ການຜະລິດ, ໂຮງຮຽນ ຕ້ອງສົມທົບກັບສັງຄົມ".

4. ສືບຕໍ່ ແກ້ໄຂຄູສອນ ໃຫ້ເຂດຫ່າງໄກສອກຫຼີກ ແລະ ຊົນເຜົ່າໃຫ້ພຽງພໍ ໄປຄຽງຄູ່ກັບ ການແກ້ໄຂຄູ ໃຫ້ໄດ້ມາດຕະຖານ ແລະ ມີຄຸນນະພາບ. ລັດຖະບານ ຈະໃຫ້ບຸລິມະສິດຕື່ມ ໃນການອະນຸມັດໂກຕາຄູ ແລະ ລັດຖະກອນ ໃຫ້ຂະແໜງການສຶກສາ. ສຳລັບຄູສັນຍາຈ້າງ ຢູ່ເຂດຈຸດສຸມພັດທະນາ ເຂດຊາຍແດນ ຕ້ອງເອົາໃຈໃສ່ ພິຈາລະນາເປັນພິເສດ. ແຕ່ບັນຫາສຳຄັນ ແລະ ມີລັກສະນະຕັດສິນຄຸນນະພາບ ຂອງການສຶກສາແມ່ນການແກ້ໄຂ ທາງດ້ານຄຸນ ນະພາບ ແລະ ມາດຕະຖານຂອງຄູສອນ ຢູ່ແຕ່ລະຊັ້ນ, ແຕ່ລະສາຍ. ຄຸນນະພາບຂອງຄູສອນ ລວມມີຄຸນນະພາບ ທາງດ້ານການເມືອງແນວຄິດ, ຄຸນນະພາບທາງດ້ານວິທະຍາສາດ-ສັງຄົມ ແລະ ວຸດທິການສຶກສາ.

5. ສືບຕໍ່ຂະຫຍາຍຕາໜ່າງການສຶກສາ ໄປສູ່ເຂດພູດອຍ, ເຂດຊົນເຜົ່າ, ເຂດຫຍຸ້ງຍາກ ຫ່າງໄກສອກຫຼີກ, ສູ້ຊົນ ເຮັດໃຫ້ຄວາມສະເໝີພາບ ດ້ານການສຶກສາ ລະຫວ່າງຕົວເມືອງ ກັບຊົນນະບົດ, ລະຫວ່າງ ຍິງ-ຊາຍ ແລະລະຫວ່າງຊົນເຜົ່າຕ່າງໆ ບໍ່ໃຫ້ຫຼຸດໂຕນກັນ. ສືບຕໍ່ລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາ ຕິດພັນກັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ໃຫ້ປະຊາຊົນບັນດາເຜົ່າ ໃນກຸ່ມເປົ້າໝາຍ ນັບທັງນາຍບ້ານ ທີ່ຍັງບໍ່ທັນຮູ້ໜັງສື. ປະຕິບັດເປົ້າໝາຍສະຫັດສະຫວັດຂອງການສຶກສາ, ປະຕິບັດເປົ້າໝາຍການສຶກສາເພື່ອທຸກຄົນ ແລະ ປະຕິບັດການສຶກສາ ຊັ້ນປະຖົມ ພາກບັງຄັບ ໃຫ້ສຳເລັດໃນປີ 2015.

ສຳລັບໂຮງຮຽນກິນນອນຊົນເຜົ່າ ຢູ່ແຕ່ລະແຂວງ ຕ້ອງມີການປັບປຸງໃຫ້ດີຂຶ້ນກ່ວາເກົ່າ ເພື່ອໃຫ້ລູກຫລານ ພີ່ນ້ອງເຜົ່າ ໄດ້ມີເງື່ອນໄຂ ຮໍ່າຮຽນຫລາຍຂຶ້ນ.

6. ສືບຕໍ່ປະສານສົມທົບ ກັບຂະແໜງທີ່ກ່ຽວຂ້ອງ ໃນການຂະຫຍາຍໂຮງຮຽນເຕັກນິກ-ວິຊາຊີບ, ສູນຝຶກອົບຮົມວິຊາຊີບ ແລະສູນພັດທະນາສີມືແຮງງານ ໄປສູ່ບັນດາເມືອງ ແລະເຂດຈຸດສຸມທີ່ມີເງື່ອນໄຂ.

ສືບຕໍ່ປັບປຸງ ແລະ ພັດທະນາລະບົບໂຮງຮຽນ, ບັນດາສູນຝຶກອົບຮົມ ແລະ ສະຖາບັນການສຶກສາຊັ້ນສູງທີ່ມີແລ້ວ ໃຫ້ມີຄຸນນະພາບສູງຂຶ້ນ, ໂດຍສະເພາະ ເອົາໃຈໃສ່ການກະກຽມມະຫາວິທະຍາໄລ ຢູ່ສະຫວັນນະເຂດ ເພື່ອໃຫ້ທັນຮັບນັກສຶກສາ ໃນສົກຮຽນ 2009-10 ນີ້ ແລະ ສາມາດຮັບນັກຮຽນໃຫ້ໄດ້ຫຼາຍຂຶ້ນ, ສົ່ງເສີມການກໍ່ສ້າງກຳລັງແຮງງານ ທີ່ມີສີມື, ສົ່ງເສີມ ແລະ ສ້າງຄົນເກັ່ງ ຄົນທີ່ມີ ພອນສະຫວັນ, ຄົນທີ່ມີພູມປັນຍາ ເພື່ອຕອບສະໜອງກັບທິດທາງ ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

7. ສືບຕໍ່ສະໜອງວັດຖຸອຸປະກອນຮັບໃຊ້ການຮຽນ-ການສອນ ລວມທັງເຄື່ອງທົດລອງ ເຮັດໃຫ້ໂຮງຮຽນທີ່ມີແລ້ວ ໄດ້ມາດຕະຖານ ໃນທຸກຊັ້ນ, ທຸກສາຍ ທັງສາຍສາມັນ, ອາຊີວະສຶກສາ ທັງພາກລັດ ແລະ ເອກະຊົນ.

8. ສືບຕໍ່ປັບປຸງກົງຈັກການຈັດຕັ້ງ ແລະນິຕິກຳຕ່າງໆ ໃນຂົງເຂດການສຶກສາໃຫ້ຄົບຊຸດ ແລະ ຮັດກຸມ, ປັບປຸງ ກົນໄກບໍລິຫານຄຸ້ມຄອງການສຶກສາໃນທຸກຊັ້ນ, ທຸກລະບົບໃຫ້ຄ່ອງຕົວຂຶ້ນກ່ວາເກົ່າ, ເອົາໃຈໃສ່ຈັດຕັ້ງ ປະຕິບັດບັນດານິຕິກຳ, ດຳລັດ, ຂໍ້ກຳນົດ, ກົດລະບຽບ ຂອງຂະແໜງການສຶກສາທີ່ມີແລ້ວໃຫ້ມີປະສິດທິຜົນ ເປັນຕົ້ນ: ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການສຶກສາສະບັບປັບປຸງໃໝ່, ດຳລັດວ່າດ້ວຍ ນາມມະຍົດ ແລະຕຳແໜ່ງການສອນຂອງຄູ, ພ້ອມດຽວກັນນັ້ນ ກໍ່ປັບປຸງບັນດານິຕິກຳ, ດຳລັດ, ຂໍ້ກຳນົດ, ກົດລະບຽບທີ່ເຫັນວ່າ ບໍ່ທັນສອດຄ່ອງ ແລະໃຫ້ສ້າງຂຶ້ນໃໝ່ ຖ້າຫາກເຫັນວ່າ ອັນໃດບໍ່ທັນມີ ແລະ ມີຄວາມ ຈຳເປັນ.

9. ເພີ້ມການລົງທຶນຂອງລັດ ເຂົ້າໃນການຂະຫຍາຍການສຶກສາ ໃນສົກປີ 2009-10 ສູ້ຊົນໃຫ້ບັນລຸ 15,5%. ພ້ອມນັ້ນ ກໍ່ເອົາໃຈໃສ່ ສົ່ງເສີມການມີສ່ວນຮ່ວມ ຂອງທົ່ວປວງຊົນ ເຂົ້າໃນການພັດທະນາການສຶກສາ, ການປະກອບທຶນຮອນ ເພື່ອພັດທະນາໂຄງລ່າງການສຶກສາ, ການຊ່ວຍເຫລືອຄູອາຈານ ແລະ ການຊຸກຍູ້ລູກຫລານ ເຂົ້າໂຮງຮຽນ. ດ້ານໜຶ່ງອີກ ກໍ່ສົ່ງເສີມການລົງທຶນ ຂອງພາຍໃນ ແລະ ຕ່າງປະເທດ ເຂົ້າໃນການກໍ່ສ້າງໂຮງຮຽນ ແຕ່ຊັ້ນອະນຸບານ ເຖິງມະຫາວິທະຍາໄລ ແລະ ໂຮງຮຽນວິຊາຊີບຕ່າງໆ.

10. ເອົາໃຈໃສ່ວຽກງານຄຸ້ມຄອງ ໂຮງຮຽນເອກະຊົນ ພາຍໃນ ແລະ ຕ່າງປະເທດ ແນໃສ່ ໃຫ້ເຂົາເຄື່ອນໄຫວຖືກຕ້ອງ ກັບແຜນພັດທະນາການສຶກສາ ຂອງລັດຖະບານ ກໍຄືລະບຽບກົດໝາຍຕ່າງໆ. ສຳລັບໂຮງຮຽນສົງ ກໍ່ຕ້ອງມີການຊ່ວຍເຫລືອ ໃນດ້ານທີ່ຈຳເປັນ ແນໃສ່ ໃຫ້ໂຮງຮຽນສົງ ສາມາດສິດສອນ ແລະ ໃຫ້ຄວາມຮູ້ວິທະຍາສາດ ແລະ ທຳມະ ເປັນຢ່າງດີ.

11. ເພີ້ມທະວີວຽກງານຄຸ້ມຄອງການຈັດສົ່ງນັກສຶກສາ ໄປຮຽນຕໍ່ ຢູ່ຕ່າງປະເທດ ໂດຍໃຫ້ລວມສູນຢູ່ກະຊວງສຶກສາທິການ ແລະ ມີການສອບເສັງ ເລືອກເຟັ້ນຄັກແນ່. ພ້ອມກັນນັ້ນ ກໍ່ເອົາໃຈໃສ່ວຽກງານຄຸ້ມຄອງນັກສຶກສາ ທີ່ພວມຮໍ່າຮຽນ ຢູ່ຕ່າງປະເທດ ໃຫ້ຕັ້ງໃຈຮໍ່າຮຽນ, ປະຕິບັດລະບຽບກົດໝາຍ ຂອງປະເທດເຈົ້າພາບ ແລະ ໂຮງຮຽນ ເປັນຢ່າງດີ. ສະຖານທູດ, ສະຖານກົງສູນ ແລະ ການຈັດຕັ້ງນັກສຶກສາ ມີໜ້າທີ່ກຳກັບຕິດຕາມ ແລະ ປະສານກັບເຈົ້າໜ້າທີ່ກ່ຽວຂ້ອງ ຂອງປະເທດເຈົ້າພາບ ຢ່າງເປັນປົກກະຕິ.

12. ສືບຕໍ່ແຂ່ງຂັນ ສ້າງຜົນງານ ຍາດເອົາທຸງໄຊ ແຕ່ລະໄລຍະ (1 ປີ, 5 ປີ) ໂດຍ ລົມທົບການຍ້ອງຍໍກົມກອງລວມໝູ່ (ພະແນກການ, ສະຖາບັນ ແລະ ໂຮງຮຽນຕ່າງໆ) ແລະ ບຸກຄົນດີເດັ່ນ.

13. ເອົາໃຈໃສ່ເພີ່ມທະວີການນຳພາຂອງພັກ ແລະ ອຳນາດການປົກຄອງຂັ້ນຕ່າງໆ ຕໍ່ວຽກງານການການສຶກສາ, ເອົາໃຈໃສ່ວຽກງານກວດການ ແລະ ກວດກາ ການສຶກສາ ແລະເອົາໃຈໃສ່ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນໃນຂົງເຂດການສຶກສາໃຫ້ທັນເວລາ, ເດັດຂາດ ແລະ ສອດຄ່ອງ.

**14.** ສືບຕໍ່ຍາດແຍ່ງການສະໜັບສະໜູນຊ່ວຍເຫລືອ ຈາກບັນດາປະເທດເພື່ອນມິດ, ອົງການຈັດຕັ້ງ ແລະ ສະຖາບັນການເງິນສາກົນ ເພື່ອປະກອບສ່ວນເລັ່ງລັດ ພັດທະນາການສຶກສາ ຢູ່ປະເທດເຮົາ ໃຫ້ໄປຕາມແຜນຄວາມຕ້ອງການດ້ານການເງິນ ທີ່ໄດ້ກຳນົດໄວ້ ຢູ່ໃນຂອບພັດທະນາທົ່ວຂະແໜງການສຶກສາ. ແຕ່ບັນຫາສຳຄັນ ແມ່ນການຄຸ້ມຄອງ ແລະ ນຳໃຊ້ງົບປະມານ ແລະທຸກແຫຼ່ງລາຍຮັບໃຫ້ ມີປະສິດທິຜົນສູງສຸດ.

**ບັນດາສະຫາຍ ທີ່ຮັກແພງ,**

ນັ້ນ, ແມ່ນຄວາມເຫັນຈຳນວນໜຶ່ງ ທີ່ຂ້າພະເຈົ້າ ຢາກສະເໜີໃຫ້ບັນດາສະຫາຍ ເພື່ອຄົ້ນຄວ້າ ແລະ ປຶກສາລື ໃນການສືບຕໍ່ ພັດທະນາການສຶກສາແຫ່ງຊາດໃນຕໍ່ໜ້າ ໃຫ້ມີການຫັນປ່ຽນໃໝ່ ຢ່າງຮອບດ້ານ ແລະ ເປັນຮູບປະທຳ ນັບທັງດ້ານປະລິມານ ແລະ ຄຸນນະພາບ.

ສຸດທ້າຍນີ້ ຂໍອວຍພອນ ບັນດາສະຫາຍ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມສຸກ ແລະ ມີຄວາມສຳເລັດໃນວຽກງານ ເພື່ອພ້ອມກັນ ກະກຽມສິ່ງເອື້ອອຳນວຍຕ່າງໆ ເພື່ອຮັບໃຊ້ການໄຂສົກຮຽນໃໝ່ 2009-2010 ຊຶ່ງຈະເລີ່ມຕົ້ນໃນເດືອນ 7/2009 ທີ່ຈະມາເຖິງນີ້ (ສຳລັບນະຄອນຫຼວງ ວຽງຈັນ) ພ້ອມກັນນັ້ນ ກໍພ້ອມກັນກະກຽມ ແລະ ຈັດຕັ້ງສະເຫລີມສະຫຼອງວັນຄູແຫ່ງຊາດຄົບຮອບ 15 ປີ ໃນວັນທີ 7 ຕຸລາ ທີ່ຈະມາເຖິງ ໃຫ້ມີບັນຍາກາດຟົດຟື້ນ ແລະມີຄວາມໝາຍ.

ຂໍອວຍພອນ ໃຫ້ກອງປະຊຸມ ຜູ້ບໍລິຫານການສຶກສາ ທົ່ວປະເທດ ປະຈຳປີ 2009 ຈົ່ງປະສົບຜົນສຳເລັດ ຢ່າງງົດງາມ.

**ຂໍຂອບໃຈ!**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ມະຕິ

ກອງປະຊຸມຜູ້ບໍລິຫານການສຶກສາທົ່ວປະເທດປະຈໍາ ປີ 2009

ທີ່ແຂວງໄຊຍະບູລີ ຄັ້ງວັນທີ 22 - 24 ມິຖຸນາ (6) 2009

ກອງປະຊຸມຜູ້ບໍລິຫານການສຶກສາຂັ້ນສູງໃນທົ່ວປະເທດ ປະຈໍາປີ 2009 ໄດ້ໄຂຂຶ້ນຢ່າງເປັນທາງການແຕ່ວັນທີ 22-24 ມິຖຸນາ (6) 2009 ທີ່ເມືອງໄຊຍະບູລີ, ແຂວງໄຊຍະບູລີ ພາຍໃຕ້ການເປັນປະທານຂອງທ່ານ ສຈ.ດຣ. ສົມກິດ ມັງໜໍ່ເມກ, ກໍາມະການສູນກາງພັກ, ເລຂາຄະນະພັກ, ລັດຖະມົນຕີວ່າການກະຊວງສຶກສາທິການ.

ເຂົ້າຮ່ວມກອງປະຊຸມຄັ້ງນີ້, ມີບັນດາທ່ານຄະນະນໍາຂອງກະຊວງສຶກສາທິການ, ຫົວໜ້າກົມ/ຮອງຫົວໜ້າກົມ, ອະທິການບໍດີມະຫາວິທະຍາໄລ, ຫົວໜ້າ/ຮອງຫົວໜ້າພະແນກສຶກສາແຂວງ, ພາກສ່ວນຕ່າງໆອ້ອມຂ້າງສູນກາງ, ການນໍາຂັ້ນແຂວງ, ຂັ້ນພະແນກການ, ຂັ້ນເມືອງ ແລະຂັ້ນໂຮງຮຽນທັງພາກລັດ ແລະພາກເອກະຊົນ ຂອງແຂວງໄຊຍະບູລີ ເຂົ້າຮ່ວມທັງໝົດ 158 ທ່ານ/ຍິງ 16 ຄົນ.

ຜ່ານການລາຍງານ ແລະຄົ້ນຄວ້າປະກອບຄໍາຄິດຄໍາເຫັນດ້ວຍຄວາມຮັບຜິດຊອບສູງ ແລະກົງໄປ-ກົງມາຂອງຜູ້ແທນກອງປະ ຊຸມ, ກອງປະຊຸມໄດ້ມີມະຕິດັ່ງນີ້:

1. ກອງປະຊຸມໄດ້ເປັນເອກະສັນຮັບເອົາຄໍາເຫັນໂອ້ລົມ ແລະທິດຊີ້ນໍາຂອງພະນະທ່ານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ຊຶ່ງປະກອບມີ 14 ບັນຫາຕົ້ນຕໍ ເພື່ອນໍາເອົາໄປຈັດຕັ້ງເຜີຍແຜ່ເຊື່ອມຊຶມໃຫ້ກວ້າງຂວາງ ແລະຖືເອົາເປັນບ່ອນອີງໃນການຈັດຕັ້ງປະຕິບັດແຜນພັດທະນາການສຶກສາປະຈໍາປີຮຽນ 2009- 2010 ແລະໃນຕໍ່ໜ້າ.
2. ກອງປະຊຸມຮັບຮອງເອົາໂດຍພື້ນຖານກ່ຽວກັບບົດສະຫຼຸບແຜນພັດທະນາການສຶກສາສົກຮຽນ 2008-2009 ແລະ ທິດທາງແຜນພັດທະນາການສຶກສາສົກຮຽນ 2009-2010 ແລະສືບຕໍ່ປັບປຸງໃຫ້ລະອຽດສົມບູນ.
3. ກອງປະຊຸມເຫັນດີ ແລະຮັບຮອງເອົາການແກ້ໄຂບັນຫາຄູສອນດ້ວຍການມອບໃຫ້ພະແນກສຶກສາແຂວງ ແລະຫ້ອງການສຶກສາເມືອງຄັດເລືອກເອົາຄົນຢູ່ເຂດຂາດຄູມາຮຽນຄູ ເມື່ອຮຽນຈົບແລ້ວສົ່ງຄືນທ້ອງຖິ່ນຂອງເຂົາເຈົ້າ. ສະເໜີຂໍອັດຕາບັນຈຸຄູໃໝ່ນໍາລັດຖະບານຢ່າງມີເຫດມີຜົນ ແລະປ່ຽນແທນລະບົບບັນຈຸຄູຕາມອັດຕາບັນຈຸມາເປັນລະບົບບັນຈຸຄູຕາມຄວາມຕ້ອງການ. ຄັດເລືອກເອົາຄູສອນທີ່ບໍ່ທັນໄດ້ມາດຖານ ໂດຍສະເພາະຄູຢູ່ເຂດຫ່າງໄກສອກຫຼີກ, ເຂດທີ່ຂາດແຄນຄູ ມາຍົກລະດັບໃນລະບົບຕໍ່ເນື່ອງຢູ່ຕາມສະຖາບັນສ້າງຄູໃຫ້ຫຼາຍຂຶ້ນ (ຮຽນເຕັມເວລາ ຫຼື ບໍ່ເຕັມເວລາ) ພ້ອມດຽວກັນນັ້ນ, ກໍຈັດການບໍາລຸງຍົກລະດັບຢູ່ກັບທີ່ໃຫ້ຄູສອນຢູ່ທ້ອງຖິ່ນທີ່ມີເງື່ອນໄຂ.
4. ກອງປະຊຸມເຫັນດີຮັບຮອງເອົາແຜນການເພີ່ມຂັ້ນ ມ.4 ມາຢູ່ຊັ້ນມັດທະຍົມຕົ້ນເລີ່ມແຕ່ສົກຮຽນ 2009-2010 ແລະ ເລີ່ມໃຫ້ມີຊັ້ນ ມ.7 ຢູ່ຊັ້ນມັດທະຍົມປາຍນັບແຕ່ສົກຮຽນ 2010-2011, ໂດຍຈັດບຸລິມາສິດໃນການສະໜອງງົບປະມານເພື່ອຮັບໃຊ້ການເພີ່ມຂັ້ນຮຽນດັ່ງກ່າວ.

5. ກອງປະຊຸມເຫັນດີມອບໃຫ້ກົມທີ່ກ່ຽວຂ້ອງ, ພະແນກສຶກສາປະຈຳແຂວງ ແລະຫ້ອງການສຶກສາປະຈຳເມືອງ ປະສານສົມທົບກັນສືບຕໍ່ສ້າງ ແລະປັບປຸງໂຮງຮຽນຕົວແບບ ທັງສາຍສາມັນ ແລະ ວິຊາຊີບ ທັງພາກລັດ ແລະພາກເອກະຊົນ ໂດຍເລີ່ມຈາກການພັດທະນາໂຮງຮຽນດັ່ງກ່າວໃຫ້ມີຄຸນນະພາບ, ປັບປຸງຄືນເງື່ອນໄຂມາດ ຖານຂອງໂຮງຮຽນຕົວແບບ ແລະຈັດບຸລິມະສິດສຸມທຶນ ຮອນໃສ່ໂຮງຮຽນດັ່ງກ່າວ.
6. ກອງປະຊຸມເຫັນດີໃຫ້ສືບຕໍ່ຂະຫຍາຍ ແລະ ພັດທະນາການສຶກສາໄປສູ່ຊົນນະບົດຫ່າງໄກສອກຫຼີກ, ໂດຍສະ ເພາະແມ່ນການຂະຫຍາຍໂຮງຮຽນລ້ຽງເດັກ-ອະນຸບານ ແລະ ຂະຫຍາຍຫ້ອງກຽມຊັ້ນປະຖົມດ້ວຍຮູບການ ແລະ ບາງວິທີການດັ່ງນີ້:
   - ຂະຫຍາຍຊັ້ນຮຽນຢູ່ໂຮງຮຽນມູນ ແລະ ຫັນໂຮງຮຽນມູນທີ່ມີເງື່ອນໄຂໃຫ້ເປັນໂຮງຮຽນປະຖົມສົມບູນ; ດຳເນີນ ແລະນຳໃຊ້ການສອນຫ້ອງຄວບຢູ່ເຂດທີ່ມີປະຊາກອນໜ້ອຍ;
   - ຈັດໃຫ້ມີຫ້ອງກຽມປະຖົມຢູ່ໂຮງຮຽນທີ່ມີເງື່ອນໄຂ; ປຸກລະດົມໃຫ້ສັງຄົມມີສ່ວນຮ່ວມໃນການສ້າງອາຄານໂຮງ ຮຽນ, ຫ້ອງຮຽນ ແລະການໃຫ້ຄວາມຊ່ວຍເຫຼືອເບິ່ງແຍງຊີວິດການເປັນຢູ່ຂອງຄູສອນ;
   - ປັບປຸງພາລະບົດບາດ, ສິດ, ໜ້າທີ່ ແລະແບບແຜນວິທີເຮັດວຽກ ຂອງຄະນະກຳມະການພັດທະນາການສຶກ ສາຂັ້ນເມືອງ ແລະຂັ້ນບ້ານ;
   - ຈັດສັນງົບປະມານການລົງທຶນຂອງລັດໃຫ້ບັນດາແຂວງທີ່ບໍ່ມີໂຄງການຊ່ວຍເຫຼືອຂອງອົງການຈັດຕັ້ງສາກົນ;
   - ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງກັບການແກ້ໄຂຄວາມທຸກຍາກຂອງປະຊາຊົນ ໂດຍສະເພາະ ແມ່ນ ຄອບຄົວທຸກຍາກທີ່ບໍ່ສາມາດສົ່ງລູກຫຼານຂອງຕົນໄປໂຮງຮຽນ, ຂະຫຍາຍໂຮງຮຽນກິນນອນຊົນເຜົ່າໄປສູ່ ເມືອງ ທີ່ມີເງື່ອນໄຂ ໂດຍສະເພາະແມ່ນເມືອງທີ່ທຸກຍາກ.
7. ກອງປະຊຸມໄດ້ຮັບຮອງ ແລະເຫັນດີຈັດການຮຽນ-ການສອນເລື່ອນຂັ້ນແບບຕໍ່ເນື່ອງຂອງຊັ້ນປະຖົມສຶກສາດ້ວຍ ບາງວິທີການດັ່ງນີ້:
   - ແຕ່ງຕັ້ງຄະນະຮັບຜິດຊອບເລື່ອນຂັ້ນແບບຕໍ່ເນື່ອງຢູ່ຂັ້ນແຂວງ ແລະ ຂັ້ນເມືອງ;
   - ຈັດຝຶກອົບຮົມຜູ້ອຳນວຍການໂຮງຮຽນ ແລະຄູສອນຊັ້ນປະຖົມສຶກສາ ໃຫ້ຮັບຮູ້, ເຂົ້າໃຈຄວາມໝາຍ ຄວາມ ສຳຄັນ ແລະວິທີການດຳເນີນຕົວຈິງຂອງວຽກງານດັ່ງກ່າວ;
   - ສ້າງຮ່າງເກັບກຳຂໍ້ມູນຜົນງານການຮຽນ ຂອງນັກຮຽນໃນຊັ້ນປະຖົມສຶກສາ;
   - ຈັດບຳລຸງນັກຮຽນຜູ້ທີ່ຮຽນອ່ອນ;
   - ດຳເນີນການຕິດຕາມ, ປະເມີນຜົນ, ສະຫຼຸບຖອດຖອນບົດຮຽນ ແລະປັບປຸງແກ້ໄຂວຽກງານດັ່ງກ່າວເປັນແຕ່ ລະໄລຍະ.
8. ກອງປະຊຸມເຫັນດີສ້າງຕັ້ງສູນຝຶກອົບຮົມ ແລະຍົກລະດັບຄວາມສາມາດຂອງຜູ້ບໍລິຫານການສຶກສາແຕ່ລະຂັ້ນ ຢູ່ເມືອງວັງວຽງ ແຂວງວຽງຈັນ. ສືບຕໍ່ຈັດຝຶກອົບຮົມວຽກງານບໍລິຫານການສຶກສາໃຫ້ຜູ້ບໍລິຫານການສຶກສາຂັ້ນ ເມືອງ ແລະຂັ້ນໂຮງຮຽນ ໂດຍສະເພາະແມ່ນຜູ້ທີ່ບໍ່ທັນໄດ້ຜ່ານການຝຶກອົບຮົມວຽກງານດັ່ງກ່າວ.
9. ກອງປະຊຸມເຫັນດີສືບຕໍ່ຕິດຕາມກວດກາ, ກວດການການສຶກສາ, ກວດກາການປະຕິບັດຫຼັກສູດການຮຽນ-ການ ສອນ, ກວດກາການປະຕິບັດໜ້າທີ່ຂອງຜູ້ບໍລິຫານການສຶກສາແຕ່ລະຂັ້ນ. ສະກັດກັ້ນ ແລະແກ້ໄຂປະກົດການ ຫຍໍ້ທໍ້ທີ່ ເກີດຂຶ້ນໃນຂະແໜງການສຶກສາ.

10. ກອງປະຊຸມເຫັນດີສະເໜີເຖິງອຳນາດການປົກຄອງ ແລະການນຳແຕ່ລະຂັ້ນ, ເພື່ອປຸກລະດົມທຸກກຳລັງແຮງທົ່ວສັງ ຄົມປະກອບເຂົ້າໃນວຽກງານການສຶກສາ ເຮັດໃຫ້ການສຶກສາກາຍເປັນພາລະກິດຂອງທົ່ວສັງຄົມ.

11. ກອງປະຊຸມເຫັນດີໃຫ້ສືບຕໍ່ແຂ່ງຂັນລະຫວ່າງແຂວງຕໍ່ແຂວງ, ເມືອງຕໍ່ເມືອງ ແລະ ໂຮງຮຽນຕໍ່ໂຮງຮຽນໃນນັ້ນ, ຕ້ອງໄດ້ປັບປຸງຂໍ້ແຂ່ງຂັນ, ໄລຍະເວລາແຂ່ງຂັນ ແລະວິທີການຄັດເລືອກໃຫ້ ສອດຄ່ອງກວ່າເກົ່າ.

12. ກອງປະຊຸມເຫັນດີສືບຕໍ່ປະຕິບັດນະໂຍບາຍສົ່ງເສີມການສຶກສາພາກເອກະຊົນທັງສາຍສາມັນ ແລະສາຍວິຊາຊີບ, ປັບປຸງລະບຽບຫລັກການ ແລະນິຕິກຳຕ່າງໆ ໃນການຄຸ້ມຄອງການສຶກສາພາກເອກະຊົນໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງສັງຄົມ.

13. ກອງປະຊຸມເຫັນດີໃຫ້ແຕ່ລະແຂວງນຳເອົາບົດຮຽນຂອງພະແນກສຶກສານະຄອນຫຼວງວຽງຈັນກ່ຽວກັບການຈັດຕັ້ງປະຕິບັດດຳລັດນາຍົກລັດຖະມົນຕີວ່າດ້ວຍຕຳແໜ່ງວິຊາການຄູໃນລະດັບຕ່ຳກວ່າສະຖາບັນການສຶກສາຊັ້ນສູງ.

14. ກອງປະຊຸມເຫັນດີປັບປຸງ ແລະສົ່ງເສີມການສຶກສາສົງ, ຊ່ວຍເຫຼືອໂຮງຮຽນສົງໃນດ້ານທີ່ຈຳເປັນ, ໂຮງຮຽນສົງນອກຈາກຮຽນກ່ຽວກັບທຳມະແລ້ວ ຍັງໄດ້ສຶກສາຮ່ຳຮຽນຄວາມຮູ້ທາງດ້ານວິທະຍາສາດທຳມະຊາດ-ສັງຄົມຄືກັນກັບໂຮງຮຽນສາມັນສຶກສາ.

ທີ່ ເມືອງໄຊຍະບູລີ, ວັນທີ 24 ມິຖຸນາ (6) 2009

ລັດຖະມົນຕີວ່າການກະຊວງສຶກສາທິການ

ປະທານກອງປະຊຸມ

ສຈ.ດຣ. ສົມກິດ ມັງໜໍ່ເມກ